# ພຣະທັມ 2 ຂ່າວຄາວ


| | | | | | | | |
|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | 28 | 29 | 30 | 31 | 32 |
| 33 | 34 | 35 | 36 | | | | |


## 2 ຂ່າວຄາວ

## 2 CHRONICLES

### 1 ຄຳອະທິຖານຂອງໂຊໂລໂມນເພື່ອຂໍສະຕິປັນຍາ

Solomon requests Wisdom

(1 ກສດ 3:1-5)

1 ໂຊໂລໂມນໂອຣົດຂອງດາວິດໄດ້ສະຖາປະນາຣາຊອານາຈັກຂອງພຣະອົງ ແລະພຣະຜູ້ເປັນເຈົ້າພຣະເຈົ້າຂອງພຣະ
ອົງຊົງສະຖິດກັບພຣະອົງ ແລະຊົງກະທຳໃຫ້ພຣະອົງໃຫຍ່ໂຕຢ່າງຍິ່ງ
2 ໂຊໂລໂມນກ່າວກັບອິສຣາເອນທັງປວງກັບນາຍພັນແລະນາຍຮ້ອຍ ທັງກັບຜູ້ປົກຄອງແລະກັບເຈົ້ານາຍທັງປວງໃນອິ
ສຣາເອນທັງຫມົດ ຜູ້ເປັນຫົວຫນ້າຂອງບັນດາຕະກູນຂອງເຂົາ
3 ແລະໂຊໂລໂມນກັບຊຸມນຸມຊົນທັງປວງທີ່ຢູ່ກັບພຣະອົງໄດ້ຂຶ້ນໄປທີ່ສະຖານນະມັສການທີ່ສູງຊຶ່ງຢູ່ທີ່ກິເບໂອນເພາະ
ເຕັນນັດພົບຂອງພຣະເຈົ້າ ຊຶ່ງໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າໄດ້ສ້າງຂຶ້ນໃນຖິ່ນກັນດານຢູ່ທີ່ນັ້ນ
4 (ແຕ່ດາວິດໄດ້ຊົງນຳຫີບຂອງພຣະເຈົ້າມາຈາກກີຣິອາດເຢອາຣິມເຖິງສະຖານທີ່ຊຶ່ງດາວິດຊົງຕຽມໄວ້ໃຫ້ເພາະພຣະ
ອົງໄດ້ຊົງຕັ້ງເຕັນໄວ້ໃຫ້ໃນກຸງເຢຣູຊາເລັມ)
5 ເຖິງປານນັ້ນ ແທ່ນບູຊາທອງສຳຣິດ ຊຶ່ງເບຊາເລນບຸດອຸຣີ ບຸດຮູຣ໌ໄດ້ສ້າງໄວ້ນັ້ນກໍຢູ່ທີ່ຫນ້າຫໍເຕັນຂອງພຣະເຈົ້າ ແລະ
ໂຊໂລໂມນກັບຊຸມນຸມຊົນກໍໄດ້ສແວງຫາພຣະເຈົ້າ
6 ແລະໂຊໂລໂມນສະເດັດໄປທີ່ນັ້ນຍັງແທ່ນບູຊາທອງສຳຣິດຕໍ່ພຣະພັກພຣະຜູ້ເປັນເຈົ້າ ຊຶ່ງຢູ່ທີ່ເຕັນນັດພົບ ແລະຊົງ
ຖວາຍເຄື່ອງເຜົາບູຊານຶ່ງພັນໂຕເທິງແທ່ນນັ້ນ
7 ໃນຄືນນັ້ນ ພຣະເຈົ້າຊົງປາກົດແກ່ໂຊໂລໂມນ ແລະກ່າວກັບພຣະອົງວ່າ, “ເຈົ້າຢາກໃຫ້ເຮົາໃຫ້ຫຍັງແກ່ເຈົ້າ ກໍຈົ່ງຂໍ
ເຖີດ”
8 ແລະໂຊໂລໂມນທູນພຣະເຈົ້າວ່າ, “ພຣະອົງໄດ້ຊົງສຳແດງຄວາມຮັກຫມັ້ນຄົງ ແລະຍິ່ງໃຫຍ່ແກ່ດາວິດສະເດັດພໍ່ຂອງ
ຂ້າພຣະອົງ ແລະຊົງກະທຳໃຫ້ຂ້າພຣະອົງເປັນກະສັດແທນ
9 ຂ້າແດ່ພຣະເຈົ້າ ຂໍໃຫ້ພຣະສັນຍາຂອງພຣະອົງທີ່ມີຕໍ່ດາວິດສະເດັດພໍ່ຂອງຂ້າພຣະອົງເປັນຈິງໃນບັດນີ້ ເພາະພຣະອົງ
ໄດ້ຊົງຕັ້ງໃຫ້ຂ້າພຣະອົງເປັນກະສັດເຫນືອຊົນຊາດທີ່ຫລາຍເຫມືອນຝຸ່ນຂີ້ດິນແຫ່ງແຜ່ນດິນໂລກ
10 ຂໍຊົງປະທານສະຕິປັນຍາແລະຄວາມຮູ້ແກ່ຂ້າພຣະອົງທີ່ຈະເຂົ້ານອກອອກໃນຕໍ່ຫນ້າຊົນຊາດນີ້ ເພາະຜູ້ໃດທີ່ຈະປົກ
ຄອງໄພ່ພົນຂອງພຣະອົງໄດ້ ຊຶ່ງໃຫຍ່ຍິ່ງນັກ”
11 ພຣະເຈົ້າຊົງກ່າວຕອບໂຊໂລໂມນວ່າ, “ຍ້ອນວ່າສິ່ງນີ້ຢູ່ໃນຈິດໃຈຂອງເຈົ້າ ແລະເຈົ້າບໍ່ໄດ້ຂໍຊັບສົມບັດ ຄວາມມັ່ງຄັ່ງ,
ກຽດ ຫລືຊີວິດສັດຕຣູ ແລະທັງບໍ່ໄດ້ຂໍຊີວິດຂອງຄົນເຫລົ່ານັ້ນຜູ້ກຽດຊັງເຈົ້າ ແລະທັງບໍ່ໄດ້ຂໍຊີວິດຍືນຍາວ ແຕ່ໄດ້ຂໍສະ

ຕິປັນຍາແລະຄວາມຮູ້ເພື່ອຕົວເຈົ້າເອງ ເພື່ອເຈົ້າຈະປົກຄອງໄພ່ພົນຂອງເຮົາ ຜູ້ຊຶ່ງເຮົາໄດ້ຕັ້ງເຈົ້າໃຫ້ເປັນກະສັດ
ເຫນືອເຂົານັ້ນ
12 ເຮົາຈະໃຫ້ສະຕິປັນຍາແລະຄວາມຮູ້ໃຫ້ແກ່ເຈົ້າ ເຮົາຈະໃຫ້ຊັບສົມບັດຄວາມມັ່ງຄັ່ງ ແລະກຽດຕິຍົດແກ່ເຈົ້າດ້ວຍຢ່າງ
ທີ່ບໍ່ມີກະສັດອົງໃດຜູ້ຢູ່ກ່ອນເຈົ້າໄດ້ມີ ແລະບໍ່ມີຜູ້ໃດພາຍຫລັງເຈົ້າຈະມີເຫມືອນ”
13 ໂຊໂລໂມນຈຶ່ງສະເດັດຈາກບ່ອນນະມັສການທີ່ກິເບໂອນ ຈາກຕໍ່ຫນ້າເຕັນນັດພົບໄປຍັງກຸງເຢຣູຊາເລັມ ແລະພຣະ
ອົງຊົງປົກຄອງ ຢູ່ເຫນືອອິສຣາເອນ

Solomon’s Military and Commercial Activity

(1 ກສຄ 10:26-29; 2 ຂຄວ 9:25-28)

14 ໂຊໂລໂມນຊົງຮວບຮວມຣົດຮົບ ແລະພົນມ້າ ພຣະອົງຊົງມີຣົດຮົບນຶ່ງພັນສີ່ຮ້ອຍຄັນ ແລະພົນມ້ານຶ່ງຫມື່ນສອງພັນ
ຄົນ ຊຶ່ງພຣະອົງຊົງໃຫ້ປະຈໍາຢູ່ທີ່ຫົວເມືອງຣົດຮົບ ແລະຢູ່ກັບກະສັດໃນກຸງເຢຣູຊາເລັມ
15 ເຈົ້າຊີວິດຊົງກະທໍາໃຫ້ເງິນແລະທອງຄໍາເປັນຂອງສາມັນໃນກຸງເຢຣູຊາເລັມເຫມືອນກ້ອນຫີນ ແລະຊົງກະທໍາໃຫ້ມີໄມ້
ສົນຫລວງຫລາຍເຫມືອນໄມ້ຫມາກເດື່ອແຫ່ງຖິ່ນເຊເຟລາ
16 ມ້າອັນເປັນສິນຄ້າເຂົ້າຂອງໂຊໂລໂມນມາຈາກເອຢິບ ເປັນຝູງໆ ແລະບັນດາພໍ່ຄ້າຂອງເຈົ້າຊີວິດຮັບມາເປັນຝູງໆ
ຕາມຣາຄາ
17 ເຂົາທັງຫລາຍນໍາຣົດຮົບເຂົ້າມາຈາກເອຢິບຄັນນຶ່ງເປັນເງິນຫົກຮ້ອຍເຊເກລເງິນ ແລະມ້າໂຕນຶ່ງນຶ່ງຮ້ອຍຫ້າສິບ ດັ່ງ
ນັ້ນໂດຍທາງພວກພໍ່ຄ້າ ເຂົາກໍສົ່ງອອກໄປຍັງບັນດາກະສັດຂອງຄົນຮິດຕີ ແລະບັນດາກະສັດຂອງຄົນຊີເຣັຽ (ອາ
ຣາມ)

## 2 ໂຊໂລໂມນຊົງຕົກລົງກັບກະສັດຮູຣາມ

Preparations for Building the Temple

1 ຝ່າຍໂຊໂລໂມນຊົງຕັ້ງພຣະທັຍທີ່ຈະສ້າງພຣະວິຫານເພື່ອພຣະນາມຂອງພຣະຜູ້ເປັນເຈົ້າ ແລະສ້າງພຣະຣາຊວັງ
ເພື່ອຣາຊອານາຈັກຂອງພຣະອົງ
2 ແລະໂຊໂລໂມນຊົງກໍານົດໃຫ້ເຈັດຫມື່ນຄົນເປັນຄົນຂົນເຄື່ອງ ແລະໃຫ້ແປດຫມື່ນຄົນສະກັດຫີນທີ່ເນີນພູ ແລະໃຫ້
ສາມພັນຫົກຮ້ອຍຄົນດູແລເຂົາທັງຫລາຍ

Alliance with Huram of Tyre

(1 ກສຄ 5:1-18)

3 ແລະໂຊໂລໂມນຊົງສົ່ງຣາຊສານໄປຍັງຮູຣາມກະສັດເມືອງຕີເຣວ່າ, “ທ່ານໄດ້ກະທໍາກິຈກັບດາວິດຣາຊບິດາຂອງຂ້າ
ພະເຈົ້າ ຄື ໄດ້ສົ່ງໄມ້ສົນໃຫ້ພຣະອົງ ເພື່ອສ້າງວັງໃຫ້ພຣະອົງອາສັຍຢ່າງໃດ ຂໍທ່ານໄດ້ກະທໍາແກ່ຂ້າພະເຈົ້າຢ່າງນັ້ນ
4 ເບິ່ງແມ່, ຂ້າພະເຈົ້າກໍາລັງຈະສ້າງພຣະວິຫານ ເພື່ອພຣະນາມພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າພະເຈົ້າ ແລະມອບ
ຖວາຍແດ່ພຣະອົງເພື່ອເຜົາເຄື່ອງຫອມຕໍ່ພຣະພັກພຣະອົງ ແລະເພື່ອເຂົ້າຈີ່ຕັ້ງຖວາຍຕລອດໄປ ແລະເພື່ອເຄື່ອງເຜົາ
ບູຊາທັງຕອນເຊົ້າແລະຕອນແລງໃນວັນສະບາໂຕ ແລະໃນວັນຂ້າງຂຶ້ນ ແລະວັນເທສການຂອງພຣະຜູ້ເປັນເຈົ້າພຣະ
ເຈົ້າຂອງເຮົາ ຊຶ່ງເປັນກົດຫມາຍຕັ້ງໄວ້ເປັນນິດສໍາລັບອິສຣາເອນ
5 ພຣະວິຫານຊຶ່ງຂ້າພະເຈົ້າຈະສ້າງນັ້ນໃຫຍ່ໂຕ ເພາະວ່າພຣະເຈົ້າຂອງເຮົາໃຫຍ່ຍິ່ງກວ່າພຣະທັງປວງ
6 ແຕ່ຜູ້ໃດຫນໍທີ່ຈະສາມາດສ້າງພຣະວິຫານສໍາລັບພຣະອົງໄດ້ ໃນເມື່ອຟ້າສວັນເຖິງແມ່ນວ່າຟ້າສວັນທີ່ສູງສຸດທີ່ສຸດ
ຮັບຮອງພຣະອົງໄວ້ບໍ່ໄດ້ ຂ້າພະເຈົ້າເປັນຜູ້ໃດຫນໍທີ່ຈະສ້າງພຣະວິຫານສໍາລັບພຣະອົງ ນອກຈາກໃຫ້ເປັນທີ່ເຜົາ
ເຄື່ອງຫອມຖວາຍພຣະອົງເທົ່ານັ້ນ

7 ເຫດສັນນັ້ນ ບັດນີ້ຂໍສົ່ງຊາຍຄົນນຶ່ງຜູ້ຊໍານານການຊ່າງທອງຄໍາ ເງິນ ທອງສໍາຣິດແລະເຫລັກ ແລະຊໍານານໃນເຣື່ອງຜ້າສີມ່ວງ ສີແດງເຂັ້ມ ແລະສີຟ້າ ທັງເປັນຜູ້ຊໍານານໃນການແກະສລັກ ເພື່ອຈະຢູ່ກັບຊ່າງສີມືຜູ້ຢູ່ກັບຂ້າພະເຈົ້າໃນຢູດາ ແລະໃນເຢຣູຊາເລັມ ຜູ້ຊຶ່ງດາວິດຣາຊບິດາຂອງຂ້າພະເຈົ້າໄດ້ຈັດຫາໄວ້

8 ຂໍທ່ານສົ່ງໄມ້ສົນ ໄມ້ແປກ ແລະໄມ້ດູ່ຈາກເລບານອນໃຫ້ຂ້າພະເຈົ້າດ້ວຍ ເພາະຂ້າພຣະເຈົ້າເຂົ້າໃຈວ່າຂ້າຣາຊການຂອງທ່ານຮູ້ຈັກການຕັດໄມ້ໃນເລບານອນ ແລະເບິ່ງແມ, ຂ້າຣາຊການຂອງຂ້າພະເຈົ້າຈະຢູ່ກັບຂ້າຣາຊການຂອງທ່ານ

9 ເພື່ອຈັດຕຽມຕົວໄມ້ໃຫ້ແກ່ຂ້າພະເຈົ້າໃຫ້ຫລວງຫລາຍ ເພາະວ່າພຣະວິຫານທີ່ຂ້າພະເຈົ້າຈະສ້າງນີ້ຈະໃຫຍ່ໂຕແລະແປກປລາດ

10 ແລະເບິ່ງແມ, ສ່ວນຂ້າຣາຊການຂອງທ່ານ ຄືຜູ້ທີ່ຕັດຕົ້ນໄມ້ນັ້ນ ຂ້າພະເຈົ້າຈະໃຫ້ເຂົ້າສາລີນວດແລ້ວສອງຫມື່ນໂກຣ໌ ເຂົ້າບເລສອງຫມື່ນໂກຣ໌ ເຫລົ້າອະງຸ່ນສອງຫມື່ນບັດ ແລະນໍ້າມັນສອງຫມື່ນບັດແກ່ເຂົາທັງຫລາຍ”

11 ແລ້ວຮູຣາມພຣະຣາຊາແຫ່ງເມືອງຕີເຣຊົງຕອບເປັນລາຍພຣະຫັດ ຊຶ່ງພຣະອົງຊົງມີໄປເຖິງໂຊໂລໂມນວ່າ, “ເພາະວ່າພຣະເຈົ້າຊົງຮັກປະຊາກອນຂອງພຣະອົງ ພຣະອົງຈຶ່ງຊົງກະທໍາໃຫ້ທ່ານເປັນພຣະຣາຊາເຫນືອເຂົາທັງຫລາຍ”

12 ຮູຣາມກ່າວອີກວ່າ, “ສາທຸການແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ ຜູ້ຊົງສ້າງຟ້າສວັນແລະແຜ່ນດິນໂລກ ຜູ້ໄດ້ປະທານໂອຣົດທີ່ສລາດຄົນນຶ່ງແກ່ດາວິດປະກອບດ້ວຍຄວາມສລຽວສລາດແລະຄວາມເຂົ້າໃຈ ຜູ້ຊຶ່ງຈະສ້າງພຣະວິຫານຖວາຍພຣະເຈົ້າ ແລະສ້າງພຣະຣາຊວັງເພື່ອຣາຊອານາຈັກຂອງພຣະອົງ

13 “ບັດນີ້ຂ້າພະເຈົ້າໄດ້ສົ່ງຊ່າງສີມືຄົນນຶ່ງ ປະກອບດ້ວຍຄວາມເຂົ້າໃຈ ຄືຮູຣາມາບີທີ່ປຶກສາອາວຸໂສ

14 ບຸດຊາຍຂອງຍິງເຜົ່າດານບິດາຂອງເຂົາເປັນຊາວເມືອງຕີເຣ ເຂົາຊໍານານງານຊ່າງທອງຄໍາ ເງິນ ທອງສໍາຣິດ ເຫລັກ ຫີນແລະໄມ້ ແລະທໍາງານຊ່າງຜ້າສີມ່ວງ ສີຟ້າ ຜ້າປ່ານ ແລະຜ້າສີແດງເຂັ້ມ ແລະທໍາການແກະສລັກທຸກຊະນິດ ແລະສ້າງຕາມແບບລວດລາຍໃດໆທີ່ຈະກໍານົດໃຫ້ແກ່ເຂົາ ພ້ອມກັບຊ່າງສີມືຂອງທ່ານ ຄືຊ່າງສີມືຂອງດາວິດຣາຊບິດາຂອງທ່ານຜູ້ເປັນເຈົ້ານາຍຂອງຂ້າພະເຈົ້າ

15 ເຫດສັນນັ້ນເຣື່ອງເຂົ້າສາລີ ເຂົ້າບເລ ນໍ້າມັນ ແລະເຫລົ້າອະງຸ່ນ ຊຶ່ງເຈົ້ານາຍຂອງຂ້າພະເຈົ້າໄດ້ກ່າວເຖິງນັ້ນ ຂໍທ່ານໄດ້ສົ່ງໄປໃຫ້ພວກເຮົາຜູ້ຮັບໃຊ້ທ່ານ

16 ແລະພວກເຮົາຈະຕັດໄມ້ເທົ່າທີ່ທ່ານຕ້ອງການຈາກເລບານອນ ແລະນໍາມາໃຫ້ທ່ານໂດຍແພທາງທະເລເຖິງເມືອງໂຢບປາເພື່ອວ່າທ່ານຈະໄດ້ນໍາຂຶ້ນໄປຍັງກຸງເຢຣູຊາເລັມ”

17 ແລ້ວໂຊໂລໂມນຊົງທໍາບັນຊີສໍາມະໂນຄົວຊົນຕ່າງດ້າວທັງສິ້ນຜູ້ຢູ່ໃນແຜ່ນດິນອິສຣາເອນ ພາຍຫລັງບັນຊີສໍາມະໂນຄົວຊຶ່ງດາວິດຣາຊບິດາຂອງພຣະອົງໄດ້ຊົງກະທໍາໄວ້ ແລະປາກົດວ່າມີຄົນນຶ່ງແສນຫ້າຫມື່ນສາມພັນຫົກຮ້ອຍຄົນ

18 ພຣະອົງຊົງກໍານົດໃຫ້ເຈັດຫມື່ນຄົນເປັນຄົນຂົນຂອງ ແລະໃຫ້ແປດຫມື່ນຄົນສະກັດຫີນທີ່ຖິ່ນພູດອຍ ແລະຄົນສາມພັນຫົກຮ້ອຍຄົນເປັນຜູ້ດູແລໃຫ້ປະຊາຊົນທໍາງານ

## 3 ໂຊໂລໂມນຊົງສ້າງພຣະວິຫານຂອງພຣະເຈົ້າ

Solomon Builds the Temple

(1 ກສດ 6:1-22)

1 ແລ້ວໂຊໂລໂມນຊົງເລີ້ມສ້າງພຣະວິຫານຂອງພຣະຜູ້ເປັນເຈົ້າທີ່ກຸງເຢຣູຊາເລັມເທິງພູໂມຣິຢາ ຊຶ່ງພຣະຜູ້ເປັນເຈົ້າຊົງປາກົດແກ່ດາວິດຣາຊບິດາຂອງພຣະອົງ ເປັນບ່ອນຊຶ່ງດາວິດຊົງກໍານົດໄວ້ທີ່ລານຟາດເຂົ້າຂອງໂອຣ໌ນານ ຄົນເຢບຸສ

2 ພຣະອົງຊົງເລີ້ມສ້າງໃນວັນທີສອງເດືອນທີສອງຂອງປີທີສີ່ແຫ່ງຣັຊການຂອງພຣະອົງ

3 ຕໍ່ໄປນີ້ເປັນຮາກຖານຊຶ່ງໂຊໂລໂມນຊົງວາງເພື່ອສ້າງພຣະວິຫານຂອງພຣະຜູ້ເປັນເຈົ້າ ສ່ວນລວງຍາວຕາມສອກບູຮານ ຫົກສິບສອກ ແລະລວງກວ້າງຊາວສອກ

4 ແຈດ້ານຫນ້າຂອງພຣະວິຫານນັ້ນຍາວຊາວສອກ ເທົ່າກັບດ້ານກວ້າງຂອງພຣະວິຫານ ແລະສ່ວນລວງສູງນຶ່ງຮ້ອຍ
ຊາວ ພຣະອົງຊົງໂອບດ້ານໃນດ້ວຍທອງຄຳບໍຣິສຸດ

5 ຫ້ອງໂຖງພຣະອົງຊົງແອ້ມດ້ວຍໄມ້ສົນ ແລະໂອບດ້ວຍທອງຄຳ ແລະແກະສລັກເອ້ຄວັດລາຍເປັນຮູບນ້ຳເຕົ້າ ແລະ
ຮູບດອກອັລ ພລັມແລະມີໂສ້ຄຳປະດັບໄວ້ເທິງນັ້ນ

6 ພຣະອົງຊົງແຕ່ງພຣະວິຫານດ້ວຍຝັງເພັດພອຍ ທອງຄຳນັ້ນເປັນທອງຄຳເມືອງປາຣ໌ວາອິມ

7 ພຣະອົງຊົງໂອບພຣະວິຫານນັ້ນດ້ວຍທອງຄຳ ຄືທີ່ຄານ ທາງເຂົ້າປະຕູ ຝາ ປະຕູກັບແກະສລັກຮູບເຊຣູບິມໄວ້ເທິງຝາ

8 ແລະພຣະອົງຊົງສ້າງຫ້ອງສັກສິດທີ່ສຸດ ຄືລວງຍາວຂອງທີ່ນັ້ນຕາມລວງກວ້າງຂອງພຣະວິຫານ ເປັນຊາວສອກ ແລະ
ລວງກວ້າງຊາວສອກ ພຣະອົງຊົງໂອບດ້ວຍທອງຄຳຫນັກຫົກຮ້ອຍຕະລັນ

9 ນ້ຳຫນັກຂອງຕະປູຫ້າສິບເຊເກລທອງຄຳ ແລະພຣະອົງຊົງໂອບຫ້ອງຊັ້ນເທິງດ້ວຍທອງຄຳ

10 ໃນຫ້ອງສັກສິດທີ່ສຸດນັ້ນ ພຣະອົງຊົງສ້າງຮູບເຊຣູບິມໄວ້ສອງຮູບດ້ວຍໄມ້ໂອບທອງຄຳປີກຂອງເຊຣູບິມທັງສອງນັ້ນ
ກາງອອກ ຊາວສອກ ປີກຂ້າງນຶ່ງຂອງເຊຣູບິມຮູບນຶ່ງຍາວ ຫ້າສອກຈຸຝາພຣະວິຫານ ແລະອີກປີກນຶ່ງຫ້າສອກຕິດ
ຕໍ່ກັບປີກຂອງເຊຣູບິມອີກຮູບນຶ່ງ

11 ປີກຂອງເຊຣູບິມເຫລົ່ານີ້ກາງອອກຊາວສອກ ເຊຣູບິມທັງສອງນັ້ນຢືນຫັນຫນ້າໄປທາງຫ້ອງໂຖງ

12 ແລະພຣະອົງຊົງສ້າງຜ້າກັ້ງດ້ວຍສີຟ້າ ສີມ່ວງ ແລະສີແດງເຂັ້ມ ແລະຜ້າປ່ານ ແລະປັກຮູບເຊຣູບິມໄວ້ເທິງນັ້ນ

13 ຂ້າງຫນ້າພຣະວິຫານພຣະອົງຊົງສ້າງເສົາຫານ
ສອງຕົ້ນ ສູງສາມສິບຫ້າສອກ ມີບົວຂວ້ຳສູງຫ້າສອກຢູ່ເທິງຍອດເສົາຫານແຕ່ລະຕົ້ນ

**ງານຂອງຮູຣາມໃນພຣະວິຫານ**

14 ພຣະອົງຊົງທຳໂສ້ເຫມືອນສ້ອຍຄໍຕິດໄວ້ທີ່ຍອດເສົາຫານ ແລະພຣະອົງຊົງທຳຫມາກພິລານຶ່ງຮ້ອຍຫມາກແຂວນໄວ້ທີ່
ໂສ້

15 ພຣະອົງຊົງຕັ້ງເສົາຫານໄວ້ຫນ້າພຣະວິຫານ ຂ້າງຂວາຕົ້ນນຶ່ງແລະອີກຕົ້ນນຶ່ງຂ້າງຊ້າຍ ຕົ້ນຂ້າງຂວານັ້ນພຣະອົງຊົງ
ໃສ່ຊື່ວ່າຢາຄີນ ແລະຕົ້ນຂ້າງຊ້າຍວ່າໂບອັສ

## 4

Furnishings of the Temple

(1 ກສດ 6:23-38; 7:13-51)

1 ພຣະອົງຊົງສ້າງແທ່ນບູຊາດ້ວຍທອງສຳຣິດ ຍາວຊາວສອກ ແລະກວ້າງຊາວສອກ ສູງສິບສອກ

2 ແລ້ວພຣະອົງຊົງສ້າງຂັນທີ່ຫລໍ່ ເປັນຂັນກົມ ແທກຈາກຂອບນຶ່ງໄປເຖິງອີກຂອບນຶ່ງໄດ້ສິບສອກ ສູງຫ້າສອກ ແລະ
ແທກຮອບໄດ້ສາມສິບສອກ

3 ພາຍໃຕ້ຂັນນີ້ ມີຮູບງົວຢູ່ຮອບຂັນ ລະຍະສິບສອກຢູ່ຮອບຂັນ ງົວເຫລົ່ານີ້ເປັນສອງແຖວ ຫລໍ່ພ້ອມກັບເມື່ອຫລໍ່ຂັນ

4 ຂັນນັ້ນວາງຢູ່ເທິງງົວສິບສອງໂຕຫັນຫນ້າໄປທິດເຫນືອສາມໂຕ ຫັນຫນ້າໄປທິດຕາເວັນຕົກສາມໂຕ ແລະຫັນຫນ້າ
ໄປທິດຕາເວັນອອກສາມໂຕ ຂັນນັ້ນວາງຢູ່ເທິງງົວນີ້ ສ່ວນເບື້ອງຫລັງຂອງມັນທັງສິ້ນຢູ່ຂ້າງໃນ

5 ຂັນຫນານຶ່ງຄືບ ທີ່ຂອບຂອງມັນທຳເຫມືອນຂອບຖ້ວຍ ເຫມືອນຢ່າງດອກບົວ ບັນຈຸໄດ້ສາມພັນບັດ (Bath)

6 ພຣະອົງຊົງທຳຂັນສິບຫນ່ວຍ ວາງຢູ່ດ້ານຂວາຫ້າຫນ່ວຍແລະດ້ານຊ້າຍຫ້າຫນ່ວຍ ເພື່ອໃຊ້ລ້າງຂອງໃນນັ້ນ ເຂົາຈະ
ລ້າງຂອງ ຊຶ່ງໃຊ້ເປັນເຄື່ອງເຜົາບູຊາໃນນີ້ ຂັນນັ້ນສຳລັບປະໂຣຫິດລ້າງໃນນັ້ນ

7 ແລ້ວພຣະອົງຊົງສ້າງເຄື່ອງຮອງຕີນໂຄມທອງຄຳສິບອັນຕາມທີ່ກຳນົດກ່ຽວກັບເຄື່ອງຮອງຕີນໂຄມນັ້ນ ແລະພຣະອົງ
ຊົງຕັ້ງໄວ້ໃນພຣະວິຫານ ຢູ່ດ້ານຂວາຫ້າແລະດ້ານຊ້າຍຫ້າ

8 ພຣະອົງຊົງສ້າງໂຕະສິບຫນ່ວຍ ແລະຕັ້ງໄວ້ໃນພຣະວິຫານ ຢູ່ດ້ານຂວາຫ້າຫນ່ວຍ ດ້ານຊ້າຍຫ້າຫນ່ວຍ ແລະພຣະ
ອົງຊົງທຳຊາມທອງຄຳນຶ່ງຮ້ອຍໃບ
9 ພຣະອົງຊົງສ້າງລານແຫ່ງປະໂຣຫິດ ແລະບານໃຫຍ່ແລະປະຕູລານ ແລະຊົງໂອບປະຕູນັ້ນດ້ວຍທອງສຳຣິດ
10 ພຣະອົງຊົງວາງຂັນໄວ້ທີ່ດ້ານຂວາພຣະວິຫານທາງທິດຕາເວັນອອກສ່ຽງໃຕ້
11 ຮູຣາມໄດ້ສ້າງຫມໍ້ ຊວ້ານ ແລະຊາມ ດັ່ງນັ້ນຮູຣາມຈຶ່ງທຳງານຊຶ່ງທ່ານກະທຳໃຫ້ກະສັດໂຊໂລໂມນເຣື່ອງພຣະວິຫານ
ຂອງພຣະຜູ້ເປັນເຈົ້າສຳເຣັດ
12 ຄື ເສົາຫານສອງຕົ້ນ ຄື້ວ ແລະບົວຂວ້ຳຊຶ່ງຢູ່ເທິງຍອດເສົາຫານທັງສອງ ແລະຕາມ່າງສອງຜືນຊຶ່ງຄຸມຄື້ວທັງສອງຂອງ
ບົວຂວ້ຳຊຶ່ງຢູ່ເທິງຍອດເສົາຫານ
13 ແລະຫມາກພິລາສີ່ຮ້ອຍຫມາກສຳລັບຕາຂ່າຍທັງສອງຜືນ ຕາຂ່າຍຜືນນຶ່ງມີຫມາກພິລາສອງແຖວ ເພື່ອຄຸມຄື້ວທັງ
ສອງຂອງບົວຂວ້ຳຊຶ່ງຢູ່ເທິງຍອດເສົາຫານ
14 ເຂົາທຳແທ່ນດ້ວຍ ແລະທຳຂັນໄວ້ເທິງແທ່ນ
15 ແລະຂັນຫນ່ວຍນຶ່ງ ແລະງົວສິບສອງຕົວຮອງຢູ່ນັ້ນ
16 ຫມໍ້ ຊວ້ານ ແລະສ້ອມ ແລະເຄື່ອງປະກອບທັງສິ້ນນີ້ ຮູຣາມອາບີໄດ້ທຳຂຶ້ນດ້ວຍທອງສຳຣິດສຸກຖວາຍກະສັດໂຊໂລ
ໂມນສຳລັບ ພຣະວິຫານຂອງພຣະຜູ້ເປັນເຈົ້າ
17 ເຈົ້າຊີວິດຊົງຫລໍ່ສິ່ງເຫລົ່ານີ້ໃນທີ່ຮາບແມ່ນ້ຳຈໍແດນ ໃນທີ່ດິນຫນຽວລະຫວ່າງຊຸກໂກດແລະເຊເຣດາ
18 ໂຊໂລໂມນຊົງສ້າງສິ່ງເຫລົ່ານີ້ເປັນຈຳນວນມາກ ຈຶ່ງບໍ່ໄດ້ຫານ້ຳຫນັກຂອງທອງສຳຣິດ
19 ໂຊໂລໂມນຈຶ່ງຊົງກະທຳເຄື່ອງໃຊ້ທັງສິ້ນຊຶ່ງຢູ່ໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ຄືແທ່ນບູຊາທອງຄຳ ໂຕະເຂົ້າຈີ່ຕໍ່
ຫນ້າພຣະພັກ
20 ເຄື່ອງຮອງຕີນໂຄມແລະຕະກຽງທຳດ້ວຍທອງຄຳບໍຣິສຸດ ເພື່ອໃຊ້ໄຕ້ຢູ່ຕໍ່ຫນ້າບ່ອນສັກສິດທີ່ສຸດ ຕາມກົດຫມາຍ
21 ດອກໄມ້ ຕະກຽງ ແລະຄີມທຳດ້ວຍທອງຄຳຄືທອງຄຳບໍຣິສຸດທີ່ສຸດ
22 ມີດຕັດໃສ້ຕະກຽງ ຊາມ ຖ້ວຍແລະກະຖາງໄຟທຳດ້ວຍທອງຄຳບໍຣິສຸດ ສ່ວນທາງເຂົ້າຂອງພຣະວິຫານຄື ປະຕູທາງ
ໃນຂອງບ່ອນສັກສິດທີ່ສຸດ ແລະປະຕູພຣະວິຫານ ຄືປະຕູຫ້ອງໂຖງທຳດ້ວຍທອງຄຳ

## 5

Chapter 5

1 ບັນດາກິຈການຊຶ່ງໂຊໂລໂມນຊົງກະທຳສຳລັບພຣະວິຫານຂອງພຣະຜູ້ເປັນເຈົ້າກໍສຳເຣັດດັ່ງນີ້ ແລະໂຊໂລໂມນຊົງ
ນຳບັນດາສິ່ງຊຶ່ງດາວິດຣາຊບິດາຊົງຖວາຍໄວ້ເຂົ້າມາຄື ເຄື່ອງເງິນ ເຄື່ອງທອງຄຳ ແລະເຄື່ອງໃຊ້ຕ່າງໆ ແລະເກັບໄວ້
ໃນຄັງພຣະວິຫານຂອງພຣະຜູ້ເປັນເຈົ້າ

### ໂຊໂລໂມນຊົງນຳຫີບຄຳສັນຍາເຂົ້າໃນພຣະວິຫານ

The Ark Brought into the Temple

(1 ກສດ 8:1-11)

2 ແລ້ວໂຊໂລໂມນຊົງປະຊຸມພວກຜູ້ໃຫຍ່ຂອງອິສຣາເອນ ແລະບັນດາຫົວຫນ້າຂອງເຜົ່າ ແລະບັນດາປະມຸກຂອງຕະ
ກູນຊົນອິສຣາເອນ ໃນກຸງເຢຣູຊາເລັມ ເພື່ອນຳຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າຂຶ້ນມາຈາກນະຄອນດາວິດ ຄືເມືອງ
ຊີໂອນ
3 ແລະຜູ້ຊາຍທັງສິ້ນຂອງອິສຣາເອນກໍປະຊຸມຕໍ່ພຣະພັກເຈົ້າຊີວິດໃນງານລ້ຽງໃນເດືອນທີເຈັດ
4 ພວກຜູ້ໃຫຍ່ທັງສິ້ນຂອງອິສຣາເອນມາ ແລະຄົນເລວີກໍຍົກຫີບ

5 ເຂົາທັງຫລາຍກໍນໍາຫີບເຕັນນັດພົບແລະຄື່ອງໃຊ້ບໍຣິສຸດທັງສິ້ນຊຶ່ງຢູ່ໃນເຕັນຂຶ້ນມາ ຂອງເຫລົ່ານີ້ບັນດາປະໂຣຫິດ
ແລະຄົນເລວີຫາມຂຶ້ນມາ
6 ກະສັດໂຊໂລໂມນກັບຊຸມນຸມຊົນອິສຣາເອນທັງສິ້ນ ທີ່ໄດ້ປະຊຸມກັນຢູ່ກັບພຣະອົງຕໍ່ຫນ້າຫີບ ໄດ້ຖວາຍແກະແລະງົວ
ມາກມາຍ ຊຶ່ງເຂົາຈະນັບຫລືເອົາຈໍານວນກໍບໍ່ໄດ້
7 ແລ້ວປະໂຣຫິດກໍນໍາຫີບຄໍາສັນຍາຂອງພຣະຜູ້ເປັນເຈົ້າມາຍັງທີ່ຂອງຫີບໃນທີ່ຢູ່ໃນຫ້ອງຫລັງຂອງພຣະວິຫານຄືໃນສະ
ຖານທີ່ສັກສິດ ພາຍໃຕ້ປີກ
ເຊຣູບິມ
8 ເພາະວ່າເຊຣູບິມນັ້ນກາງປີກອອກເຫນືອທີ່ຂອງຫີບເຊຣູບິມຈຶ່ງເປັນເຄື່ອງຄຸມເຫນືອຫີບ ແລະໄມ້ຄານຂອງຫີບ
9 ຄານຫາມຂອງຫີບນັ້ນຍາວຫລາຍຈຶ່ງເຫັນປາຍຄານຫາມໄດ້ຈາກສະຖານທີ່ສັກສິດຊຶ່ງຢູ່ຂ້າງຫນ້າຫ້ອງຫລັງ ແຕ່ເຂົາ
ຈະເຫັນຈາກຂ້າງນອກບໍ່ໄດ້ ແລະຄານຫາມກໍຍັງຢູ່ທີ່ນັ້ນຈົນເທົ່າທຸກວັນນີ້
10 ບໍ່ມີສິ່ງໃດໃນຫີບນອກຈາກສີລາສອງແຜ່ນຊຶ່ງໂມເຊເກັບໄວ້ໃນພູໂຮເຣັບ ເມື່ອພຣະຜູ້ເປັນເຈົ້າຊົງກະທໍາຄໍາສັນຍາກັບ
ຄົນອິສຣາເອນ ເມື່ອເຂົາທັງຫລາຍອອກມາຈາກແຜ່ນດິນເອຢິບ
11 ຢູ່ມາເມື່ອປະໂຣຫິດອອກມາຈາກສະຖານທີ່ສັກສິດ (ເພາະປະໂຣຫິດທັງປວງຜູ້ຢູ່ທີ່ນັ້ນໄດ້ຊໍາຣະຕົນໃຫ້ບໍຣິສຸດແລ້ວ
ແລະບໍ່ຄໍານຶງເຖິງເວນ
12 ແລະບັນດາພວກເລວີທີ່ເປັນນັກຮ້ອງທັງຫມົດ ທັງອາສາບ ເຮມານ ແລະເຢດູທູນ ທັງບຸດຊາຍແລະຍາດຂອງເຂົາທັງ
ຫລາຍ ນຸ່ງເຄື່ອງດ້ວຍຜ້າປ່ານ ມີແຊ່ງ ພິນໃຫຍ່ແລະພິນເຂົາຄູ່ ຢືນຢູ່ທາງຕາເວັນອອກຂອງແທ່ນບູຊາ ພ້ອມກັບປະ
ໂຣຫິດຄົນເປົ່າແກນຶ່ງຮ້ອຍຊາວຄົນ)
13 ພວກຄົນເປົ່າແກ ແລະພວກນັກຮ້ອງຈະທໍາໃຫ້ຄົນໄດ້ຍິນເຂົາທັງຫລາຍຮ້ອງເພງສັຣເສີນແລະເພງໂມທະນາພຣະຄຸນ
ເປັນສຽງດຽວກັນ ແລະເມື່ອເຂົາຮ້ອງຂຶ້ນພ້ອມກັບແກແລະແຊ່ງກັບເຄື່ອງດົນຕຣີຢ່າງອື່ນໃນການຖວາຍສັຣເສີນແດ່ພ
ຣະຜູ້ເປັນເຈົ້າວ່າ, “ເພາະພຣະອົງປະເສີດ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດໍາຣົງຢູ່ເປັນນິດ” ພຣະວິຫານ ຄືພ
ຣະວິຫານຂອງພຣະຜູ້ເປັນເຈົ້າກໍມີເມກເຕັມໄປຫມົດ
14 ຈົນປະໂຣຫິດຈະຢືນປົວຣະບັດບໍ່ໄດ້ ດ້ວຍເຫດເມກນັ້ນ ເພາະສະງ່າຣາສີຂອງພຣະຜູ້ເປັນເຈົ້າເຕັມພຣະວິຫານຂອງພ
ຣະເຈົ້າ

## 6 ການມອບຖວາຍພຣະວິຫານ

Dedication of the Temple

(1 ກສດ 8:12-21)

1 ແລ້ວໂຊໂລໂມນກ່າວວ່າ, “ພຣະຜູ້ເປັນເຈົ້າໄດ້ກ່າວວ່າ ພຣະອົງຈະປະທັບໃນຄວາມມືດຕຶບ
2 ຂ້າພຣະອົງໄດ້ສ້າງພຣະວິຫານອັນເປັນທີ່ປະທັບສໍາລັບພຣະອົງ ເປັນສະຖານທີ່ເພື່ອພຣະອົງຈະຊົງສະຖິດຢູ່ເປັນນິດ”
3 ແລ້ວເຈົ້າຊີວິດກໍຊົງຫັນມາ ແລະຊົງໃຫ້ພອນແກ່ຊຸມນຸມຊົນອິສຣາເອນທັງປວງຢືນຢູ່
4 ພຣະອົງກ່າວວ່າ, “ສາທຸການແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນຜູ້ຊົງກະທໍາໃຫ້ສໍາເຣັດດ້ວຍພຣະຫັດຂອງ
ພຣະອົງ ຕາມທີ່ພຣະອົງຊົງສັນຍາໄວ້ດ້ວຍພຣະໂອດຕໍ່ດາວິດພຣະຣາຊບິດາຂອງຂ້າພຣະອົງ"
5 “ຕັ້ງແຕ່ວັນທີ່ເຮົາໄດ້ນໍາໄພ່ພົນຂອງເຮົາອອກຈາກເອຢິບ ເຮົາບໍ່ໄດ້ເລືອກເມືອງນຶ່ງເມືອງໃດໃນເຜົ່າອິສຣາເອນທັງສິ້ນ
ເພື່ອຈະສ້າງພຣະວິຫານ ເພື່ອນາມຂອງເຮົາຈະຢູ່ທີ່ນັ້ນ ແລະເຮົາບໍ່ໄດ້ເລືອກຊາຍຄົນໃດໃຫ້ເປັນເຈົ້ານາຍເຫນືອອິສ
ຣາເອນໄພ່ພົນຂອງເຮົາ
6 ແຕ່ເຮົາໄດ້ເລືອກເຢຣູຊາເລັມແລ້ວເພື່ອນາມຂອງເຮົາຈະຢູ່ທີ່ນັ້ນ ແລະເຮົາໄດ້ເລືອກດາວິດແລ້ວໃຫ້ຢູ່ເຫນືອອິສຣາ
ເອນໄພ່ພົນຂອງເຮົາ”

7 ດາວິດພຣະຣາຊບິດາຂອງຂ້າພະເຈົ້າຊົງຕັ້ງພຣະທັຍ ທີ່ຈະສ້າງພຣະວິຫານສຳລັບພຣະນາມແຫ່ງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງອິສຣາເອນ

8 ແຕ່ພຣະຜູ້ເປັນເຈົ້າກ່າວກັບດາວິດພຣະຣາຊບິດາຂອງຂ້າພະເຈົ້າວ່າ "ທີ່ເຈົ້າຕັ້ງໃຈສ້າງພຣະວິຫານສຳລັບນາມຂອງເຮົານັ້ນ ເຈົ້າກໍທຳດີຢູ່ແລ້ວ ໃນເຣື່ອງຄວາມຕັ້ງໃຈຂອງເຈົ້າ

9 ຢ່າງໃດກໍຕາມ ເຈົ້າຈະບໍ່ສ້າງພຣະວິຫານ ແຕ່ບຸດຂອງເຈົ້າຜູ້ຊຶ່ງຈະເກີດແກ່ເຈົ້າຈະສ້າງພຣະວິຫານ ເພື່ອນາມຂອງເຮົາ"

10 ບັດນີ້ ພຣະຜູ້ເປັນເຈົ້າຊົງໃຫ້ພຣະສັນຍາຂອງພຣະອົງ ຊຶ່ງພຣະອົງຊົງກະທຳນັ້ນສຳເຣັດ ເພາະຂ້າພະເຈົ້າໄດ້ຂຶ້ນມາ ແທນດາວິດ ຣາຊບິດາຂອງຂ້າພະເຈົ້າແລະນັ່ງຢູ່ເທິງບັນລັງຂອງອິສຣາເອນ ດັ່ງທີ່ພຣະຜູ້ເປັນເຈົ້າໄດ້ຊົງສັນຍາໄວ້ ແລະຂ້າພະເຈົ້າໄດ້ສ້າງ ພຣະວິຫານສຳລັບພຣະນາມຂອງພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ

11 ແລະຂ້າພະເຈົ້າໄດ້ວາງຫີບໄວ້ທີ່ນັ້ນ ຊຶ່ງຄຳຫມັ້ນສັນຍາຂອງພຣະຜູ້ເປັນເຈົ້າຢູ່ໃນນັ້ນ ຊຶ່ງພຣະອົງໄດ້ຊົງກະທຳກັບຊົນອິສຣາເອນ"

Solomon's Prayer of Dedication

(1 ກສດ 8:22-53)

12 ແລ້ວໂຊໂລໂມນປະທັບຢືນຫນ້າແທ່ນບູຊາຂອງພຣະຜູ້ເປັນເຈົ້າ ຕໍ່ຫນ້າຊຸມນຸມຊົນອິສຣາເອນທັງປວງ ແລະກາງພຣະຫັດຂອງ ພຣະອົງອອກ

13 (ເພາະໂຊໂລໂມນໄດ້ຊົງສ້າງແທ່ນທອງສຳຣິດຍາວຫ້າສອກ ກວ້າງຫ້າສອກ ສູງສາມສອກ ແລະຊົງຕັ້ງໄວ້ກາງເດີ່ນ ແລະພຣະອົງຊົງປະທັບຢູ່ເທິງນັ້ນ ແລ້ວພຣະອົງຊົງຄຸເຂົ່າລົງຕໍ່ຫນ້າຊຸມນຸມອິສຣາເອນທັງປວງແລະກາງພຣະຫັດຂອງພຣະອົງສູ່ຟ້າສວັນ)

14 ພຣະອົງຊົງທູນວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ ບໍ່ມີພຣະເຈົ້າອົງໃດເຫມືອນພຣະອົງ ໃນຟ້າສວັນເບື້ອງເທິງ ຫລືທີ່ແຜ່ນດິນເບື້ອງລຸ່ມ ຜູ້ຊົງຮັກສາຄຳຫມັ້ນສັນຍາແລະຊົງສຳແດງຄວາມຮັກຫມັ້ນຄົງແກ່ຜູ້ຮັບໃຊ້ຂອງພຣະອົງ ຜູ້ດຳເນີນຢູ່ຕໍ່ ພຣະພັກພຣະອົງດ້ວຍສິ້ນສຸດໃຈຂອງເຂົາ

15 ພຣະອົງໄດ້ຊົງກະທຳກັບດາວິດບິດາຂອງຂ້າພຣະອົງ ຜູ້ຮັບໃຊ້ຂອງພຣະອົງ ຕາມບັນດາສິ່ງຊຶ່ງພຣະອົງຊົງສັນຍາໄວ້ແກ່ທ່ານ ພຣະອົງຕັສດ້ວຍພຣະໂອດຂອງພຣະອົງ ແລະພຣະອົງໄດ້ຊົງກະທຳໃຫ້ສຳເຣັດໃນວັນນີ້ດ້ວຍພຣະຫັດຂອງພຣະອົງ

16 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ ເພາະສະນັ້ນຂໍຊົງດຳຣົງຢູ່ກັບຜູ້ຮັບໃຊ້ຂອງພຣະອົງຄືດາວິດຣາຊບິດາຂອງຂ້າ ພຣະອົງ ຕາມຊຶ່ງພຣະອົງຊົງສັນຍາໄວ້ກັບທ່ານວ່າ "ຖ້າພຽງແຕ່ລູກຫລານທັງຫລາຍຂອງເຈົ້າລະມັດລະວັງໃນທາງດຳເນີນຂອງເຂົາ ທີ່ຈະດຳເນີນໄປຕໍ່ຫນ້າເຮົາ ຢ່າງທີ່ເຈົ້າໄດ້ດຳເນີນຕໍ່ຫນ້າເຮົານັ້ນ ເຈົ້າຈະບໍ່ຂາດຊາຍຜູ້ນຶ່ງຕໍ່ຫນ້າເຮົາທີ່ຈະນັ່ງເທິງບັນລັງຂອງອິສຣາເອນ"

17 ເພາະສະນັ້ນຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ ຂໍພຣະວັຈນະຂອງພຣະອົງຈົ່ງດຳຣົງຢູ່ ຊຶ່ງພຣະອົງໄດ້ຕັດກັບຜູ້ຮັບໃຊ້ຂອງພຣະອົງ ຄືດາວິດບິດາຂອງຂ້າພຣະອົງ

18 "ແຕ່ພຣະເຈົ້າຈະຊົງປະທັບກັບມະນຸດທີ່ແຜ່ນດິນໂລກຫລື ເບິ່ງແມ, ຟ້າສວັນແລະຟ້າສວັນອັນສູງທີ່ສຸດຍັງຮັບພຣະອົງຢູ່ບໍ່ໄດ້ ພຣະວິຫານຊຶ່ງຂ້າພຣະອົງໄດ້ສ້າງຈະຮັບພຣະອົງບໍ່ໄດ້ຍິ່ງກວ່ານັ້ນຈັກເທົ່າໃດ

19 ແຕ່ຂໍພຣະອົງຊົງສົນພຣະທັຍໃນຄຳອ້ອນວອນຂອງຜູ້ຮັບໃຊ້ຂອງພຣະອົງແລະໃນຄຳວິງວອນນີ້ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງຂ້າພຣະອົງ ຂໍຊົງສະດັບສຽງຮ້ອງແລະຄຳອ້ອນວອນ ຊຶ່ງຜູ້ຮັບໃຊ້ຂອງພຣະອົງອ້ອນວອນຕໍ່ພຣະອົງ

20 ເພື່ອວ່າພຣະເນດຂອງພຣະອົງຈະຊົງລືມຢູ່ເຫນືອພຣະວິຫານນີ້ທັງກາງເວັນແລະກາງຄືນ ຄືສະຖານທີ່ຊຶ່ງພຣະອົງໄດ້
ຕັສວ່າຈະຕັ້ງພຣະນາມຂອງພຣະອົງໄວ້ທີ່ນັ້ນ ເພື່ອວ່າພຣະອົງຈະຊົງສະດັບຄຳອ້ອນວອນ ຊຶ່ງຜູ້ຮັບໃຊ້ຂອງພຣະອົງ
ຈະໄດ້ອ້ອນວອນຕົງຕໍ່ສະຖານທີ່ນີ້
21 ຂໍພຣະອົງຊົງສະດັບຄຳວິງວອນຂອງຜູ້ຮັບໃຊ້ຂອງພຣະອົງ ແລະຂອງອິສຣາເອນປະຊາກອນຂອງພຣະອົງ ເມື່ອເຂົາອ້
ອນວອນຕົງຕໍ່ສະຖານທີ່ນີ້ ຂໍພຣະອົງຊົງຟັງຢູ່ໃນຟ້າສວັນອັນທີ່ປະທັບຂອງພຣະອົງ ແລະເມື່ອພຣະອົງຊົງຟັງແລ້ວ ກໍຂໍ
ພຣະອົງຊົງປະທານອະພັຍ
22 “ເມື່ອຊາຍຄົນໃດກະທຳບາບຕໍ່ເພື່ອນບ້ານຂອງເຂົາແລະຖືກບັງຄັບໃຫ້ທຳສັຕສາບານແລະເຂົາມາໃຫ້ຄຳສາບານຕໍ່
ຫນ້າແທ່ນບູຊາຂອງພຣະອົງໃນພຣະວິຫານ
23 ຂໍພຣະອົງຊົງຟັງຈາກຟ້າສວັນແລະຂໍຊົງກະທຳ ຂໍຊົງພິພາກສາຜູ້ຮັບໃຊ້ຂອງພຣະອົງທັງຫລາຍ ລົງໂທດຜູ້ກະທຳ
ຄວາມຜິດ ແລະຊົງນຳຄວາມປະພຶດຂອງເຂົາໃຫ້ກັບຕົກເທິງຫົວຂອງຕົວເຂົາເອງ ແລະຂໍຊົງປະກາດຄວາມບໍຣິສຸດ
ຂອງຜູ້ຊອບທັມ ສນອງແກ່ເຂົາຕາມຄວາມຊອບທັມຂອງເຂົາ
24 “ຖ້າອິສຣາເອນໄພ່ພົນຂອງພຣະອົງຜ່າຍແພ້ຕໍ່ສັດຕຣູເພາະເຂົາໄດ້ກະທຳບາບຕໍ່ພຣະອົງ ແລະເຂົາຫັນກັບມາຫາພ
ຣະອົງອີກ ຍອມຮັບພຣະນາມຂອງພຣະອົງ ແລະອ້ອນວອນແລະກະທຳການວິງວອນຕໍ່ພຣະອົງໃນພຣະວິຫານນີ້
25 ກໍຂໍພຣະອົງອົງຊົງຮັບຟັງໃນຟ້າສວັນ ແລະປະທານອະພັຍແກ່ບາບຂອງອິສຣາເອນໄພ່ພົນຂອງພຣະອົງ ແລະຂໍຊົງນຳ
ເຂົາກັບມາຍັງແຜ່ນດິນຊຶ່ງພຣະອົງໄດ້ພຣະຣາຊທານແກ່ບັນພະບຸຣຸດຂອງເຂົາທັງຫລາຍ
26 “ເມື່ອຟ້າສວັນປິດຢູ່ແລະບໍ່ມີຝົນ ເພາະເຂົາທັງຫລາຍໄດ້ກະທຳບາບຕໍ່ພຣະອົງ ຖ້າເຂົາທັງຫລາຍໄດ້ອ້ອນວອນຕໍ່ສະ
ຖານທີ່ນີ້ ແລະຍອມຮັບພຣະນາມຂອງພຣະອົງ ແລະຫັນກັບເສັຽຈາກບາບຂອງເຂົາທັງຫລາຍ ເມື່ອພຣະອົງຊົງໃຫ້ໃຈ
ເຂົາທັງຫລາຍຮັບຄວາມທຸກໃຈ
27 ກໍຂໍພຣະອົງຊົງຮັບຟັງໃນຟ້າສວັນ ແລະຂໍປະທານອະພັຍແກ່ບາບຂອງຜູ້ຮັບໃຊ້ຂອງພຣະອົງ ແລະຂອງອິສຣາເອນໄພ່
ພົນຂອງ   ພຣະອົງ ເມື່ອພຣະອົງຊົງສອນທາງດີແກ່ເຂົາຊຶ່ງເຂົາຄວນຈະດຳເນີນ ແລະຂໍຊົງປະທານຝົນເທິງແຜ່ນດິນ
ຂອງພຣະອົງ ຊຶ່ງພຣະອົງພຣະຣາຊທານແກ່ໄພ່ພົນຂອງພຣະອົງເປັນມໍຣະດົກນັ້ນ
28 “ຖ້າມີການອຶດຢາກໃນແຜ່ນດິນ ຖ້າມີໂຣກລະບາດ ພືດຜົນຖືກທຳລາຍຍ້ອນລົມຮ້ອນພັດ ຫລືຕັກແຕນວັຍບິນ ຫລື
ຕັກແຕນວັຍຄານ ຫລືສັດຕຣູຂອງເຂົາທັງຫລາຍອ້ອມເມືອງຂອງເຂົາໄວ້ຮອບດ້ານ ຈະເປັນພັຍວິບັດຢ່າງໃດ ຫລື
ຄວາມເຈັບຢ່າງໃດມີຂຶ້ນກໍດີ
29 ບໍ່ວ່າຄຳອ້ອນວອນຢ່າງໃດ ຫລືຄຳວິງວອນປະການໃດ ຊຶ່ງປະຊາຊົນຄົນໃດ ຫລືອິສຣາເອນໄພ່ພົນຂອງພຣະອົງທັງ
ສິ້ນທູນ ຕ່າງກໍປະຈັກໃນພັຍວິບັດແລະຄວາມທຸກໃຈຂອງເຂົາ ແລະໄດ້ກາງມືຂອງເຂົາສູ່ພຣະວິຫານນີ້
30 ຂໍພຣະອົງຊົງຮັບຟັງໃນຟ້າສວັນອັນເປັນທີ່ປະທັບຂອງພຣະອົງ ແລະພຣະຣາຊທານອະພັຍ ແລະຊົງປະທານແກ່ທຸກ
ຄົນຊຶ່ງພຣະອົງຊົງຊາບຈິດໃຈຕາມການປະພຶດທັງສິ້ນຂອງເຂົາ (ເພາະພຣະອົງ ຄືພຣະອົງເທົ່ານັ້ນທີ່ຊົງຊາບຈິດໃຈ
ຂອງມະນຸດຊາດທັງສິ້ນ)
31 ເພື່ອວ່າເຂົາທັງຫລາຍຈະໄດ້ຢຳເກງພຣະອົງ ແລະດຳເນີນໃນທາງຂອງພຣະອົງຕລອດວັນເວລາທີ່ເຂົາມີຊີວິດອາສັຍ
ໃນແຜ່ນດິນ ຊຶ່ງພຣະອົງພຣະຣາຊທານແກ່ບັນພະບຸຣຸດຂອງຂ້າພຣະອົງທັງຫລາຍ
32 “ນອກຈາກນີ້ກ່ຽວກັບຊົນຕ່າງດ້າວ ຜູ້ຊຶ່ງບໍ່ແມ່ນອິສຣາເອນໄພ່ພົນຂອງພຣະອົງ ເມື່ອເຂົາມາຈາກປະເທດເມືອງໄກ
ເພາະເຫັນແກ່ພຣະນາມຂອງພຣະອົງ ພຣະຫັດອັນຊົງຣິດອຳນາດຂອງພຣະອົງ ແລະພຣະກອນທີ່ຢຽດອອກຂອງພ
ຣະອົງ ເມື່ອເຂົາມາອ້ອນວອນ ຕົງຕໍ່ພຣະວິຫານນີ້
33 ກໍຂໍພຣະອົງຊົງຮັບຟັງໃນຟ້າສວັນອັນເປັນທີ່ປະທັບຂອງພຣະອົງ ແລະຂໍຊົງກະທຳຕາມທຸກສິ່ງຊຶ່ງຊົນຕ່າງດ້າວໄດ້ທູນ
ຂໍຕໍ່ພຣະອົງ ເພື່ອວ່າຊົນຊາດທັງຫລາຍແຫ່ງແຜ່ນດິນໂລກຈະຮູ້ຈັກພຣະນາມຂອງພຣະອົງ ແລະຢຳເກງພຣະອົງ ດັ່ງອິ

ສຣາເອນໄພ່ພົນຂອງ  ພຣະອົງຢຳເກງພຣະອົງຢູ່ນັ້ນ ແລະເພື່ອເຂົາທັງຫລາຍຈະຊາບວ່າພຣະວິຫານນີ້ຊຶ່ງຂ້າພຣະ
ອົງໄດ້ສ້າງໄວ້ ເຂົາເອີ້ນກັນດ້ວຍພຣະນາມຂອງພຣະອົງ
34 “ຖ້າໄພ່ພົນຂອງພຣະອົງອອກໄປກະທຳການສົງຄາມຕໍ່ສູ້ສັດຕຣູຂອງເຂົາທັງຫລາຍ ຈະເປັນໂດຍທາງໃດໆທີ່ພຣະອົງ
ຊົງໃຊ້ເຂົາອອກໄປກໍຕາມ ແລະເຂົາທັງຫລາຍໄດ້ອ້ອນວອນຕໍ່ພຣະອົງຕົງຕໍ່ເມືອງນີ້ຊຶ່ງພຣະອົງຊົງເລືອກສັນໄວ້ ແລະ
ຕົງຕໍ່ພຣະວິຫານຊຶ່ງຂ້າພຣະອົງໄດ້ສ້າງເພື່ອພຣະນາມຂອງພຣະອົງ
35 ແລ້ວຂໍພຣະອົງຊົງຮັບຟັງຄຳອ້ອນວອນຂອງເຂົາແລະຄຳວິງວອນຂອງເຂົາໃນຟ້າສວັນ ແລະຂໍຊົງໃຫ້ສິດອັນຊອບທັມ
ຂອງເຂົາຄົງຢູ່
36 “ຖ້າເຂົາທັງຫລາຍກະທຳບາບຕໍ່ພຣະອົງ (ເພາະບໍ່ມີມະນຸດຈັກຄົນນຶ່ງຊຶ່ງບໍ່ໄດ້ກະທຳບາບ) ແລະພຣະອົງຊົງກິ້ວຕໍ່ເຂົາ
ແລະພຣະອົງຊົງມອບເຂົາໄວ້ກັບສັດຕຣູ ເຂົາຈຶ່ງຖືກຈັບໄປເປັນຊະເລີຍຍັງແຜ່ນດິນນຶ່ງບໍ່ວ່າໄກຫລືໃກ້
37 ແຕ່ຖ້າເຂົາສຳນຶກຜິດໃນໃຈໃນແຜ່ນດິນຊຶ່ງໄດ້ຖືກຈັບໄປເປັນຊະເລີຍແລະໄດ້ກັບໃຈແລະໄດ້ທຳການອ້ອນວອນຕໍ່ພ
ຣະອົງໃນແຜ່ນດິນທີ່ເຂົາໄປເປັນຊະເລີຍ ທູນວ່າ “ຂ້າພຣະອົງທັງຫລາຍໄດ້ກະທຳບາບ ແລະໄດ້ປະພຶດຊົ່ວຮ້າຍແລະ
ຢ່າງອະທັມ
38 ຖ້າເຂົາທັງຫລາຍກັບມາຫາພຣະອົງດ້ວຍສຸດຈິດສຸດໃຈຂອງເຂົາໃນແຜ່ນດິນທີ່ເຂົາໄປເປັນຊະເລີຍ ທີ່ຊຶ່ງສັດຕ
ຣູກວາດເຂົາໄປເປັນຊະເລີຍ ແລະອ້ອນວອນຕໍ່ພຣະອົງຕົງຕໍ່ແຜ່ນດິນຂອງເຂົາ ຊຶ່ງພຣະອົງພຣະຣາຊທານແກ່ບັນພະ
ບຸຣຸດຂອງເຂົາທັງຫລາຍ ຄືເມືອງຊຶ່ງພຣະອົງໄດ້ຊົງເລືອກສັນໄວ້ ແລະພຣະວິຫານຊຶ່ງຂ້າພຣະອົງໄດ້ສ້າງໄວ້ໃນພຣະ
ນາມຂອງພຣະອົງ
39 ແລ້ວຂໍພຣະອົງຊົງຮັບຟັງຄຳອ້ອນວອນແລະຄຳວິງວອນຂອງເຂົາໃນຟ້າສວັນອັນເປັນທີ່ປະທັບຂອງພຣະອົງ ແລະຂໍ
ຊົງໃຫ້ສິດອັນຊອບທັມຂອງເຂົາຄົງຢູ່ ແລະຂໍຊົງປະທານອະພັຍແກ່ປະຊາກອນຂອງພຣະອົງຜູ້ໄດ້ກະທຳບາບຕໍ່ພຣະ
ອົງ
40 ຂ້າແຕ່ພຣະເຈົ້າຂອງຂ້າພຣະອົງ ບັດນີ້ຂໍພຣະເນດຂອງພຣະອົງຊົງມືນຢູ່ແລະຂໍພຣະກັນຂອງພຣະອົງຮັບຟັງຄຳ
ອ້ອນວອນແຫ່ງສະຖານທີ່ນີ້
41 “ຂ້າແຕ່ພຣະເຈົ້າ ຂໍຊົງລຸກຂຶ້ນ ສະເດັດໄປຍັງທີ່ພຳນັກຂອງພຣະອົງ ທັງພຣະອົງແລະຫີບແຫ່ງຣິດທານຸພາບຂອງພຣະ
ອົງ ຂ້າແຕ່ ພຣະເຈົ້າ ຂໍໃຫ້ປະໂຣຫິດຂອງພຣະອົງ ສວມຄວາມລອດ ແລະໃຫ້ໄພ່ພົນຂອງພຣະອົງຍິນດີໃນຄວາມປະ
ເສີດຂອງພຣະອົ
42 ຂ້າແຕ່ພຣະເຈົ້າ ຂໍຢ່າຊົງຫັນຫນ້າຂອງຜູ້ທີ່ພຣະອົງຊົງເຈີມໄວ້ນັ້ນໄປເສັຽ ຂໍພຣະອົງຊົງລະນຶກເຖິງຄວາມຮັກຫມັ້ນຄົງ
ຂອງພຣະອົງ ອັນມີຢູ່ຕໍ່ດາວິດຜູ້ຮັບໃຊ້ຂອງພຣະອົງ”

## 7

Solomon Dedications the Temple

(1 ກສດ 8:62-66)

1 ເມື່ອໂຊໂລໂມນຊົງຈົບຄຳອະທິຖານຂອງພຣະອົງແລ້ວ ໄຟໄດ້ລົງມາຈາກຟ້າສວັນໄຫມ້ເຄື່ອງເຜົາບູຊາ ແລະເຄື່ອງສັ
ຕບູຊາເສັຽ ແລະສະງ່າຣາສີຂອງພຣະຜູ້ເປັນເຈົ້າກໍເຕັມພຣະວິຫານ
2 ປະໂຣຫິດເຂົ້າໄປໃນພຣະວິຫານຂອງພຣະຜູ້ເປັນເຈົ້າບໍ່ໄດ້ ເພາະວ່າພຣະສະງ່າຣາສີຂອງພຣະເຈົ້າເຕັມພຣະວິຫານ
ຂອງພຣະເຈົ້າ
3 ເມື່ອບັນດາຊົນອິສຣາເອນໄດ້ເຫັນໄຟລົງມາແລະພຣະສະງ່າຣາສີຂອງພຣະເຈົ້າຢູ່ເທິງພຣະວິຫານ ເຂົາທັງຫລາຍກໍ
ຂາບຫມູບຫນ້າລົງເຖິງພື້ນດິນ ແລະໄດ້ນະມັສການກ່າວໂມທະນາພຣະເຈົ້າວ່າ, “ເພາະພຣະອົງປະເສີດ ເພາະຄວາມ
ຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ”

4 ແລ້ວເຈົ້າຊີວິດ ແລະບັນດາປະຊາຊົນທັງຫລາຍໄດ້ຖວາຍເຄື່ອງສັດບູຊາຕໍ່ພຣະຜູ້ເປັນເຈົ້າ
5 ກະສັດໂຊໂລໂມນຊົງຖວາຍເຄື່ອງສັດບູຊາເປັນງົວສອງຫມື່ນສອງພັນໂຕແລະແກະນຶ່ງແສນສອງຫມື່ນໂຕ ດັ່ງນີ້
ແຫລະພຣະຣາຊາແລະປະຊາຊົນທັງປວງໄດ້ອຸທິດຖວາຍພຣະວິຫານແຫ່ງພຣະເຈົ້າ
6 ບັນດາປະໂຣຫິດກໍຢືນປະຈຳຕຳແຫນ່ງຂອງຕົນ ທັງຄົນເລວີດ້ວຍພ້ອມກັບເຄື່ອງດົນຕຣີຖວາຍແດ່ພຣະຜູ້ເປັນເຈົ້າ ຊຶ່ງ
ກະສັດດາວິດໄດ້ຊົງກະທຳເພື່ອຖວາຍໂມທະນາແດ່ພຣະຜູ້ເປັນເຈົ້າ ເມື່ອດາວິດໄດ້ຖວາຍສາທຸການດ້ວຍຝີມືຂອງເຂົ
າທັງຫລາຍ (ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ) ແລະປະໂຣຫິດກໍເປົ່າແກຂ້າງຫນ້າເຂົາ ແລະອິ
ສຣາເອນທັງປວງຢືນຢູ່
7 ໂຊໂລໂມນຊົງທຳພິທີຊຳຣະສ່ວນກາງຂອງເດີ່ນຊຶ່ງຢູ່ຂ້າງຫນ້າພຣະວິຫານຂອງພຣະເຈົ້າໃຫ້ເປັນສ່ວນບໍຣິສຸດ ເພາະ
ພຣະອົງຊົງຖວາຍເຄື່ອງເຜົາບູຊາແລະໄຂມັນຂອງເຄື່ອງສານຕິບູຊາທີ່ນັ້ນ ເພາະວ່າແທ່ນທອງສຳຣິດຊຶ່ງໂຊໂລໂມນ
ຊົງສ້າງໄວ້ນັ້ນ ບໍ່ພໍຈຸເຄື່ອງເຜົາບູຊາ ເຄື່ອງທັນຍາບູຊາ ແລະໄຂມັນ
8 ໃນຄັ້ງນັ້ນໂຊໂລໂມນຊົງຖືເທສການຢູ່ເຈັດວັນ ແລະອິສຣາເອນທັງປວງຢູ່ກັບພຣະອົງດ້ວຍ ເປັນຊຸມນຸມຊົນຍິ່ງໃຫຍ່
ຕັ້ງແຕ່ທາງເຂົ້າເມືອງຮາມັດຈົນເຖິງຫ້ວຍນ້ຳແຫ່ງເອຢິບ
9 ໃນວັນທີແປດເຂົາທັງຫລາຍໄດ້ມີງານມອບຖວາຍແທ່ນບູຊາມາເຈັດວັນແລະຖືເທສການລ້ຽງມາເຈັດວັນແລ້ວ
10 ເມື່ອວັນທີຊາວສາມຂອງເດືອນທີເຈັດ ພຣະອົງຊົງໃຫ້ປະຊາຊົນກັບໄປບ້ານຂອງຕົນ ມີໃຈຊື່ນບານແລະຍິນດີດ້ວຍ
ຄວາມດີຊຶ່ງ  ພຣະຜູ້ເປັນເຈົ້າໄດ້ຊົງສຳແດງແກ່ດາວິດແລະແກ່ໂຊໂລໂມນແລະແກ່ອິສຣາເອນໄພ່ພົນຂອງພຣະອົງ
11 ດັ່ງນີ້ແຫລະ,ໂຊໂລໂມນຊົງສ້າງພຣະວິຫານຂອງພຣະເຈົ້າແລະພຣະຣາຊວັງສຳເຣັດ ຄືທຸກຢ່າງຊຶ່ງພຣະອົງຊົງກ່າວ
ວ່າຈະກະທຳໃນເຣື່ອງພຣະວິຫານຂອງພຣະເຈົ້າ ແລະໃນເຣື່ອງພຣະຣາຊສຳນັກຂອງພຣະອົງ ພຣະອົງຊົງກະທຳໃຫ້
ສຳເຣັດສິ້ນ

God’s Second Appearance to Solomon

(1 ກສດ 9:1-9)

12 ແລ້ວພຣະຜູ້ເປັນເຈົ້າຊົງປາກົດແກ່ໂຊໂລໂມນເວລາກາງຄືນແລະກ່າວກັບທ່ານວ່າ, “ເຮົາໄດ້ຍິນຄຳອ້ອນວອນຂອງ
ເຈົ້າ ແລະໄດ້ເລືອກສະຖານທີ່ນີ້ສຳລັບເຮົາໃຫ້ເປັນວິຫານແຫ່ງເຄື່ອງສັດບູຊາ
13 ຖ້າເຮົາປິດຟ້າສວັນບໍ່ໃຫ້ຝົນຕົກຫລືເຮົາບັນຊາໃຫ້ຕັກແຕນມາກິນແຜ່ນດິນ ຫລືສົ່ງໂຣກລະບາດມາຖ້າມກາງໄພ່ພົນ
ຂອງເຮົາ
14 ຖ້າໄພ່ພົນຂອງເຮົາຜູ້ຊຶ່ງເຂົາເອີ້ນກັນໂດຍຊື່ຂອງເຮົານັ້ນຈະຖ່ອມຕົວລົງ ແລະອ້ອນວອນ ແລະສແວງຫາຫນ້າຂອງ
ເຮົາ ແລະຫັນເສັຽຈາກການຊົ່ວຂອງເຂົາ ເຮົາກໍຈະຟັງຈາກສວັນ ແລະຈະໃຫ້ອະພັຍແກ່ບາບຂອງເຂົາແລະຈະປົວ
ແປງແຜ່ນດິນຂອງເຂົາໃຫ້ຫາຍດີ.
15 ແລະຕາຂອງເຮົາຈະເຝົ້າເບິ່ງແລະຫູຂອງເຮົາຈະຟັງຄຳອ້ອນວອນຊຶ່ງເຂົາທັງຫລາຍອ້ອນວອນໃນສະຖານທີ່ນີ້
16 ເພາະບັດນີ້ເຮົາໄດ້ເລືອກສັນແລະກະທຳໃຫ້ວິຫານເປັນບ່ອນທີ່ບໍຣິສຸດເພື່ອນາມຂອງເຮົາຈະຢູ່ທີ່ນັ້ນເປັນນິດ ຕາຂອງ
ເຮົາແລະໃຈຂອງເຮົາຈະຢູ່ທີ່ນັ້ນຕລອດເວລາ
17 ສ່ວນເຈົ້າ ຖ້າເຈົ້າດຳເນີນຕໍ່ຫນ້າເຮົາຢ່າງດາວິດບິດາຂອງເຈົ້າດຳເນີນນັ້ນ ກະທຳຕາມທຸກສິ່ງຊຶ່ງເຮົາໄດ້ບັນຊາແກ່ເຈົ້າ
ແລະຮັກສາກົດເກນຂອງເຮົາແລະກົດຫມາຍຂອງເຮົາ
18 ແລ້ວເຮົາຈະສະຖາປະນາບັນລັງຂອງເຈົ້າ ດັ່ງທີ່ເຮົາໄດ້ກະທຳຄຳຫມັ້ນສັນຍາໄວ້ກັບດາວິດບິດາຂອງເຈົ້າວ່າ “ເຈົ້າຈະ
ບໍ່ຂາດຊາຍຜູ້ນຶ່ງທີ່ຈະປົກຄອງເຫນືອອິສຣາເອນ”
19 ແຕ່ຖ້າເຈົ້າຫັນໄປແລະປະຖິ້ມຂໍ້ຄຳສັ່ງຂອງເຮົາ ແລະບັນຍັດຂອງເຮົາຊຶ່ງເຮົາຕັ້ງໄວ້ຕໍ່ຫນ້າເຈົ້າ ແລະບົວລະບັດພຣະ
ອື່ນແລະນະ  ມັສການພຣະເຫລົ່ານັ້ນ

20 ແລ້ວເຮົາຈະຖອນຮາກເຂົາທັງຫລາຍຈາກແຜ່ນດິນຂອງເຮົາ ຊຶ່ງໄດ້ໃຫ້ແກ່ເຂົາແລະວິຫານຊຶ່ງເຮົາກະທຳໃຫ້ເປັນສະ
ຖານບໍຣິສຸດເພື່ອນາມຂອງເຮົາ ເຮົາຈະແກວ່ງອອກໄປຈາກສາຍຕາຂອງເຮົາ ແລະເຮົາຈະທຳໃຫ້ເປັນພາສິດແລະຂີ້
ປາກຖ້ານກາງຊົນຊາດທັງຫລາຍ
21 ແລະວິຫານນີ້ຊຶ່ງສູງສົ່ງ ທຸກຄົນທີ່ຜ່ານໄປຈະປະຫລາດໃຈ ແລະກ່າວວ່າ "ເຫດໃດພຣະເຈົ້າຈຶ່ງຊົງກະທຳເຊັ່ນນີ້ແກ່
ແຜ່ນດິນນີ້ແລະແກ່ພຣະວິຫານນີ້"
22 ແລ້ວເຂົາທັງຫລາຍຈະຕອບວ່າ "ເພາະເຂົາທັງຫລາຍປະຖິ້ມພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນ
ພະບຸຣຸດຂອງເຂົາ ຜູ້ຊົງນຳເຂົາອອກຈາກແຜ່ນດິນເອຢິບແລະໄດ້ຍຶດຖືພຣະອື່ນ ແລະໄດ້ນະມັສການພຣະເຫລົ່ານັ້ນ
ທັງບົວລະບັດດ້ວຍ ສະນັ້ນພຣະອົງຈຶ່ງໄດ້ຊົງນຳເຫດຮ້າຍທັງຫມົດນີ້ມາເຖິງເຂົາທັງຫລາຍ"

## 8 ພຣະຣາຊກິຈອື່ນໆຂອງໂຊໂລໂມນ

Various Activities of Solomon

(1 ກສດ 9:10-28)

1 ແລະຕໍ່ມາເມື່ອສິ້ນຊາວປີ ທີ່ໂຊໂລໂມນໄດ້ຊົງສ້າງພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະພຣະຣາຊວັງສ່ວນພຣະອົງ
2 ໂຊໂລໂມນໄດ້ຊົງເສີມສ້າງຫົວເມືອງຊຶ່ງຮູຣາມໄດ້ຖວາຍແດ່ພຣະອົງ ແລ້ວໃຫ້ຄົນອິສຣາເອນຕັ້ງຢູ່ໃນນັ້ນ
3 ແລະໂຊໂລໂມນໄດ້ສະເດັດໄປຍັງຮາມັດໂຊບາ ແລະຍຶດເມືອງນັ້ນໄດ້
4 ພຣະອົງໄດ້ຊົງສ້າງເມືອງຕາດໂມຣ໌ໄວ້ໃນຖິ່ນກັນດານ ແລະຫົວເມືອງຄັງຫລວງທັງສິ້ນຊຶ່ງພຣະອົງຊົງສ້າງໄວ້ໃນຮາມັ
ດ
5 ພຣະອົງໄດ້ຊົງສ້າງເມືອງເບັດໂຮໂຣນທາງເທິງແລະເບັດໂຮໂຣນທາງລຸ່ມດ້ວຍເປັນເມືອງທີ່ຫມັ້ນຄົງ ມີກຳແພງ ປະຕູ
ເມືອງແລະດ່ານ
6 ແລະຊົງສ້າງເມືອງບາອາລັດ ແລະຫົວເມືອງຄັງຫລວງທັງປວງທີ່ໂຊໂລໂມນຊົງມີຢູ່ ແລະເມືອງທັງປວງສຳລັບຣົດຮົບ
ຂອງພຣະອົງ ແລະເມືອງທັງປວງສຳລັບພົນມ້າຂອງພຣະອົງ ແລະສິ່ງໃດໆຊຶ່ງພຣະອົງປະສົງຈະສ້າງໃນເຢຣູຊາເລັມ
ໃນເລບານອນ ແລະໃນແຜ່ນດິນທັງຫມົດຊຶ່ງຢູ່ໃນຄອບຄອງຂອງພຣະອົງ
7 ປະຊາຊົນທັງປວງທີ່ເຫລືອຢູ່ໃນເຫລົ່າຮິດຕີ ຄົນອາໂມຣິດ ເປຣິສຊີ ຄົນຮີວີ ແລະຄົນເຢບຸສ ຜູ້ຊຶ່ງບໍ່ແມ່ນອິສຣາເອນ
8 ຈາກເຊື້ອສາຍຂອງຊົນເຫລົ່ານີ້ຜູ້ເຫລືອຕໍ່ມາໃນແຜ່ນດິນ ຜູ້ຊຶ່ງປະຊາຊົນອິສຣາເອນບໍ່ໄດ້ທຳລາຍ ໂຊໂລໂມນໄດ້ຊົງ
ກະທຳໃຫ້ປະຊາຊົນເຫລົ່ານີ້ເປັນທາດແຮງງານ ແລະເຂົາທັງຫລາຍກໍເປັນຢູ່ຈົນທຸກວັນນີ້
9 ແຕ່ສ່ວນຄົນອິສຣາເອນນັ້ນໂຊໂລໂມນບໍ່ໄດ້ຊົງກະທຳໃຫ້ທາດແຮງງານ ເຂົາທັງຫລາຍເປັນທະຫານແລະເປັນນາຍ
ທະຫານຂອງພຣະອົງ ເປັນຜູ້ບັງຄັບບັນຊາຣົດຮົບຂອງພຣະອົງ ແລະພົນມ້າຂອງພຣະອົງ
10 ແລະຄົນຕໍ່ໄປນີ້ເປັນເຈົ້າຫນ້າທີ່ຊັ້ນຜູ້ໃຫຍ່ຂອງກະສັດໂຊໂລໂມນມີສອງຮ້ອຍຫ້າສິບຄົນ ເປັນຜູ້ປົກຄອງປະຊາຊົນ
11 ໂຊໂລໂມນຊົງນຳທິດາຂອງຟາໂຣຂຶ້ນມາຈາກນະຄອນດາວິດຍັງພຣະຣາຊວັງ ຊຶ່ງພຣະອົງຊົງສ້າງໄວ້ໃຫ້ພຣະນາງ
ເພາະພຣະອົງກ່າວວ່າ, "ມະເຫສີຂອງເຮົາບໍ່ຄວນຢູ່ໃນວັງຂອງດາວິດພຣະຣາຊາແຫ່ງອິສຣາເອນ ເພາະສະຖານທີ່ທັງ
ຫລາຍຊຶ່ງຫີບຂອງພຣະເຈົ້າມາເຖິງເປັນທີ່ບໍຣິສຸດ""
12 ແລ້ວໂຊໂລໂມນຊົງຖວາຍເຄື່ອງເຜົາບູຊາແດ່ພຣະເຈົ້າເທິງແທ່ນບູຊາຂອງພຣະເຈົ້າ ຊຶ່ງພຣະອົງຊົງສ້າງໄວ້ທີ່ຫນ້າມຸກ
13 ຕາມຫນ້າທີ່ປະຈຳວັນທີ່ຕ້ອງທຳເປັນການຖວາຍບູຊາຕາມບັນຍັດຂອງໂມເຊ ໃນວັນສະບາໂຕ ໃນວັນຂຶ້ນຄ່ຳນຶ່ງ
ແລະໃນວັນເທສການປະຈຳປີສາມເທສການ ຄືເທສການກິນລ້ຽງເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງ ເທສການສັປດາ ແລະເທສ
ການປຸກຕູບຢູ່

14 ຕາມກົດຫມາຍຂອງດາວິດຣາຊບິດາຂອງພຣະອົງ ພຣະອົງຊົງກຳນົດແບ່ງເວນປະໂຣຫິດສຳລັບການບົວລະບັດແລະ
ແບ່ງເວນຊົນເລວີໃຫ້ປະຈຳຫນ້າທີ່ການສັຣເສີນແລະການບົວລະບັດຕໍ່ຫນ້າປະໂຣຫິດຕາມຫນ້າທີ່ປະຈຳວັນທີ່ຕ້ອງ
ທຳແລະຄົນເຝົ້າປະຕູເປັນເວນເຝົ້າທຸກປະຕູ ເພາະວ່າດາວິດບຸຣຸດຂອງພຣະເຈົ້າຊົງບັນຊາໄວ້ເຊັ່ນນັ້ນ
15 ແລະເຂົາທັງຫລາຍບໍ່ໄດ້ຫັນໄປເສັຽຈາກສິ່ງຊຶ່ງພຣະຣາຊາໄດ້ຊົງບັນຊາປະໂຣຫິດແລະຄົນເລວີຊຶ່ງກ່ຽວກັບເຣື່ອງໃດໆ
ແລະກ່ຽວກັບເຣື່ອງຄັງ
16 ພຣະຣາຊກິຈຂອງໂຊໂລໂມນກໍລຸລ່ວງໄປຕັ້ງແຕ່ວັນທີ່ວາງຮາກພຣະວິຫານຂອງພຣະເຈົ້າຈົນເຖິງວັນສຳເຣັດງານ ດັ່ງ
ນັ້ນພຣະວິຫານຂອງພຣະເຈົ້າກໍສຳເຣັດຄົບຖ້ວນ
17 ແລ້ວໂຊໂລໂມນສະເດັດໄປຍັງເອຊີໂອນເກເບີ ແລະເມືອງເອໂລດທີ່ຊາຍທະເລໃນແຜ່ນດິນເອໂດມ
18 ແລະຮູຣາມກໍໃຫ້ຂ້າຣາຊການຂອງພຣະອົງສົ່ງເຮືອ ແລະຂ້າຣາຊການທີ່ຄຸ້ນເຄີຍກັບທະເລໄປໃຫ້ໂຊໂລໂມນ ແລະ
ເຂົາທັງຫລາຍໄປເຖິງເມືອງໂອຟີຣ໌ພ້ອມກັບຂ້າຣາຊການຂອງໂຊໂລໂມນ ແລະນຳເອົາທອງຄຳຈາກທີ່ນັ້ນຫນັກສີ່
ຮ້ອຍຫ້າສິບຕະລັນມາຍັງກະສັດໂຊໂລໂມນ

## 9 ພຣະນາງແຫ່ງເຊບາສະເດັດມາຢ້ຽມ ໂຊໂລໂມນ

Visit of the Queen of Sheba

(1 ກສດ 10:1-13)

1 ເມື່ອພຣະຣາຊີນີແຫ່ງເຊບາຊົງໄດ້ຍິນກິດຕິສັບແຫ່ງໂຊໂລໂມນ ພຣະນາງກໍສະເດັດມາຍັງເຢຣູຊາເລັມ ເພື່ອທົດລອງ
ພຣະອົງດ້ວຍປັນຫາຫຍຸ້ງຍາກຕ່າງໆພ້ອມດ້ວຍຂ້າຣາຊບໍຣິພານມາກມາຍ ກັບອູດບັນທຸກເຄື່ອງເທດແລະທອງຄຳ
ເປັນອັນມາກ ແລະເພັດພອຍຕ່າງໆ ແລະເມື່ອພຣະນາງສະເດັດມາເຖິງໂຊໂລໂມນແລ້ວ ພຣະນາງທູນເຣື່ອງໃນໃຈ
ຂອງພຣະນາງທຸກປະການ
2 ແລະໂຊໂລໂມນກ່າວຕອບປັນຫາຂອງພຣະນາງທັງສິ້ນ ບໍ່ມີສິ່ງໃດທີ່ເຊື່ອງໄວ້ຢູ່ພົ້ນໂຊໂລໂມນຊຶ່ງພຣະອົງຈະຊົງອະ
ທິບາຍແກ່ ພຣະນາງບໍ່ໄດ້
3 ເມື່ອພຣະຣາຊີນີແຫ່ງເຊບາຊົງເຫັນພຣະສະຕິປັນຍາຂອງໂຊໂລໂມນແລະພຣະຣາຊວັງທີ່ພຣະອົງຊົງສ້າງ
4 ທັງອາຫານທີ່ໂຕະສເວີຍ ກັບບັນດາຂ້າຣາຊການປະຈຳຢູ່ ແລະມະຫາດເລັກທີ່ຄອຍຮັບໃຊ້ຢູ່ຕລອດທັງເຄື່ອງແຕ່ງ
ກາຍແລະພະນັກງານຖວາຍຖ້ວຍຂອງພຣະອົງ ເຄື່ອງແຕ່ງກາຍ ແລະເຄື່ອງເຜົາບູຊາຂອງພຣະອົງ ຊຶ່ງພຣະອົງຖວາຍ
ບູຊາໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ ພຣະທັຍຂອງພຣະນາງກໍສລົດລົງ
5 ພຣະນາງທູນເຈົ້າຊີວິດວ່າ, "ທຸກສິ່ງກ່ຽວກັບເຣື່ອງຂອງພຣະອົງ ທັງຄວາມສລຽວສລາດຂອງພຣະອົງ ທີ່ຂ້ານ້ອຍໄດ້
ຍິນເວລາທີ່ຂ້ານ້ອຍຍັງຢູ່ໃນເມືອງຂອງຂ້ານ້ອຍກໍເປັນຄວາມຈິງຫມົດ
6 ແຕ່ຂ້ານ້ອຍບໍ່ໄດ້ເຊື່ອໃນຄຳເວົ້າຂອງເຂົາ ຈົນຂ້ານ້ອຍໄດ້ມາເຫັນດ້ວຍຕົນເອງ ສະຕິປັນຍາແລະຄວາມມັ່ງຄັ່ງສົມບູນ
ຂອພຣະອົງທີ່ຂ້ານ້ອຍໄດ້ຍິນມາ ມີພຽງເຄິ່ງນຶ່ງໃນສິ່ງທີ່ຂ້ານ້ອຍໄດ້ຮູ້ແລະໄດ້ເຫັນໃນເວລານີ້
7 ບັນດາຄົນຂອງພຣະອົງກໍເປັນສຸກ ບັນດາຂ້າຣາຊການເຫລົ່ານີ້ຂອງພຣະອົງກໍເປັນສຸກ ຜູ້ທີ່ຢູ່ງານປະຈຳຕໍ່ພຣະພັກພ
ຣະອົງແລະຟັງພຣະສະຕິປັນຍາຂອງພຣະອົງກໍເປັນສຸກ
8 ສາທຸການແດ່ພຣະຜູ້ເປັນເຈົ້າຂອງພຣະອົງ ຜູ້ຊົງມອບຄວາມສະງ່າຣາສີ ແລະໃຫ້ພຣະອົງປະທັບເທິງພຣະທີ່ນັ່ງຂອງອິ
ສຣາເອນ ຍ້ອນພຣະຜູ້ເປັນເຈົ້າຊົງມີຄວາມຮັກຕໍ່ອິສຣາເອນຕລອດໄປ ຈຶ່ງໄດ້ແຕ່ງຕັ້ງພຣະອົງໃຫ້ເປັນເຈົ້າຊີວິດ ເພື່ອ
ປົກຄອງຢ່າງຍຸດຕິທັມແລະຖືກຕ້ອງ
9 ແລ້ວພຣະຣາຊີນີກໍຖວາຍທອງຄຳນຶ່ງຮ້ອຍຊາວຕະລັນແກ່ພຣະຣາຊາ ພ້ອມທັງເຄື່ອງຫອມແລະເພັດພອຍຕ່າງໆ ບໍ່
ມີເຄື່ອງຫອມໃດໆເຫມືອນຢ່າງທີ່ພຣະຣາຊີນີແຫ່ງເຊບາຖວາຍແດ່ເຈົ້າຊີວິດໂຊໂລໂມນ

10 ນອກຈາກນີ້ຍັງມີຂະບວນກຳປັ່ນຂອງເຈົ້າຮູຣາມໄດ້ບັນທຸກຄຳມາຈາກໂອຟີຣ໌ ທັງໄດ້ນຳໄມ້ຈັນຢ່າງຫລວງຫລາຍ
ແລະເພັດພອຍຕ່າງໆ
11 ເຈົ້າຊີວິດໄດ້ເອົາໄມ້ຈັນນີ້ເຮັດເສົາຄ້ຳພຣະວິຫານ ເສົາຄ້ຳພຣະຣາຊວັງ ແລະເຮັດພິນໃຫ້ນັກດົນຕຣີ ຕລອດທຸກວັນນີ້
ບໍ່ເຄີຍເຫັນໄມ້ຈັນຢ່າງນີ້ຈັກເທື່ອ
12 ເຈົ້າຊີວິດໂຊໂລໂມນໄດ້ພຣະຣາຊທານຫລາຍຢ່າງໃຫ້ພຣະຣາຊີນີແຫ່ງເຊບາ ຕາມເຄື່ອງອັນອຸດົມສົມທີ່ພຣະອົງມີຢູ່
ແລະພຣະອົງຍັງໄດ້ພຣະຣາຊທານຕື່ມອີກຕາມທີ່ພຣະນາງຕ້ອງການ ແລ້ວພຣະນາງພ້ອມທັງບັນດາເສນາອາມາດກໍ
ກັບຄືນເມືອສູ່ປະເທດຂອງຕົນ

**ຄວາມມັ່ງຄັ່ງແລະພຣະກຽດເລື່ອງລືຂອງໂຊໂລໂມນ**

Solomon’s Great Wealth

(1 ກສດ 10:14-29; 2 ຂຄວ 1:14-17)

13 ນ້ຳໜັກທອງຄຳທີ່ນຳມາສົ່ງໂຊໂລໂມນໃນປີນຶ່ງນັ້ນ ເປັນທອງຄຳຫົກຮ້ອຍຫົກສິບຕະລັນ
14 ນອກເໜືອຈາກທອງຄຳຊຶ່ງນັກການຄ້າແລະພໍ່ຄ້າໄດ້ນຳມາ ແລະກະສັດທັງປວງຂອງປະເທດອາຣະເບັຽ ແລະບັນດາ
ເຈົ້າເມືອງແຫ່ງແຜ່ນດິນໄດ້ນຳທອງຄຳແລະເງິນມາຍັງໂຊໂລໂມນ
15 ກະສັດໂຊໂລໂມນຊົງສ້າງໂລ່ໃຫຍ່ສອງຮ້ອຍອັນດ້ວຍທອງຄຳທຸບ ໂລ່ອັນນຶ່ງໃຊ້ທອງຄຳທຸບຫົກຮ້ອຍເຊເກລ
16 ພຣະອົງຊົງສ້າງໂລ່ສາມຮ້ອຍອັນດ້ວຍທອງຄຳທຸບ ໂລ່ອັນນຶ່ງໃຊ້ທອງຄຳສາມຮ້ອຍເຊເກລ ແລະກະສັດກໍຊົງເກັບໂລ່
ໄວ້ໃນພຣະຕຳນັກດົງເລບານອນ
17 ພຣະຣາຊາຊົງກະທຳພຣະທີ່ນັ່ງງາຊ້າງຂນາດໃຫຍ່ດ້ວຍ ແລະຊົງໂອບດ້ວຍທອງຄຳບໍຣິສຸດ
18 ພຣະທີ່ນັ່ງນັ້ນມີຂັ້ນໄດຫົກຂັ້ນ ກັບທີ່ຮອງພຣະບາດທຳດ້ວຍທອງຄຳ ຊຶ່ງຕິດຢູ່ກັບພຣະທີ່ນັ່ງ ທັງສອງຂ້າງຂອງພຣະທີ່
ນັ່ງມີທີ່ວາງພຣະຫັດ ແລະສິງສອງໂຕຢືນຢູ່ຂ້າງໆທີ່ວາງພຣະຫັດ
19 ມີສິງອີກສິບສອງໂຕຢືນຢູ່ທີ່ນັ້ນ ເທິງຂັ້ນໄດຫົກຂັ້ນທັງສອງຂ້າງ ເຂົາບໍ່ເຄີຍທຳໃນຣາຊອານາຈັກໃດໆເໝືອນຢ່າງນີ້
20 ພາຊະນະທັງສິ້ນສຳລັບເຄື່ອງດື່ມຂອງກະສັດໂຊໂລໂມນທຳດ້ວຍທອງຄຳ ແລະພາຊະນະທັງສິ້ນຂອງພຣະຕຳນັກດົງ
ເລບານອນທຳດ້ວຍທອງຄຳບໍຣິສຸດ ເງິນນັ້ນຖືວ່າເປັນຂອງບໍ່ມີຄ່າຫັຍງໃນສມັຍຂອງໂຊໂລໂມນ
21 ເພາະເຮືອຂອງພຣະຣາຊາແລ່ນໄປຍັງຕາຊິດພ້ອມກັບຂ້າຣາຊການຂອງຮູຣາມ ກຳປັ່ນຕາຊິດນຳທອງຄຳ ເງິນ ງາ
ຊ້າງ ລີງ ແລະນົກຍູງ ມາສາມປີຕໍ່ຄັ້ງ
22 ດັ່ງນີ້ແຫລະ, ພຣະຣາຊາໂຊໂລໂມນຈຶ່ງໄດ້ປຽບກວ່າກະສັດອື່ນໆແຫ່ງແຜ່ນດິນໂລກໃນເຣື່ອງສົມບັດແລະສະຕິປັນ
ຍາ
23 ພຣະຣາຊາທັງສິ້ນແຫ່ງແຜ່ນດິນໂລກກໍສແວງຫາທີ່ຈະເຂົ້າເຝົ້າໂຊໂລໂມນ ເພື່ອຈະຟັງພຣະສະຕິປັນຍາຊຶ່ງມາຈາກພ
ຣະເຈົ້າພຣະຣາຊທານໄວ້ໃນໃຈຂອງທ່ານ
24 ທຸກຄົນກໍນຳເຄື່ອງບັນນາການຂອງເຂົາມາ ເປັນເຄື່ອງທຳດ້ວຍເງິນແລະທອງຄຳ ແລະເຄື່ອງແຕ່ງກາຍ ເຄື່ອງອາວຸດ
ເຄື່ອງເທດ ມ້າ ແລະລໍ ຕາມຈຳນວນກຳນົດທຸກໆປີ
25 ໂຊໂລໂມນຊົງມີບ່ອນໄວ້ມ້າສີ່ພັນຊ່ອງສຳລັບມ້າແລະຣົດຮົບ ແລະມີພົນມ້ານຶ່ງໝື່ນສອງພັນຄົນ ຊຶ່ງພຣະອົງຊົງໃຫ້
ປະຈຳຢູ່ໃນຫົວເມືອງຣົດຮົບ ແລະຢູ່ກັບພຣະຣາຊາທີ່ກຸງເຢຣູຊາເລັມ
26 ພຣະອົງຊົງປົກຄອງເໜືອພຣະຣາຊາທັງປວງຕັ້ງແຕ່ແມ່ນ້ຳເອີຟຣາດເຖິງແຜ່ນດິນຂອງຄົນຟີລິສຕິນ ແລະເຖິງເຂດ
ແດນຂອງເອຢິບ
27 ພຣະຣາຊາຊົງກະທຳໃຫ້ເງິນນັ້ນເປັນຂອງສາມັນໃນກຸງເຢຣູຊາເລັມເໝືອນກ້ອນຫີນ ແລະກະທຳໃຫ້ມີໄມ້ສົນຫລວງ
ຫລາຍ ເໝືອນໄມ້ໝາກເດື່ອແຫ່ງຖິ່ນເນີນເຊເຟລາ
28 ເຂົານຳມ້າເຂົ້າມາຖວາຍໂຊໂລໂມນຈາກເອຢິບ ແລະຈາກແຜ່ນດິນທັງປວງ

## ມໍຣະນະກັມຂອງໂຊໂລໂມນ

Death of Solomon

(ກສດ 11:41-43)

29 ສ່ວນພຣະຣາຊກິຈນອກນັ້ນຂອງໂຊໂລໂມນ ຕັ້ງແຕ່ຕົ້ນຈົນປາຍບໍ່ໄດ້ບັນທຶກໄວ້ໃນໜັງສືປະຫວັດສາດຂອງນາທານ
ຜູ້ປະກາດ ພຣະທັມ ແລະໃນຄຳປະກາດພຣະທັມຂອງອາຮີຢາຊາວຊີໂລ ແລະໃນນິມິດຂອງອິດໂດຜູ້ທຳນວາຍກ່ຽວ
ກັບເຢໂຣໂບອາມບຸດເນບັດຫລື

30 ໂຊໂລໂມນຊົງປົກຄອງໃນກຸງເຢຣູຊາເລັມເໜືອອິສຣາເອນທັງປວງສີ່ສິບປີ

31 ໂຊໂລໂມນລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຂົາຝັງພຣະສົບໄວ້ໃນນະຄອນດາວິດຣາຊບິດາຂອງພ
ຣະອົງ ແລະເຣໂຣໂບອາມໂອຣົດຂອງພຣະອົງປົກຄອງແທນພຣະອົງ

## 10 ອິສຣາເອນກະບົດ

The Revolt against Rehoboam

(1 ກສດ 12:1-19)

1 ເຣໂຣໂບອາມໄດ້ໄປຍັງເມືອງເຊເຄມ ເພາະອິສຣາເອນທັງປວງໄດ້ມາຍັງເຊເຄມເພື່ອຈະຕັ້ງທ່ານໃຫ້ເປັນກະສັດ

2 ຕໍ່ມາເມື່ອເຢໂຣໂບອາມບຸດເນບັທບຊາບເຣື່ອງ (ເພາະທ່ານຍັງຢູ່ໃນເອຢິບບ່ອນຊຶ່ງທ່ານໜີໄປຈາກກະສັດໂຊໂລ
ໂມນ) ແລ້ວເຢໂຣໂບອາມກັບຈາກເອຢິບ

3 ເຂົາທັງຫລາຍກໍໃຊ້ຄົນໄປເອີ້ນທ່ານ ແລະເຢໂຣໂບອາມກັບອິສຣາເອນທັງໝົດໄດ້ມາແລະທູນເຣໂຣໂບອາມວ່າ,

4 "ພຣະຣາຊບິດາຂອງຝ່າພຣະບາດໄດ້ກະທຳໃຫ້ແອກຂອງຂ້ານ້ອຍທຸກໜັກ ເພາະສະນັ້ນ ບັດນີ້ຂໍຊົງຜ່ອນການ
ບົວລະບັດຢ່າງທຸກໜັກຂອງພຣະຣາຊບິດາຂອງຝ່າພຣະບາດ ແລະແອກອັນໜັກຂອງພຣະອົງເໜືອຂ້ານ້ອຍທັງ
ຫລາຍໃຫ້ເບົາລົງເສັຽ ແລະຂ້ານ້ອຍທັງຫລາຍຈະບົວລະບັດພຣະອົງ"

5 ພຣະອົງກ່າວກັບເຂົາວ່າ, "ສິ້ນສາມວັນຈຶ່ງກັບມາຫາເຮົາອີກ" ປະຊາຊົນຈຶ່ງກັບໄປເສັຽ

6 ແລ້ວກະສັດເຣໂຣໂບອາມກໍຊົງປຶກສາກັບບັນດາຜູ້ເຖົ້າ ຜູ້ຢູ່ງານປະຈຳໂຊໂລໂມນຣາຊບິດາຂອງພຣະອົງຂນະເມື່ອພ
ຣະອົງຍັງຊົງພຣະຊົນຢູ່ວ່າ "ທ່ານທັງຫລາຍຈະແນະນຳເຮົາໃຫ້ຕອບປະຊາຊົນນີ້ຢ່າງໃດ"

7 ເຂົາທັງຫລາຍທູນພຣະອົງວ່າ, "ຖ້າຝ່າພຣະບາດຊົງເມດຕາແກ່ປະຊາຊົນນີ້ແລະໃຫ້ເຂົາພໍໃຈ ແລະກ່າວຕອບຄຳດີ
ແກ່ເຂົາ ເຂົາທັງຫລາຍຈະເປັນຜູ້ຮັບໃຊ້ຂອງຝ່າພຣະບາດເປັນນິດ"

8 ແຕ່ພຣະອົງຊົງປະຖິ້ມຄຳປຶກສາຊຶ່ງຜູ້ເຖົ້າຖວາຍນັ້ນເສັຽ ແລະໄປປຶກສາກັບຄົນໜຸ່ມຊຶ່ງໃຫຍ່ຂຶ້ນມາພ້ອມກັບພຣະອົງ
ແລະຢູ່ງານປະຈຳຂອງພຣະອົງ

9 ແລະພຣະອົງກ່າວກັບເຂົາທັງຫລາຍວ່າ, "ທ່ານຈະແນະນຳເຮົາຢ່າງໃດ ເພື່ອພວກເຮົາຈະຕອບປະຊາຊົນນີ້ຜູ້ທີ່ທູນ
ເຮົາວ່າ ຂໍຊົງຜ່ອນແອກຊຶ່ງພຣະຣາຊບິດາອຂງພຣະອົງວາງຢູ່ເໜືອຂ້ານ້ອຍທັງ
ຫລາຍໃຫ້ເບົາລົງ"

10 ແລະຄົນໜຸ່ມເຫລົ່ານັ້ນຜູ້ໄດ້ໃຫຍ່ຂຶ້ນມາພ້ອມກັບພຣະອົງທູນພຣະອົງວ່າ, "ຝ່າພຣະບາດຈົ່ງກ່າວດັ່ງນີ້ແກ່ປະຊາຊົນ
ນີ້ ຜູ້ທູນພຣະອົງວ່າ ພຣະຣາຊບິດາຂອງຝ່າພຣະບາດໄດ້ຊົງກະທຳໃຫ້ແອກຂອງຂ້ານ້ອຍທັງຫລາຍທຸກໜັກ ແຕ່ຂໍ
ຝ່າພຣະບາດຊົງຜ່ອນແກ່ຂ້ານ້ອຍໃຫ້ເບົາລົງນັ້ນ ຝ່າພຣະບາດຈົ່ງກ່າວແກ່ເຂົາທັງຫລາຍຢ່າງນີ້ວ່າ ນິ້ວກ້ອຍຂອງເຮົາ
ກໍໜາກວ່າແອວແຫ່ງຣາຊບິດາຂອງເຮົາ

11 ທີ່ພຣະຣາຊບິດາຂອງເຮົາວາງແອກໜັກເທິງທ່ານທັງຫລາຍກໍດີແລ້ວ ເຮົາຈະເພີ້ມແອກໃຫ້ແກ່ທ່ານທັງຫລາຍອີກ ພ
ຣະຣາຊບິດາຂອງເຮົາຕີສອນທ່ານທັງຫລາຍດ້ວຍໄມ້ແສ້ ແຕ່ເຮົາຈະຕີສອນທ່ານທັງຫລາຍດ້ວຍແສ້ຕີ້ງວ"

12 ເຢໂຣໂບອາມກັບປະຊາຊົນທັງປວງຈຶ່ງເຂົ້າມາເຝົ້າເຣໂຣໂບອາມໃນວັນທີສາມ ດັ່ງທີ່ພຣະຣາຊາຮັບສັ່ງວ່າ, “ຈົ່ງມາ
ຫາເຮົາອີກໃນວັນທີສາມ”
13 ພຣະຣາຊາກ່າວຕອບເຂົາທັງຫລາຍຢ່າງດຸດັນ ຊົງປະຖິ້ມຄຳປຶກສາຂອງຜູ້ເຖົ້າເສັຽ
14 ແລະກ່າວກັບເຂົາທັງຫລາຍຕາມຄຳຕອບຂອງພວກຄົນຫນຸ່ມວ່າ, “ພຣະຣາຊບິດາຂອງເຮົາທຳແອກຂອງທ່ານທັງ
ຫລາຍໃຫ້ຫນັກ ແຕ່ເຮົາຈະເພີ້ມໃຫ້ແກ່ແອກນັ້ນ ພຣະຣາຊບິດາຂອງເຮົາຕີສອນທ່ານທັງຫລາຍດ້ວຍໄມ້ແສ້ ແຕ່ເຮົາ
ຈະຕີສອນທ່ານທັງຫລາຍດ້ວຍໄມ້ແສ້ຕີ້ງວ”
15 ພຣະຣາຊາຈຶ່ງບໍ່ໄດ້ຊົງຟັງສຽງປະຊາຊົນ ເພາະເຫດການນີ້ເປັນມາແຕ່ພຣະຜູ້ເປັນເຈົ້າ ເພື່ອພຣະຜູ້ເປັນເຈົ້າຈະຊົງໃຫ້
ພຣະວັຈນະຂອງພຣະອົງໄດ້ສຳເຣັດ ຊຶ່ງພຣະອົງກ່າວໂດຍອາຮີຢາຊາວຊີໂລແກ່ເຢໂຣໂບອາມບຸດເນບັດ
16 ແລະເມື່ອອິສຣາເອນເຫັນວ່າພຣະຣາຊາບໍ່ໄດ້ຊົງຟັງເຂົາທັງຫລາຍ ປະຊາຊົນກໍທູນຕອບພຣະຣາຊາວ່າ, “ຂ້ານ້ອຍທັງ
ຫລາຍມີສ່ວນອັນໃດໃນດາວິດ ຂ້ານ້ອຍທັງຫລາຍບໍ່ມີສ່ວນມໍຣະດົກໃນບຸດເຈສຊີ ໂອ ອິສຣາເອນເອີຍ ກັບໄປເຕັນ
ຂອງຕົນແຕ່ລະຄົນເຖີດ” ອິສຣາເອນທັງປວງຈຶ່ງໄປຍັງບ້ານເຮືອນຂອງເຂົາທັງຫລາຍ
17 ແຕ່ເຣໂຣໂບອາມຊົງປົກຄອງເຫນືອປະຊາຊົນອິສຣາເອນຜູ້ອາສັຍຢູ່ໃນຫົວເມືອງຂອງຢູດາ
18 ແລ້ວພຣະຣາຊາເຣໂຣໂບອາມຊົງໃຊ້ຮາໂດຣາມນາຍງານເຫນືອແຮງງານເກນໄປ ແລະປະຊາຊົນກໍເອົາຫີນແກວ່ງ
ໃສ່ທ່ານເຖິງຕາຍ ແລ້ວເຈົ້າຊີວິດເຣໂຣໂບອາມກໍຊົງຟ້າວຂຶ້ນຣົດຮົບຂອງພຣະອົງ ຊົງຫນີໄປກຸງເຢຣູຊາເລັມ
19 ອິສຣາເອນຈຶ່ງກະບົດຕໍ່ຣາຊວົງດາວິດເຖິງທຸກວັນນີ້

## 11

Judah and Benjamin Fortified

(ກສດ 12:20-24)

1 ເມື່ອເຣໂຣໂບອາມມາຍັງກຸງເຢຣູຊາເລັມແລ້ວ ພຣະອົງຊົງຮວບຮວມເຊື້ອສາຍຢູດາແລະເບັນຢາມິນ ເປັນນັກຮົບທີ່
ຄັດເລືອກແລ້ວນຶ່ງແສນແປດຫມື່ນຄົນ ເພື່ອຈະຕໍ່ສູ້ຮົບກັບອິສຣາເອນ ຫມາຍຈະເອົາຣາຊອານາຈັກຄືນໃຫ້ແກ່ເຣໂຣ
ໂບອາມ
2 ແຕ່ພຣະຄຳຂອງພຣະຜູ້ເປັນເຈົ້າມາຍັງເຊມັຍຢາຄົນຂອງພຣະເຈົ້າວ່າ,
3 “ຈົ່ງໄປທູນເຣໂຣໂບອາມໂອຣົດຂອງໂຊໂລໂມນກະສັດແຫ່ງຢູດາ ແລະບອກແກ່ຄົນອິສຣເອນທັງປວງໃນຢູດາແລະ
ເບັນຢາມິນວ່າ
4 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຈົ້າຢ່າຂຶ້ນໄປສູ້ຮົບກັບພີ່ນ້ອງຂອງເຈົ້າ ຈົ່ງກັບໄປບ້ານຂອງຕົນທຸກຄົນເຖີດ ເພາະສິ່ງນີ້
ເປັນມາຈາກເຮົາ” ເຫດສັນນີ້ເຂົາຈຶ່ງເຊື່ອຟັງພຣະວັຈນະຂອງພຣະຜູ້ເປັນເຈົ້າ ແລະກັບໄປ ບໍ່ໄດ້ສູ້ຮົບກັບເຢໂຣໂບ
ອາມ

**ຄວາມຈະເຣີນໃນຣັຊການເຣໂຣໂບອາມ**

5 ແລະເຣໂຣໂບອາມປະທັບຢູ່ໃນກຸງເຢຣູຊາເລັມ ແລະພຣະອົງຊົງສ້າງຫົວເມືອງເພື່ອປ້ອງກັນໃນຢູດາ
6 ພຣະອົງຊົງສ້າງເມືອງເບັດເລເຮັມ ເອຕາມ ເຕໂກອາ
7 ເບັດຊູຣ໌ ໂຊໂກ ອາດຸນລາມ
8 ກາດ ມາເຣຊາ ຊີຟ
9 ອາໂດຣາອິມ ລາຄິສ ອາເຊກາ
10 ໂຊຣາ ອັຍຢາໂລນ ແລະເຮໂບຣນ ຫົວເມືອງຊຶ່ງມີປ້ອມທີ່ຢູ່ໃນຢູດາແລະໃນເບັນຢາມິນ
11 ພຣະອົງຊົງກະທຳປ້ອມປ້ອງກັນໃຫ້ແຂງແຮງ ແລະຕັ້ງຜູ້ບັງຄັບບັນຊາໃນປ້ອມເຫລົ່ານັ້ນ ແລະຊົງສະສົມອາຫານ ນ້ຳ
ມັນ ແລະເຫລົ້າອະງຸ່ນ

12 ພຣະອົງຊົງເກັບໂລ່ ແລະຫອກໄວ້ໃນທົວເມືອງທັງປວງ ແລະກະທຳໃຫ້ຫົວເມືອງເຫລົ່ານັ້ນແຂງແຮງຫລາຍ ພຣະອົງຈຶ່ງຊົງຍຶດຢູດາແລະເບັນຢາມິນໄວ້ໄດ້

Priests and Levites Support Rehoboam

(1 ກສດ 14:21-24)

13 ປະໂຣຫິດກັບຄົນເລວີຊຶ່ງຢູ່ໃນອິສຣາເອນທັງສິ້ນໄດ້ເຂົ້າມາຫາພຣະອົງຈາກເຂດແດນຊຶ່ງເຂົາອາສັຍຢູ່

14 ເພາະຄົນເລວີປະຖິ້ມທົ່ງຫຍ້າແລະທີ່ບ້ານຊຶ່ງເຂົາຍຶດຖືເປັນກຳມະສິດແລະມາຍັງຢູດາແລະເຢຣູຊາເລັມ ເພາະເຢໂຣໂບອາມແລະໂອຣົດຂອງພຣະອົງໄດ້ຂັບໄລ່ເຂົາທັງຫລາຍອອກຈາກຕຳແຫນ່ງປະໂຣຫິດຂອງພຣະຜູ້ເປັນເຈົ້າ

15 ພຣະອົງຊົງແຕ່ງຕັ້ງປະໂຣຫິດຂອງພຣະອົງຂຶ້ນສຳລັບສະຖານນະມັສການທີ່ສູງທັງຫລາຍ ແລະສຳລັບພວກຜີປີສາດ ແລະສຳລັບຮູບລູກງົວຊຶ່ງພຣະອົງຊົງສ້າງຂຶ້ນ

16 ແລະບັນດາຜູ້ທີ່ປັກໃຈສແວງຫາພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນກໍຕິດຕາມເຂົາທັງຫລາຍມາຈາກເຜົ່າທັງປວງຂອງອິສຣາເອນຍັງເຢຣູຊາເລັມເພື່ອຖວາຍສັດບູຊາຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງເຂົາທັງຫລາຍ

17 ເຂົາທັງຫລາຍໄດ້ເສີມກຳລັງໃຫ້ຣາຊອານາຈັກຂອງຢູດາແລະໄດ້ກະທຳໃຫ້ເຣໂຣໂບອາມໂອຣົດຂອງໂຊໂລໂມນເຂັ້ມແຂງຢູ່ໄດ້ສາມປີ ເພາະເຂົາທັງຫລາຍດຳເນີນຢູ່ສາມປີໃນວິຖີຂອງດາວິດແລະໂຊໂລໂມນ

Rehoboam’s Marriages

18 ເຣໂຣໂບອາມຊົງຮັບມາຮາລັດທິດາຂອງເຢຣີໂມດໂອຣົດຂອງດາວິດເປັນມະເຫສີຜູ້ເປັນທິດາຂອງອາບີຮາອິນບຸດຕຣີຂອງເອລີອາບບຸດເຈສຊີ

19 ພຣະນາງກໍປະສູດໂອຣົດໃຫ້ພຣະອົງ ຄື ເຢອຸສ ເຊມາຣີຢາ ແລະຊາຮາມ

20 ຕໍ່ມາພາຍຫລັງພຣະອົງກໍຊົງຮັບມາອາກາທິດາຂອງອັບຊາໂລມ ຜູ້ຊຶ່ງປະສູດ ອາບີຢາ ອັດຕັຍ ຊີຊາ ແລະເຊໂລມິດໃຫ້ພຣະອົງ

21 ເຣໂຣໂບອາມຊົງຮັກມາອາກາທິດາຂອງອັບຊາໂລມຫລາຍກວ່າມະເຫສີແລະນາງສະນົມຂອງພຣະອົງທັງສິ້ນ (ພຣະອົງມີມະເຫສີສິບແປດອົງ ແລະນາງສະນົມຫົກສິບຄົນແລະມີໂອຣົດຊາວແປດອົງແລະທິດາຫົກສິບອົງ)

22 ແລະເຣໂຣໂບອາມຊົງແຕ່ງຕັ້ງໃຫ້ອາບີຢາໂອຣົດຂອງມາອາກາເປັນໂອຣົດອົງໃຫຍ່ຖ້າມກາງພີ່ນ້ອງຂອງຕົນ ເພາະພຣະອົງຊົງຕັ້ງພຣະທັຍຈະໃຫ້ທ່ານເປັນພຣະຣາຊາ

23 ແລະພຣະອົງຊົງຈັດການຢ່າງສລາດ ແລະແຈກຈ່າຍໂອຣົດຂອງພຣະອົງໄປທົ່ວແຜ່ນດິນທັງສິ້ນຂອງຢູດາ ແລະຂອງເບັນຢາມິນ ໃຫ້ຫົວເມືອງທີ່ມີປ້ອມທັງສິ້ນ ແລະພຣະອົງປະທານສະບຽງອາຫານໃຫ້ຢ່າງອຸດົມແລະຈັດຫາມະເຫສີໃຫ້ເຂົາຕັ້ງຫລາຍຄົນ

## 12 ຊີຊັກບຸກຢູດາ

Egypt Attacks Judah

(1 ກສດ 14:25-28)

1 ເມື່ອຣາຊອານາຈັກຂອງເຣໂຣໂບອາມຕັ້ງຫມັ້ນຄົງແລະແຂງແຮງແລ້ວ ພຣະອົງຊົງປະຖິ້ມທັມບັນຍັດຂອງພຣະຜູ້ເປັນເຈົ້າເສັຽ ແລະອິສຣາເອນທັງປວງກໍຖິ້ມພ້ອມກັບພຣະອົງດ້ວຍ

2 ຕໍ່ມາໃນປີທີຫ້າແຫ່ງກະສັດເຣໂຣໂບອາມ ເພາະເຂົາທັງຫລາຍບໍ່ຊື່ສັດຕໍ່ພຣະຜູ້ເປັນເຈົ້າ ຊີຊັກເຈົ້າຊີວິດແຫ່ງເອຢິບສະເດັດຂຶ້ນມາສູ້ຣົບເຢຣູຊາເລັມ

3 ມີຣົດຣົບນຶ່ງພັນສອງຮ້ອຍຄັນ ແລະພົນມ້າຫົກຫມື່ນຄົນ ແລະພົນຜູ້ມາກັບພຣະອົງຈາກເອຢິບນັບບໍ່ຖ້ວນຄື ຊາວລີເບັຽຄົນຊຸກກີອີມ ແລະເອທີໂອເປັຽ

4 ພຣະອົງຊົງຍຶດຫົວເມືອງທີ່ມີປ້ອມຂອງຢູດາແລະມາຍັງເຢຣູຊາເລັມ
5 ແລ້ວເຊມັຍຢາຜູ້ປະກາດພຣະທັມໄດ້ມາເຝົ້າເຣໂຣໂບອາມ ແລະບັນດາເຈົ້ານາຍແຫ່ງຢູດາ ຜູ້ມາປະຊຸມກັນຢູ່ທີ່ເຢຣູ
ຊາເລັມດ້ວຍເຣື່ອງຊີຊັກ ແລະກ່າວແກ່ເຂົາທັງຫລາຍວ່າ, "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, "ເຈົ້າໄດ້ປະຖິ້ມເຮົາ ເຮົາຈຶ່ງ
ໄດ້ປະຖິ້ມເຈົ້າ ໃຫ້ຢູ່ໃນມືຂອງຊີຊັກ"
6 ແລ້ວເຈົ້ານາຍແຫ່ງອິສຣາເອນແລະພຣະຣາຊາໄດ້ຖ່ອມຕົນລົງແລະກ່າວວ່າ, "ພຣະຜູ້ເປັນເຈົ້າຊົງຊອບທັມແລ້ວ"
7 ເມື່ອພຣະຜູ້ເປັນເຈົ້າຊົງເຫັນວ່າເຂົາທັງຫລາຍຖ່ອມຕົວລົງ ຖ້ອຍຄຳຂອງພຣະຜູ້ເປັນເຈົ້າໄດ້ມາເຖິງເຊມັຍຢາວ່າ,
"ເຂົາທັງຫລາຍໄດ້ຖ່ອມຕົວລົງແລ້ວ ເຮົາຈະບໍ່ທຳລາຍເຂົາ ແຕ່ເຮົາຈະຍອມໃຫ້ການຊ່ອຍກູ້ແກ່ເຂົາ ແລະພຣະພິໂຣດ
ຂອງເຮົາຈະບໍ່ເທລົງມາເຫນືອເຢຣູຊາເລັມໂດຍຂອງຊີຊັກ
8 ຢ່າງໃດກໍດີເຂົາທັງຫລາຍຕ້ອງເປັນຜູ້ຮັບໃຊ້ຂອງຊີຊັກ ເພື່ອເຂົາທັງຫລາຍຈະໄດ້ຊາບຄວາມແຕກຕ່າງລະຫວ່າງການ
ຮັບໃຊ້ເຮົາ ແລະຮັບໃຊ້ຣາຊອານາຈັກທັງຫລາຍ"
9 ຊີຊັກພຣະຣາຊາແຫ່ງເອຢິບຈຶ່ງຂຶ້ນມາຕໍ່ສູ້ເຢຣູຊາເລັມ ພຣະອົງຊົງເກັບເອົາຊັບສິນແຫ່ງພຣະວິຫານຂອງພຣະຜູ້ເປັນ
ເຈົ້າ ແລະຊັບສິນບັດໃນພຣະຣາຊວັງ ພຣະອົງຊົງເກັບເອົາໄປທຸກຢ່າງ ພຣະອົງຊົງເກັບເອົາໂລ່ທອງຄຳຊຶ່ງໂຊໂລໂມນ
ຊົງສ້າງໄວ້ນັ້ນໄປດ້ວຍ
10 ກະສັດເຣໂຣໂບອາມຊົງທຳໂລ່ທອງສຳຣິດຂຶ້ນແທນ ແລະໄດ້ມອບໄວ້ໃນມືຂອງທະຫານຮັກສາພຣະອົງ ຜູ້ເຝົ້າບໍຣິ
ເວນພຣະຣາຊວັງ
11 ພຣະຣາຊາສະເດັດເຂົ້າໄປໃນພຣະວິຫານຂອງພຣະຜູ້ເປັນເຈົ້າເມື່ອໃດທະຫານຮັກສາພຣະອົງກໍມາຖືໂລ່ນັ້ນ ແລ້ວ
ນຳກັບໄປເກັບໄວ້ໃນຫ້ອງທະຫານຮັກສາພຣະອົງຕາມເດີມ
12 ເມື່ອພຣະອົງຊົງຖ່ອມພຣະອົງລົງ ພຣະພິໂຣດຂອງພຣະຜູ້ເປັນເຈົ້າກໍຫັນໄປເສັຽຈາກພຣະອົງ ບໍ່ໄດ້ທຳລາຍພຣະອົງ
ຢ່າງສິ້ນເຊີງ ເຖິງປານນັ້ນອີກສະພາບການກໍຍັງດີຢູ່ໃນຢູດາ

Death of Rehoboam

(1 ກສດ 14:21-22; 29-31)

13 ກະສັດເຣໂຣໂບອາມຈຶ່ງສະຖາປະນາພຣະອົງຂຶ້ນໃນກຸງເຢຣູຊາເລັມ ແລະຊົງປົກຄອງ ເມື່ອເຣໂຣໂບອາມຊົງເລີ້ມປົກ
ຄອງນັ້ນມີອາຍຸສີ່ສິບເອັດປີ ແລະພຣະອົງຊົງປົກຄອງສິບເຈັດປີໃນກຸງເຢຣູຊາເລັມ ອັນເປັນເມືອງຊຶ່ງພຣະຜູ້ເປັນເຈົ້າ
ຊົງເລືອກສັນໄວ້ຈາກເຜົ່າຕ່າງໆທັງສິ້ນຂອງອິສຣາເອນເພື່ອຈະຕັ້ງພຣະນາມຂອງພຣະອົງໄວ້ທີ່ນັ້ນ ພຣະມານດາຂອງ
ພຣະອົງຊົງພຣະນາມວ່າ ນາມອານາຄົນອັມໂມນ
14 ພຣະອົງໄດ້ຊົງກະທຳການຊົ່ວຮ້າຍ ເພາະພຣະອົງບໍ່ໄດ້ຕັ້ງພຣະທັຍຂອງພຣະອົງທີ່ຈະສແວງຫາພຣະຜູ້ເປັນເຈົ້າ
15 ສ່ວນພຣະຣາຊກິຈຂອງເຣໂຣໂບອາມຕັ້ງແຕ່ຕົ້ນຈົນສຸດທ້າຍ ບໍ່ໄດ້ບັນທຶກໄວ້ໃນຫນັງສືປະຫວັດສາດຂອງເຊມັຍຢາຜູ້
ປະກາດພຣະທັມແລະຂອງອິດໂດຜູ້ທຳນວາຍຕາມແບບພົງສາວະດານຫລື ມີສົງຄາມເລື້ອຍໄປຢູ່ລະຫວ່າງເຣໂຣ
ໂບອາມແລະເຢໂຣໂບອາມ
16 ເຣໂຣໂບອາມກໍລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຂົາກໍຝັງພຣະສົບໄວ້ໃນນະຄອນດາວິດ ແລະອາ
ບີຢາຣາຊໂອ ຣົດຂອງພຣະອົງໄດ້ຂຶ້ນປົກຄອງແທນພຣະອົງ

## 13 ຣັຊການອາບີຢາ

Abijah Reigns over Judah

(1 ກສດ 15:1-8)

1 ໃນປີທີສິບແປດແຫ່ງຣັຊການເຢໂຣໂບອາມ ອາບີຢາໄດ້ເລີ້ມປົກຄອງເຫນືອປະເທດຢູດາ

2 ພຣະອົງຊົງປົກຄອງໃນເຢຣູຊາເລັມສາມປີ ພຣະຊົນນີ (ແມ່ເຖົ້າ) ຂອງພຣະອົງມີພຣະນາມວ່າ ມີກັຍຢາທິດາຂອງອູຣິ
ເອນແຫ່ງກິເບອາ ມີສົງຄາມລະຫວ່າງອາບີຢາແລະເຢໂຣໂບອາມ
3 ອາບີຢາສະເດັດອອກທຳສົງຄາມ ມີກອງທັບທະຫານຊຳນານເສິກເປັນຄົນຄັດເລືອກແລ້ວສີ່ແສນຄົນ ແລະເຢໂຣໂບ
ອາມໄດ້ຕັ້ງແນວຣົບສູ້ກັບພຣະອົງດ້ວຍຄົນຄັດເລືອກແລ້ວເປັນທະຫານເອກແປດແສນຄົນ
4 ອາບີຢາຊົງລຸກຢືນຢູ່ເທິງພູເຊມາຣາອິມ ຊຶ່ງຢູ່ໃນຖິ່ນພູດອຍເອຟຣາອິມ ແລະກ່າວວ່າ, “ຂ້າແຕ່ເຢໂຣໂບອາມ ແລະອິ
ສຣາເອນທັງປວງ ຂໍຟັງຂ້າພະເຈົ້າ
5 ບໍ່ຄວນຫລືທີ່ທ່ານທັງຫລາຍຈະຮູ້ວ່າ ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນພຣະຣາຊທານຕຳແຫນ່ງພຣະຣາຊາ
ເຫນືອອິສຣາເອນເປັນນິດແກ່ດາວິດ ແລະບຸດຫລານຂອງພຣະອົງໂດຍຄຳສັນຍາເກືອ
6 ເຖິງປານນັ້ນເຢໂຣໂບອາມບຸດເນບັດ ຂ້າຣາຊການຂອງໂຊໂລໂມນໂອຣົດຂອງດາວິດ ໄດ້ລຸກຂຶ້ນກະບົດຕໍ່ເຈົ້ານາຍ
ຂອງຕົນ
7 ແລະມີຄົນຖ່ອຍຄົນຊົ່ວບາງຄົນມົ່ວສຸມກັນກັບເຂົາ ແລະອາສາສູ້ກັບເຣໂຣໂບອາມໂອຣົດຂອງໂຊໂລໂມນ ເມື່ອເຣໂຣ
ໂບອາມຍັງນ້ອຍຢູ່ແລະໃຈອ່ອນແອຕ້ານທານບໍ່ໄດ້
8 “ບັດນີ້ທ່ານຄິດວ່າຈະຕໍ່ຕ້ານຣາຊອານາຈັກຂອງພຣະເຈົ້າຊຶ່ງຢູ່ໃນມືຂອງບຸດຫລານຂອງດາວິດ ເພາະທ່ານທັງຫລາຍ
ເປັນຄົນຫມູ່ໃຫຍ່ແລະມີລູກງົວທອງຄຳຊຶ່ງເຢໂຣໂບອາມສ້າງໄວ້ໃຫ້ທ່ານເປັນພຣະ
9 ທ່ານທັງຫລາຍບໍ່ໄດ້ຂັບໄລ່ປະໂຣຫິດຂອງພຣະເຈົ້າ ບຸດຫລານຂອງອາໂຣນ ແລະຄົນເລວີອອກໄປ ແລະຕັ້ງປະໂຣ
ຫິດສຳລັບຕົນເອງຢ່າງຊົນຊາດທັງຫລາຍຫລື ຜູ້ໃດທີ່ນຳງົວຫນຸ່ມແລະແກະເຖິກເຈັດຕົວມາຊຳຮະຕົວໃຫ້ບໍຣິສຸດໄວ້
ຈະໄດ້ເປັນປະໂຣຫິດຂອງສິ່ງທີ່ບໍ່ແມ່ນພຣະ
10 ແຕ່ສຳລັບເຮົາທັງຫລາຍ ພຣະຜູ້ເປັນເຈົ້າເປັນພຣະເຈົ້າຂອງເຮົາທັງຫລາຍ ແລະເຮົາທັງຫລາຍບໍ່ໄດ້ປະຖິ້ມພຣະອົງ
ເຮົາມີປະໂຣຫິດຜູ້ປົວລະບັດພຣະຜູ້ເປັນເຈົ້າ ເປັນລູກຫລານຂອງອາໂຣນ ທັງມີຄົນເລວີທຳງານຫນ້າທີ່ຂອງເຂົາທັງ
ຫລາຍ
11 ເຂົາຖວາຍເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າທຸກເຊົ້າຄ່ຳ ທັງເຄື່ອງຫອມ ຕັ້ງເຂົ້າຈີ່ຫນ້າພຣະພັກເທິງໂຕະບໍຣິສຸດ
ແລະດູແລຄັນຕະກຽງທອງຄຳພ້ອມທັງຕະກຽງ ເພື່ອໃຫ້ຕະກຽງລຸກຢູ່ທຸກຄ່ຳ ເພາະເຮົາໄດ້ຮັກສາພຣະບັນຊາກຳຊັບ
ຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ ແຕ່ທ່ານໄດ້ປະຖິ້ມພຣະອົງເສັຽ
12 ເບິ່ງແມ໋, ພຣະຜູ້ເປັນເຈົ້າຊົງຢູ່ກັບເຮົານຳຫນ້າເຮົາ ແລະປະໂຣຫິດຂອງພຣະອົງພ້ອມກັບແກເສິກພ້ອມທີ່ຈະເປົ່າເອີ້ນ
ທຳສົງຄາມຕໍ່ສູ້ກັບທ່ານ ຂ້າແຕ່ລູກຫລານຂອງອິສຣາເອນ ຂໍຢ່າຕໍ່ສູ້ກັບພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງບັນພະບຸຣຸດ
ຂອງທ່ານ ເພາະທ່ານຈະຊະນະບໍ່ໄດ້”
13 ເຢໂຣໂບອາມໄດ້ສ້ອງສຸມຜູ້ຄົນໄວ້ເພື່ອຈະອ້ອມມາຫາເຂົາຈາກເບື້ອງຫລັງ ດັ່ງນັ້ນກອງທະຫານຂອງທ່ານຈຶ່ງຢູ່ຂ້າງ
ຫນ້າຢູດາ ແລະກອງຊຸ່ມກໍຢູ່ຂ້າງຫລັງເຂົາ
14 ເມື່ອຢູດາມອງເຫັນ ເບິ່ງແມ, ການເສິກກໍຢູ່ຂ້າງຫນ້າແລະຂ້າງຫລັງເຂົາ ແລະເຂົາທັງຫລາຍກໍຮ້ອງທູນຕໍ່ພຣະຜູ້ເປັນ
ເຈົ້າ ແລະບັນດາປະໂຣຫິດກໍເປົ່າແກ
15 ແລ້ວຄົນຂອງຢູດາກໍຮ້ອງສຽງທຳນອງເສິກ ແລະເມື່ອຢູດາຮ້ອງຂຶ້ນ ພຣະຜູ້ເປັນເຈົ້າຊົງໃຫ້ເຢໂຣໂບອາມແລະອິສຣາ
ເອນທັງປວງຝ່າຍແພ້ໄປຕໍ່ອາບີຢາແລະຢູດາ
16 ຄົນອິສຣາເອນໄດ້ຫນີຢູດາ ແລະພຣະຜູ້ເປັນເຈົ້າຊົງມອບເຂົາໄວ້ໃນມືຂອງເຂົາທັງຫລາຍ
17 ອາບີຢາແລະປະຊາຊົນຂອງພຣະອົງກໍຂ້າເຂົາເສັຽຫລວງຫລາຍ ອິສຣາເອນທີ່ຄັດເລືອກແລ້ວຈຶ່ງລົ້ມຕາຍຫ້າແສນຄົນ
18 ນີ້ແຫລະຄົນອິສຣາເອນກໍຖືກປາບປາມໃນຄັ້ງນັ້ນ ແລະຄົນຢູດາກໍຊະນະ ເພາະເຂົາເພິ່ງພຣະຜູ້ເປັນເຈົ້າພຣະເຈົ້າແຫ່
ງບັນພະບຸຣຸດຂອງເຂົາ

19 ອາບີຢາໄດ້ຕິດຕາມເຢໂຣໂບອາມ ແລະຍຶດເອົາຫົວເມືອງຈາກພຣະອົງ ຄືເມືອງເບັດເອນກັບຊົນນະບົດຂອງເມືອງ
ນັ້ນ ແລະເຢຊານາກັບຊົນນະບົດຂອງເມືອງນັ້ນ ແລະເອໂຟຣນກັບຊົນນະບົດຂອງເມືອງນັ້ນ
20 ເຢໂຣໂບອາມບໍ່ໄດ້ຟື້ນອຳນາດຂອງພຣະອົງໃນຣັຊສມັຍຂອງອາບີຢາ ແລະພຣະຜູ້ເປັນເຈົ້າຊົງປະຫານພຣະອົງ ພ
ຣະອົງກໍສິ້ນພຣະຊົນ
21 ແຕ່ອາບີຢາກໍມີອຳນາດຍິ່ງຂຶ້ນ ແລະມີມະເຫສີສິບສີ່ອົງ ມີໂອຣົດຊາວສອງອົງ ແລະທິດາສິບຫົກອົງ
22 ຣາຊກິຈນອກນັ້ນຂອງອາບີຢາ ວິທີການແລະພຣະດຳຣັດຂອງພຣະອົງບັນທຶກໄວ້ໃນຫນັງສືຂອງຜູ້ປະກາດພຣະທັມ
ອິດໂດ

## 14 ຣັຊການອາຊາ

Asa Reigns

(1 ກສດ 15:9-15)

1 ອາບີຢາຈຶ່ງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ເຂົາກໍຝັງພຣະສົບໄວ້ໃນນະຄອນດາວິດ ແລະອາຊາໂອຣົດ
ຂອງພຣະອົງໄດ້ຂຶ້ນຄອງແທນພຣະອົງໃນຣັຊການຂອງອາຊາ ແຜ່ນດິນໄດ້ສງົບຢູ່ສິບປີ
2 ແລະອາຊາຊົງກະທຳສິ່ງທີ່ດີແລະຊອບໃນສາຍພຣະເນດພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພຣະອົງ
3 ພຣະອົງຊົງກຳຈັດແທ່ນບູຊາພຣະຕ່າງດ້າວແລະບ່ອນນະມັສການສະຖານທີ່ສູງທັງຫລາຍ ແລະພັງເສົາສັກສິດລົງ
ແລະໄດ້ໂຄ່ນອາເຊຣາເສັຽ
4 ແລະຊົງບັນຊາໃຫ້ຢູດາສແວງຫາພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງຕົນ ແລະໃຫ້ຮັກສາພຣະທັມແລະພ
ຣະບັນຍັດ
5 ພຣະອົງຊົງກຳຈັດບ່ອນນະມັສການສະຖານທີ່ສູງແລະແທ່ນເຄື່ອງຫອມອອກເສັຽຈາກຫົວເມືອງທັງສິ້ນຂອງຢູດາດ້ວຍ
ແລະຣາຊອານາຈັກກໍໄດ້ສງົບຢູ່ພາຍໃຕ້ພຣະອົງ
6 ພຣະອົງຊົງສ້າງຫົວເມືອງທີ່ມີປ້ອມໃນຢູດາ ເພາະແຜ່ນດິນກໍສງົບ ພຣະອົງບໍ່ໄດ້ທຳສົງຄາມໃນປີເຫລົ່ານັ້ນ ເພາະພ
ຣະຜູ້ເປັນເຈົ້າຊົງປະທານການຢຸດພັກສງົບແກ່ພຣະອົງ
7 ແລະພຣະອົງກ່າວກັບຢູດາວ່າ, "ໃຫ້ເຮົາທັງຫລາຍສ້າງຫົວເມືອງເຫລົ່ານີ້ ລ້ອມດ້ວຍກຳແພງ ຫໍຄອຍ ປະຕູເມືອງ
ແລະດານ ແຜ່ນດິນຍັງເປັນຂອງເຮົາ ເພາະເຮົາໄດ້ສແວງຫາພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຮົາ ເຮົາໄດ້ສແວງຫາພ
ຣະອົງ ແລະພຣະອົງໄດ້ຊົງປະທານການຢຸດພັກສງົບທຸກດ້ານ" ເຂົາທັງຫລາຍຈຶ່ງສ້າງແລະຈະເຣີນຂຶ້ນ
8 ແລະອາຊາຊົງມີກອງທັບປະກອບດ້ວຍໂລ່ໃຫຍ່ແລະຫອກຈາກຢູດາສາມແສນຄົນ ແລະຈາກເບັນຢາມິນຊຶ່ງຖືໂລ່
ແລະໂກ່ງທະນູ ສອງແສນແປດຫມື່ນຄົນ ທັງສິ້ນນີ້ເປັນທະຫານເອກ

Ethiopian Invasion Repulsed

9 ເຊຣາຊາວເອທິໂອເປັຽໄດ້ອອກມາຕໍ່ສູ້ກັບເຂົາທັງຫລາຍດ້ວຍກອງທັບຄົນນຶ່ງລ້ານ ແລະຣົດຮົບສາມຮ້ອຍຄັນມາເຖິງ
ເມືອງມາເຣຊາ
10 ແລະອາຊາຊົງຍົກອອກໄປປະທະກັບເຂົາ ແລະເຂົາທັງຫລາຍກໍຕັ້ງແນວຮົບໃນຮ່ອມພູເຊຟາທາທີ່ມາເຣຊາ
11 ອາຊາຮ້ອງທູນຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງພຣະອົງວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າບໍ່ມີຜູ້ໃດຊ່ອຍໄດ້ຢ່າງພຣະອົງ ໃນ
ການສູ້ຮົບກັນລະຫວ່າງຜູ້ທີ່ມີກຳລັງກັບຜູ້ທີ່ບໍ່ມີກຳລັງ ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າພຣະອົງທັງຫລາຍ ຂໍ
ຊົງຊ່ອຍພວກຂ້າ ພຣະອົງ ເພາະຂ້າພຣະອົງທັງຫລາຍເພິ່ງພຣະອົງ ຂ້າພຣະອົງທັງຫລາຍມາຕໍ່ສູ້ກັບຊົນຫມູ່ໃຫຍ່ນີ້
ໃນພຣະນາມຂອງພຣະອົງ ຂ້າແດ່ພຣະເຈົ້າ ພຣະອົງຊົງເປັນພຣະເຈົ້າຂອງຂ້າພຣະອົງທັງຫລາຍ ຂໍຢ່າໃຫ້ມະນຸດຊະ
ນະພຣະອົງ"
12 ພຣະຜູ້ເປັນເຈົ້າຈຶ່ງຊົງໃຫ້ຊາວເອທິໂອເປັຽຜ່າຍແພ້ຕໍ່ອາຊາແລະຕໍ່ຢູດາ ແລະຊາວເອທິໂອເປັຽກໍຫນີໄປ

13 ອາຊາແລະພົນທີ່ຢູ່ກັບພຣະອົງກໍໄລ່ຕາມເຂົາໄປເຖິງເມືອງເກຣາຣ໌ແລະຊາວເອທີໂອເປັຽລົ້ມຕາຍຫລາຍຈົນບໍ່ເຫລືອ ແມ່ນແຕ່ຊີວິດດຽວ ເພາະເຂົາໄດ້ແຕກຝ່າຍຕໍ່ພຣະພັກພຣະຜູ້ເປັນເຈົ້າແລະກອງທັບຂອງພຣະອົງ ຄົນຢູດາໄດ້ເກັບ ຂອງທີ່ຍຶດໄດ້ຢ່າງຫລວງຫລາຍ

14 ເຂົາກໍໂຈມຕີບັນດາຫົວເມືອງຮອບເມືອງເກຣາຣ໌ ເພາະວ່າຄວາມຢ້ານກົວພຣະຜູ້ເປັນເຈົ້ານັ້ນມາຄອບເຂົາທັງຫລາຍ ເຂົາໄດ້ປຸ້ນຫົວເມືອງທັງສິ້ນ ເພາະມີຂອງທີ່ຍຶດໄດ້ໃນນັ້ນຫລາຍ

15 ເຂົາໄດ້ໂຈມຕີເຕັນຂອງຜູ້ທີ່ມີງົວ ແລະເອົາແກະໄປຫລວງຫລາຍແລະອູດດ້ວຍ ແລ້ວເຂົາກໍກັບໄປຍັງເຢຣູຊາເລັມ

## 15 ອາຊາຊົງປະຕິຮູບງານດ້ານສາສນາ

Asa's Reforms

1 ພຣະວິນຍານຂອງພຣະຜູ້ເປັນເຈົ້າສະເດັດມາສະຖິດກັບອາຊາຣີຢາ ບຸດໂອເດດ

2 ແລະທ່ານອອກໄປເຝົ້າອາຊາທູນພຣະອົງວ່າ, “ຂ້າແດ່ອາຊາ ແລະຢູດາກັບເບັນຢາມິນທັງປວງ ຂໍຈົ່ງຟັງຂ້າພະເຈົ້າ ພ ຣະຜູ້ເປັນເຈົ້າຊົງສະຖິດກັບຢູ່ກັບທ່ານທັງຫລາຍ ຕໍ່ເມື່ອທ່ານທັງຫລາຍຢູ່ກັບພຣະອົງ ຖ້າທ່ານທັງຫລາຍສແວງຫາພ ຣະອົງ ທ່ານກໍຈະພົບ ພຣະອົງ ແຕ່ຖ້າທ່ານທັງຫລາຍປະຖິ້ມພຣະອົງ ພຣະອົງຈະຊົງປະຖິ້ມທ່ານທັງຫລາຍ

3 ອິສຣາເອນຢູ່ປາສຈາກພຣະເຈົ້າອົງທ່ຽງແທ້ເປັນເວລານານ ແລະບໍ່ມີປະໂຣຫິດຜູ້ສັ່ງສອນ ແລະບໍ່ມີພຣະທັມ

4 ແຕ່ເມື່ອເຖິງຄາວເຂົາທຸກຍາກລຳບາກ ເຂົາຫັນມາຫາພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ ແລະສແວງຫາພຣະ ອົງ ເຂົາທັງຫລາຍກໍພົບພຣະອົງ

5 ໃນສມັຍນັ້ນບໍ່ມີສັນຕິພາບແກ່ຜູ້ທີ່ອອກໄປຫລືຜູ້ທີ່ເຂົ້າມາ ເພາະມີການວຸ້ນວາຍຢູ່ມາກມາຍຣົບກວນຊາວເມືອງນັ້ນ

6 ເຂົາແຕກແຍກກັນເປັນພວກໆປະຊາຊາດຕໍ່ປະຊາຊາດແລະເມືອງຕໍ່ເມືອງ ເພາະພຣະເຈົ້າຊົງຣົບກວນເຂົາດ້ວຍ ຄວາມທຸກຍາກທຸກຢ່າງ

7 ແຕ່ທ່ານທັງຫລາຍຈົ່ງກ້າຫານ ຢ່າໃຫ້ມືຂອງທ່ານອ່ອນລົງ ເພາະວ່າກິຈການຂອງທ່ານຈະໄດ້ຮັບບຳເຫນັດ”

8 ເມື່ອອາຊາຊົງສະດັບຖ້ອຍຄຳເຫລົ່ານີ້ຄື ຄຳປະກາດພຣະທັມຂອງອາຊາຣີຢາບຸດໂອເດດ ພຣະອົງກໍຊົງມີພຣະທັຍກ້າ ຂຶ້ນ ຊົງກຳຈັດສິ່ງທີ່ຫນ້າກຽດຫນ້າຊັງຈາກແຜ່ນດິນຢູດາແລະເບັນຢາມິນສິ້ນ ແລະຈາກຫົວເມືອງຊຶ່ງພຣະອົງຍຶດມາ ໄດ້ຈາກຖິ່ນພູດອຍເອຟຣາອິມ ແລະພຣະອົງຊົງສ້ອມແຊມແທ່ນບູຊາຂອງພຣະຜູ້ເປັນເຈົ້າ ຊຶ່ງຢູ່ຫນ້າມຸກພຣະວິຫານ ຂອງພຣະຜູ້ເປັນເຈົ້າ

9 ພຣະອົງຊົງຮວບຮວມຢູດາແລະເບັນຢາມິນທັງປວງ ແລະຄົນເຫລົ່ານັ້ນຈາກເອຟຣາອິມ ມານັສເຊ ແລະຈາຊີເມໂອນ ຜູ້ອາສັຍຢູ່ກັບເຂົາທັງຫລາຍ ເພາະຄົນເປັນຈຳນວນຫລວງຫລາຍໄດ້ຫລົບຫນີມາຫາພຣະອົງຈາກອິສຣາເອນ ເມື່ອ ເຂົາເຫັນວ່າພຣະຜູ້ເປັນເຈົ້າຂອງພຣະອົງສະຖິດກັບພຣະອົງ

10 ເຂົາທັງຫລາຍຊຸມນຸມກັນທີ່ເຢຣູຊາເລັມໃນເດືອນທີສາມຂອງປີທີສິບຫ້າໃນຣັຊການຂອງອາຊາ

11 ເຂົາທັງຫລາຍຖວາຍສັດບູຊາແດ່ພຣະຜູ້ເປັນເຈົ້າໃນວັນນັ້ນຈາກເຂົ້າຂອງທີ່ເຂົາໄດ້ຍຶດມາ ມີງົວເຖິກເຈັດຮ້ອຍໂຕ ແລະແກະເຈັດພັນໂຕ

12 ເຂົາກໍເຂົ້າເຮັດຄຳສັນຍາທີ່ຈະສແວງຫາພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງເຂົາ ດ້ວຍສຸດຈິດສຸດໃຈຂອງ ເຂົາ

13 ແລະວ່າຜູ້ໃດທີ່ບໍ່ສແວງຫາພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນ ຄວນຈະມີໂທດເຖິງຕາຍ ບໍ່ວ່າເດັກນ້ອຍ ຫລືຜູ້ໃຫຍ່ ຊາຍຫລືຍິງ

14 ເຂົາທັງຫລາຍໄດ້ກະທຳສັດສາບານຕໍ່ພຣະຜູ້ເປັນເຈົ້າດ້ວຍສຽງອັນດັງ ແລະດ້ວຍສຽງໂຮ່ຮ້ອງ ແລະດ້ວຍສຽງແກແລະ ເຂົາສັດ

15 ຢູດາທັງປວງກໍຊົມຊື່ນຍິນດີເພາະຄຳສາບານນັ້ນ ເພາະເຂົາທັງຫລາຍໄດ້ສາບານດ້ວຍສຸດໃຈຂອງເຂົາແລະໄດ້ສແວງຫາພຣະອົງດ້ວຍສິ້ນຄວາມປາຖນາຂອງເຂົາ ແລະເຂົາທັງຫລາຍກໍພົບພຣະອົງ ແລະພຣະຜູ້ເປັນເຈົ້າຊົງປະທານໃຫ້ເຂົາຢຸດພັກສງົບຮອບດ້ານ

16 ເຖິງແມ່ນວ່າມາອາກາພຣະມານດາຂອງພຣະອົງ ກະສັດອາຊາກໍຊົງຖອດເສັຽຈາກເປັນພຣະຣາຊຊົນນີ ເພາະພຣະນາງໄດ້ກະທຳຮູບໂຄຣົບອັນຫນ້າກຽດຊັງສຳລັບພຣະອາເຊຣາ ອາຊາຊົງໂຄ່ນຮູບໂຄຣົບຂອງພຣະນາງລົງ ແລະບົດແລະເຜົາເສັຽທີ່ຫ້ວຍນ້ຳກິດໂຣນ

17 ແຕ່ຍັງບໍ່ໄດ້ກຳຈັດບ່ອນສະຖານນະມັສການທີ່ສູງອອກເສັຽຈາກອິສຣາເອນ ຢ່າງໃດກໍດີພຣະທັຍຂອງອາຊາກໍປາສຈາກຕຳຫນິ ຕລອດຣັຊການຂອງພຣະອົງ

18 ພຣະອົງຊົງນຳຂອງອຸທິດຖວາຍຂອງຣາຊບິດາຂອງພຣະອົງ ແລະເຄື່ອງຂອງທີ່ພຣະອົງຊົງອຸທິດຖວາຍ ມີເງິນແລະທອງຄຳ ແລະເຄື່ອງໃຊ້ເຂົ້າໄປໃນພຣະວິຫານຂອງພຣະຜູ້ເປັນເຈົ້າ

19 ແລະບໍ່ມີສົງຄາມອີກຈົນປີທີສາມສິບຫ້າໃນຣັຊການຂອງອາຊາ

## 16 ກະສັດອາຊາຊົງສ້າງສຳພັນທະໄມຕຣີກັບເບນຮາດາດ

Alliance with Aram Condemned

(1 ກສດ 15:16-22)

1 ໃນປີທີສາມສິບຫົກແຫ່ງຣັຊການອາຊາ ບາອາຊາພຣະຣາຊາແຫ່ງອິສຣາເອນຂຶ້ນມາຕໍ່ສູ້ກັບຢູດາ ແລະໄດ້ສ້າງເມືອງຣາມາ ເພື່ອວ່າພຣະອົງຈະບໍ່ຊົງໃຫ້ຄົນນຶ່ງຄົນໃດອອກໄປຫລືເຂົ້າມາຫາອາຊາພຣະຣາຊາແຫ່ງຢູດາ

2 ແລ້ວອາຊາຊົງເອົາເງິນແລະທອງຄຳຈາກຄັງຂອງພຣະວິຫານຂອງພຣະຜູ້ເປັນເຈົ້າແລະຣາຊສຳນັກ ແລະສົ່ງໄປໃຫ້ເບນຮາດັດ ພຣະຣາຊາແຫ່ງຊີເຣັຽຜູ້ປະທັບໃນເມືອງດາມັສກັສວ່າ,

3 “ຂໍໃຫ້ມີສັນຍາໄມຕຣີຣະຫວ່າງຂອງຂ້າພະເຈົ້າແລະຂອງທ່ານ ເບິ່ງແມ, ຂ້າພະເຈົ້າໄດ້ສົ່ງເງິນແລະທອງຄຳມາຍັງທ່ານ ຂໍສະເດັດໄປທຳລາຍສັນຍາໄມຕຣີຂອງທ່ານຊຶ່ງມີກັບບາອາຊາພຣະຣາຊາແຫ່ງອິສຣາເອນ ເພື່ອເຂົາຈະຖອຍທັບໄປຈາກຂ້າພະເຈົ້າ”

4 ແລະເບນຮາດາດຊົງເຊື່ອຟັງກະສັດອາຊາ ແລະສົ່ງຜູ້ບັງຄັບບັນຊາກອງທັບຂອງພຣະອົງໄປຕໍ່ສູ້ກັບຫົວເມືອງຂອງອິສຣາເອນ ແລະເຂົາທັງຫລາຍໂຈມຕີ ອີໂຢນ ດານ ເອເບນອາອີມ ແລະຫົວເມືອງຄັງຫລວງທັງສິ້ນຂອງເນັບທາລີ

5 ແລະເມື່ອບາອາຊາຊົງຊາບເຣື່ອງ ພຣະອົງຊົງຢຸດສ້າງເມືອງຣາມາ ແລະໃຫ້ພຣະຣາຊກິຈຂອງພຣະອົງຢຸດຢັ້ງ

6 ແລ້ວກະສັດອາຊາຊົງນຳຢູດາທັງສິ້ນ ແລະເຂົາທັງຫລາຍຂົນຫີນຂອງເມືອງຣາມາແລະເຄື່ອງໄມ້ຂອງເມືອງນັ້ນ ຊຶ່ງບາອາຊາໃຊ້ສ້າງຢູ່ນັ້ນ ແລະເອົາມາສ້າງເມືອງເກບາແລະເມືອງມິສປາ

7 ຄັ້ງນັ້ນຮານານີຜູ້ທຳນວາຍໄດ້ມາເຝົ້າອາຊາພຣະຣາຊາຂອງຢູດາ ແລະທູນພຣະອົງວ່າ, “ເພາະທ່ານເພິ່ງພຣະຣາຊາແຫ່ງຊີເຣັຽ ແລະບໍ່ໄດ້ເພິ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ເຫດສັນນັ້ນກອງທັບຂອງພຣະຣາຊາຊີເຣັຽຈຶ່ງໄດ້ຫລຸດພົ້ນມືທ່ານໄປ

8 ຄົນເອທິໂອເປັຽແລະຊາວລີເບັຽບໍ່ເປັນກອງທັບມະຫິມມາ ມີຣົດຮົບແລະມ້າຢ່າງຫລວງຫລາຍຫລື ແຕ່ເພາະທ່ານເພິ່ງພຣະຜູ້ເປັນເຈົ້າພຣະອົງຊົງມອບເຂົາທັງຫລາຍໄວ້ໃນມືຂອງທ່ານ

9 ເພາະວ່າພຣະເນດຂອງພຣະຜູ້ເປັນເຈົ້າໄປມາຢູ່ເຫນືອແຜ່ນດິນໂລກທັງສິ້ນເພື່ອສຳແດງຣິດທານຸພາບຂອງພຣະອົງໂດຍເຫັນແກ່ຜູ້ຄົນເຫລົ່ານັ້ນທີ່ມີໃຈຈິງຕໍ່ພຣະອົງ ໃນເຣື່ອງນີ້ທ່ານໄດ້ກະທຳການຢ່າງໂງ່ຈ້າ ເພາະຕັ້ງແຕ່ນີ້ໄປທ່ານຈະມີການເສິກສົງຄາມ”

10 ແລະອາຊາກໍຊົງກິ້ວຕໍ່ຜູ້ທຳນວາຍນັ້ນ ແລະຈັບເຂົາຂັງໄວ້ໃນຄຸກ ເພາະພຣະອົງຊົງກຽ້ວກາດແກ່ເຂົາໃນເຣື່ອງນີ້ ແລະອາຊາຊົງຂົ່ມເຫັງປະຊາຊົນບາງຄົນໃນເວລາດຽວກັນນັ້ນດ້ວຍ

### ພຍາດຂອງອາຊາແລະມໍຣະນະກັມ

Asa’s Disease and Death

(1 ກສດ 15:23-24)

11 ແລະ ເບິ່ງແມ, ພຣະຣາຊກິຈຂອງອາຊາ ຕັ້ງແຕ່ຕົ້ນຈົນສຸດທ້າຍບັນທຶກໄວ້ໃນຫນັງສືຂອງກະສັດແຫ່ງຢູດາແລະອິສ
ຣາເອນ
12 ໃນປີທີສາມສິບເກົ້າແຫ່ງຣັຊການຂອງພຣະອົງ ອາຊາຊົງເປັນໂຣກທີ່ພຣະບາດຂອງພຣະອົງ ແລະໂຣກຂອງພຣະອົງ
ກໍຮ້າຍແຮງ ເຖິງເປັນໂຣກຢູ່ພຣະອົງບໍ່ໄດ້ຊົງສແວງຫາພຣະຜູ້ເປັນເຈົ້າ ແຕ່ໄດ້ສແວງຫາຄວາມຊ່ອຍເຫລືອຈາກແພດ
13 ອາຊາຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ສິ້ນພຣະຊົນໃນປີທີສີ່ສິບເອັດແຫ່ງຣັຊການຂອງພຣະອົງ
14 ເຂົາທັງຫລາຍຝັງພຣະສົບໄວ້ໃນອຸບໂມງຂອງພຣະອົງ ຊຶ່ງພຣະອົງໄດ້ສະກັດອອກເພື່ອພຣະອົງໃນນະຄອນດາວິດ
ເຂົາວາງພຣະສົບຂອງພຣະອົງໄວ້ເທິງແທ່ນຊຶ່ງມີເຄື່ອງຫອມຕ່າງໆເຕັມໄປຫມົດ ຊຶ່ງຊ່າງປຸງເຄື່ອງຫອມໄດ້ປຸງໄວ້
ແລະເຂົາທັງຫລາຍກໍກໍ່ໄຟໃຫຍ່ໂຕຖວາຍພຣະກຽດພຣະອົງ

## 17 ເຢໂຮຊາຟັດຊົງສະຖາປະນາຣາຊອານາຈັກ

Jehoshzphat’s Reign

1 ເຢໂຮຊາຟັດໂອຣົດຂອງພຣະອົງປົກຄອງແທນພຣະອົງ ແລະຊົງເສີມກໍາລັງພົນຕໍ່ສູ້ອິສຣາເອນ
2 ພຣະອົງຊົງວາງພົນໄວ້ໃນຫົວເມືອງທີ່ມີປ້ອມທັງປວງຂອງຢູດາ ແລະຊົງຕັ້ງທະຫານປະຈໍາປ້ອມໃນແຜ່ນດິນຢູດາ
ແລະໃນຫົວເມືອງເອຟຣາອິມຊຶ່ງອາຊາບິດາຂອງພຣະອົງໄດ້ຍຶດໄວ້
3 ພຣະຜູ້ເປັນເຈົ້າຊົງສະຖິດກັບເຢໂຮຊາຟັດ ເພາະພຣະອົງຊົງດໍາເນີນໃນເບື້ອງຕົ້ນໆຂອງດາວິດ ຣາຊບິດາຂອງພຣະ
ອົງ ພຣະອົງບໍ່ໄດ້ຊົງສແວງຫາບັນດາພຣະບາອານ
4 ແຕ່ໄດ້ສແວງຫາພຣະຜູ້ເປັນເຈົ້າຂອງພຣະຣາຊບິດາຂອງພຣະອົງ ແລະດໍາເນີນໃນພຣະຣາຊບັນຍັດຂອງພຣະອົງ ບໍ່
ໄດ້ຊົງດໍາເນີນຕາມການກະທໍາຂອງອິສຣາເອນ
5 ເຫດສັນນັ້ນພຣະຜູ້ເປັນເຈົ້າຊົງສະຖາປະນາຣາຊອານາຈັກໄວ້ໃນມືຂອງພຣະອົງ ແລະທັງຢູດາກໍນໍາເຄື່ອງບັນນາການ
ມາຖວາຍເຢໂຮຊາຟັດ ພຣະອົງຈຶ່ງມີຊັບມັ່ງຄັ່ງຢ່າງຍິ່ງແລະມີກຽດຫລາຍ
6 ເມື່ອພຣະອົງດໍາເນີນໃນທາງຂອງພຣະຜູ້ເປັນເຈົ້າ ພຣະທັຍຂອງພຣະອົງກໍເຂັ້ມແຂງຂຶ້ນ ພຣະອົງຈຶ່ງຊົງກໍາຈັດບ່ອນ
ສະຖານນະມັສການທີ່ສູງ ແລະບັນດາອາເຊຣາເສັຽຈາກຢູດາ
7 ໃນປີທີສາມແຫ່ງຣັຊການຂອງພຣະອົງ ພຣະອົງຊົງໃຊ້ເຈົ້ານາຍຂອງພຣະອົງ ຄືເບນຮາອິນ ໂອບາດີ ເຊຄາຣີຢາ ເນ
ທານເອນ ແລະກັຍຢາໄປສັ່ງສອນໃນຫົວເມືອງຂອງຢູດາ
8 ແລະຄົນເລວີໄປກັບເຂົາດ້ວຍ ຄື ເຊມັຍຢາ ເນທານີຢາ ເຊບາດີຢາ ອາຊາເຮນ ເຊມີຣາໂມທ ເຢໂຮນາທານ ອາໂດນີ
ຢາ ໂຕບີຢາ ແລະໂຕບາໂອນີຢາ ຄົນເລວີ ແລະພ້ອມກັບຄົນເຫລົ່ານີ້ມີ ເອລີຊາມາ ເຢໂຮຣາມ ຜູ້ເປັນປະໂຣຫິດ
9 ເຂົາທັງຫລາຍໄດ້ສັ່ງສອນໃນຢູດາ ມີຫນັງສືທັມບັນຍັດຂອງພຣະຜູ້ເປັນເຈົ້າໄປກັບເຂົາດ້ວຍ ເຂົາທ່ຽວໄປທົ່ວຫົວ
ເມືອງທັງສິ້ນແຫ່ງຢູດາແລະໄດ້ສັ່ງສອນຖ້າມກາງປະຊາຊົນ
10 ເຫດໃຫ້ຢ້ານອັນມາຈາກພຣະຜູ້ເປັນເຈົ້າຕົກຢູ່ເຫນືອບັນດາຣາຊອານາຈັກທີ່ຢູ່ຮອບຢູດາ ແລະເຂົາທັງຫລາຍບໍ່ໄດ້ທໍາ
ສົງຄາມກັບເຢໂຮຊາຟັດ
11 ຄົນຟີລິສຕິນບາງພວກໄດ້ນໍາເຄື່ອງບັນນາການມາຖວາຍເຢໂຮຊາຟັດທ ແລະນໍາເງິນມາເປັນບັນນາການແລະພວກ
ອາຣັບໄດ້ນໍາຝູງແບ້ແກະ ຄືແກະເຖິກເຈັດພັນເຈັດຮ້ອຍໂຕ ແລະແບ້ເຖິກເຈັດພັນເຈັດຮ້ອຍໂຕມາຖວາຍພຣະອົງ
12 ແລະເຢໂຮຊາຟັດຊົງຈະເຣີນໃຫຍ່ຍິ່ງຂຶ້ນເປັນລໍາດັບ ພຣະອົງຊົງສ້າງປ້ອມແລະຫົວເມືອງຄັງຫລວງໄວ້ໃນຢູດາ

13 ແລະພຣະອົງຊົງສະສົມໄວ້ຢ່າງຫລວງຫລາຍໃນຫົວເມືອງຂອງຢູດາ ພຣະອົງຊົງມີທະຫານເອກ ທະຫານໃນກຸງເຢຣູ
ຊາເລັມ
14 ຕໍ່ໄປນີ້ເປັນຈຳນວນຕາມຕະກູນຂອງເຂົາ ຄືຂອງຢູດາຜູ້ບັງຄັບບັນຊາກອງພັນ ມີອັດນາ ຜູ້ບັງຄັບບັນຊາ ພ້ອມກັບທະ
ຫານເອກສາມແສນຄົນ
15 ຕໍ່ຈາກເຂົາໄປ ຄື ເຢໂຮຮານານ ຜູ້ບັງຄັບບັນຊາພ້ອມກັບສອງແສນແປດຫມື່ນຄົນ
16 ແລະຕໍ່ຈາກເຂົາໄປ ຄື ອາມັສຢາ ບຸດຊິກຣີ ເປັນຄົນອາສາສມັກເພື່ອການບົວລະບັດພຣະຜູ້ເປັນເຈົ້າ ພ້ອມກັບທະ
ຫານເອກ ທະຫານສອງແສນຄົນ
17 ຂອງເບັນຢາມິນ ຄື ເອລີອາດາ ທະຫານເອກ ພ້ອມກັບຄົນສອງແສນເປັນຄົນຖືຫນ້າທະນູແລະໂລ່
18 ແລະຕໍ່ຈາກເຂົາໄປ ຄືເຢໂຮຊາບັດ ພ້ອມກັບຄົນຕິດອາວຸດນຶ່ງແສນແປດຫມື່ນຄົນ
19 ເຫລົ່ານີ້ເປັນຂ້າຣາຊການຂອງພຣະຣາຊາ ນອກເຫນືອຈາກຜູ້ທີ່ພຣະຣາຊາຊົງວາງໄວ້ໃນຫົວເມືອງທີ່ມີປ້ອມທົ່ວຕ
ລອດແຜ່ນດິນຢູດາ

## 18 ມີກັຍຢາເຜີຍເຖິງການພ່າຍແພ້ຂອງເຢໂຮຊາຟັດແລະອາຮາບ

Micaiah Predicts Failure

( 1 ກສດ 22:1-28 )

1 ຝ່າຍເຢໂຮຊາຟັດຊົງມີຊັບມັ່ງຄັ່ງແລະກຽດໃຫຍ່ຍິ່ງ ແລະພຣະອົງຊົງກະທຳໃຫ້ເປັນທອງແຜ່ນດຽວກັນກັບອາຮາບ
2 ຄັນລ່ວງມາຫລາຍປີ ພຣະອົງສະເດັດລົງໄປເຝົ້າອາຮາບໃນຊາມາເຣັຽ ແລະອາຮາບຊົງຂ້າແກະແລະງົວມາກມາຍສຳ
ລັບພຣະອົງ ແລະສຳລັບພົນທີ່ມາກັບພຣະອົງ ແລະຊົງຊັກຊວນພຣະອົງໃຫ້ຂຶ້ນໄປຕໍ່ສູ້ກັບຣາໂມດກີເລອາດ
3 ອາຮາບພຣະຣາຊາແຫ່ງອິສຣາເອນກ່າວກັບເຢໂຮຊາຟັດພຣະຣາຊາແຫ່ງຢູດາວ່າ, “ທ່ານຈະໄປກັບຂ້າພະເຈົ້າຍັງຣາ
ໂມດກີເລອາດຫລື” ພຣະອົງທູນຕອບວ່າ, “ຂ້າພະເຈົ້າເປັນຢ່າງທີ່ທ່ານເປັນ ພົນຂອງຂ້າພະເຈົ້າກໍຢ່າງພົນຂອງທ່ານ
ເຮົາຈະຢູ່ກັບທ່ານໃນການສົງຄາມ”
4 ເຢໂຮຊາຟັດກ່າວກັບພຣະຣາຊາແຫ່ງອິສຣາເອນວ່າ, “ຂໍຖາມເບິ່ງພຣະດຳຣັດຂອງພຣະຜູ້ເປັນເຈົ້າເສັຽກ່ອນ”
5 ແລ້ວພຣະຣາຊາແຫ່ງອິສຣາເອນກໍເອີ້ນປະຊຸມພວກຜູ້ປະກາດພຣະທັມປະມານສີ່ຮ້ອຍຄົນກ່າວກັບເຂົາວ່າ, “ຄວນທີ່
ເຮົາຈະໄປຕີຣາໂມດກີເລອາດຫລື ຫລືເຮົາບໍ່ຄວນໄປ” ແລະເຂົາທັງຫລາຍທູນຕອບວ່າ, “ຂໍເຊີນສະເດັດໄປເຖີດ
ເພາະພຣະຜູ້ເປັນເຈົ້າຈະຊົງມອບໄວ້ໃນມືຂອງພຣະຣາຊາ”
6 ແຕ່ເຢໂຮຊາຟັດທູນວ່າ, “ທີ່ນີ້ບໍ່ມີຜູ້ປະກາດພຣະທັມຂອງພຣະຜູ້ເປັນເຈົ້າອີກຈັກຄົນນຶ່ງຫລືຊຶ່ງເຮົາຈະສອບຖາມໄດ້”
7 ແລະພຣະຣາຊາແຫ່ງອິສຣາເອນທູນເຢໂຮຊາຟັດວ່າ, “ຍັງມີຊາຍອີກຄົນນຶ່ງ ຊຶ່ງເຮົາຈະໃຫ້ທູນຖາມພຣະຜູ້ເປັນເຈົ້າ
ໄດ້ ແຕ່ຂ້າພະເຈົ້າຊັງເຂົາ ເພາະເຂົາປະກາດແຕ່ຄວາມຮ້າຍສເມີ ບໍ່ເຄີຍປະກາດຄວາມດີກ່ຽວກັບຂ້າພະເຈົ້າເລີຍ ຄົນ
ນັ້ນຄືມີກັຍຢາ ບຸດອິມລາ” ແລະເຢໂຮຊາຟັດທູນວ່າ, “ຂໍພຣະຣາຊາຢ່າກ່າວດັ່ງນັ້ນເລີຍ”
8 ແລ້ວພຣະຣາຊາແຫ່ງອິສຣາເອນຈຶ່ງເອີ້ນມະຫາດເລັກຄົນນຶ່ງເຂົ້າມາແລະກ່າວສັ່ງວ່າ, “ໄປພາມີກັຍຢາບຸດອິມລາມາ
ໄວໆ”
9 ຝ່າຍພຣະຣາຊາແຫ່ງອິສຣາເອນເຢໂຮຊາຟັດພຣະຣາຊາແຫ່ງຢູດາ ຕ່າງປະທັບເທິງພຣະທີ່ນັ່ງ ຊົງສລອງພຣະອົງອັນ
ງາມໃນລານຟາດເຂົ້າທາງເຂົ້າປະຕູເມືອງຊາມາເຣັຽ ແລະຜູ້ປະກາດພຣະທັມທັງປວງກໍປະກາດພຣະທັມຖວາຍຢູ່
10 ແລະເຊເດກີຢາບຸດເຄນາອານາ ຈຶ່ງເອົາເຫລັກທຳເປັນເຂົາ ແລະເວົ້າວ່າ, “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ດ້ວຍສິ່ງ
ເຫລົ່ານີ້ ເຈົ້າຈະຍູ້ຄົນຊີເຣັຽໄປຈົນເຂົາທັງຫລາຍຖືກທຳລາຍ”

11 ບັນດາຜູ້ປະກາດພຣະທັມກໍປະກາດຢ່າງນັ້ນ ທູນວ່າ, "ຂໍສະເດັດໄປຣາໂມດກີເລອາດເຖີດ ແລະຈະມີຊັຍຊະນະ ເພາະພຣະຜູ້ເປັນເຈົ້າຈະຊົງມອບເມືອງນັ້ນໄວ້ໃນມືຂອງພຣະຣາຊາ"

12 ແລະຜູ້ນຳຂ່າວຜູ້ໄປຕາມມີກາຍາໄດ້ບອກທ່ານວ່າ, "ເບິ່ງແມ, ຖ້ອຍຄຳຂອງບັນດາຜູ້ປະກາດພຣະທັມກໍເວົ້າສິ່ງທີ່ເປັນມົງຄົນແກ່ ພຣະຣາຊາເຫມືອນດັ່ງປາກດຽວກັນ ຂໍໃຫ້ຖ້ອຍຄຳຂອງທ່ານເຫມືອນຢ່າງຖ້ອຍຄຳຂອງຄົນນຶ່ງໃນພວກນັ້ນ ແລະເວົ້າແຕ່ສິ່ງທີ່ເປັນມົງຄຸນ"

13 ແຕ່ມີກາຍາຕອບວ່າ, "ພຣະຜູ້ເປັນເຈົ້າຜູ້ຊົງພຣະຊົນຢູ່ ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າກ່າວຢ່າງໃດຂ້າພະເຈົ້າຈະເວົ້າຢ່າງນັ້ນ"

14 ເມື່ອທ່ານມາເຝົ້າພຣະຣາຊາ ພຣະຣາຊາກ່າວຖາມທ່ານວ່າ "ມີກາຍາ ຄວນທີ່ເຮົາຈະໄປຕີຣາໂມດກີເລອາດຫລື ຫລືເຮົາບໍ່ຄວນໄປ" ແລະທ່ານທູນຕອບພຣະອົງວ່າ "ຂໍເຊີນສະເດັດຂຶ້ນໄປ ແລະຈະມີໄຊຊະນະ ເຂົາທັງຫລາຍຈະຖືກມອບໄວ້ໃນມືຂອງພຣະອົງ"

15 ແຕ່ພຣະຣາຊາກ່າວກັບທ່ານວ່າ, "ເຮົາໄດ້ໃຫ້ເຈົ້າປະຕິຍານຈັກເທື່ອແລ້ວວ່າ ເຈົ້າຈະເວົ້າກັບເຮົາແຕ່ຄວາມຈິງໃນພຣະນາມຂອງ ພຣະຜູ້ເປັນເຈົ້າ"

16 ແລະທ່ານທູນວ່າ, "ຂ້ານ້ອຍໄດ້ເຫັນຄົນອິສຣາເອນທັງປວງກະຈັດກະຈາຍຢູ່ເທິງພູ ຢ່າງແກະທີ່ບໍ່ມີຜູ້ລ້ຽງ ແລະພຣະຜູ້ເປັນເຈົ້າກ່າວວ່າ "ຄົນເຫລົ່ານີ້ບໍ່ມີນາຍ ໃຫ້ເຂົາຕ່າງຄົນຕ່າງກັບເມືອເຮືອນຂອງຕົນດ້ວຍຄວາມສງົບສຸກເທີນ"

17 ພຣະຣາຊາແຫ່ງອິສຣາເອນຈຶ່ງທູນເຢໂຮຊາຟັດວ່າ, "ຂ້າພະເຈົ້າໄດ້ບອກທ່ານແລ້ວບໍ່ແມ່ນບໍວ່າ ເຂົາບໍ່ເຄີຍທຳນວາຍເຣື່ອງດີກ່ຽວກັບຂ້າພະເຈົ້າຈັກເທື່ອເລີຍ ເຂົາມີແຕ່ທຳນວາຍເຣື່ອງຮ້າຍເທົ່ານັ້ນ"

18 ແລ້ວມີກາຍາທູນວ່າ, "ສັນນັ້ນຂໍພຣະອົງຊົງຮັບຟັງພຣະຄຳຂອງພຣະຜູ້ເປັນເຈົ້າ ຂ້ານ້ອຍໄດ້ເຫັນພຣະຜູ້ເປັນເຈົ້າປະທັບເທິງພຣະທີ່ນັ່ງຂອງພຣະອົງໃນຟ້າສວັນ ແລະພວກບໍຣິວານແຫ່ງເມືອງສວັນໄດ້ຢືນຢູ່ທາງຂ້າງຂວາ ແລະທາງຂ້າງຊ້າຍຂອງພຣະອົງ

19 ແລະພຣະຜູ້ເປັນເຈົ້າຊົງຖາມວ່າ, "ແມ່ນໃຜຈະໄປລໍ້ລວງອາຮາບໃຫ້ອອກໄປຕາຍທີ່ເມືອງຣາໂມດກີເລອາ" ພວກເທວະດາລາງພວກກໍທູນຢ່າງນັ້ນ ລາງພວກກໍທູນຢ່າງນີ້

20 ແລ້ວມີວິນຍານດວງນຶ່ງມາຢູ່ຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະທູນວ່າ, "ຂ້ານ້ອຍຈະເປັນຜູ້ລໍ້ລວງເຂົາເອງ" ແລະພຣະຜູ້ເປັນເຈົ້າຊົງຖາມວ່າ, "ຈະເຮັດຢ່າງໃດ?"

21 ວິນຍານດວງນັ້ນຈຶ່ງທູນຕອບວ່າ, "ຂ້ານ້ອຍຈະໄປທຳໃຫ້ພວກຜູ້ປະກາດພຣະທັມທຸກຄົນຂອງອາຮາບເວົ້າຕົວະ" ດັ່ງນັ້ນພຣະອົງຈຶ່ງຕອບວ່າ, "ຈົ່ງໄປລໍ້ເຂົາ ແລ້ວເຈົ້າຈະສຳເຣັດຜົນ"

22 ແລ້ວມີກາຍາກໍເວົ້າສລຸບວ່າ "ເຫດການກໍເປັນມາດັ່ງນີ້ແຫລະ ພຣະຜູ້ເປັນເຈົ້າຊົງບັນດານໃຫ້ພວກຜູ້ປະກາດພຣະທັມທຸກຄົນຂອງພຣະອົງເວົ້າຕົວະພຣະອົງ ແຕ່ຄວາມຈິງແລ້ວ ພຣະຜູ້ເປັນເຈົ້າຊົງກ່າວຮ້າຍໃສ່ພຣະອົງ"

23 ແລ້ວເຊເດກີຢາ ບຸດເຄນາອານາໄດ້ເຂົ້າມາໃກ້ແລະຕົບຫນ້າມີກາຍາເວົ້າວ່າ, "ພຣະວິນຍານຂອງພຣະຜູ້ເປັນເຈົ້າທີ່ຢູ່ກັບຂ້ອຍຈະອອກໄປເວົ້າກັບເຈົ້າໄດ້ຢ່າງໃດ?"

24 ມີກາຍາຈຶ່ງຕອບວ່າ, "ໃນເວລາທີ່ເຈົ້າຫນີໄປລີ້ຢູ່ບ່ອນລັບລີ້ພຸ້ນແຫລະ ເຈົ້າຈຶ່ງຈະຮູ້ວ່າມັນເປັນຢ່າງໃດ"

25 ເຈົ້າອາຮາບຈຶ່ງສັ່ງໃຫ້ນາຍທະຫານຜູ້ນຶ່ງ ຈັບມີກາຍາໄປມອບໃຫ້ອາໂມນ ຜູ້ປົກຄອງເມືອງແລະເຈົ້າຊາຍໂຢອັສ

26 ແລະບອກພວກທ່ານວ່າ, "ນີ້ເປັນຄຳສັ່ງຂອງພຣະຣາຊາ ຈົ່ງເອົາຊາຍຄົນນີ້ໄປຂັງຄຸກໄວ້ຈົນເທົ່າຂ້ອຍກັບມາຢ່າງປອດພັຍ ໃຫ້ເອົາແຕ່ເຂົ້າຈີ່ກັບນໍ້າໃຫ້ເຂົາກິນ"

27 ມີກາຍາຈຶ່ງທູນວ່າ, "ຖ້າພຣະອົງໄດ້ສະເດັດກັບຄືນມາຢ່າງປອດພັຍກໍຫມາຍຄວາມວ່າ ພຣະຜູ້ເປັນເຈົ້າບໍ່ໄດ້ຊົງເວົ້າກັບຂ້ານ້ອຍ" ແລະເຂົາໄດ້ເວົ້າຢໍ້າອີກວ່າ, "ຂໍໃຫ້ທຸກຄົນຈົ່ງຮັບຟັງໃນຄຳທີ່ຂ້າພະເຈົ້າໄດ້ເວົ້ານີ້"

Defeat and Death of Ahab

(1 ກສດ 22:29-40)

28 ອາຮາບເຈົ້າຊີວິດແຫ່ງອິສຣາເອນ ແລະເຢໂຮຊາຟັດເຈົ້າຊີວິດແຫ່ງຢູດາ ໄດ້ຍົກທັບໄປຕໍ່ສູ້ຊາວເມືອງຣາໂມດກີເລ
ອາດ
29 ເຈົ້າອາຮາບເວົ້າຕໍ່ເຢໂຮຊາຟັດວ່າ, "ຂ້າພະເຈົ້າຈະປອມຕົວໄປໃນສນາມຮົບ ແຕ່ຂ້າພະເຈົ້າຕ້ອງການໃຫ້ທ່ານນຸ່ງ
ເຄື່ອງແບບ ຂອງກະສັດເຂົ້າໄປ ແລ້ວເຈົ້າອາຮາບກໍປອມຕົວເຂົ້າສູ່ສນາມຮົບ
30 ຝ່າຍເຈົ້າຊີວິດແຫ່ງຊີເຣັຍ ກໍອອກຄໍາສັ່ງແກ່ຜູ້ບັນຊາການຣົດຮົບຂອງພຣະອົງວ່າ, "ບໍ່ຕ້ອງຕໍ່ສູ້ໃຜຫມົດບໍ່ວ່າພົນທະ
ຫານຫລືນາຍທະຫານ ແຕ່ໃຫ້ຕໍ່ສູ້ກັບເຈົ້າຊີວິດແຫ່ງອິສຣາເອນເທົ່ານັ້ນ"
31 ດັ່ງນັ້ນເມື່ອຜູ້ບັນຊາການທະຫານຣົດຮົບຫລຽວເຫັນເຢໂຮຊາຟັດ ພວກເຂົາຈຶ່ງຄິດວ່າ ທ່ານແມ່ນເຈົ້າຊີວິດແຫ່ງອິສຣາ
ເອນຢ່າງແນ່ນອນ ພວກເຂົາຈຶ່ງເລັ່ງຣົດຮົບເຂົ້າໄປຕໍ່ສູ້ ແຕ່ເຢໂຮຊາຟັດໄດ້ຮ້ອງຂຶ້ນ
32 ພວກຜູ້ບັນຊາການຣົດຮົບຈຶ່ງສັງເກດເຫັນວ່າ ບໍ່ແມ່ນເຈົ້າຊີວິດແຫ່ງອິສຣາເອນ ພວກເຂົາຈຶ່ງກັບຄືນ ແລະບໍ່ຕິດຕາມພ
ຣະອົງໄປ
33 ແຕ່ມີທະຫານຜູ້ນຶ່ງກົ່ງທະນູຍິງໄປຕາມອາດ ພໍດີໄປສຽບເຂົ້າຊື່ງວ່າງບ່ອນເສື້ອເຫລັກຕໍ່ກັນຂອງອາຮາບ ພຣະອົງຈຶ່ງ
ກ່າວແກ່ຜູ້ຂັບຣົດຮົບມ້າວ່າ, "ຈົ່ງອ່າຍຣົດກັບຄືນແລະພາຂ້ອຍອອກຈາກສນາມຮົບນີ້ ຂ້ອຍຖືກຍິງແລ້ວ"
34 ແຕ່ໃນມື້ນີ້ ການສູ້ຮົບໄດ້ດຸເດືອດທີ່ສຸດ ເຂົາໄດ້ຊູພຣະອົງໃຫ້ຢືນຂຶ້ນໃນຣົດມ້າຕໍ່ຫນ້າຊາວຊີເຣັຍ ເລືອດຈາກບາດແຜ
ຂອງພຣະອົງໄດ້ໄຫລອອກເຕັມຖັງຣົດຮົບ ພໍຍາມແລງມາພຣະອົງກໍສິ້ນພຣະຊົນ

## 19 ຜູ້ປະກາດພຣະທັມເຢຮູຕັກເຕືອນເຢໂຮຊາຟັດ

A Prophet Reprimands Jehoshaphat

1 ເຢໂຮຊາຟັດເຈົ້າຊີວິດແຫ່ງຢູດາສະເດັດກັບໄປໂດຍສວັດດີພາບເຖິງພຣະຣາຊວັງຂອງພຣະອົງໃນກຸງເຢຣູຊາເລັມ
2 ແຕ່ເຢຮູບຸດຮານານີຜູ້ທໍານວາຍໄດ້ອອກໄປເຝົ້າພຣະອົງ ທູນກະສັດເຢໂຮຊາຟັດວ່າ, "ຄວນຫລື ທີ່ພຣະອົງຈະຊ່ອຍ
ຄົນອະທັມ ແລະຮັກຜູ້ທີ່ກຽດຊັງພຣະຜູ້ເປັນເຈົ້າ ເພາະເຣື່ອງນີ້ພຣະພິໂຣດຂອງພຣະຜູ້ເປັນເຈົ້າໄດ້ອອກມາເຖິງພຣະ
ອົງ
3 ຢ່າງໃດກໍດີພຣະອົງຊົງພົບຄວາມດີໃນພຣະອົງຢູ່ ເພາະພຣະອົງໄດ້ທໍາລາຍບັນດາອາເຊຣາເສັຽຈາກແຜ່ນດິນ ແລະ
ໄດ້ມຸ່ງພຣະທັຍສແວງຫາພຣະຜູ້ເປັນເຈົ້າ"

### ເຢໂຮຊາຟັດຊົງຕັ້ງຜູ້ປົກຄອງ

The Reforms of Jehoshaphat

4 ເຢໂຮຊາຟັດປະທັບທີ່ເຢຣູຊາເລັມແລະພຣະອົງຊົງອອກໄປຖ້າມກາງປະຊາຊົນອີກ ຕັ້ງແຕ່ເບເອີເຊບາເຖິງຖິ່ນພູດອຍ
ເອຟຣາອິມ ແລະນໍາເຂົາທັງຫລາຍກັບມາຍັງພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງເຂົາ
5 ພຣະອົງຊົງຕັ້ງຜູ້ປົກຄອງໃນແຜ່ນດິນນັ້ນ ໃນຫົວເມືອງທີ່ມີປ້ອມທັງສິ້ນຂອງຢູດາ ທີ່ລະຫົວເມືອງ
6 ແລະກ່າວກັບຜູ້ປົກຄອງເຫລົ່ານັ້ນວ່າ, "ຈົ່ງພິຈາຣະນາສິ່ງທີ່ທ່ານທັງຫລາຍຈະກະທໍາ ເພາະທ່ານບໍ່ໄດ້ພິພາກສາເພື່ອ
ມະນຸດແຕ່ເພື່ອພຣະຜູ້ເປັນເຈົ້າ ພຣະອົງຊົງສະຖິດກັບທ່ານໃນການພິພາກສາ
7 ສະນັ້ນຈົ່ງໃຫ້ຄວາມຢໍາເກງພຣະຜູ້ເປັນເຈົ້າຢູ່ເຫນືອທ່ານ ຈົ່ງລະມັດລະວັງສິ່ງທີ່ທ່ານກະທໍາ ເພາະພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງເຮົາບໍ່ມີຄວາມອະຍຸດຕິທັມ ບໍ່ມີຄວາມລໍາອຽງແລະບໍ່ມີການຮັບສິນບົນ"
8 ນອກຈາກນີ້ ໃນເຢຣູຊາເລັມ ເຢໂຮຊາຟັດຊົງຕັ້ງຄົນເລວີແລະປະໂຣຫິດກັບຫົວຫນ້າຕະກູນແຫ່ງອິສຣາເອນ ເພື່ອຈະ
ໃຫ້ການພິພາກສາແຫ່ງພຣະຜູ້ເປັນເຈົ້າແລະປົກຄອງຄະດີທີ່ຜິດຖຽງກັນ ເຂົາທັງຫລາຍມີຕໍາແຫນ່ງໃນເຢຣູຊາເລັມ
9 ພຣະອົງຊົງກ່າວຊໍ້າກັບເຂົາທັງຫລາຍວ່າ, "ທ່ານທັງຫລາຍຈົ່ງກະທໍາການນີ້ດ້ວຍຄວາມຢໍາເກງພຣະຜູ້ເປັນເຈົ້າ ດ້ວຍ
ຄວາມສັດຊື່ແລະດ້ວຍສິ້ນສຸດໃຈຂອງທ່ານ

10 ເມື່ອມີຄະດີມາເຖິງທ່ານຈາກພີ່ນ້ອງຂອງທ່ານຜູ້ອາສັຍຢູ່ໃນຫົວເມືອງຂອງເຂົາທັງຫລາຍກ່ຽວກັບເຣື່ອງຂ້າຟັນກັນ ພຣະທັມຫລືທັມບັນຍັດ ກົດເກນຫລືກົດຫມາຍ ທ່ານທັງຫລາຍກໍຄວນຈະຕັກເຕືອນເຂົາ ເພື່ອເຂົາຈະບໍ່ກໍ່ກັມຊົ່ວຕໍ່ພຣະຜູ້ເປັນເຈົ້າ ພຣະພິໂຣດຈຶ່ງຈະບໍ່ມາເຫນືອທ່ານ ແລະພີ່ນ້ອງຂອງທ່ານ ທ່ານຈົ່ງກະທຳເຊັ່ນນີ້ ແລະທ່ານຈະບໍ່ກໍ່ກັມຊົ່ວ

11 ແລະເບິ່ງແມ, ອາມາຣີຢາມະຫາປະໂຣຫິດກໍຢູ່ເຫນືອທ່ານໃນກິຈການຂອງພຣະຜູ້ເປັນເຈົ້າ ແລະເຊບາດີຢາບຸດອິຊມາເອນເຈົ້ານາຍຂອງເຊື້ອວົງຢູດາກໍຢູ່ເຫນືອທ່ານໃນກິຈການຂອງພຣະຣາຊາ ແລະເລວີຈະເປັນເຈົ້າຫນ້າທີ່ບົວລະບັດທ່ານ ຈົ່ງປະກອບກິຈການຢ່າງເຂັ້ມແຂງ ແລະຂໍພຣະຜູ້ເປັນເຈົ້າຊົງສະຖິດຢູ່ກັບຜູ້ທ່ຽງທັມ"

## 20 ຊົງຊະນະຄົນໂມອາບແລະຄົນອັມໂມນ

Invasion from the East

1 ຕໍ່ມາພາຍຫລັງ ຄົນໂມອາບແລະຄົນອັມໂມນ ແລະຄົນເມອູນີບາງຄົນພ້ອມກັບເຂົາທັງຫລາຍ ໄດ້ຂຶ້ນມາທຳສົງຄາມກັບເຢໂຮຊາຟັດ

2 ມີຄົນມາທູນມາທູນເຢໂຮຊາຟັດວ່າ, "ມີຄົນຫມູ່ໃຫຍ່ມາສູ້ຮົບກັບພຣະອົງຈາກເອໂດມ ຈາກຟາກທະເລຂ້າງນັ້ນ ແລະເບິ່ງແມ, ເຂົາທັງຫລາຍຢູ່ໃນຮາຊາໂຊນຕາມາຣ໌" (ຄື ເອນເກດີ)

3 ເຢໂຮຊາຟັດກໍຢ້ານ ແລະມຸ່ງສແວງຫາພຣະຜູ້ເປັນເຈົ້າ ແລະໄດ້ຊົງປະກາດໃຫ້ອົດອາຫານທົ່ວຢູດາ

4 ແລະຢູດາໄດ້ຊຸມນຸມກັນສແວງຫາຄວາມຊ່ອຍເຫລືອຈາກພຣະຜູ້ເປັນເຈົ້າ ເຂົາທັງຫລາຍພາກັນມາຈາກຫົວເມືອງທັງສິ້ນແຫ່ງຢູດາເພື່ອສແວງຫາພຣະຜູ້ເປັນເຈົ້າ

Jehoshaphat’s Prayer and Victory

5 ເຢໂຮຊາຟັດປະທັບຢືນຢູ່ໃນທີ່ປະຊຸມຂອງຢູດາແລະເຢຣູຊາເລັມ ໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ຂ້າງຫນ້າລານໃຫມ່

6 ແລະກ່າວທູນວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງຂ້າພຣະອົງທັງຫລາຍ ພຣະອົງບໍ່ໄດ້ເປັນພຣະເຈົ້າໃນຟ້າສວັນຫລື ພຣະອົງບໍ່ໄດ້ປົກຄອງເຫນືອບັນດາຣາຊອານາຈັກຂອງປະຊາຊາດຫລື ໃນພຣະຫັດຂອງພຣະອົງມີຣິດແລະອຳນາດ ຈຶ່ງບໍ່ມີຜູ້ໃດຕໍ່ຕ້ານພຣະອົງໄດ້

7 ຂ້າແດ່ພຣະເຈົ້າຂອງຂ້າພຣະອົງທັງຫລາຍ ພຣະອົງບໍ່ໄດ້ຊົງຂັບໄລ່ຊາວແຜ່ນດິນນີ້ອອກໄປເສັຽໃຫ້ພົ້ນຫນ້າອິສຣາເອນໄພ່ພົນຂອງພຣະອົງຫລື ແລະຊົງມອບໄວ້ແກ່ເຊື້ອສາຍຂອງອັບຣາຮາມມິດສະຫາຍຂອງພຣະອົງເປັນນິດ

8 ແລະເຂົາທັງຫລາຍໄດ້ອາສັຍຢູ່ໃນນັ້ນ ແລະໄດ້ສ້າງສະຖານນະມັສການແຫ່ງນຶ່ງໃນນັ້ນຖວາຍພຣະອົງເພື່ອພຣະນາມຂອງພຣະອົງທູນວ່າ

9 "ຖ້າເຫດຊົ່ວຮ້າຍຂຶ້ນມາເຫນືອຂ້າພຣະອົງທັງຫລາຍຈະເປັນດາບ ການພິພາກສາ ຫລືໂຣກລະບາດ ຫລືການອຶດຢາກອາຫານ ຂ້າພຣະອົງທັງຫລາຍຈະຢືນຢູ່ຕໍ່ຫນ້າພຣະວິຫານນີ້ແລະຕໍ່ພຣະພັກພຣະອົງ ເພາະພຣະນາມຂອງພຣະອົງຢູ່ໃນພຣະວິຫານ ແລະຮ້ອງທູນຕໍ່ພຣະອົງໃນຄວາມທຸກໃຈຂອງຂ້າພຣະອົງທັງຫລາຍ ແລະພຣະອົງຈະຊົງຟັງແລະຊ່ອຍໃຫ້ລອດ"

10 ເບິ່ງແມ, ບັດນີ້ຄົນອັມໂມນແລະໂມອາບ ແລະພູເຊອີຣ໌ ຜູ້ຊຶ່ງພຣະຜູ້ເປັນເຈົ້າບໍ່ຊົງຍອມໃຫ້ຄົນອິສຣາເອນບຸກຮຸກເມື່ອເຂົາມາຈາກແຜ່ນດິນເອຢິບ ແລະຜູ້ຊຶ່ງເຂົາໄດ້ຫລີກໄປບໍ່ໄດ້ທຳລາຍເສັຽ

11 ເບິ່ງແມ, ເຂົາທັງຫລາຍໄດ້ໃຫ້ບຳເຫນັດແກ່ເຮົາ ດ້ວຍມາໄລ່ເຮົາເສັຽອອກຈາກແຜ່ນດິນກຳມະສິດຂອງພຣະອົງ ຊຶ່ງພຣະອົງປະທານໃຫ້ແກ່ຂ້າພຣະອົງທັງຫລາຍເປັນມໍຣະດົກ

12 ຂ້າແດ່ພຣະເຈົ້າຂອງຂ້າພຣະອົງທັງຫລາຍ ພຣະອົງຈະບໍ່ຊົງກະທຳການພິພາກສາເຫນືອເຂົາຫລື ເພາະວ່າຂ້າພຣະອົງທັງຫລາຍບໍ່ມີຣິດທີ່ຈະຕໍ່ສູ້ຄົນຫມູ່ມະຫຶມມານີ້ຊຶ່ງກຳລັງມາຕໍ່ສູ້ກັບຂ້າພຣະອົງທັງຫລາຍ ຂ້າພຣະອົງທັງຫລາຍບໍ່ຊາບວ່າຈະກະທຳປະການໃດ ແຕ່ດວງຕາຂອງຂ້າພຣະອົງທັງຫລາຍເພ່ງທີ່ພຣະອົງ"

13 ໃນລະຫວ່າງນັ້ນຄົນທັງປວງຂອງຢູດາກໍຢືນຢູ່ຕໍ່ພຣະພັກພຣະຜູ້ເປັນເຈົ້າພ້ອມກັບເມັຽ ແລະລູກຫລານຂອງເຂົາ
14 ແລະພຣະວິນຍານຂອງພຣະຜູ້ເປັນເຈົ້າສະເດັດມາສະຖິດກັບຢາຮາຊີເອນບຸດເຊເຄຣີຢາ ຜູ້ເປັນບຸດເບັນັຍຢາ ຜູ້ເປັນ
ບຸດເຢອີເອນ ຜູ້ເປັນບຸດມັດຕານີຢາເປັນຄົນເລວີເຊື້ອສາຍຂອງອາສາບ ເມື່ອທ່ານຢູ່ຖ້າມກາງທີ່ປະຊຸມນັ້ນ
15 ແລະເຂົາໄດ້ເວົ້າວ່າ," ຢູດາທັງປວງແລະຊາວເຢຣູຊາເລັມທັງຫລາຍກັບກະສັດເຢໂຮຊາຟັດ ຂໍຈົ່ງຟັງ ພຣະຜູ້ເປັນເຈົ້າ
ຊົງກ່າວດັ່ງນີ້ແກ່ທ່ານທັງຫລາຍວ່າ "ຢ່າຢ້ານເລີຍ ແລະຢ່າທໍ້ຖອຍດ້ວຍຄົນຫມູ່ມະຫືມມານີ້ເລີຍ ເພາະວ່າການສົງ
ຄາມນັ້ນບໍ່ແມ່ນຂອງທ່ານ ແຕ່ເປັນຂອງພຣະເຈົ້າ
16 ມື້ອື່ນເຊົ້າຈົ່ງລົງໄປຕໍ່ສູ້ກັບເຂົາ ເບິ່ງແມ, ເຂົາຈະຂຶ້ນມາທາງຂຶ້ນທີ່ເມືອງຊິສ ທ່ານທັງຫລາຍຈະພົບເຂົາທີ່ສຸດປາຍ
ຮ່ອມພູທາງດ້ານຕາເວັນອອກຂອງຖິ່ນກັນດານເຢຣູເອນ
17 ບໍ່ຈຳເປັນທີ່ທ່ານຈະຕ້ອງສູ້ຮົບໃນສົງຄາມຄັ້ງນີ້ ໂອ ຢູດາ ແລະເຢຣູຊາເລັມ ຈົ່ງເຂົ້າປະຈຳທີ່ ຢືນຢູ່ນິ່ງໆ ແລະເບິ່ງໄຊ
ຊະນະຂອງ ພຣະຜູ້ເປັນເຈົ້າເພື່ອທ່ານ" ຢ່າຢ້ານເລີຍ ຢ່າທໍ້ຖອຍ ມື້ອື່ນຈົ່ງອອກໄປສູ້ກັບເຂົາ ແລະພຣະຜູ້ເປັນເຈົ້າຊົງ
ສະຖິດຢູ່ກັບທ່ານ"
18 ແລ້ວເຢໂຮຊາຟັດໂນ້ມພຣະສຽນກົ້ມພຣະພັກຂອງພຣະອົງລົງເຖິງດິນ ແລະຢູດາທັງປວງກັບຊາວ
ເຢຣູຊາເລັມໄດ້ຂາບລົງຕໍ່ພຣະຜູ້ເປັນເຈົ້າ ນະມັສການພຣະຜູ້ເປັນເຈົ້າ
19 ແລະຄົນເລວີ ຈາກເຊື້ອສາຍໂກຮາດ ແລະເຊື້ອສາຍໂກຣາ ໄດ້ຢືນຂຶ້ນຖວາຍສັຣເສີນແດ່ພຣະຜູ້ເປັນເຈົ້າພຣະເຈົ້າ
ແຫ່ງອິສຣາເອນດ້ວຍສຽງອັນດັງ
20 ເຂົາທັງຫລາຍໄດ້ລຸກຂຶ້ນແຕ່ເດິກ ແລະອອກໄປ
ໃນຖິ່ນກັນດານເຖິງເຕໂກອາ ເມື່ອເຂົາອອກໄປ
ເຢໂຮຊາຟັດປະທັບຢືນແລະກ່າວວ່າ, "ຢູດາແລະຊາວເຢຣູຊາເລັມເອີຍ ຈົ່ງຟັງຂ້າພະເຈົ້າ ຈົ່ງວາງໃຈໃນພຣະຜູ້ເປັນ
ເຈົ້າພຣະເຈົ້າຂອງທ່ານ ແລະທ່ານຈະຕັ້ງຫມັ້ນຄົງຢູ່ ຈົ່ງເຊື່ອບັນດາຜູ້ປະກາດ
ພຣະທັມຂອງພຣະອົງ ແລະທ່ານຈະສຳເຣັດຜົນ"
21 ເມື່ອພຣະອົງໄດ້ປຶກສາກັບປະຊາຊົນແລ້ວ ພຣະອົງໄດ້ຊົງແຕ່ງຕັ້ງບັນດາຜູ້ທີ່ຈະຮ້ອງເພງຖວາຍພຣະຜູ້ເປັນເຈົ້າ ແລະ
ແຕ່ງກາຍ ດ້ວຍເຄື່ອງບໍຣິສຸດສັຣເສີນພຣະອົງ ຂນະເມື່ອເຂົາເດີນອອກໄປຫນ້າສັດຕຣູ ແລະວ່າ, "ຈົ່ງຖວາຍໂມທະນາ
ແດ່ພຣະຜູ້ເປັນເຈົ້າ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ"
22 ເມື່ອເຂົາທັງຫລາຍຕັ້ງຕົ້ນຮ້ອງເພງສັຣເສີນ ພຣະຜູ້ເປັນເຈົ້າຊົງຈັດກອງສຸ່ມຄອຍຕໍ່ສູ້ຄົນອັມໂມນ ໂມອາບ ແລະຊາວ
ເຂົາເຊອີຣ໌ ຜູ້ໄດ້ເຂົ້າມາຕໍ່ສູ້ກັບຢູດາ ດັ່ງນັ້ນເຂົາທັງຫລາຍຈຶ່ງແຕກຜ່າຍແພ້ໄປ
23 ເພາະວ່າຄົນຂອງອັມໂມນແລະຂອງໂມອາບໄດ້ລຸກຂຶ້ນຕໍ່ສູ້ກັບຊາວເຂົາເຊອີຣ໌ ທຳລາຍເຂົາເສັຽຢ່າງສິ້ນເຊີງ ແລະ
ເມື່ອເຂົາທັງຫລາຍທຳລາຍຊາວເຊອີຣ໌ຫມົດແລ້ວ ເຂົາທັງສິ້ນຊ່ອຍກັນທຳລາຍເຊິ່ງກັນແລະກັນ
24 ເມື່ອຢູດາຂຶ້ນໄປຢູ່ທີ່ເນີນສູງທີ່ໃນຖິ່ນກັນດານ ເຂົາມອງເບິ່ງໄປທີ່ຄົນຫມູ່ໃຫຍ່ນັ້ນ ແລະເບິ່ງແມ, ມີແຕ່ສົບນອນຢູ່ເທິງ
ແຜ່ນດິນ ບໍ່ມີຈັກຄົນດຽວທີ່ລອດໄປໄດ້
25 ເມື່ອເຢໂຮຊາຟັດແລະປະຊາຊົນຂອງພຣະອົງມາເກັບຂອງເສັຽຈາກເຂົາທັງຫລາຍ ເຂົາພົບສັດເປັນຈຳນວນຫລາຍ
ເຂົ້າຂອງເຄື່ອງນຸ່ງ ແລະຂອງມີຄ່າຕ່າງໆ ຊຶ່ງເຂົາເກັບມາຫລາຍສຳລັບຕົວຈົນຂົນໄປບໍ່ໄຫວ ເຂົາເກັບຂອງທີ່ຍຶດໄດ້
ເຫລົ່ານັ້ນສາມວັນ ເພາະຫລາຍເຫລືອລົ້ນ
26 ໃນວັນທີສີ່ເຂົາທັງຫລາຍໄດ້ຊຸມນຸມກັນທີ່ຮ່ອມພູເບຣາກາ ໃນທີ່ນັ້ນເຂົາສັຣເສີນພຣະຜູ້ເປັນເຈົ້າເພາະພຣະພອນ ເຫດ
ສັນນັ້ນເຂົາຈຶ່ງເອີ້ນທີ່ນັ້ນວ່າ ເບຣາກາຈົນເຖິງທຸກວັນນີ້
27 ແລ້ວເຂົາທັງຫລາຍກັບໄປ ຄົນຢູດາແລະເຢຣູຊາເລັມທຸກຄົນ ແລະເຢໂຮຊາຟັດຊົງນຳຫນ້າ ກັບໄປຍັງເຢຣູຊາເລັມ
ດ້ວຍຄວາມຊື່ນບານ ເພາະພຣະຜູ້ເປັນເຈົ້າໄດ້ຊົງກະທຳໃຫ້ເຂົາຊົມຊື່ນຍິນດີເຍີ້ຍສັດຕຣູຂອງເຂົາ
28 ເຂົາທັງຫລາຍມາຍັງເຢຣູຊາເລັມດ້ວຍພິນໃຫຍ່ ແລະພິນເຂົາຄູ່ແລະແກ ຍັງພຣະວິຫານຂອງພຣະຜູ້ເປັນເຈົ້າ

29 ແລະຄວາມຢ້ານພຣະຜູ້ເປັນເຈົ້າມາຢູ່ເໜືອບັນດາຣາຊອານາຈັກຂອງປະເທດທັງປວງ ເມື່ອເຂົາໄດ້ຍິນວ່າພຣະຜູ້
ເປັນເຈົ້າຊົງຕໍ່ສູ້ສັດຕຣູຂອງອິສຣາເອນ
30 ດິນແດນຂອງເຢໂຮຊາຟັດຈຶ່ງສົງບງຽບ ເພາະວ່າພຣະຜູ້ເປັນເຈົ້າຂອງພຣະອົງປະທານໃຫ້ພຣະອົງມີການຢຸດພັກສົງບ
ຢູ່ຮອບດ້ານ

**ຣັຊການເຢໂຮຊາຟັດ**

The End of Jehoshaphat's Reigns

(1 ກສດ 22:41-50)

31 ດັ່ງນີ້ແຫລະ, ເຢໂຮຊາຟັດຊົງປົກຄອງຢູ່ເໜືອຢູດາ ເມື່ອພຣະອົງຊົງເລີ່ມປົກຄອງນັ້ນມີອາຍຸສາມສິບຫ້າປີ ແລະພຣະ
ອົງຊົງປົກຄອງໃນເຢຣູຊາເລັມຊາວຫ້າປີ ພຣະຣາຊມານດາຂອງພຣະອົງຊົງພຣະນາມວ່າ ອາຊູບາ ບຸດຕຣີຊິນຮີ
32 ພຣະອົງຊົງດຳເນີນຕາມວິທີການຂອງອາຊາຣາຊບິດາຂອງພຣະອົງແລະບໍ່ໄດ້ຊົງຫັນໜີໄປຈາກທາງນັ້ນ ພຣະອົງຊົງ
ກະທຳສິ່ງທີ່ຊອບໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ
33 ຢ່າງໃດກໍດີສະຖານນະມັສການທີ່ສູງຍັງບໍ່ໄດ້ຖືກກຳຈັດອອກໄປປະຊາຊົນຍັງບໍ່ໄດ້ປັກໃຈໃນພຣະຜູ້ເປັນເຈົ້າແຫ່ງບັນ
ພະບຸຣຸດຂອງຕົນ
34 ສ່ວນພຣະຣາຊກິຈນອກນັ້ນຂອງເຢໂຮຊາຟັດ ຕັ້ງແຕ່ຕົ້ນຈົນເຖິງທີ່ສຸດໄດ້ມີບັນທຶກໄວ້ໃນປະຫວັດສາດຂອງເຢຮູ ບຸດ
ຮານານີ ຊຶ່ງຮວມເຂົ້າໃນໜັງສືກະສັດແຫ່ງອິສຣາເອນ
35 ຕໍ່ມາພາຍຫລັງ ເຢໂຮຊາຟັດເຈົ້າຊີວິດຂອງຢູດາໄດ້ຊົງຮ່ວມງານກັບອາຮາຊີຢາເຈົ້າຊີວິດຂອງອິສຣາເອນຜູ້ຊົງກະທຳ
ການຢ່າງຊົ່ວຮ້າຍຫລາຍ
36 ພຣະອົງຊົງຮ່ວມງານໃນເຣື່ອງການສ້າງເຮືອໄປຍັງເມືອງຕາຣ໌ຊິດ ແລະເຂົາທັງຫລາຍສ້າງເຮືອໃນເອຊີໂອນເກເບີ
37 ແລ້ວເອລີເອເຊີ ບຸດໂດດາວາຮູແຫ່ງເມືອງມາເຣຊາໄດ້ປະກາດພຣະທັມເຖິງເຢໂຮຊາຟັດວ່າ, “ເພາະພຣະອົງຊົງຮ່ວມ
ງານກັບອາຮາຊີຢາ ພຣະຜູ້ເປັນເຈົ້າຈະຊົງທຳລາຍສິ່ງທີ່ທ່ານກະທຳ” ແລະເຮືອກໍແຕກບໍ່ສາມາດໄປເມືອງຕາຣ໌ຊິດໄດ້

## 21 ຣັຊການເຢໂຮຣາມແຫ່ງຢູດາ

Jehoram's Reign

(1 ກສດ 22:50; 2 ກສດ 8:16-19)

1 ເຢໂຮຊາຟັດກໍລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຂົາຝັງພຣະສົບໄວ້ກັບບັນພະບຸຣຸດຂອງພຣະອົງໃນ
ນະຄອນດາວິດ ແລະເຢໂຮຣາມໂອຣົດຂອງພຣະອົງປົກຄອງແທນພຣະອົງ
2 ພຣະອົງຊົງມີນ້ອງຊາຍທັງຫລາຍ ຜູ້ເປັນໂອຣົດຂອງເຢໂຮຊາຟັດ ຄືອາຊາຣີຢາ ເຢຮີເອນ ເຊຄາຣີຢາ ອາຊາຣີຢາ ມີ
ຄາເອນ ເຊຟາຕີຢາ ເຫລົ່ານີ້ທັງສິ້ນເປັນໂອຣົດຂອງເຢໂຮຊາຟັດ ພຣະຣາຊາຂອງອິສຣາເອນ
3 ພຣະຣາຊບິດາຂອງເຂົາທັງຫລາຍປະທານ ເງິນ ທອງຄຳ ແລະຂອງອັນມີຄ່າມາກມາຍ ພ້ອມກັບຫົວເມືອງທີ່ມີປ້ອມ
ໃນຢູດາ ແຕ່ ພຣະອົງປະທານຣາຊອານາຈັກແກ່ເຢໂຮຣາມ ເພາະວ່າທ່ານເປັນໂອຣົດຫົວປີ
4 ເມື່ອເຢໂຮຣາມໄດ້ຂຶ້ນປົກຄອງຣາຊອານາຈັກຂອງຣາຊບິດາຂອງພຣະອົງ ແລະໄດ້ສະຖາປະນາໄວ້ແລ້ວ ພຣະອົງຊົງ
ປະຫານນ້ອງຊາຍຂອງພຣະອົງເສັຽໝົດດ້ວຍດາບ ທັງເຈົ້ານາຍບາງຄົນຂອງຢູດາດ້ວຍ
5 ເມື່ອເຢໂຮຣາມຊົງເລີ້ມປົກຄອງນັ້ນພຣະອົງມີອາຍຸສາມສິບສອງປີ ແລະພຣະອົງປົກຄອງໃນເຢຣູຊາເລັມແປດປີ
6 ພຣະອົງຊົງດຳເນີນຕາມທາງຂອງບັນດາພຣະຣາຊາແຫ່ງອິສຣາເອນ ຕາມຢ່າງທີ່ຣາຊວົງອາຮາບກະທຳ ເພາະວ່າທິ
ດາຂອງອາຮາບເປັນມະເຫສີຂອງພຣະອົງ ແລະພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າ
7 ຢ່າງໃດກໍຕາມພຣະຜູ້ເປັນເຈົ້າຈະບໍ່ຊົງທຳລາຍຣາຊວົງຂອງດາວິດ ເພາະເຫດຄຳໝັ້ນສັນຍາຊຶ່ງພຣະອົງຊົງກະທຳ
ໄວ້ກັບດາວິດແລະເຫດທີ່ພຣະອົງຊົງສັນຍາວ່າຈະປະທານແກ່ດາວິດ ແລະແກ່ເຊື້ອສາຍຂອງພຣະອົງເປັນນິດ

Revolt of Edom

(2 ກສດ 8:20-22)

8 ໃນຣັຊການຂອງພຣະອົງເອໂດມໄດ້ກະບົດອອກຈາກການປົກຄອງຂອງຢູດາ ແລະຕັ້ງກະສັດຂຶ້ນເໜືອຕົນ

9 ແລ້ວເຢໂຮຣາມກໍສະເດັດອອກໄປພ້ອມກັບບັນດາຜູ້ບັງຄັບບັນຊາແລະຣົດຮົບທັງສິ້ນຂອງພຣະອົງ ແລະພຣະອົງຊົງ
ລຸກຂຶ້ນໃນກາງຄືນໂຈມຕີຄົນເອໂດມຊຶ່ງມາລ້ອມພຣະອົງແລະຜູ້ບັງຄັບບັນຊາກັບຣົດຮົບຂອງພຣະອົງຢູ່ນັ້ນ

10 ເອໂດມຈຶ່ງໄດ້ກະບົດ ໄດ້ແຍກເປັນອານາຈັກເອກຣາຊຈາກການປົກຄອງຂອງຢູດາຈົນເຖິງທຸກວັນນີ້ ຄັ້ງນັ້ນລິບນາກໍ
ໄດ້ກະບົດ ອອກຈາກການປົກຄອງຂອງພຣະອົງດ້ວຍ ເພາະວ່າພຣະອົງໄດ້ຊົງປະຖິ້ມພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງ
ບັນພະບຸຣຸດຂອງພຣະອົງ

**ຈົດໝາຍຂອງເອລີຢາ**

Elijah’s Letter

11 ນອກຈາກນີ້ພຣະອົງຊົງສ້າງສະຖານນະມັສການທີ່ສູງໃນຖິ່ນພູດອຍຂອງຢູດາ ແລະຊົງນໍາຊາວເຢຣູຊາເລັມໄປໃນ
ຄວາມບໍ່ສັດຊື່ຕໍ່ພຣະຜູ້ເປັນເຈົ້າ ແລະຊົງກະທໍາໃຫ້ຢູດາຫລົງໜີໄປ

12 ແລະຈົດໝາຍສະບັບນຶ່ງມາເຖິງພຣະອົງຈາກເອລີຢາຜູ້ປະກາດພຣະທັມວ່າ, “ພຣະຜູ້ເປັນເຈົ້າພຣະເຈົ້າຂອງດາວິດ
ບັນພະບຸຣຸດຂອງພຣະອົງກ່າວດັ່ງນີ້ວ່າ, “ເພາະເຈົ້າບໍ່ໄດ້ດໍາເນີນໃນບັນດາທາງຂອງເຢໂຮຊາຟັດບິດາຂອງເຈົ້າ ຫລື
ໃນບັນດາທາງຂອງອາຊາເຈົ້າຊີວິດຂອງຢູດາ

13 ແຕ່ໄດ້ເດີນໃນທາງຂອງບັນດາເຈົ້າຊີວິດແຫ່ງອິສຣາເອນແລະໄດ້ນໍາຢູດາກັບຊາວເຢຣູຊາເລັມໃນຄວາມບໍ່ຊື່ສັດຕໍ່ພ
ຣະຜູ້ເປັນເຈົ້າຢ່າງກັບຣາຊວົງອາຮາບໄດ້ນໍາອິສຣາເອນໃນຄວາມບໍ່ຊື່ສັດຕໍ່ພຣະຜູ້ເປັນເຈົ້າ ແລະເຈົ້າໄດ້ຂ້ານ້ອງຊາຍ
ຂອງເຈົ້າເສັຽດ້ວຍ ຜູ້ເປັນເຊື້ອວົງບິດາຂອງເຈົ້າ ແລເຂົາດີກວ່າເຈົ້າ

14 ເບິ່ງແມ່, ພຣະເຈົ້າຈະຊົງນໍາພັຍວິບັດອັນຍິ່ງໃຫຍ່ມາເໜືອຊົນຊາດຂອງເຈົ້າ ລູກຫລານຂອງເຈົ້າ ເມັຽຂອງເຈົ້າ ແລະ
ເຄື່ອງຂອງທັງສິ້ນຂອງເຈົ້າ

15 ແລະຕົວເຈົ້າເອງຈະມີຄວາມເຈັບປ່ວຍສາຫັດດ້ວຍໂຣກລໍາໄສ້ຂອງເຈົ້າ ຈົນກວ່າລໍາໄສ້ຂອງເຈົ້າຈະອອກມາເພາະ
ເຫດໂຣກນັ້ນຊຶ່ງນັບມື້ນັບຮ້າຍແຮງຂຶ້ນ”

16 ແລະພຣະຜູ້ເປັນເຈົ້າຊົງເລົ້າໃຫ້ຄວາມໂກດຂອງຄົນຟີລິສຕິນແລະຂອງຄົນອາຣັບຜູ້ຢູ່ໃກ້ ກັບຄົນເອທີໂອເປັຽມີຕໍ່ເຢ
ໂຮຣາມ

17 ເຂົາທັງຫລາຍຍົກມາຕໍ່ສູ້ກັບຢູດາ ແລະບຸກຣຸກເຂົ້າໄປໃນນັ້ນ ແລະຂົນເຄື່ອງຂອງທັງສິ້ນຊຶ່ງມີໃນຣາຊສໍານັກທັງບັນ
ດາໂອຣົດແລະມະເຫສີຂອງພຣະອົງຈຶ່ງບໍ່ມີໂອຣົດເຫລືອໄວ້ໃຫ້ແກ່ພຣະອົງ ນອກຈາກເຢໂຮອາຮັສອົງສຸດທ້ອງຂອງພ
ຣະອົງ

**ພຍາດແລະມໍຣະນະກັມຂອງເຢໂຮຣາມ**

Disease and Death of Jehoram

(2 ກສດ 8:23-24)

18 ພາຍຫລັງເຣື່ອງເຫລົ່ານີ້ ພຣະຜູ້ເປັນເຈົ້າຊົງກະທໍາໃຫ້ລໍາໄສ້ຂອງເຢໂຮຣາມເປັນໂຣກຊຶ່ງຮັກສາບໍ່ໄດ້

19 ຕໍ່ມາເປັນເວລາສິ້ນສອງປີລໍາໄສ້ຂອງພຣະອົງກໍອອກມາເພາະໂຣກນັ້ນ ແລະພຣະອົງກໍສິ້ນພຣະຊົນດ້ວຍຄວາມທຸຣົນ
ທຸຣາຍຢ່າງຍິ່ງ ປະຊາຊົນຂອງ ພຣະອົງບໍ່ໄດ້ກໍ່ໄຟຖວາຍພຣະກຽດແກ່ພຣະອົງ ຢ່າງກັບກໍ່ໄຟໃຫ້ກັບບັນພະບຸຣຸດຂອງ
ພຣະອົງ

20 ເມື່ອພຣະອົງຊົງເລີ້ມປົກຄອງນັ້ນ ພຣະອົງມີອາຍຸສາມສິບສອງປີ ແລະຊົງປົກຄອງໃນເຢຣູຊາເລັມແປດປີ ແລະພຣະ
ອົງໄດ້ຈາກໄປໂດຍບໍ່ມີໃຜອາລັຍ ເຂົາກໍຝັງພຣະສົບໄວ້ໃນນະຄອນດາວິດ ແຕ່ບໍ່ແມ່ນໃນອຸບໂມງຂອງບັນດາພຣະຣາ
ຊາ

## 22 ຣັຊການອາຮາຊີຢາແຫ່ງຢູດາ

Ahaziah’s Reign

(2 ກສດ 8:25-29; 9:14-16,27-29)

1 ຊາວເຢຣູຊາເລັມໄດ້ໃຫ້ອາຮາຊີຢາໂອຣົດອົງສຸດທ້ອງຂອງພຣະອົງເປັນພຣະຣາຊາແທນພຣະອົງ ເພາະຄົນໝູ່ນັ້ນ
ມາເຖິງຄ້າຍກັບຄົນອາຣັບ ໄດ້ຂ້າໂອຣົດຜູ້ອ້າຍເສັຽທັງໝົດ ດັ່ງນັ້ນອາຮາຊີຢາ ໂອຣົດຂອງເຢໂຮຣາມພຣະຣາຊາ
ຂອງຢູດາຈຶ່ງປົກຄອງ
2 ເມື່ອອາຮາຊີຢາເລີ້ມປົກຄອງນັ້ນ ພຣະອົງມີອາຍຸສີ່ສິບສອງປີ ແລະພຣະອົງຊົງປົກຄອງໃນເຢຣູຊາເລັມນຶ່ງປີ ພຣະ
ມານດາຂອງ   ພຣະອົງຊົງພຣະນາມວ່າ ອາທາລີຢາ ຫລານສາວຂອງອົມຣີ
3 ພຣະອົງຊົງດຳເນີນໃນທາງຂອງຣາຊວົງອາຮາບດ້ວຍ ເພາະວ່າພຣະມານດາຂອງພຣະອົງເປັນທີ່ປຶກສາໃນການກະ
ທຳຄວາມຊົ່ວຮ້າຍຂອງພຣະອົງ
4 ພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າຢ່າງຣາຊວົງຂອງອາຮາບໄດ້ກະທຳ ເພາະວ່າຫລັງ
ຈາກພຣະບິດາຂອງພຣະອົງສິ້ນພຣະຊົນແລ້ວ ເຂົາທັງຫລາຍເປັນທີ່ປຶກສາຂອງພຣະອົງ ນຳໄປສູ່ຄວາມຈິບຫາຍຂອງ
ພຣະອົງ
5 ພຣະອົງຊົງກະທຳຕາມຄຳປຶກສາຂອງເຂົາທັງຫລາຍ ແລະສະເດັດໄປກັບເຢໂຮຣາມໂອຣົດຂອງອາຮາບ ພຣະຣາຊາ
ແຫ່ງອິສຣາເອນ ເພື່ອທຳສົງຄາມກັບຮາຊາເອນພຣະຣາຊາຂອງຊີເຣັຽ ທີ່ເມືອງຣາໂມດກີເລອາດ ແລະຄົນຊີເຣັຽໄດ້
ກະທຳໃຫ້ເຢໂຮຣາມບາດເຈັບ
6 ແລະພຣະອົງຊົງກັບມາທີ່ເຢສເຣເອນ ເພາະວ່າພຣະອົງຊົງປະຊວນ
7 ແຕ່ພຣະເຈົ້າຊົງກຳນົດໄວ້ເສັຽແລ້ວວ່າ ຄວາມຫລົ້ມຈົມຂອງອາຮາຊີຢາຈະມາໂດຍທີ່ພຣະອົງສະເດັດລົງໄປຢ້ຽມເຢ
ໂຮຣາມ ເພາະເມື່ອພຣະອົງສະເດັດໄປທີ່ນັ້ນ ພຣະອົງສະເດັດອອກໄປກັບເຢໂຮຣາມເພື່ອຈະປະທະກັບເຢຣູບຸດນິມຊີ
ຜູ້ຊຶ່ງພຣະເຈົ້າໄດ້ຊົງເຈີມຕັ້ງໃຫ້ທຳລາຍຣາຊວົງຂອງອາຮາບ
8 ເມື່ອເຢຣູກຳລັງສຳເຣັດໂທດຣາຊວົງຂອງອາຮາບ ທ່ານໄດ້ພົບເຈົ້ານາຍຂອງຢູດາ ແລະບັນດາໂອຣົດ ຫລານຊາຍ
ຂອງອາຮາຊີຢາ ຜູ້ມາບົວລະບັດອາຮາຊີຢາ ແລະທ່ານກໍໄດ້ປະຫານເຂົາທັງຫລາຍເສັຽ
9 ທ່ານໄດ້ຄົ້ນຫາອາຮາຊີຢາ ແລະພຣະອົງກໍຖືກຈັບເມື່ອລີ້ພຣະອົງຢູ່ໃນຊາມາເຣັຽ ແລະເຂົາພາພຣະອົງມາຫາເຢຣູ
ແລະປະຫານຊີວິດພຣະອົງເສັຽ ເຂົາທັງຫລາຍກໍຝັງພຣະສົບໄວ້ ເພາະເຂົາທັງຫລາຍກ່າວວ່າ, “ພຣະອົງຊົງເປັນ
ຫລານຊາຍຂອງເຢໂຮຊາຟັດຜູ້ ສແວງຫາພຣະຜູ້ເປັນເຈົ້າດ້ວຍສິ້ນສຸດພຣະທັຍຂອງພຣະອົງ” ແລະຣາຊວົງຂອງອາ
ຮາຊີຢາບໍ່ມີຜູ້ໃດສາມາດປົກຄອງຣາຊອານາຈັກໄດ້

**ພຣະນາງອາທາລີຢາແຍ່ງຣາຊບັນລັງ**

Athaliah Seizes the Throne

(2 ກສດ 11:1-8)

10 ເມື່ອອາທາລີຢາເຫັນວ່າໂອຣົດຂອງພຣະນາງສິ້ນພຣະຊົນແລ້ວ ພຣະນາງກໍລຸກຂຶ້ນທຳລາຍຣາຊວົງແຫ່ງຢູດາເສັຽສິ້ນ
11 ແຕ່ພຣະນາງເຢໂຮຊາເບອາດ ທິດາຂອງພຣະຣາຊາໄດ້ນຳໂຢອັສໂອຣົດຂອງອາຮາຊີຢາ ລັກພາໄປເສັຽຈາກຖ້າມ
ກາງບັນດາໂອຣົດຂອງພຣະຣາຊາຜູ້ຊຶ່ງຈະຕ້ອງຖືກປະຫານ ແລະພຣະນາງກໍເຊື່ອງພຣະອົງແລະພີ່ລ້ຽງໄວ້ໃນຫ້ອງມ້ຽ
ນບ່ອນນອນ” ດັ່ງນັ້ນແຫລະເຢໂຮຊາເບອາດທິດາຂອງກະສັດເຢໂຮຣາມ ແລະເມັຽຂອງເຢຣິວອາດາປະໂຣຫິດ
(ເພາະວ່າພຣະນາງເປັນຫລານສາວຂອງອາຮາຊີຢາ) ໄດ້ເຊື່ອງພຣະອົງໃຫ້ພົ້ນຈາກພຣະນາງອາທາລີຢາ ເພື່ອບໍ່ໃຫ້ພ
ຣະນາງປະຫານພຣະອົງໄດ້

12 ແລະພຣະອົງໄດ້ຢູ່ກັບເຂົາໃນພຣະວິຫານຂອງພຣະເຈົ້າລີ້ຊ່ອນຕົວຢູ່ຫົກປີ ຝ່າຍພຣະນາງອາທາລີຢາກໍໄດ້ຂຶ້ນປົກ
ຄອງແຜ່ນດິນ

## 23 ເຢຣີວອາດາທັດສິງຕັ້ງໂຢອັສ

The Revolt Against Athaliah

1 ແຕ່ໃນປີທີເຈັດເຢຣີວອາດາໄດ້ກ້າແຂງຂຶ້ນ ແລະໃຫ້ພວກນາຍຮ້ອຍກະທຳສັດສາບານຕໍ່ທ່ານ ມີ ອາຊາຣີຢາບຸດເຢໂຮ
ຣາມ ອິຊມາເອນບຸດເຢໂຮຮານານ ອາຊາຣີຢາບຸດໂອເບດ ມາອາເຊຢາບຸດອາດັຍຢາ ແລະເອລີຊາຟັດບຸດຊິກຣີ
2 ເຂົາທັງຫລາຍທ່ຽວໄປທົ່ວຢູດາແລະຮອບຮວມຄົນເລວີມາຈາກທຸກຫົວເມືອງຂອງຢູດາ ທັງບັນດາຫົວໜ້າຂອງຕະ
ກູນຂອງອິສຣາເອນ ແລະເຂົາທັງຫລາຍມາຍັງເຢຣູຊາເລັມ
3 ບັນດາຊຸມນຸມຊົນທັງສິ້ນກໍທຳຄຳສັນຍາກັບພຣະຣາຊາໃນພຣະວິຫານຂອງພຣະເຈົ້າ ແລະເຢຣີວອາດາກ່າວແກ່ເຂົາ
ທັງຫລາຍວ່າ, “ເບິ່ງແມ, ໂອຣົດຂອງພຣະຣາຊາຈະປົກຄອງຕາມທີ່ພຣະຜູ້ເປັນເຈົ້າກ່າວກ່ຽວກັບບັນດາໂອຣົດຂອງ
ດາວິດ
4 ທ່ານທັງຫລາຍຈົ່ງກະທຳຢ່າງນີ້ ຄືທ່ານຜູ້ເປັນປະໂຣຫິດແລະຄົນເລວີ ຜູ້ອອກເວນໃນວັນສະບາໂຕ ນຶ່ງໃນສາມໃຫ້
ເປັນຄົນເຝົ້າປະຕູ
5 ແລະນຶ່ງໃນສາມໃຫ້ຢູ່ທີ່ພຣະຣາຊສຳນັກ ແລະນຶ່ງໃນສາມໃຫ້ຢູ່ທີ່ປະຕູໂຂງ ແລະໃຫ້ປະຊາຊົນທັງປວງຢູ່ໃນເດີ່ນພຣະ
ວິຫານຂອງພຣະເຈົ້າ
6 ແຕ່ຢ່າໃຫ້ຈັກຄົນນຶ່ງເຂົ້າໄປໃນພຣະວິຫານຂອງພຣະເຈົ້າ ນອກຈາກປະໂຣຫິດແລະຄົນເລວີທີ່ປົວລະບັດຢູ່ ເຂົາທັງ
ຫລາຍເຂົ້າໄປໄດ້ ເພາະເຂົາທັງຫລາຍບໍຣິສຸດ ແຕ່ປະຊາຊົນທັງປວງຈະຕ້ອງຮັກສາການບັງຄັບບັນຊາຂອງພຣະຜູ້
ເປັນເຈົ້າ
7 ໃຫ້ຄົນເລວີລ້ອມພຣະຣາຊາໄວ້ ແຕ່ລະຄົນໃຫ້ຖືອາວຸດ ແລະຜູ້ໃດເຂົ້າໄປໃນພຣະວິຫານຂອງພຣະເຈົ້າຈະຕ້ອງຖືກ
ປະຫານ ຈົ່ງຢູ່ກັບພຣະຣາຊາເມື່ອພຣະອົງສະເດັດເຂົ້າມາແລະເມື່ອພຣະອົງສະເດັດອອກໄປ”

Joash Crowned King

(2 ກສດ 11:9-12)

8 ຄົນເລວີແລະຄົນຢູດາທັງປວງໄດ້ກະທຳທຸກສິ່ງທີ່ເຢຣີວອາດາປະໂຣຫິດໄດ້ບັນຊາໄວ້ ເຂົາທັງຫລາຍຕ່າງກໍນຳຄົນ
ຂອງເຂົາມາ ຄືທັງຄົນທີ່ອອກເວນໃນວັນສະບາໂຕ ແລະບັນດາຄົນເຫລົ່ານັ້ນທີ່ຈະເຂົ້າເວນໃນວັນສະບາໂຕ ເພາະເຢ
ຣີວອາດາປະໂຣຫິດບໍ່ໄດ້ປ່ອຍກອງເວນ
9 ແລະເຢຣີວອາດາໄດ້ມອບຫອກກັບໂລ່ໃຫຍ່ໂລ່ນ້ອຍຊຶ່ງເປັນຂອງກະສັດດາວິດນັ້ນຊຶ່ງຢູ່ໃນພຣະວິຫານຂອງພຣະເຈົ້າ
ໃຫ້ຜູ້ບັງຄັບບັນຊາກອງຮ້ອຍ
10 ທ່ານໄດ້ຕັ້ງປະຊາຊົນທັງສິ້ນໃຫ້ເປັນຜູ້ເຝົ້າພຣະຣາຊາ ທຸກຄົນຖືອາວຸດຕັ້ງແຕ່ດ້ານຂວາຂອງພຣະວິຫານເຖິງດ້ານ
ຊ້າຍຂອງພຣະວິຫານ ຮອບແທ່ນບູຊາແລະພຣະວິຫານ
11 ແລ້ວເຂົານຳໂອຣົດຂອງພຣະຣາຊາອອກມາ ແລະສວມມົງກຸດໃຫ້ທ່ານມອບພຣະໂອວາດໃຫ້ແກ່ທ່ານ ແລະເຂົາທັງ
ຫລາຍຕັ້ງທ່ານໄວ້ເປັນກະສັດ ເຢຣີວອາດາກັບບຸດຂອງທ່ານກໍທັດສິງພຣະອົງ ແລະເຂົາທັງຫລາຍຮ້ອງວ່າ, “ຂໍພຣະ
ຣາຊາຊົງພຣະຈະເຣີນ”

**ອາທາລີຢາຖືກປະຫານຊີວິດ**

Athaliah Murdered

(2 ກສດ 11:13-20)

12 ເມື່ອອາທາລີຢາໄດ້ຍິນສຽງປະຊາຊົນແລ່ນ ແລະສັຣເສີນພຣະຣາຊາ ພຣະນາງກໍສະເດັດເຂົ້າໄປຫາປະຊາຊົນໃນພ
ຣະວິຫານພຣະເຈົ້າ
13 ເມື່ອພຣະນາງທອດພຣະເນດ ກໍມີພຣະຣາຊາປະທັບຢືນຢູ່ທີ່ເສົາຫານຂອງພຣະອົງບ່ອນທາງເຂົ້າບັນດາຜູ້ບັງຄັບກອງ
ແລະພົນແກກໍຢູ່ຂ້າງພຣະຣາຊາ ແລະຣາສດອນທັງປວງກໍຊົມຊື່ນຍິນດີແລະເປົ່າແກ ບັນດານັກຮ້ອງພ້ອມກັບເຄື່ອງ
ດົນຕຣີຂອງເຂົາກໍນຳການສັຣເສີນ ພຣະນາງອາທາລີຢາກໍຈີກສລອງພຣະອົງຂອງພຣະນາງ ຊົງຮ້ອງວ່າ, “ກະບົດ ກະ
ບົດ”
14 ແລ້ວເຢຮົວອາດາປະໂຣຫິດຈຶ່ງນຳບັນດານາຍຮ້ອຍຜູ້ບັນຊາການກອງທັບອອກມາ ສັ່ງເຂົາວ່າ, “ຈົ່ງຄຸມພຣະນາງ
ອອກມາລະຫວ່າງແຖວທະຫານ ຜູ້ໃດທີ່ຕາມພຣະນາງໄປກໍໃຫ້ປະຫານຊີວິດເສັຽດ້ວຍດາບ” ເພາະປະໂຣຫິດກ່າວ
ວ່າ, “ຢ່າປະຫານພຣະນາງໃນພຣະວິຫານຂອງພຣະເຈົ້າ”
15 ເຂົາຈຶ່ງຈັບພຣະນາງ ແລ້ວພຣະນາງກໍສະເດັດໄປທີ່ທາງເຂົ້າປະຕູມ້າໃນພຣະຣາຊວັງ ແລະເຂົາທັງຫລາຍກໍປະຫານພ
ຣະນາງເສັຽທີ່ນັ້ນ
16 ເຢຮົວອາດາໄດ້ກະທຳຄຳສັນຍາລະຫວ່າງທ່ານເອງກັບປະຊາຊົນທັງປວງແລະພຣະຣາຊາວ່າ ເຂົາທັງຫລາຍຈະເປັນ
ໄພ່ພົນຂອງພຣະເຈົ້າ
17 ແລ້ວປະຊາຊົນທັງປວງກໍໄປທີ່ວິຫານຂອງພຣະບາອານ ແລະພັງລົງເສັຽ ແລະເຂົາທຸບແທ່ນບູຊາແລະຮູບໂຄຣົບຂອງ
ພຣະບາອານນັ້ນໃຫ້ເປັນຊິ້ນໆ ແລະເຂົາປະຫານມັດຕານປະໂຣຫິດເສັຽທີ່ຫນ້າແທ່ນບູຊາ
18 ເຢຮົວອາດາວາງຍາມໄວ້ດູແລພຣະວິຫານຂອງພຣະເຈົ້າພາຍໃຕ້ການຄວບຄຸມຂອງປະໂຣຫິດແຫ່ງຄົນເລວີ ຜູ້ຊຶ່ງດາ
ວິດຊົງຈັດຕັ້ງໃຫ້ດູແລພຣະວິຫານຂອງພຣະຜູ້ເປັນເຈົ້າ ໃຫ້ຖວາຍເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າ ຕາມທີ່ບັນທຶກ
ໄວ້ໃນທັມບັນຍັດຂອງໂມເຊດ້ວຍຄວາມຊົມຊື່ນຍິນດີແລະການຮ້ອງເພງ ຕາມພຣະຣາຊດຳຣັດສັ່ງຂອງດາວິດ
19 ທ່ານໄດ້ຕັ້ງຜູ້ເຝົ້າປະຕູໄວ້ທີ່ປະຕູຮົ້ວພຣະວິຫານຂອງພຣະຜູ້ເປັນເຈົ້າ ເພື່ອບໍ່ໃຫ້ຜູ້ມີມົນທິນດ້ວຍປະການນຶ່ງປະການ
ໃດເຂົ້າໄປ
20 ທ່ານໄດ້ນຳຜູ້ບັງຄັບກອງຮ້ອຍ ຂຸນນາງຜູ້ປົກຄອງປະຊາຊົນ ແລະບັນດາຣາສດອນ ແລະທ່ານໄດ້ເຊີນພຣະຣາຊາລົງ
ມາຈາກພຣະວິຫານຂອງພຣະຜູ້ເປັນເຈົ້າໄປທາງປະຕູເທິງໄປສູ່ພຣະຣາຊສຳນັກ ແລະເຂົາກໍເຊີນພຣະຣາຊາປະທັບ
ເທິງຣາຊບັນລັງແຫ່ງຣາຊອານາຈັກ
21 ບັນດາຣາສດອນກໍຊົມຊື່ນຍິນດີ ແລະເມືອງກໍສງົບງຽບແລະພຣະນາງອາທາລີຢາຖືກປະຫານເສັຽດ້ວຍດາບແລ້ວ

## 24 ຣັຊການໂຢອັສແຫ່ງຢູດາ

Joash Repairs the Temple

(2 ກສດ 11:21-12:16)

1 ເມື່ອໂຢອັສໄດ້ເລີ້ມປົກຄອງມີອາຍຸເຈັດປີ ແລະພຣະອົງຊົງປົກຄອງໃນກຸງເຢຣູຊາເລັມສີ່ສິບປີ ພຣະມານດາຂອງພຣະ
ອົງຊົງພຣະນາມວ່າ ຊີບີຢາແຫ່ງເມືອງເບເອີເຊບາ
2 ໂຢອັສຊົງກະທຳສິ່ງທີ່ຊອບໃນສາຍພຣະເນດພຣະຜູ້ເປັນເຈົ້າຕລອດຊົ່ວອາຍຸຂອງປະໂຣຫິດເຢຮົວອາດາ
3 ເຢຮົວອາດາຫາມະເຫສີໃຫ້ພຣະອົງສອງອົງ ແລະພຣະອົງກໍມີໂອຣົດແລະທິດາຫລາຍອົງ
4 ພາຍຫລັງໂຢອັສຊົງຕັ້ງພຣະທັຍຈະສ້ອມແຊມພຣະວິຫານຂອງພຣະຜູ້ເປັນເຈົ້າ
5 ພຣະອົງຊົງປະຊຸມປະໂຣຫິດແລະຄົນເລວີ ແລະກ່າວກັບເຂົາທັງຫລາຍວ່າ, “ຈົ່ງອອກໄປຕາມຫົວເມືອງຢູດາແລະ
ເກັບເງິນຈາກອິສຣາເອນທັງປວງເພື່ອສ້ອມແຊມພຣະວິຫານຂອງພຣະຜູ້ເປັນເຈົ້າຂອງເຈົ້າເປັນປີໆໄປແລະຈົ່ງຟ້າວ
ທຳງານນັ້ນ” ແຕ່ຄົນເລວີຍັງຊັກຊ້າຢູ່

6 ແລ້ວພຣະຣາຊາຈຶ່ງເອີ້ນເຢຣີວອາດາຜູ້ເປັນຫົວໜ້າ ແລະກ່າວກັບທ່ານວ່າ, “ເປັນຫຍັງທ່ານບໍ່ເອີ້ນໃຫ້ຄົນເລວີນຳເງິນສ່ວຍເຂົ້າມາຈາກຢູດາແລະເຢຣູຊາເລັມ ອັນເປັນສ່ວນຊຶ່ງໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າກຳນົດໄວ້ ໃຫ້ຊຸມນຸມຊົນອິສຣາເອນນຳມາເພື່ອເຕັນພຣະໂອວາດ”

7 ເພາະບັນດາໂອຣົດຂອງພຣະນາງອາທາລີຢາຍິງຊົ່ວຮ້າຍຄົນນັ້ນໄດ້ປຸ້ນພຣະວິຫານຂອງພຣະຜູ້ເປັນເຈົ້າໄດ້ໃຊ້ສິ່ງຂອງທີ່ມອບຖວາຍທັງສິ້ນຂອງພຣະວິຫານຂອງພຣະຜູ້ເປັນເຈົ້າສຳລັບນະມັສການພຣະບາອານ

8 ພຣະຣາຊາຈຶ່ງຊົງບັນຊາ ແລະເຂົາໄດ້ທຳຫີບຫນ່ວຍນຶ່ງວາງໄວ້ນອກປະຕູພຣະວິຫານຂອງພຣະຜູ້ເປັນເຈົ້າ

9 ແລະມີຄຳປະກາດໄປທົ່ວຢູດາແລະເຢຣູຊາເລັມໃຫ້ນຳສ່ວຍຊຶ່ງໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າກຳນົດແກ່ອິສຣາເອນໃນຖິ່ນກັນດານເຂົ້າມາຖວາຍພຣະຜູ້ເປັນເຈົ້າ

10 ບັນດາເຈົ້ານາຍທັງສິ້ນແລະປະຊາຊົນທັງປວງກໍຊົມຊື່ນຍິນດີ ແລະນຳສ່ວຍຂອງເຂົາທັງຫລາຍມາປ່ອນລົງໃນຫີບຈົນຄົບ

11 ເມື່ອຄົນເລວີນຳຫີບເຂົ້າມາຍັງເຈົ້າພະນັກງານຂອງພຣະຣາຊາເມື່ອໃດ ແລະເມື່ອເຂົາທັງຫລາຍເຫັນວ່າມີເງິນຫລາຍຣາຊເລຂາແລະເຈົ້າໜ້າທີ່ຂອງມະຫາປະໂຣຫິດຈະເຂົ້າມາເທຫີບອອກແລະນຳຫີບກັບໄປຍັງທີ່ເດີມ ເຂົາທັງຫລາຍທຳຢ່າງນີ້ທຸກໆມື້

12 ພຣະຣາຊາແລະເຢຣີວອາດາກໍໃຫ້ແກ່ບັນດາຜູ້ດູແລກິຈການຂອງພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະເຂົາທັງຫລາຍຈ້າງຊ່າງກໍ່ແລະຊ່າງໄມ້ໃຫ້ສ້ອມແຊມພຣະວິຫານຂອງພຣະຜູ້ເປັນເຈົ້າ ທັງຄົນງານຊ່າງເຫລັກແລະຊ່າງທອງສຳຣິດ ໃຫ້ສ້ອມແຊມພຣະວິຫານຂອງພຣະຜູ້ເປັນເຈົ້າ

13 ບັນດາຄົນທີ່ຮັບຈ້າງທຳງານຈຶ່ງໄດ້ທຳງານ ແລະງານສ້ອມແຊມກໍດຳເນີນກ້າວໜ້າໃນມືຂອງເຂົາ ແລະເຂົາໄດ້ສ້ອມແຊມພຣະວິຫານຂອງພຣະຜູ້ເປັນເຈົ້າຕາມຂນາດເດີມ ແລະເສີມໃຫ້ແຂງແຮງຂຶ້ນ

14 ເມື່ອເຂົາໄດ້ກະທຳສຳເຣັດແລ້ວເຂົາກໍນຳເງິນທີ່ເຫລືອຢູ່ມາໜ້າພຣະພັກພຣະຣາຊາແລະເຢຣີວອາດາ ແລະເຂົາເອົາເງິນນັ້ນທຳເຄື່ອງໃຊ້ສຳລັບພຣະວິຫານແຫ່ງພຣະຜູ້ເປັນເຈົ້າ ສຳລັບການບົວລະບັດ ທັງສຳລັບເຄື່ອງເຜົາບູຊາແລະຖ້ວຍ ແລະພາຊນະທອງຄຳແລະເງິນ ແລະເຂົາທັງຫລາຍໄດ້ຖວາຍເຄື່ອງບູຊາໃນພຣະວິຫານຂອງພຣະເຈົ້າສເມີຕລອດຊົ່ວອາຍຸຂອງເຢຣີວອາດາ

Apostasy of joash

15 ແຕ່ເຢຣີວອາດາກໍເຖົ້າຊະຣາລົງທ່ານກໍສິ້ນຊີວິດ ເມື່ອສິ້ນຊີວິດນັ້ນທ່ານມີອາຍຸນຶ່ງຮ້ອຍສາມສິບປີ

16 ເຂົາກໍຝັງສົບທ່ານໄວ້ໃນນະຄອນດາວິດຖ້າມກາງບັນດາພຣະຣາຊາ ເພາະທ່ານໄດ້ກະທຳການດີໃນອິສຣາເອນ ແລະຕໍ່ພຣະເຈົ້າແລະພຣະວິຫານຂອງພຣະອົງ

17 ຫລັງຈາກທີ່ເຢຣີວອາດາສິ້ນຊີວິດແລ້ວ ບັນດາເຈົ້ານາຍແຫ່ງຢູດາໄດ້ເຂົ້າມາຖວາຍບັງຄົມຕໍ່ພຣະຣາຊາ ແລ້ວພຣະຣາຊາຊົງຟັງຄຳທູນຂອງເຂົາ

18 ເຂົາໄດ້ປະຖິ້ມພຣະວິຫານຂອງພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງເຂົາ ແລະບົວລະບັດບັນດາອາເຊຣາແລະຮູບໂຄຣົບ ແລະພຣະພິໂຣດໄດ້ລົງມາເຫນືອຢູດາແລເຢຣູຊາເລັມ ເພາະກັມຊົ່ວຂອງເຂົານີ້

19 ແຕ່ພຣະອົງຍັງຊົງໃຊ້ຜູ້ປະກາດພຣະທັມມາຖ້າມກາງເຂົາ ນຳເຂົາໃຫ້ກັບມາຍັງພຣະຜູ້ເປັນເຈົ້າ ຄົນເຫລົ່ານີ້ເປັນພຍານປັກປຳເຂົາ ແຕ່ເຂົາບໍ່ຍອມຟັງ

20 ແລ້ວພຣະວິນຍານຂອງພຣະເຈົ້າໄດ້ສວມທັບເຊຄາຣີຢາບຸດເຢຣີວອາດາປະໂຣຫິດ ແລະທ່ານໄດ້ຢືນເຫນືອປະຊາຊົນແລະກ່າວແກ່ເຂົາທັງຫລາຍວ່າ, “ພຣະເຈົ້າຊົງກ່າວດັ່ງນີ້ວ່າ “ເປັນຫຍັງທ່ານທັງຫລາຍຈຶ່ງລະເມີດພຣະບັນຍັດຂອງພຣະເຈົ້າ ອັນເປັນເຫດໃຫ້ທ່ານຈະເຣີນຂຶ້ນບໍ່ໄດ້ ເພາະທ່ານທັງຫລາຍໄດ້ປະຖິ້ມພຣະເຈົ້າ ພຣະອົງຈຶ່ງປະຖິ້ມທ່ານ”

21 ແຕ່ເຂົາທັງຫລາຍຄິດຮ້າຍຕໍ່ທ່ານ ແລະໂດຍບັນຊາຂອງພຣະຣາຊາເຂົາທັງຫລາຍຈຶ່ງແກວ່ງກ້ອນຫີນໃສ່ທ່ານໃນເດີ່ນພຣະວິຫານຂອງພຣະຜູ້ເປັນເຈົ້າ

22 ດັ່ງນີ້ແຫລະ ໂຢອັສພຣະຣາຊາຈຶ່ງບໍ່ໄດ້ຊົງຣະລຶກເຖິງຄວາມກະຣຸນາຊຶ່ງເຢໂຮອາດາບິດາຂອງເຊຄາຣີຢາໄດ້ສຳແດງ
ຕໍ່ພຣະອົງ ແຕ່ໄດ້ຊົງປະຫານບຸດຊາຍຂອງທ່ານເສັຽ ແລະເມື່ອເຂົາກຳລັງຈະຕາຍ ເຂົາເວົ້າວ່າ, "ຂໍພຣະຜູ້ເປັນເຈົ້າຊົງ
ທອດພຣະເນດແລະແກ້ແຄ້ນ"

**ມໍຣະນະກັມຂອງໂຢອັສ**

Death of Joash

(2 ກສດ 12:19-21)

23 ພໍປາຍປີກອງທັບຂອງຄົນຊີເຣັຽກໍມາຕໍ່ສູ້ກັບໂຢອັສ ເຂົາມາຍັງຢູດາແລະເຢຣູຊາເລັມ ແລະໄດ້ທຳລາຍບັນດາເຈົ້າ
ນາຍຂອງປະຊາຊົນຈາກຫມູ່ປະຊາຊົນ ແລະສິ່ງຂອງທີ່ຍຶດໄດ້ທັງສິ້ນໄປຍັງພຣະຣາຊາແຫ່ງດາມັສກັສ
24 ແມ່ນວ່າກອງທັບຄົນຊີເຣັຽມາແຕ່ນ້ອຍຄົນ ພຣະຜູ້ເປັນເຈົ້າຊົງມອບກອງທັບໃຫຍ່ໄວ້ໃນມືຂອງເຂົາ ເພາະເຂົາທັງ
ຫລາຍໄດ້ປະຖິ້ມພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງເຂົາ ດັ່ງນີ້ແຫລະຄົນຊີເຣັຽໄດ້ທຳໂທດໂຢອັສ
25 ເມື່ອເຂົາທັງຫລາຍຈາກພຣະອົງໄປ (ເຂົາປະພຣະອົງໄວ້ບາດເຈັບຢ່າງສາຫັດ) ຂ້າຣາຊການຂອງພຣະອົງກໍຄິດຮ້າຍຕໍ່
ພຣະອົງ ເພາະໂລຫິດຂອງບຸດເຢໂຮອາດາປະໂຣຫິດ ແລະໄດ້ປະຫານພຣະອົງເສັຽທີ່ເທິງແທ່ນບັນທົມ ພຣະອົງກໍສິ້ນ
ພຣະຊົນ ແລະເຂົາທັງຫລາຍຝັງພຣະສົບໄວ້ໃນນະຄອນດາວິດ ແຕ່ເຂົາທັງຫລາຍບໍ່ໄດ້ຝັງພຣະສົບໄວ້ໃນອຸບໂມງ
ຂອງບັນດາພຣະຣາຊາ
26 ຄົນເຫລົ່ານັ້ນທີ່ຄິດຮ້າຍຕໍ່ພຣະອົງ ຄືຊາບັດ ບຸດນາງຊີເມອາດ ຄົນອັມໂມນ ແລະເຢໂຮຊາບັດບຸດນາງຊິມຣີດ ຄົນໂມ
ອາບ
27 ເຣື່ອງຣາວແຫ່ງໂອຣົດຂອງພຣະອົງແລະຄຳທຳນວາຍຕ່າງໆທີ່ໄດ້ກ່າວປັບໂທດພຣະອົງ ແລະການສ້ອມແຊມພຣະວິ
ຫານຂອງ ພຣະເຈົ້າມີບັນທຶກໄວ້ໃນຫນັງສືທັມບັນຍາຍພົງກະສັດ ແລະອາມາຊີຢາໂອຣົດຂອງພຣະອົງປົກ
ຄອງແທນພຣະອົງ

## 25 ຣັຊການອາມາຊີຢາ

Reign of Amaziah

(2 ກສດ 14:1-6)

1 ເມື່ອອາມາຊີຢາເລີ້ມປົກຄອງນັ້ນມີອາຍຸຊາວຫ້າປີ ແລະພຣະອົງຊົງປົກຄອງໃນເຢຣູຊາເລັມຊາວເກົ້າປີ ພຣະມານ
ດາຂອງພຣະອົງຊົງພຣະນາມວ່າ ເຢໂຮອັດດານ ຊາວເຢຣູຊາເລັມ
2 ພຣະອົງຊົງກະທຳສິ່ງທີ່ຊອບໃນສາຍພຣະເນດພຣະຜູ້ເປັນເຈົ້າ ແຕ່ບໍ່ແມ່ນດ້ວຍພຣະທັຍທີ່ແທ້ຈິງ
3 ຢູ່ຕໍ່ມາພໍຣາຊອານາຈັກຢູ່ໃນມືຂອງພຣະອົງຢ່າງຫມັ້ນຄົງແລ້ວ ພຣະອົງຊົງປະຫານຊີວິດຂ້າຣາຊການຂອງພຣະອົງ ຜູ້
ທີ່ຂ້າພຣະຣາຊບິດາຂອງພຣະອົງ
4 ແຕ່ພຣະອົງບໍ່ໄດ້ຊົງປະຫານຊີວິດບຸດຫລານຂອງເຂົາ ແຕ່ໄດ້ຊົງກະທຳຕາມທີ່ມີບັນທຶກໄວ້ໃນຫນັງສືທັມບັນຍັດຂອງ
ໂມເຊທີ່ພຣະຜູ້ເປັນເຈົ້າຊົງບັນຊາໄວ້ນັ້ນວ່າ, "ຢ່າທຳໃຫ້ບິດາເຖິງຕາຍເພາະການກະທຳຂອງລູກຫລານ ຫລືຢ່າທຳ
ໃຫ້ລູກຫລານເຖິງຕາຍເພາະການກະທຳຂອງບິດາ ແຕ່ທຸກຄົນຈະຕ້ອງຕາຍເພາະບາບຂອງຕົນເອງ"

Slaughter of the Edomites

(2 ກສດ 14:7)

5 ແລ້ວອາມາຊີຢາໄດ້ປະຊຸມພວກຢູດາແລະໃຫ້ເຂົາຢູ່ພາຍໃຕ້ຜູ້ບັງຄັບກອງພັນແລະກອງຮ້ອຍ ຕາມຕະກູນຂອງເຂົາ ຄື
ຢູດາແລະເບັນຢາມິນທັງສິ້ນ ພຣະອົງໄດ້ຊົງນັບຄົນທີ່ມີອາຍຸຊາວປີຂຶ້ນໄປ ແລະຊົງເຫັນວ່າມີຊາຍສະກັນສາມແສນ
ຄົນ ສາມາດເຂົ້າທຳສົງຄາມສາມາດຖືຫອກແລະໂລ່
6 ນອກຈາກນັ້ນພຣະອົງຊົງຈ້າງທະຫານເອກຈາກອິສຣາເອນນຶ່ງແສນຄົນເປັນເງິນນຶ່ງແສນຕະລັນ

7 ແຕ່ຄົນຂອງພຣະເຈົ້າຄົນນຶ່ງມາເຝົ້າພຣະອົງທູນວ່າ, “ຂ້າແດ່ພຣະຣາຊາ ຂໍຢ່າໃຫ້ກອງທັບອິສຣາເອນໄປກັບພຣະອົງ
ເພາະພຣະຜູ້ເປັນເຈົ້າບໍ່ໄດ້ຊົງສະຖິດຢູ່ກັບອິສຣາເອນ ຄືກັບຄົນເອຟຣາອິມເຫລົ່ານີ້ທັງສິ້ນ
8 ແຕ່ຖ້າພຣະອົງຄາດຫມາຍວ່າໂດຍວິທີນີ້ ພຣະອົງຈະເຂັ້ມແຂງພໍທີ່ຈະເຂົ້າສົງຄາມ ພຣະຜູ້ເປັນເຈົ້າຈະຊົງແກວ່ງພຣະ
ອົງລົງຕໍ່ຫນ້າສັດຕຣູ ເພາະວ່າພຣະຜູ້ເປັນເຈົ້າຊົງຣິດທີ່ຈະຊ່ອຍໄວ້ຫລືຖິ້ມໄປໄດ້”
9 ແລະອາມາຊີຢາກ່າວກັບຄົນຂອງພຣະເຈົ້າວ່າ, “ແຕ່ເຮົາຈະກະທຳປະການໃດເຣື່ອງເງິນນຶ່ງຮ້ອຍຕະລັນຊຶ່ງເຮົາໄດ້ໃຫ້
ແກ່ກອງທັບອິສຣາເອນໄປແລ້ວນັ້ນ” ແລ້ວຄົນຂອງພຣະຜູ້ເປັນເຈົ້າທູນຕອບວ່າ, “ພຣະຜູ້ເປັນເຈົ້າຊົງສາມາດທີ່ຈະປະ
ທານແກ່ພຣະອົງຍິ່ງກວ່ານີ້ອີກຫລາຍ”
10 ແລະອາມາຊີຢາກໍຊົງປົດປ່ອຍກອງທັບຊຶ່ງມາຍັງພຣະອົງຈາກເອຟຣາອິມໃຫ້ກັບໄປບ້ານອີກ ເຂົາທັງຫລາຍຈຶ່ງຄຽດ
ໃຫ້ຢູດາຍິ່ງນັກ ແລະໄດ້ກັບບ້ານດ້ວຍຄວາມຄຽດຢ່າງຮຸນແຮງ
11 ແຕ່ອາມາຊີຢາຊົງກ້າແຂງຂຶ້ນ ແລະຊົງນຳພົນຂອງພຣະອົງອອກໄປຍັງຮ່ອມພູເກືອແລະໂຈມຕີຄົນເຊອີຣ໌ນຶ່ງຫມື່ນຄົນ
12 ຄົນຢູດາຈັບເປັນໄດ້ນຶ່ງຫມື່ນຄົນ ແລະພາກເຂົາໄປທີ່ຍອດຫີນ ແລະຖິ້ມເຂົາທັງຫລາຍລົງມາຈາກຍອດຫີນນັ້ນ ເຂົາກໍ
ຕົກມາແຫລກເປັນຕ່ອນໆ
13 ແຕ່ຄົນຂອງກອງທັບຊຶ່ງອາມາຊີຢາຊົງປົດໃຫ້ກັບໄປ ແລະບໍ່ໃຫ້ເຂົາໄປຮົບດ້ວຍນັ້ນ ເຂົາກັບເຂົ້າໂຈມຕີຫົວເມືອງຂອງ
ຢູດາ ຕັ້ງແຕ່ຊາມາເຣັຽເຖິງເບັດໂຮໂຣນ ແລະຂ້າປະຊາຊົນເສັຽສາມພັນຄົນ ແລະຍຶດເຂົ້າຂອງໄປເປັນຈຳນວນຫລວງ
ຫລາຍ
14 ແລະຢູ່ມາເມື່ອອາມາຊີຢາສະເດັດກັບຈາກການຂ້າຟັນຄົນເອໂດມ ພຣະອົງຊົງນຳຮູບໂຄຣົບຂອງຄົນຊາວເຊອີຣ໌ມາ
ຕັ້ງໄວ້ເປັນພຣະຂອງພຣະອົງ ແລະກາບນະມັສການພຣະເຫລົ່ານັ້ນ ຊົງເຜົາເຄື່ອງຫອມຖວາຍ
15 ເຫດສັນນັ້ນພຣະຜູ້ເປັນເຈົ້າຊົງພິໂຣດຕໍ່ອາມາຊີຢາ ແລະຊົງໃຊ້ຜູ້ປະກາດພຣະທັມຄົນນຶ່ງໄປຫາ ທູນພຣະອົງວ່າ,
“ເປັນຫຍັງເຈົ້າຈຶ່ງສແວງຫາພຣະຂອງຊົນຊາດນຶ່ງ ຊຶ່ງບໍ່ສາມາດຊ່ອຍກູ້ຊົນຊາດຂອງຕົນເອງຈາກມືຂອງເຈົ້າໄດ້”
16 ຂນະທີ່ເຂົາກຳລັງທູນຢູ່ ພຣະຣາຊາກ່າວກັບເຂົາວ່າ, “ເຮົາໄດ້ແຕ່ງຕັ້ງເຈົ້າໃຫ້ເປັນທີ່ປຶກສາຫລື ຢຸດ ເປັນຫຍັງເຈົ້າຈະ
ຕ້ອງຕາຍ“ ຜູ້ປະກາດພຣະທັມນັ້ນຈຶ່ງຢຸດ ແຕ່ທູນວ່າ, “ຂ້ານ້ອຍຊາບວ່າພຣະຜູ້ເປັນເຈົ້າຊົງຕັ້ງພຣະທັຍຈະທຳລາຍພ
ຣະອົງ ເພາະພຣະອົງຊົງກະທຳເຊັ່ນນີ້ແລະບໍ່ໄດ້ຊົງຟັງຄຳປຶກສາຂອງຂ້ານ້ອຍ”

**Israel Defeat Judah**

**(2 ກສດ 14:8-14)**

17 ແລ້ວອາມາຊີຢາພຣະຣາຊາແຫ່ງຢູດາໄດ້ຕົກລົງພຣະທັຍ ແລະຊົງໃຊ້ໃຫ້ໄປເຝົ້າໂຢອັສ ໂອຣົດຂອງເຢໂຮອາຮັສ ໂອ
ຣົດຂອງເຢຮູ ພຣະຣາຊາຂອງອິສຣາເອນທູນວ່າ, “ມາເຖີດ ໃຫ້ເຮົາທັງສອງມາປະເຊີນຫນ້າກັນ”
18 ແລະໂຢອັສພຣະຣາຊາແຫ່ງອິສຣາເອນຊົງໃຊ້ໄປຍັງອາມາຊີຢາພຣະຣາຊາແຫ່ງຢູດາວ່າ, “ຕົ້ນຫນາມທີ່ເທິງເລບາ
ນອນສົ່ງຂ່າວໃຫ້ຫາຕົ້ນສົນເທິງເລບານອນວ່າ “ຈົ່ງຍົກບຸດຍິງຂອງເຈົ້າໃຫ້ເປັນພັຣຍາບຸດຊາຍຂອງເຮົາ” ແລະສັດປ່າ
ໂຕນຶ່ງແຫ່ງເລບານອນຜ່ານມາແລະຢຽບຕົ້ນຫນາມລົງເສັຽ
19 ທ່ານວ່າ, “ເບິ່ງແມ, ຂ້າພະເຈົ້າໄດ້ໂຈມຕີເອໂດມ” ແລະຈິດໃຈຂອງທ່ານກໍຜຍອງຂຶ້ນໃນຄວາມໂອ້ອວດ ແຕ່ຈົ່ງຢູ່ກັບ
ບ້ານເຖີດ ເພາະເປັນຫຍັງທ່ານຈຶ່ງເຮົ້າໃຈຕົນເອງໃຫ້ຕໍ່ສູ້ແລະຮັບອັນຕະຣາຍ ອັນຈະໃຫ້ທ່ານລົ້ມລົງ ທັງທ່ານແລະຢູ
ດາກັບທ່ານ”
20 ແຕ່ອາມາຊີຢາບໍ່ຊົງຟັງ ເພາະເປັນມາຈາກພຣະເຈົ້າ ເພື່ອວ່າພຣະອົງຈະຊົງມອບເຂົາທັງຫລາຍໄວ້ໃນມືຂອງສັດຕຣູ
ຂອງເຂົາ ເພາະເຂົາທັງຫລາຍໄດ້ຊອກຫາພຣະແຫ່ງເອໂດມ
21 ໂຢອັສພຣະຣາຊາແຫ່ງອິສຣາເອນຈຶ່ງສະເດັດຂຶ້ນໄປ ພຣະອົງແລະອາມາຊີຢາພຣະຣາຊາແຫ່ງຢູດາໄດ້ປະເຊີນຫນ້າ
ກັນທີ່ເບັດເຊເມສ ຊຶ່ງເປັນຂອງຢູດາ
22 ຢູດາກໍຜ່າຍແພ້ອິສຣາເອນ ແລະທຸກຄົນກໍຫນີກັບໄປບ້ານຂອງຕົນ

23 ໂຢອັສພຣະຣາຊາແຫ່ງອິສຣາເອນຊົງຈັບອາມາຊີຢາພຣະຣາຊາແຫ່ງຢູດາ ໂອຣົດຂອງໂຢອັສ ໂອຣົດຂອງອາຮາຊີຢາ
ທີ່ເບັດເຊ  ເມສ ແລະນຳພຣະອົງມາຍັງເຢຣູຊາເລັມ ແລະຊົງພັງກຳແພງເຢຣູຊາເລັມລົງສີ່ຮ້ອຍສອກ ຕັ້ງແຕ່ປະຕູເອ
ຟຣາອິມເຖິງປະຕູມຸກ
24 ພຣະອົງຊົງຍຶດທອງຄຳ ແລະເງິນທັງຫມົດແລະເຄື່ອງໃຊ້ທັງສິ້ນຊຶ່ງພົບໃນພຣະວິຫານຂອງພຣະເຈົ້າ ໃນຄວາມອາຮັກ
ຂາຂອງໂອເບດເອໂດມ ທັງຄັງຊັບຂອງສຳນັກພຣະຣາຊວັງ ພ້ອມກັບຄົນປະກັນດ້ວຍ ແລະພຣະອົງສະເດັດກັບໄປ
ຍັງຊາມາເຣັຽ

**ມໍຣະນະກັມຂອງອາມາຊີຢາ**

Death of Amaziah

(2 ກສດ 14:17-20)

25 ອາມາຊີຢາໂອຣົດຂອງໂຢອັສພຣະຣາຊາແຫ່ງຢູດາຊົງພຣະຊົນຢູ່ສິບຫ້າປີ ຫລັງຈາກມໍຣະນະກັມຂອງໂຢອັສ ໂອຣົດ
ຂອງເຢໂຮອາຮັສ ພຣະຣາຊາແຫ່ງອິສຣາເອນ
26 ສ່ວນພຣະຣາຊກິດນອກນັ້ນຂອງອາມາຊີຢາ ຕັ້ງແຕ່ຕົ້ນຈົນສຸດປາຍບໍ່ໄດ້ບັນທຶກໄວ້ໃນຫນັງສືພົງກະສັດແຫ່ງຢູດາຫລື
ອິສຣາເອນຫລື
27 ນັບແຕ່ເວລາເມື່ອອາມາຊີຢາຊົງຫັນໄປຈາກພຣະຜູ້ເປັນເຈົ້າ ເຂົາທັງຫລາຍກໍຄິດກະບົດຕໍ່ພຣະອົງໃນເຢຣູຊາເລັມ
ແລະພຣະອົງຊົງຫນີໄປທີ່ລາຄິສ ແຕ່ເຂົາໃຊ້ໄປຕາມພຣະອົງທີ່ລາຄິສ ແລະປະຫານພຣະອົງເສັຽທີ່ນັ້ນ
28 ເຂົາທັງຫລາຍນຳພຣະສົບໃສ່ຫລັງມ້າກັບມາ ແລະຝັງໄວ້ກັບບັນພະບຸຣຸດຂອງພຣະອົງໃນນະຄອນດາວິດ

## 26 ຣັຊການອຸສຊີຢາ

Reign of Uzziah

(2 ກສດ 14:21-22; 15:1-3)

1 ປະຊາຊົນທັງສິ້ນແຫ່ງຢູດາຈຶ່ງຕັ້ງອຸສຊີຢາ ຜູ້ຊຶ່ງມີອາຍຸສິບຫົກປີ ໃຫ້ເປັນກະສັດແທນອາມາຊີຢາຣາຊບິດາຂອງພຣະ
ອົງ
2 ພຣະອົງຊົງສ້າງເມືອງເອໂລດແລະໃຫ້ຂຶ້ນກັບຢູດາ ຫລັງຈາກທີ່ພຣະຣາຊາຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພ
ຣະອົງ
3 ເມື່ອອຸສຊີຢາຊົງເລີ້ມປົກຄອງນັ້ນ ມີອາຍຸສິບຫົກປີ ແລະພຣະອົງຊົງປົກຄອງໃນກຸງເຢຣູຊາເລັມຫ້າສິບສອງປີ ພຣະ
ມານດາຂອງພຣະອົງຊົງພຣະນາມວ່າເຢໂກລີຢາຊາວເຢຣູຊາເລັມພຣະອົງຊົງກະທຳສິ່ງທີ່ຊອບໃນສາຍພຣະເນດ
ພຣະຜູ້ເປັນເຈົ້າ ຕາມທີ່ອາມາຊີຢາຣາຊບິດາຂອງພຣະອົງໄດ້ຊົງກະທຳທຸກປະການ
4 ພຣະອົງຊົງຕັ້ງພຣະອົງທີ່ຈະສແວງຫາພຣະເຈົ້າ ໃນສມັຍຂອງເຊຄາຣີຢາຜູ້ແນະນຳພຣະອົງໃນຄວາມຢຳເກງພຣະ
ເຈົ້າ ແລະຕາບໃດທີ່ພຣະອົງສແວງຫາພຣະເຈົ້າ ພຣະເຈົ້າຊົງກະທຳໃຫ້ພຣະອົງຈະເຣີນ
5 ພຣະອົງສະເດັດອອກໄປທຳສົງຄາມຕໍ່ສູ້ກັບຄົນຟີລິສຕິນ ແລະພັງກຳແພງເມືອງກາດ ແລະກຳແພງເມືອງຢັບເນ ແລະ
ກຳແພງເມືອງອັສໂດດ ແລະພຣະອົງຊົງສ້າງຫົວເມືອງໃນເຂດແດນອັສໂດດ ແລະທີ່ອື່ນໆອີກຖ້າມກາງຄົນຟີລິສຕິນ
6 ພຣະເຈົ້າຊົງຊ່ອຍພຣະອົງໃນການຕໍ່ສູ້ຄົນຟີລິສຕິນ ແລະຕໍ່ສູ້ຄົນອາຣັບ ຊຶ່ງອາສັຍຢູ່ໃນກູຣບາອານ ແລະຕໍ່ສູ້ກັບຄົນ
ເມອູນີ
7 ຄົນອັມໂມນໄດ້ຖວາຍບັນນາການແກ່ອຸສຊີຢາ ແລະພຣະນາມຂອງພຣະອົງກໍແຜ່ຜາຍອອກໄປເຖິງເຂດແດນເອຢິບ
ເພາະພຣະອົງຊົງເຂັ້ມແຂງຍິ່ງນັກ
8 ນອກຈາກນີ້ ອຸສຊີຢາຊົງສ້າງປ້ອມໃນເຢຣູຊາເລັມ ທີ່ປະຕູມຸກ ທີ່ປະຕູຮ່ອມພູແລະທີ່ຫົວລ້ຽວ ແລະປ້ອງກັນໄວ້ແຂງ
ແຮງ

9 ພຣະອົງຊົງສ້າງປ້ອມໃນຖິ່ນກັນດານ ຊົງສະກັດຫີນທຳທີ່ຂັງນ້ຳຫລາຍແຫ່ງ ເພາະພຣະອົງຊົງມີຝູງສັດໃຫຍ່ໂຕ ທັງໃນ
ຖິ່ນເນີນເຊເຟລາແລະໃນທີ່ຮາບພຽງ ແລະຊົງມີຊາວນາແລະຄົນແຕ່ງຕົ້ນອະງຸ່ນໃນເນີນພູ ແລະໃນໄຮ່ນາອຸດົມ ເພາະ
ພຣະອົງຊົງຮັກເສດຖະກັມ
10 ນອກຈາກນີ້ ອຸສຊີຢາຊົງມີກອງທະຫານ ຊຶ່ງອອກໄປທຳເສິກເປັນກອງໆ ຕາມຈຳນວນທີ່ເຢອີເອນຣາຊເລຂາໄດ້ຮວບ
ຮວມໄວ້ດ້ວຍກັນກັບມາອາຊັຍຢາເຈົ້າຫນ້າທີ່ພາຍໃຕ້ການຄວບຄຸມຂອງຮານານີຢາ ຜູ້ບັງຄັບກອງພົນຄົນນຶ່ງຂອງ
ພຣະຣາຊາ
11 ຈຳນວນຫົວຫນ້າຕະກູນທັງຫມົດຄື ພວກທະຫານເອກ ມີສອງພັນຫົກຮ້ອຍຄົນ
12 ໃຕ້ບັງຄັບບັນຊາຂອງຄົນເຫລົ່ານີ້ ມີກອງທັບພົນສາມແສນເຈັດພັນຫ້າຮ້ອຍຄົນ ຜູ້ທຳສົງຄາມໄດ້ດ້ວຍກຳລັງ ເພື່ອ
ຊ່ອຍພຣະຣາຊາໃຫ້ຕໍ່ສູ້ກັບສັດຕຣູ
13 ອຸສຊີຢາຊົງຕຽມໂລ່ ຫອກ ຫມວກ ເສື້ອ ເກາະ ທະນູ ແລະກ້ອນຫີນ ສຳລັບສະລິງໄວ້ສຳລັບກອງທັບ
14 ໃນເຢຣູຊາເລັມພຣະອົງຊົງກະທຳເຄື່ອງກົນໄກໂດຍຄົນຊ່າງປະດິດທຳຂຶ້ນ ໄວ້ເທິງປ້ອມແລະຕາມມຸມ ເພື່ອຍິງລູກທະ
ນູແລະໂຍນກ້ອນຫີນໃຫຍ່ໆ ແລະພຣະນາມຂອງພຣະອົງກໍລືໄປໄກ ເພາະພຣະອົງຊົງຮັບຄວາມຊ່ອຍເຫລືອຢ່າງອັສ
ຈັນຈົນພຣະອົງເຂັ້ມແຂງ
15 ແຕ່ເມື່ອພຣະອົງຊົງແຂງແຮງແລ້ວພຣະອົງກໍມີພຣະທັຍຜຍອງຂຶ້ນ ຈຶ່ງຊົງກະທຳຄວາມເສັຽຫາຍ ເພາະພຣະອົງບໍ່ຊື່ສັດ
ຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງພຣະອົງ ແລະເຂົ້າໄປໃນພຣະວິຫານຂອງພຣະເຈົ້າ ເພື່ອເຜົາເຄື່ອງຫອມເທິງແທ່ນ
ເຄື່ອງຫອມ

Pride and Apostasy

(2 ກສດ 15:4-7)

16 ແຕ່ອາຊາຣີຢາປະໂຣຫິດໄດ້ເຂົ້າໄປຕິດຕາມພຣະອົງພ້ອມກັບປະໂຣຫິດຂອງພຣະເຈົ້າແປດສິບຄົນຜູ້ຊຶ່ງເກັ່ງກ້າ
17 ເຂົາທັງຫລາຍໄດ້ຂັດຂວາງກະສັດອຸສຊີຢາແລະທູນພຣະອົງວ່າ, "ຂ້າແຕ່ອຸສຊີຢາ ບໍ່ແມ່ນຫນ້າທີ່ຂອງພຣະອົງທີ່ຈະ
ເຜົາເຄື່ອງຫອມຖວາຍແດ່ພຣະຜູ້ເປັນເຈົ້າ ແຕ່ເປັນຫນ້າທີ່ຂອງປະໂຣຫິດບຸດຫລານຂອງອາໂຣນ ຜູ້ຊຶ່ງຊຳຣະໄວ້ໃຫ້ບໍ
ຣິສຸດເພື່ອເຜົາເຄື່ອງຫອມ ຂໍເຊີນພຣະອົງສະເດັດອອກໄປຈາກສະຖານນະມັສການນີ້ ເພາະພຣະອົງໄດ້ຊົງລ່ວງເກີນ
ແລະພຣະອົງຈະບໍ່ໄດ້ຮັບກຽດອັນໃດຈາກພຣະຜູ້ເປັນເຈົ້າເລີຍ"
18 ແລ້ວອຸສຊີຢາຊົງກິ້ວ ພຣະອົງມີຫມໍ້ຂາງໄຟຢູ່ໃນມືຈະຊົງເຜົາເຄື່ອງຫອມ ແລະເມື່ອພຣະອົງຊົງກິ້ວຕໍ່ປະໂຣຫິດ
ພະຍາດຂີ້ທູດກໍເກີດຂຶ້ນມາທີ່ຫນ້າຜາກຕໍ່ຫນ້າປະໂຣຫິດໃນພຣະວິຫານຂອງພຣະຜູ້ເປັນເຈົ້າຂ້າງແທ່ນເຜົາເຄື່ອງ
ຫອມ
19 ແລະອາຊາຣີຢາມະຫາປະໂຣຫິດ ແລະບັນດາປະໂຣຫິດທັງປວງຫລຽວເບິ່ງພຣະອົງ ແລະເບິ່ງແມ, ພຣະອົງຊົງເປັນ
ຂີ້ທູດທີ່ຫນ້າຜາກ ແລະເຂົາທັງຫລາຍກໍຊຸກພຣະອົງອອກໄປໂດຍໄວ ແລະພຣະອົງເອງກໍຊົງຟ້າວສະເດັດອອກໄປ
ເພາະວ່າພຣະຜູ້ເປັນເຈົ້າຊົງລົງໂທດພຣະອົງແລ້ວ
20 ອຸສຊີຢາກໍຊົງເປັນຂີ້ທູດຈົນວັນສິ້ນພຣະຊົນ ແລະເພາະເປັນຂີ້ທູດກໍຊົງຖືກຕັດເສັຽອອກຈາກພຣະວິຫານຂອງພຣະຜູ້
ເປັນເຈົ້າ ແລະໂຢທາມໂອຣົດຂອງພຣະອົງເປັນຜູ້ດູແລຣາຊສຳນັກປົກຄອງຣາສດອນ
21 ສ່ວນພຣະຣາຊກິດນອກນັ້ນຂອງອຸສຊີຢາ ຕັ້ງແຕ່ຕົ້ນຈົນສຸດປາຍ ອິຊັຍຢາ ບຸດອາໂມດໄດ້ບັນທຶກໄວ້
22 ອຸສຊີຢາກໍຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຂົາຝັງພຣະສົບໄວ້ກັບບັນພະບຸຣຸດຂອງພຣະອົງໃນ
ນາທີ່ຝັງສົບອັນເປັນຂອງພຣະຣາຊາ ເພາະເຂົາທັງຫລາຍວ່າ "ພຣະອົງຊົງເປັນຂີ້ທູດ" ແລະໂຢທາມໂອຣົດຂອງພຣະ
ອົງກໍປົກຄອງແທນພຣະອົງ

## 27 ຣັຊການໂຢທາມ

Reign of Jotham

(2 ກສດ 15:32-38)

1 ເມື່ອໂຢທາມຊົງເລີ່ມປົກຄອງນັ້ນມີອາຍຸຊາວຫ້າປີ ແລະພຣະອົງຊົງປົກຄອງໃນເຢຣູຊາເລັມສິບຫົກປີ ພຣະມານດາ
ຂອງພຣະອົງມີພຣະນາມວ່າເຢຣູຊາ ບຸດຍິງຂອງຊາໂດກ

2 ພຣະອົງຊົງກະທຳສິ່ງທີ່ຊອບໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ ຕາມຊຶ່ງອຸສຊີຢາຣາຊບິດາຂອງພຣະອົງໄດ້ຊົງກະ
ທຳທຸກປະການ ເວັ້ນແຕ່ພຣະອົງບໍ່ໄດ້ເຂົ້າໄປໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ແຕ່ປະຊາຊົນຍັງປະຕິບັດໃນທາງ
ເສັຽຫາຍ

3 ພຣະອົງຊົງສ້າງປະຕູເທິງຂອງພຣະວິຫານແຫ່ງພຣະຜູ້ເປັນເຈົ້າ ແລະຊົງກະທຳການກໍ່ສ້າງຫລາຍທີ່ກຳແພງເມືອງໂອ
ເຟນ

4 ນອກຈາກນີ້ ພຣະອົງຊົງສ້າງຫົວເມືອງໃນຖິ່ນພູດອຍແຫ່ງຢູດາ ແລະສ້າງປ້ອມກັບຫໍຄອຍຕາມປ່າໄມ້

5 ພຣະອົງຊົງສູ້ຮົບກັບພຣະຣາຊາຄົນອັມໂມນແລະຊົງຊະນະ ແລະໃນປີນັ້ນຄົນອັມໂມນໄດ້ຖວາຍເງິນແກ່ພຣະອົງນຶ່ງ
ຮ້ອຍຕະລັນ ແລະເຂົ້າສາລີນຶ່ງໝື່ນ ຄົນອັມໂມນໄດ້ຖວາຍເທົ່າກັນໃນປີທີສອງແລະໃນປີທີສາມ

6 ໂຢທາມຈຶ່ງຊົງມີກຳລັງຫລາຍຂຶ້ນ ເພາະພຣະອົງຊົງຫັນໄປດຳເນີນຕາມນໍ້າພຣະທັຍຂອງພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງພຣະອົງ

7 ສ່ວນພຣະຣາຊກິດນອກນັ້ນຂອງໂຢທາມແລະການສົງຄາມທັງສິ້ນຂອງພຣະອົງ ແລະທຳນຽມຂອງພຣະອົງ ເບິ່ງແມ,
ມີບັນທຶກໄວ້ໃນໜັງສືພົງສາວະດານ ... 

8 ເມື່ອພຣະອົງຊົງເລີ່ມປົກຄອງມີອາຍຸຊາວຫ້າປີ ແລະພຣະອົງຊົງປົກຄອງໃນເຢຣູຊາເລັມສິບຫົກປີ

9 ແລະໂຢທາມກໍລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຂົາຝັງສົບໄວ້ໃນນະຄອນດາວິດ ແລະອາຮັສໂອ
ຣົດຂອງພຣະອົງປົກຄອງແທນພຣະອົງ

## 28 ຣັຊການອາຮັສ

Reign of Ahaz

(2 ກສດ 16:1-4)

1 ເມື່ອອາຮັສຊົງເລີ່ມປົກຄອງມີອາຍຸດຊາວຫ້າປີ ແລະພຣະອົງຊົງປົກຄອງໃນເຢຣູຊາເລັມສິບຫົກປີ ແລະພຣະອົງບໍ່ໄດ້
ຊົງກະທຳສິ່ງທີ່ຊອບໃນສາຍພຣະເນດພຣະຜູ້ເປັນເຈົ້າຢ່າງກັບດາວິດບັນພະບຸຣຸດຂອງພຣະອົງ

2 ແຕ່ຊົງດຳເນີນຕາມທາງຂອງເຈົ້າຊີວິດແຫ່ງອິສຣາເອນ ພຣະອົງເຖິງກັບຊົງສ້າງຮູບໂຄຣົບຫລໍ່ສຳລັບບັນດາພຣະບາ
ອານ

3 ພຣະອົງຊົງເຜົາເຄື່ອງຫອມທີ່ຮ່ອມພູບຸດຮິນໂນມ ແລະຊົງເຜົາບັນດາໂອຣົດຂອງພຣະອົງເປັນເຄື່ອງບູຊາ ຕາມການ
ກະທຳອັນໜ້າກຽດຊັງຂອງບັນດາປະຊາຊາດຊຶ່ງພຣະຜູ້ເປັນເຈົ້າຊົງຂັບໄລ່ອອກເສັຽໃຫ້ພົ້ນໜ້າປະຊາຊົນອິສຣາ
ເອນ

4 ພຣະອົງຊົງຖວາຍສັຕບູຊາແລະຊົງເຜົາເຄື່ອງຫອມທີ່ສະຖານນະມັສການທີ່ສູງ ແລະເທິງເນີນພູ ແລະໃຕ້ຕົ້ນໄມ້ງາມ
ທຸກຕົ້ນ

Aram and Israel Defeat Judah

(2 ກສດ 16:5-6; ອຊຢ 7:1)

5 ເຫດສັນນັ້ນ ພຣະຜູ້ເປັນເຈົ້າພຣະເຈົ້າຂອງພຣະອົງຊຶ່ງຊົງມອບພຣະອົງໄວ້ໃນພຣະຫັດຂອງພຣະຣາຊາແຫ່ງຊີເຣັຽຜູ້
ຊົງຊະນະພຣະອົງ ແລະຈັບປະຊາຊົນຂອງພຣະອົງເປັນຈຳນວນຫລວງຫລາຍນຳມາຍັງດາມັສກັສ ແລະພຣະອົງຊົງ
ຖືກມອບໄວ້ໃນມືຂອງພຣະຣາຊາແຫ່ງອິສຣາເອນ ຜູ້ຊະນະພຣະອົງດ້ວຍການຂ້າຟັນຢ່າງໃຫຍ່ຫລວງ
6 ເພາະວ່າເປກາ ບຸດເຣມາລີຢາໄດ້ຂ້າເສັຽນຶ່ງແສນສອງຫມື່ນຄົນໃນຢູດາໃນວັນດຽວ ທັງສິ້ນເປັນທະຫານກ້າແຂງ
ເພາະເຂົາທັງຫລາຍໄດ້ປະຖິ້ມພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງບັນພະບຸຣຸດຂອງເຂົາທັງຫລາຍ
7 ແລະຊິກຣີທະຫານເອກຂອງເອຟຣາອິມໄດ້ສັງຫານມາອາເຊອາໂອຣົດຂອງພຣະຣາຊາ ແລະອັສຣີການອະທິບໍດີກົມ
ວັງແລະເອນການາອຸປຣາດ

Intervention of Oded

8 ຄົນອິສຣາເອນໄດ້ຈັບຍາດພີ່ນ້ອງຂອງຕົນເປັນຊະເລີຍສອງແສນຄົນ ມີຜູ້ຍິງ ບຸດຊາຍ ແລະບຸດຍິງ ແລະໄດ້ຍຶດຂອງ
ເປັນອັນມາກມາຈາກເຂົານຳມາຍັງຊາມາເຣັຽ
9 ແຕ່ຜູ້ປະກາດພຣະທັມຄົນນຶ່ງຂອງພຣະຜູ້ເປັນເຈົ້າຢູ່ທີ່ນັ້ນຊື່ວ່າ ໂອເດດ ທ່ານອອກໄປພົບກອງທັບຊຶ່ງມາຍັງຊາມາ
ເຣັຽ ແລະເວົ້າກັບເຂົາທັງຫລາຍວ່າ, “ເບິ່ງແມ, ເພາະພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງບັນພະບຸຣຸດຂອງທ່ານທັງຫລາ
ຍຊົງກິ້ວຕໍ່ຢູດາ ພຣະອົງຊົງມອບເຂົາທັງຫລາຍໄວ້ໃນມືຂອງທ່ານ ແຕ່ທ່ານທັງຫລາຍໄດ້ສັງຫານເຂົາເສັຽດ້ວຍຄວາມ
ກ້ຽວກາດຊຶ່ງຂຶ້ນໄປເຖິງຟ້າສວັນ
10 ແລະບັດນີ້ທ່ານທັງຫລາຍເຈຕນາຈະຂົ່ມເຫັງປະຊາຊົນແຫ່ງຢູດາ ແລະເຢຣູຊາເລັມທັງຊາຍແລະຍິງໃຫ້ເປັນທາດ
ຂອງທ່ານ ຕົວທ່ານເອງບໍ່ມີບາບຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຫລື
11 ບັດນີ້ ຂໍຟັງຂ້າພະເຈົ້າ ແລະຂໍສົ່ງຊະເລີຍຊຶ່ງທ່ານໄດ້ນຳມາຈາກຍາດພີ່ນ້ອງຂອງທ່ານກັບໄປ ເພາະວ່າພຣະພິໂຣດ
ອັນແຮງກ້າຂອງພຣະຜູ້ເປັນເຈົ້າຢູ່ເຫນືອທ່ານທັງຫລາຍ
12 ບາງຄົນໃນຫົວຫນ້າຄົນເອຟຣາອິມ ຄືອາຊາຣີຢາ ບຸດໂຢຮານານ ເບເຣກີຢາ ບຸດເມຊິນເລໂມດ ເຢຮີສກີຢາ ບຸດຊັນ
ລູມ ແລະອາມາຊາ ບຸດຮັດລັຍ ໄດ້ຢືນຂຶ້ນຂັດຂວາງບັນດາຜູ້ທີ່ກັບມາຈາກສົງຄາມ
13 ເວົ້າກັບເຂົາທັງຫລາຍວ່າ, “ເຈົ້າຢ່ານຳຊະເລີຍເຂົ້າມາທີ່ນີ້ ເພາະເຈົ້າມຸ່ງຫມາຍທີ່ຈະນຳໂທດບາບມາເຫນືອເຮົາຕໍ່ພ
ຣະຜູ້ເປັນເຈົ້າ ເພີ້ມເຂົ້າກັບບາບແລະກັມຊົ່ວໃນປັດຈຸບັນຂອງເຮົາ ເພາະວ່າກັມຊົ່ວຂອງເຮົາກໍໃຫຍ່ໂຕຢູ່ ພຣະພິໂຣດ
ອັນແຮງກ້າຕໍ່ອິສຣາເອນມີຢູ່ແລ້ວ”
14 ເຫດສັນນັ້ນ ຜູ້ຖືອາວຸດຈຶ່ງຖິ້ມຊະເລີຍແລະຂອງທີ່ຍຶດມາຕໍ່ຫນ້າເຈົ້ານາຍແລະຊຸມນຸມຊົນທັງປວງ
15 ແລະຜູ້ຊາຍຊຶ່ງຖືກຣະບຸຊື່ນັ້ນໄດ້ລຸກຂຶ້ນເອົາເສື້ອຜ້າອັນເປັນຂອງທີ່ຍຶດມາໃຫ້ແກ່ຄົນທີ່ເປືອຍກາຍຢູ່ໃນພວກຊະເລີຍ
ແລະເຂົາກໍນຸ່ງເຄື່ອງໃຫ້ເຂົາໄວ້ ແລະໃຫ້ເກີບ ແລະຈັດຫາອາຫານແລະເຄື່ອງດື່ມໃຫ້ ແລະຊະໂລມເຂົາ ແລະນຳຄົນທີ່
ອ່ອນເປັ້ຽໃນພວກເຂົາຂຶ້ນລານຳເຂົາກັບມາຍັງຍາດພີ່ນ້ອງຂອງເຂົາທີ່ເມືອງເຢຣີໂກ ຄືເມືອງຕົ້ນອິນພລັມ ແລະເຂົາ
ທັງຫລາຍກໍກັບໄປຍັງຊາມາເຣັຽ

Assyria refuses to Help Judah

(2 ກສດ 16:7-9)

16 ຄັ້ງນັ້ນກະສັດອາຮັສຊົງໃຊ້ໃຫ້ໄປຫາພຣະຣາຊາແຫ່ງອັສຊີເຣັຽເພື່ອຂໍຄວາມຊ່ອຍເຫລືອ
17 ເພາະຄົນເອໂດມໄດ້ບຸກຮຸກເຂົ້າມາອີກ ແລະໂຈມຕີຢູດາ ແລະຈັບໄປເປັນຊະເລີຍ
18 ແລະຄົນຟີລິສຕິນໄດ້ເຂົ້າປຸ້ນຫົວເມືອງໃນຖິ່ນເນີນເຊເຟລາ ແລະທີ່ພາກໃຕ້ຂອງຢູດາ ແລະໄດ້ຍຶດເມືອງເບັດເຊເມສ
ອັຍຢາໂລນ ເກເດໂຣດ ແລະໂຊໂກກັບຊົນນະບົດ ແລະເຂົາກໍຕັ້ງຢູ່ທີ່ນັ້ນ
19 ເພາະພຣະຜູ້ເປັນເຈົ້າຊົງກະທຳໃຫ້ຢູດາຫນ້ອຍລົງດ້ວຍອາຮັສພຣະຣາຊາແຫ່ງອິສຣາເອນ ເພາະອາຮັສຊົງປ່ອຍໃຫ້
ເຫລີງໃນຢູດາແລະບໍ່ຊື່ຕໍ່ພຣະຜູ້ເປັນເຈົ້າ

20 ສະນັ້ນ ຕີນກາດປີນເນເຊີພຣະຣາຊາແຫ່ງອັສຊີເຣັຽຈຶ່ງຍົກຂຶ້ນມາຕໍ່ສູ້ກັບພຣະອົງ ແລະກະທຳໃຫ້ພຣະອົງທຸກພຣະທັຍ
ແທນທີ່ຈະ  ສນັບສນູນພຣະອົງໃຫ້ເຂັ້ມແຂງ
21 ເພາະອາຮັສຊົງເອົາຂອງຈາກພຣະວິຫານຂອງພຣະຜູ້ເປັນເຈົ້າແລະຈາກຣາຊສຳນັກແລະຈາກເຈົ້ານາຍຖວາຍເປັນ
ບັນນາການແກ່ພຣະຣາຊາຂອງອັສຊີເຣັຽ ແຕ່ບໍ່ເປັນປໂຍດແກ່ພຣະອົງ

Apostasy and Death of Ahaz

(2 ກສດ 16:12-20)

22 ໃນຄາວທຸກຍາກນັ້ນ ພຣະອົງຍິ່ງບໍ່ເຊື່ອຕໍ່ພຣະຜູ້ເປັນເຈົ້າ ຄືກະສັດອາຮັສອົງດຽວກັນນີ້ແຫລະ
23 ເພາະພຣະອົງຊົງຖວາຍສັຕບູຊາແກ່ພຣະຂອງເມືອງດາມັສກັສຊຶ່ງໄດ້ໃຫ້ພຣະອົງຝ່າຍແພ້ແລະກ່າວວ່າ, "ເພາະວ່າພ
ຣະເຈົ້າແຫ່ງພຣະຣາຊາຂອງຊີເຣັຽໄດ້ຊ່ອຍເຂົາທັງຫລາຍ ເຮົາຈະຖວາຍສັຕບູຊາແກ່ພຣະເຫລົ່ານັ້ນເພື່ອຈະຊ່ອຍ
ເຮົາ" ແຕ່ພຣະເຫລົ່ານັ້ນເປັນເຄື່ອງທຳລາຍພຣະອົງແລະທັງອິສຣາເອນທັງປວງດ້ວຍ
24 ແລະອາຮັສຊົງຮວບຮວມເຄື່ອງໃຊ້ແຫ່ງພຣະວິຫານຂອງພຣະຜູ້ເປັນເຈົ້າເປັນອັນໆ ແລະພຣະອົງຊົງປິດປະຕູພຣະວິ
ຫານຂອງພຣະເຈົ້າ ແລະພຣະອົງຊົງສ້າງແທ່ນບູຊາສຳລັບພຣະອົງທຸກມຸມເມືອງເຢຣູຊາເລັມ
25 ພຣະອົງຊົງສ້າງບ່ອນນະມັສການທີ່ສູງໃນທົວເມືອງຂອງຢູດາທຸກທົວເມືອງເພື່ອເຜົາເຄື່ອງຫອມຖວາຍພຣະອື່ນ ກະ
ທຳໃຫ້ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງພຣະອົງຊົງພຣະພິໂຣດ
26 ສ່ວນພຣະຣາຊກິຈນອກນັ້ນຂອງພຣະອົງ ແລະເຣື່ອງລາວຂອງພຣະອົງທັງສິ້ນຕັ້ງແຕ່ຕົ້ນຈົນປາຍ ເບິ່ງແມ່, ເຂົາບັນ
ທຶກໄວ້ໃນໜັງສືພົງກະສັດຂອງຢູດາແລະອິສຣາເອນ
27 ອາຮັສກໍລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ເຂົາກໍຝັງພຣະສົບໄວ້ໃນກຸງ ຄືໃນເຢຣູຊາເລັມ ເພາະເຂົາບໍ່ໄດ້
ນຳພຣະສົບໄປໄວ້ໃນອຸບໂມງຂອງພຣະຣາຊາແຫ່ງອິສຣາເອນ ແລະເຮເຊກີຢາໂອຣົດຂອງພຣະອົງໄດ້ປົກຄອງແທນ
ພຣະອົງ

## 29 ຣັຊການເຮເຊກີຢາ

Reign of Hezekiah

(2 ກສດ 18:1-3)

1 ເມື່ອເຮເຊກີຢາມີອາຍຸສິບຫ້າປີ ພຣະອົງຊົງເລີ້ມປົກຄອງ ແລະພຣະອົງຊົງປົກຄອງໃນກຸງເຢຣູຊາເລັມຊາວເກົ້າປີ ພ
ຣະມານດາຂອງພຣະອົງມີພຣະນາມວ່າ ອາບີຢາບຸດຕຣີຂອງເຊຄາຣີຢາ
2 ພຣະອົງຊົງກະທຳສິ່ງທີ່ຊອບໃນສາຍພຣະເນດພຣະຜູ້ເປັນເຈົ້າ ຕາມຊຶ່ງດາວິດບັນພະບຸຣຸດຂອງພຣະອົງໄດ້ຊົງກະທຳ

**ເຮເຊກີຢາຊົງຣື້ຟື້ນການນະມັສການໃນພຣະວິຫານ**

The Temple Cleansed

3 ໃນປີທຳອິດແຫ່ງຣັຊການຂອງພຣະອົງໃນເດືອນແຣກ ພຣະອົງຊົງເປີດປະຕູພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະໄດ້
ຊົງທຳການສ້ອມແຊມປະຕູນັ້ນ
4 ພຣະອົງຊົງນຳປະໂຣຫິດແລະຄົນເລວີເຂົ້າມາແລະຊົງໃຫ້ເຂົາຊຸມນຸມທີ່ເດີ່ນເມືອງດ້ານຕາເວັນອອກ
5 ແລະກ່າວກັບເຂົາວ່າ, "ຄົນເລວີເອີຍ ຂໍຟັງເຮົາ ຈົ່ງຊຳຣະຕົວໃຫ້ບໍຣິສຸດ ແລະຊຳຣະພຣະວິຫານຂອງພຣະຜູ້ເປັນເຈົ້າພ
ຣະເຈົ້າແຫ່ງບັນພະບຸຣຸດຂອງທ່ານໃຫ້ບໍຣິສຸດ
6 ເພາະບິດາຂອງເຮົາທັງຫລາຍບໍ່ຊື່ສັດ ແລະໄດ້ກະທຳສິ່ງທີ່ຊົ່ວໃນສາຍພຣະເນດພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ
ເຂົາທັງຫລາຍໄດ້ປະຖິ້ມພຣະອົງ ແລະຫັນໜ້າຂອງເຂົາເສັຽຈາກທີ່ປະທັບຂອງພຣະຜູ້ເປັນເຈົ້າ ແລະໄດ້ຫັນຫລັງໃຫ້
7 ເຂົາປິດປະຕູມຸກພຣະວິຫານດ້ວຍແລະໄດ້ມອດຕະກຽງເສັຽ ແລະບໍ່ໄດ້ເຜົາເຄື່ອງຫອມຫລືຖວາຍເຄື່ອງເຜົາບູຊາໃນ
ສະຖານບໍຣິສຸດຂອງພຣະເຈົ້າແຫ່ງອິສຣາເອນ

8 ເຫດສັນນັ້ນພຣະພິໂຣດຂອງພຣະເຈົ້າຈຶ່ງມາເທິງຢູດາແລະເຢຣູຊາເລັມ ແລະພຣະອົງຊົງກະທຳໃຫ້ເຂົາເປັນສິ່ງທີ່ໜ້າຫວາດກົວ ເປັນທີ່ໜ້າສຍົດສຍອງ ແລະເປັນທີ່ເຍາະເຍີ້ຍຕາມທີ່ທ່ານໄດ້ເຫັນກັບຕາຂອງທ່ານແລ້ວ
9 ເພາະບິດາທັງຫລາຍຂອງເຮົາໄດ້ລົ້ມລົງດ້ວຍດາບ ແລະບຸດຊາຍບຸດຍິງກັບພັຣຍາຂອງເຮົາໄດ້ເປັນຊະເລີຍເພາະເຫດນີ້
10 ບັດນີ້ເຮົາມີໃຈປະສົງທີ່ຈະກະທຳຄຳສັນຍາກັບພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນ ເພື່ອວ່າພຣະພິໂຣດອັນແຮງກ້າຂອງພຣະອົງຈະຫັນໄປເສັຽຈາກເຮົາ
11 ບຸດຂອງຂ້າພະເຈົ້າເອີຍ ຢ່າເມີນເສີຍເພາະພຣະຜູ້ເປັນເຈົ້າໄດ້ຊົງເລືອກທ່ານໃຫ້ຢືນຢູ່ຕໍ່ພຣະພັກຂອງພຣະອົງ ເພື່ອປົວລະບັດພຣະອົງ ແລະເປັນຜູ້ປົວລະບັດຂອງພຣະອົງແລະເຜົາເຄື່ອງຫອມ”
12 ແລ້ວຄົນເລວີກໍລຸກຂຶ້ນ ຄືມາຮາດບຸດອາມາຊັຍ ແລະໂຢເອນບຸດອາຊາຣີຢາ ຜູ້ເປັນເຊື້ອສາຍຂອງໂກຮາດ ແລະເຊື້ອສາຍຂອງເມຣາຣີ ຄືສບຸດອັບດີ ແລະອາຊາຣີຢາບຸດເຢຮັນເລເລນ ແລະເຊື້ອສາຍຂອງເກີໂຊນ ຄື ໂຢອາບຸດຊິມມາ ແລະເອເດນບຸດໂຢອາ
13 ແລະເຊື້ອສາຍຂອງເອລີຊາຟານ ຄືຊິມຣີ ແລະເຢອູເອນ ແລະເຊື້ອສາຍຂອງອາສາບ ຄືເຊຄາຣີຢາ ແລະມັດຕານີຢາ
14 ແລະເຊື້ອສາຍຂອງເຮມານ ຄືເຢຮູເອນແລະຊີເມອີ ແລະເຊື້ອສາຍຂອງເຢດູທູນ ຄືເຊມັຍຢາ ແລະອຸສຊີເອນ
15 ເຂົາທັງຫລາຍຮວບຮວມພີ່ນ້ອງຂອງເຂົາ ແລະຊຳຣະຕົນໃຫ້ບໍຣິສຸດ ແລະເຂົ້າໄປຕາມທີ່ພຣະຣາຊາໄດ້ຊົງບັນຊາໂດຍພຣະວັຈນະຂອງພຣະຜູ້ເປັນເຈົ້າ ໃຫ້ຊຳຣະພຣະວິຫານຂອງພຣະຜູ້ເປັນເຈົ້າໃຫ້ບໍຣິສຸດ
16 ປະໂຣຫິດໄດ້ເຂົ້າໄປໃນສ່ວນຂ້າງໃນຂອງພຣະວິຫານຂອງພຣະຜູ້ເປັນເຈົ້າເພື່ອຊຳຣະໃຫ້ບໍຣິສຸດ ແລະເຂົານຳສິ່ງທີ່ເປື້ອນເປິະທີ່ເຂົາພົບໃນພຣະວິຫານຂອງພຣະຜູ້ເປັນເຈົ້າອອກມາທີ່ເດີ່ນພຣະວິຫານຂອງພຣະເຈົ້າ ແລະຄົນເລວີກໍຂົນເອົາຂອງນັ້ນອອກໄປຍັງລຳຫ້ວຍນາກິດໂຣນ
17 ເຂົາເລີ້ມຊຳຣະໃນວັນແຮກຂອງເດືອນທຳອິດ ແລະໃນວັນທີແປດຂອງເດືອນນັ້ນເຂົາມາຍັງມຸກຂອງພຣະຜູ້ເປັນເຈົ້າເຂົາຊຳຣະ ພຣະວິຫານຂອງພຣະຜູ້ເປັນເຈົ້າຢູ່ແປດວັນ ແລະໃນວັນທີສິບຫົກຂອງເດືອນທຳອິດກໍສຳເຣັດ
18 ແລ້ວເຂົາເຂົ້າໄປຫາເຮເຊກີຢາພຣະຣາຊາແລະທູນວ່າ, “ຂ້ານ້ອຍທັງຫລາຍໄດ້ກະທຳຄວາມສະອາດພຣະວິຫານຂອງພຣະຜູ້ເປັນເຈົ້າເສັດສິ້ນແລ້ວ ທັງແທ່ນເຄື່ອງເຜົາບູຊາແລະເຄື່ອງໃຊ້ຂອງແທ່ນນັ້ນທັງສິ້ນ ແລະໂຕະເຂົ້າຈີ່ຕັ້ງຖວາຍ ແລະເຄື່ອງໃຊ້ຂອງໂຕະທັງສິ້ນ
19 ເຄື່ອງໃຊ້ທັງສິ້ນຊຶ່ງກະສັດອາຮັສໄດ້ຖິ້ມໃນຣັຊການຂອງພຣະອົງ ເມື່ອພຣະອົງບໍ່ສັດຊື່ຕໍ່ພຣະຜູ້ເປັນເຈົ້າ ຂ້ານ້ອຍທັງຫລາຍໄດ້ຕຽມພ້ອມແລະໄດ້ຊຳຣະແລ້ວ ແລະເບິ່ງແມ, ຂອງເຫລົ່ານັ້ນກໍຢູ່ຫນ້າແທ່ນບູຊາຂອງພຣະຜູ້ເປັນເຈົ້າ

Temple Worship restored

20 ແລ້ວເຮເຊກີຢາພຣະຣາຊາຊົງລຸກຂຶ້ນແຕ່ເດິກ ແລະຮວບຮວມເຈົ້ານາຍຂອງກຸງ ແລະສະເດັດຂຶ້ນໄປຍັງພຣະວິຫານຂອງພຣະຜູ້ເປັນເຈົ້າ
21 ເຂົາໄດ້ນຳງົວເຖິກເຈັດໂຕ ແກະເຖິກເຈັດໂຕ ລູກແກະເຈັດໂຕ ແລະແບ້ເຖິກເຈັດໂຕເປັນເຄື່ອງບູຊາໄຖ່ບາບສຳລັບຣາຊອານາຈັກ ສະຖານນະມັສການແລະຢູດາ ແລະພຣະອົງຊົງບັນຊາໃຫ້ລູກຫລານຂອງອາໂຣນ ຄື ປະໂຣຫິດໃຫ້ຖວາຍຂອງເຫລົ່ານັ້ນເທິງແທ່ນບູຊາຂອງພຣະຜູ້ເປັນເຈົ້າ
22 ເຂົາທັງຫລາຍຈຶ່ງຂ້າງົວເຖິກແລະປະໂຣຫິດກໍຮັບເລືອດແລະຊິດໃສ່ທີ່ແທ່ນບູຊາ ແລະເຂົາທັງຫລາຍຂ້າແກະເຖິກແລະເອົາເລືອດຂອງມັນຊິດໃສ່ແທ່ນບູຊາ ແລະຂ້າລູກແກະ ເອົາເລືອດຂອງມັນຊິດໃສ່ແທ່ນບູຊາ
23 ແລ້ວແບ້ເຖິກສຳລັບເປັນເຄື່ອງບູຊາໄຖ່ບາບນັ້ນເຂົານຳມາທີ່ພຣະຣາຊາແລະທີ່ປະຊຸມຊົນ ແລະເຂົາທັງຫລາຍກໍເອົາມືຂອງເຂົາວາງເທິງແບ້ນັ້ນ

24 ແລະປະໂຣຫິດກໍຂ້າແບ້ເສັງ ແລະເອົາເລືອດຂອງມັນທຳເປັນເຄື່ອງບູຊາໄຖ່ບາບເທິງແທ່ນນັ້ນ ເພື່ອທຳການລົບມົນທິນບາບໃຫ້ອິສຣາເອນທັງປວງ ເພາະບັນດາປະໂຣຫິດຊົງບັນຊາວ່າ ໃຫ້ທຳເຄື່ອງເຜົາບູຊາແລະເຄື່ອງບູຊາໄຖ່ບາບສຳລັບອິສຣາເອນ

25 ແລ້ວພຣະອົງຊົງໃຫ້ຄົນເລວີປະຈຳຢູ່ໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ມີສາບຊົ່ງ ພິນໃຫຍ່ ແລະພິນເຂົາຄູ່ ຕາມບັນຍັດຂອງດາວິດແລະຂອງກາດຜູ້ທຳນວາຍຂອງພຣະຣາຊາ ແລະຂອງນາທານຜູ້ປະກາດພຣະທັມ ເພາະວ່າພຣະບັນຍັດນັ້ນມາຈາກພຣະຜູ້ເປັນເຈົ້າທາງຜູ້ປະກາດພຣະທັມຂອງພຣະອົງ

26 ຄົນເລວີກໍຢືນຢູ່ ຖືເຄື່ອງຄົນຕຣີຂອງດາວິດ ແລະປະໂຣຫິດຖືແກ

27 ແລ້ວເຮເຊກີຢາຊົງບັນຊາວ່າ ໃຫ້ຖວາຍເຄື່ອງເຜົາບູຊານັ້ນເທິງແທ່ນ ແລະເມື່ອເລີ້ມຖວາຍເຄື່ອງເຜົາບູຊາ ກໍເລີ້ມຖວາຍເພງແກ່ພຣະຜູ້ເປັນເຈົ້າ ແລະແກກັບເຄື່ອງດົນຕຣີຂອງດາວິດພຣະຣາຊາຂອງອິສຣາເອນກໍເລີ້ມດ້ວຍ

28 ຊຸມນຸມຊົນທັງສິ້ນກໍນະມັສການ ແລະນັກຮ້ອງກໍຮ້ອງເພງແລະຄົນດົນຕຣີກໍເປົ່າແກທຳຢ່າງນີ້ຢູ່ຈົນຖວາຍເຄື່ອງເຜົາບູຊາເສັດ

29 ເມື່ອການຖວາຍບູຊາເສັດແລ້ວ ພຣະຣາຊາແລະຄົນທັງປວງທີ່ຢູ່ກັບພຣະອົງກໍຂາບລົງນະມັສການ

30 ແລະເຮເຊກີຢາພຣະຣາຊາແລະເຈົ້ານາຍກໍບັນຊາໃຫ້ຄົນເລວີຮ້ອງເພງຍໍພຣະກຽດພຣະຜູ້ເປັນເຈົ້າດ້ວຍຖ້ອຍຄຳຂອງດາວິດແລະຂອງອາສາບຜູ້ທຳນວາຍ ແລະເຂົາທັງຫລາຍຮ້ອງເພງຍໍພຣະກຽດດ້ວຍຄວາມຍິນດີ ແລະເຂົາກໍຂາບລົງນະມັສການ

31 ແລ້ວເຮເຊກີຢາກ່າວວ່າ, “ບັດນີ້ທ່ານທັງຫລາຍໄດ້ຊຳຣະຕົວຂອງທ່ານໃຫ້ບໍຣິສຸດຕໍ່ພຣະຜູ້ເປັນເຈົ້າ ຈົ່ງເຂົ້າມາໃກ້ ນຳເຄື່ອງສັດບູຊາ ແລະເຄື່ອງບູຊາໂມທະນາມາຍັງພຣະວິຫານຂອງພຣະຜູ້ເປັນເຈົ້າ” ແລະຊຸມນຸມຊົນກໍນຳເຄື່ອງສັດບູຊາແລະເຄື່ອງບູຊາໂມທະນາ ແລະທຸກຄົນທີ່ມີໃຈສມັກກໍໄດ້ນຳເຄື່ອງເຜົາບູຊາມາ

32 ຈຳນວນເຄື່ອງເຜົາບູຊາຊຶ່ງຊຸມນຸມຊົນນຳມາ ຄືງົວເຖິກເຈັດສິບໂຕ ແກະເຖິກນຶ່ງຮ້ອຍແລະລູກແກະສອງຮ້ອຍທັງຫມົດນີ້ເປັນເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າ

33 ແລະເຄື່ອງບູຊາທີ່ມອບຖວາຍໄວ້ ມີງົວເຖິກຫົກຮ້ອຍໂຕ ແລະແກະສາມພັນໂຕ

34 ແຕ່ມີປະໂຣຫິດຫນ້ອຍເກີນໄປຈົນດຶງຫນັງເຄື່ອງເຜົາບູຊາທັງຫມົດບໍ່ໄດ້ ຄົນເລວີພີ່ນ້ອງຂອງເຂົາກໍໄດ້ຊ່ອຍຈົນສຳເຣັດງານ ແລະຈົນກວ່າປະໂຣຫິດຈະເສັດການຊຳຣະຕົນໃຫ້ບໍຣິສຸດ ເພາະໃນການຊຳຣະຕົນນັ້ນຄົນເລວີຈິງຈັງຍິ່ງກວ່າພວກປະໂຣຫິດ

35 ນອກຈາກເຄື່ອງເຜົາບູຊາມີຈຳນວນຫລວງຫລາຍແລ້ວ ຍັງມີໄຂມັນຂອງເຄື່ອງສານຕິບູຊາ ແລະມີເຄື່ອງດື່ມບູຊາຄູ່ກັບເຄື່ອງເຜົາບູຊາດ້ວຍ ດັ່ງນີ້ແຫລະງານປົວລະບັດໃນພຣະວິຫານຂອງພຣະຜູ້ເປັນເຈົ້າກໍຟື້ນຄືນມາອີກ

36 ເຮເຊກີຢາກັບປະຊາຊົນທັງປວງກໍຊົມຊື່ນຍິນດີດ້ວຍການທີ່ພຣະຜູ້ເປັນເຈົ້າໄດ້ຊົງກະທຳໃຫ້ແກ່ປະຊາຊົນຄັ້ງນີ້ ເພາະເຣື່ອງນີ້ເກີດຂຶ້ນປັດຈຸບັນທັນດ່ວນ

## 30 ການຖືເທສການປັສຄາ

The Great Passoveer

1 ເຮເຊກີຢາຊົງຮັບສັ່ງໄປເຖິງອິສຣາເອນແລະຢູດາທັງປວງ ແລະຊົງພຣະອັກສອນເຖິງເອຟຣາອິມກັບມານັສເຊດ້ວຍວ່າເຂົາທັງຫລາຍຄວນຈະມາຍັງພຣະວິຫານຂອງພຣະຜູ້ເປັນເຈົ້າທີ່ເຢຣູຊາເລັມ ເພື່ອຈະຖືເທສການປັສຄາຖວາຍແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງອິສຣາເອນ

2 ເພາະວ່າພຣະຣາຊາແລະເຈົ້ານາຍຂອງພຣະອົງທັງຊຸມນຸມຊົນທັງປວງໃນເຢຣູຊາເລັມໄດ້ປຶກສາກັນທີ່ຈະຖືເທສການປັສຄາໃນເດືອນທີສອງ

3 ດ້ວຍເຂົາທັງຫລາຍຈະຖືປັສຄາຕາມກຳນົດບໍ່ໄດ້ ເພາະວ່າພວກປະໂຣຫິດຍັງບໍ່ໄດ້ຊຳຣະຕົນໃຫ້ບໍຣິສຸດພຽງພໍແກ່ຈຳ
ນວນ ແລະປະຊາຊົນຍັງບໍ່ໄດ້ຊຸມນຸມກັນໃນເຢຣູຊາເລັມ
4 ແລະແຜນງານນັ້ນກໍເປັນທີ່ຊອບແກ່ພຣະຣາຊາ ແລະຊຸມນຸມຊົນທັງປວງ
5 ເຂົາຈຶ່ງລົງມະຕິໃຫ້ທຳປະກາດອອກໄປທົ່ວອິສຣາເອນ ຕັ້ງແຕ່ເບເອີເຊບາຈົນເຖິງເມືອງດານວ່າ ປະຊາຊົນຄວນມາຖື
ປັສຄາຖວາຍແດ່ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນທີ່ເຢຣູຊາເລັມ ເພາະເຂົາບໍ່ໄດ້ຖືເປັນຈຳນວນຫລາຍໆ
ຕາມທີ່ໄດ້ກຳນົດໄວ້
6 ຄົນສົ່ງຫນັງສືຈຶ່ງອອກໄປທົ່ວອິສຣາເອນແລະຢູດາ ຖືຫນັງສືຈາກພຣະຣາຊາແລະບັນດາເຈົ້ານາຍຂອງພຣະອົງ ເພາະ
ພຣະຣາຊາໄດ້ຊົງສັ່ງວ່າ, “ໂອ ຊົນອິສຣາເອນເອີຍ ຈົ່ງກັບມາຫາພຣະຜູ້ເປັນເຈົ້າ ພຣະເຈົ້າຂອງອັບຣາຮາມ ອິຊາກ
ແລະອິສຣາເອນ ເພື່ອພຣະອົງຈະຫັນກັບມາຍັງຄົນສ່ວນທີ່ເຫລືອຢູ່ຂອງທ່ານຜູ້ຊຶ່ງຫນີລອດຈາກມືຂອງພຣະຣາຊາ
ແຫ່ງອັສຊີເຣັຽ
7 ຢ່າໃຫ້ເຫມືອນບິດາແລະພີ່ນ້ອງຂອງທ່ານຜູ້ບໍ່ຊື່ຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງເຂົາ ພຣະອົງຈຶ່ງຊົງ
ມອບເຂົາໄວ້ໃຫ້ປະສົບຄວາມຈິບຫາຍຕາມທີ່ທ່ານເຫັນຢູ່
8 ແລະຄາວນີ້ຢ່າຫົວແຂງຢ່າງບິດາຂອງທ່ານທັງຫລາຍເລີຍ ແຕ່ຈົ່ງຍອມມອບຕົວທ່ານແກ່ພຣະຜູ້ເປັນເຈົ້າ ແລະມາຍັງ
ສະຖານນະມັສການຂອງພຣະອົງຊຶ່ງພຣະອົງຊົງຊຳຣະໄວ້ໃຫ້ບໍຣິສຸດເປັນນິດ ແລະບົວລະບັດພຣະຜູ້ເປັນເຈົ້າພຣະ
ເຈົ້າຂອງທ່ານ ເພື່ອພຣະພິໂຣດອັນແຮງກ້າຂອງພຣະອົງຈະຫັນໄປຫັນໄປເສັຽຈາກທ່ານ
9 ເພາະຖ້າທ່ານທັງຫລາຍຫັນກັບມາຍັງພຣະຜູ້ເປັນເຈົ້າ ພີ່ນ້ອງຂອງທ່ານແລະລູກຫລານຂອງທ່ານຈະປະສົບຄວາມ
ເອັນດູຈາກຜູ້ທີ່ຈັບເຂົາໄປເປັນຊະເລີຍ ແລະຈະໄດ້ກັບມາຍັງແຜ່ນດິນນີ້ອີກ ເພາະພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
ຊົງພຣະເມດຕາແລະກະຣຸນາ ຖ້າທ່ານກັບມາຫາພຣະອົງ ພຣະອົງຈະບໍ່ຊົງຫັນພຣະພັກໄປຈາກທ່ານ”
10 ຄົນສົ່ງຫນັງສືຈຶ່ງໄປຕາມຫົວເມືອງຕ່າງໆທົ່ວແຜ່ນດິນເອຟຣາອິມ ແລະມານັສເຊໄກໄປຈົນເຖິງເຊບູລູນ ແຕ່ຄົນທັງ
ຫລາຍກໍຫົວເຍາະເຍີ້ຍເຂົາ ແລະດູຫມິ່ນເຂົາ
11 ມີແຕ່ຄົນເຜົ່າອາເຊີ ມານັສເຊ ແລະເຊບູລູນບາງຄົນທີ່ຖ່ອມຕົວແລະມາຍັງເຢຣູຊາເລັມ
12 ພຣະຫັດຂອງພຣະຜູ້ເປັນເຈົ້າຢູ່ເຫນືອຢູດາດ້ວຍ ຊົງໃຫ້ເຂົາເປັນໃຈດຽວກັນທີ່ຈະກະທຳຕາມຊຶ່ງພຣະຣາຊາແລະເຈົ້າ
ນາຍໄດ້ສັ່ງເຂົາໄວ້ຕາມຖ້ອຍຄຳຂອງພຣະຜູ້ເປັນເຈົ້າ
13 ປະຊາຊົນເປັນອັນມາກມາປະຊຸມກັນໃນເຢຣູຊາເລັມ ເພື່ອຖືເທສການກິນເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງໃນເດືອນທີສອງ ເປັນ
ການຊຸມນຸມໃຫຍ່ຍິ່ງນັກ
14 ເຂົາລົງມືທຳງານກຳຈັດແທ່ນບູຊາທີ່ຢູ່ໃນເຢຣູຊາເລັມ ແລະແທ່ນສຳລັບເຜົາເຄື່ອງຫອມທັງປວງນັ້ນເຂົາຂົນໄປຖິ້ມ
ເສັຽໃນລຳຫ້ວຍກິດໂຣນ
15 ເຂົາທັງຫລາຍໄດ້ຂ້າແກະ ປັສຄາໃນວັນທີສິບສີ່ຂອງເດືອນທີສອງ ປະໂຣຫິດແລະຄົນເລວີກໍຕ້ອງຮູ້ສຶກລະອາຍ ເພາະ
ສະນັ້ນເຂົາ  ຈຶ່ງຊຳຣະຕົວໃຫ້ບໍຣິສຸດແລະນຳເຄື່ອງເຜົາບູຊາມາໃນພຣະວິຫານຂອງພຣະຜູ້ເປັນເຈົ້າ
16 ເຂົາທັງຫລາຍເຂົ້າປະຈຳຕຳແຫນ່ງທີ່ເຂົາເຄີຍ ຕາມບົດບັນຍັດຂອງໂມເຊຄົນຂອງພຣະເຈົ້າ ປະໂຣຫິດກໍເອົາເລືອດ
ຊຶ່ງເຂົາຮັບມາ ຈາກມືຂອງຄົນເລວີຊັດ
17 ເພາະວ່າມີຫລາຍຄົນໃນຊຸມນຸມຊົນນັ້ນຍັງບໍ່ໄດ້ຊຳຣະຕົນໃຫ້ບໍຣິສຸດ ເພາະສະນັ້ນຄົນເລວີຈຶ່ງຕ້ອງຂ້າແກະປັສຄາ
ແທນທຸກຄົນທີ່ມົນທິນ ເພື່ອກະທຳໃຫ້ບໍຣິສຸດຕໍ່ພຣະຜູ້ເປັນເຈົ້າ
18 ເພາະວ່າມວນຊົນນັ້ນ ຄົນຈຳນວນຫລາຍທີ່ມາຈາກເອຟຣາອິມ ມານັສເຊ ອິສຊາຄາ ແລະເຊບູລູນ ຍັງບໍ່ໄດ້ຊຳຣະຕົນ
ແຕ່ເຂົາກໍຮັບປະທານປັສຄາຜິດຕໍ່ຂໍ້ທີ່ກຳນົດໄວ້ ເພາະວ່າເຮເຊກີຢາຊົງອ້ອນວອນເພື່ອເຂົາວ່າ “ຂໍພຣະຜູ້ເປັນເຈົ້າຜູ້
ປະເສີດຊົງໃຫ້ອະພັຍແກ່ທຸກໆຄົນ

19 ຜູ້ປັກໃຈຊອກຫາພຣະເຈົ້າ ຄືພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງເຂົາ ເຖິງແມ່ນວ່າຈະບໍ່ເປັນໄປຕາມກົດ
ຂອງຄວາມບໍຣິສຸດແຫ່ງສະຖານນະມັສການນີ້"
20 ພຣະຜູ້ເປັນເຈົ້າຊົງຟັງເຮເຊກີຢາແລະຊົງຮັກສາປະຊາຊົນ
21 ແລະປະຊາຊົນອິສຣາເອນທີ່ຢູ່ໃນເຢຣູຊາເລັມໄດ້ຖືເທສການກິນເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງເຈັດວັນດ້ວຍຄວາມຍິນດີຍິ່ງ
ແລະຄົນເລວີກັບປະໂຣຫິດໄດ້ສັຣເສີນພຣະຜູ້ເປັນເຈົ້າທຸກໆວັນ ຮ້ອງເພງດ້ວຍເຕັມກຳລັງຂອງເຂົາຖວາຍແດ່ພຣະຜູ້
ເປັນເຈົ້າ
22 ແລະເຮເຊກີຢາຊົງກ່າວຫນູນໃຈພວກຄົນເລວີທັງປວງຜູ້ສະແດງຝີມືດີໃນການບົວລະບັດພຣະຜູ້ເປັນເຈົ້າ ປະຊາ
ຊົນຈຶ່ງຮັບປະທານອາຫານໃນເທສການນັ້ນເຈັດວັນ ໄດ້ຖວາຍສັດເປັນເຄື່ອງສານຕິບູຊາ ແລະໂມທະນາພຣະຄຸນພ
ຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງຕົນ
23 ແລ້ວຊຸມນຸມຊົນທັງສິ້ນກໍຕົກລົງກັນທີ່ຈະຖືເທສການໄປອີກເຈັດວັນ ເຂົາຈຶ່ງຖືເທສການໄປອີກເຈັດວັນດ້ວຍຄວາມຍິນ
ດີ
24 ເພາະເຮເຊກີຢາພຣະຣາຊາແຫ່ງຢູດາໄດ້ຊົງປະທານງົວເຖິກນຶ່ງພັນໂຕ ແກະເຈັດພັນໂຕ ແກ່ຊຸມນຸມຊົນໃຫ້ເປັນເຄື່ອງ
ບູຊາ ແລະພວກເຈົ້ານາຍໄດ້ໃຫ້ງົວເຖິກນຶ່ງພັນໂຕ ແກະນຶ່ງຫມື່ນໂຕ ແກ່ຊຸມນຸມຊົນ ແລະປະໂຣຫິດເປັນຈຳນວນ
ຫລາຍກໍໄດ້ຊຳຮະຕົນໃຫ້ບໍຣິສຸດ
25 ຊຸມນຸມຊົນທັງສິ້ນຂອງຢູດາ ກັບບັນດາປະໂຣຫິດແລະຄົນເລວີ ແລະຊຸມນຸມຊົນທັງສິ້ນຊຶ່ງອອກມາຈາກອິສຣາເອນ
ແລະຄົນຕ່າງ ດ້າວຊຶ່ງອອກມາຈາກອິສຣາເອນແລະຊຶ່ງຢູ່ໃນຢູດາຊົມຊື່ນຍິນດີກັນ
26 ຈຶ່ງມີຄວາມຊື່ນບານໃຫຍ່ຍິ່ງໃນເຢຣູຊາເລັມ ເພາະຕັ້ງແຕ່ສມັຍຂອງໂຊໂລໂມນໂອຣົດຂອງດາວິດພຣະຣາຊາແຫ່ງອິ
ສຣາເອນບໍ່ເຄີຍມີຢ່າງນີ້ເລີຍໃນເຢຣູຊາເລັມ
27 ແລ້ວບັນດາປະໂຣຫິດແລະຄົນເລວີໄດ້ລຸກຂຶ້ນອວຍພອນປະຊາຊົນ ສຽງຂອງເຂົາກໍເຖິງພຣະກັນ ແລະຄຳອ້ອນວອນ
ຂອງເຂົາກໍມາຍັງທີ່ປະທັບບໍຣິສຸດຂອງພຣະອົງໃນຟ້າສວັນ

## 31

Pagan Shrines Destroyed

(2 ກສດ 18:4)

1 ເມື່ອສຳເຣັດງານນີ້ທັງສິ້ນແລ້ວອິສຣາເອນທັງປວງຜູ້ຢູ່ທີ່ນັ້ນໄດ້ອອກໄປຍັງຫົວເມືອງຢູດາແລະທຳລາຍເສົາສັກສິດ
ແລະໂຄ່ນບັນດາອາເຊຣາລົງ ແລະພັງບ່ອນນະມັສການສະຖານທີ່ສູງລົງ ແລະພັງແທ່ນທີ່ວຢູດາແລະເບັນຢາມິນທັງ
ສິ້ນ ແລະໃນເອຟຣາອິມກັບມານັສເຊ ຈົນເຂົາທຳລາຍເສັຽຫມົດສິ້ນ ແລ້ວປະຊາຊົນອິສຣາເອນທັງປວງກໍກັບໄປຍັງ
ຫົວເມືອງຂອງຕົນ ທຸກຄົນກັບໄປຍັງທີ່ດິນຂອງເຂົາ

**ເຮເຊກີຢາຊົງວາງກຳນົດບຳຣຸງປະໂຣຫິດແລະຄົນເລວີ**

2 ເຮເຊກີຢາໄດ້ຊົງຈັດການແບ່ງບັນດາປະໂຣຫິດແລະຄົນເລວີເປັນກອງໆ ແຕ່ລະກອງຕາມຫນ້າທີ່ບົວຣະບັດຂອງຕົນຄື
ບັນດາປະໂຣຫິດແລະຄົນເລວີ ໃຫ້ເປັນພະນັກງານຝ່າຍເຄື່ອງເຜົາບູຊາແລະເຄື່ອງສານຕິບູຊາໃຫ້ບົວຣະບັດ ແລະໃຫ້
ຖວາຍໂມທະນາແລະສັຣເສີນພາຍໃນປະຕູຄ້າຍຂອງພຣະຜູ້ເປັນເຈົ້າ
3 ສ່ວນທີ່ພຣະຣາຊາຊົງບໍຣິຈາກຈາກຊັບສິນສ່ວນພຣະອົງນັ້ນ ເປັນເຄື່ອງເຜົາບູຊາ ຄືເຄື່ອງເຜົາບູຊາສຳລັບຕອນເຊົ້າ
ແລະສຳລັບຕອນຄ່ຳ ແລະເຄື່ອງເຜົາບູຊາສຳລັບວັນສະບາໂຕ ວັນຂຶ້ນນຶ່ງຄ່ຳແລະເທສການຕາມກຳນົດ ດັ່ງທີ່ບັນທຶກ
ໄວ້ໃນທັມບັນຍັດຂອງພຣະຜູ້ເປັນເຈົ້າ
4 ພຣະອົງຊົງສັ່ງປະຊາຊົນຜູ້ຢູ່ໃນເຢຣູຊາເລັມໃຫ້ບໍຣິຈາກສ່ວນທີ່ເປັນຂອງປະໂຣຫິດແລະຂອງຄົນເລວີ ເພື່ອເຂົາເຫລົ່າ
ນັ້ນຈະໄດ້ຖວາຍຕົວເຂົາ ຖືທັມບັນຍັຂອງພຣະຜູ້ເປັນເຈົ້າບົ່ງໄວ້

5 ພໍຄຳສັ່ງກະຈາຍອອກໄປ ປະຊາຊົນອິສຣາເອນກໍໄດ້ບໍຣິຈາກເຂົ້າມາຢ່າງຫລວງຫລາຍ ມີຜົນຣຸ່ນທຳອິດຂອງເຂົ້າ ເຫລົ້າອະງຸ່ນໃຫມ່ ນ້ຳມັນ ນ້ຳເຜິ້ງ ແລະຜລິດຜົນທຸກຢ່າງຂອງໄຮ່ນາ ແລະເຂົານຳນຶ່ງສ່ວນສິບແຫ່ງຂອງທຸກຊະນິດເຂົ້າມາຢ່າງຫລວງຫລາຍ

6 ແລະປະຊາຊົນອິສຣາເອນແລະຢູດາຜູ້ອາສັຍຢູ່ໃນຫົວເມືອງຂອງຢູດາໄດ້ນຳນຶ່ງສ່ວນສິບຂອງງົວແລະແກະແລະສິ່ງຂອງທີ່ມອບຖວາຍແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາ ແລະເກັບໄວ້ເປັນກອງໆ

7 ໃນເດືອນທີສາມເຂົາເລີ້ມກອງສຸມຂຶ້ນ ແລະສຳເຣັດໃນເດືອນທີເຈັດ

8 ເມື່ອເຮເຊກີຢາແລະເຈົ້ານາຍມາເຫັນກອງເຫລົ່ານັ້ນ ທ່ານທັງຫລາຍກໍຖວາຍສາທຸການແດ່ພຣະຜູ້ເປັນເຈົ້າແລະອວຍພອນແກ່ອິສຣາເອນໄພ່ພົນຂອງພຣະອົງ

9 ເຮເຊກີຢາກໍຊົງໄຕ່ຖາມປະໂຣຫິດແລະຄົນເລວີເຖິງເຣື່ອງກອງເຫລົ່ານັ້ນ

10 ອາຊາຣີຢາມະຫາປະໂຣຫິດ ຜູ້ເປັນເຊື້ອສາຍຂອງຊາໂດກທູນຕອບພຣະອົງວ່າ, “ຕັ້ງແຕ່ເຂົາທັງຫລາຍໄດ້ນຳສ່ວນບໍຣິຈາກເຂົ້າມາໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ພວກຂ້ານ້ອຍໄດ້ຮັບປະທານແລະມີພໍກັບມີເຫລືອຫລາຍ ເພາະພຣະຜູ້ເປັນເຈົ້າໄດ້ຊົງອວຍ    ພຣະພອນໄພ່ພົນຂອງພຣະອົງ ເຫດສະນັ້ນພວກຂ້ານ້ອຍຈຶ່ງມີເຫລືອຢູ່ຫລວງຫລາຍຢ່າງນີ້”

11 ແລ້ວເຮເຊກີຢາຈຶ່ງຊົງບັນຊາໃຫ້ເຂົາຈັດຫ້ອງໃນພຣະວິຫານຂອງພຣະຜູ້ເປັນເຈົ້າແລະເຂົາທັງຫລາຍກໍຈັດໄວ້

12 ເຂົາທັງຫລາຍນຳສິ່ງບໍຣິຈາກເຂົ້າມາຢ່າງຊື່ສັດ ທັງນຶ່ງສ່ວນສິບແລະຂອງມອບຖວາຍ ຫົວຫນ້າເຈົ້າຫນ້າທີ່ຜູ້ດູແລຄືໂກນານິເອນຄົນເລວີກັບຊີເມອີນ້ອງຊາຍເປັນຄົນຮອງ

13 ເຢຮີເອນ ອາຊາຊີຢາ ນາຮາດ ອາຊາເຮນ ເຢຣີໂມດ ໂຢຊາບັດ ເອລີເອນ ອິສມາຄີຢາ ມາຮາດ ແລະເບນັຍຢາ ເປັນຜູ້ຄວບຄຸມຊ່ອຍເຫລືອໂກນານິເອນແລະຊີເມອີນ້ອງຊາຍຂອງເຂົາ ໂດຍການແຕ່ງຕັ້ງຂອງເຮເຊກີຢາພຣະຣາຊາແລະອາຊາຣີຢາເຈົ້າຫນ້າທີ່ຊັ້ນຜູ້ໃຫຍ່ຂອງພຣະວິຫານຂອງພຣະຜູ້ເປັນເຈົ້າ

14 ໂກເຣບຸດອິມນາຄົນເລວີ ຜູ້ເຝົ້າປະຕູຕາເວັນອອກ ເປັນຜູ້ດູແລຂອງບູຊາທີ່ຖວາຍຕາມໃຈສມັກແກ່ພຣະຜູ້ເປັນເຈົ້າແຈກສ່ວນບໍຣິຈາກທີ່ສງວນໄວ້ສຳລັບພຣະຜູ້ເປັນເຈົ້າ ແລະເຄື່ອງບູຊາບໍຣິສຸດທີ່ສຸດ

15 ເອເດນ ມີ ນີອາມິນ ເຢຊູອາ ເຊມັຍຢາ ອາມາຣີຢາ ແລະເຊການີຢາໄດ້ຊ່ອຍເຂົາຢ່ງຊື່ສັດໃນຫົວເມືອງຂອງປະໂຣຫິດໃຫ້ແຈກແກ່ພີ່ນ້ອງຂອງເຂົາທັງຫລາຍ ທັງຜູ້ໃຫຍ່ແລະຜູ້ນ້ອຍເຫມືອນກັນຕາມ ກອງເວນ

16 ເວັ້ນແຕ່ຄົນເຫລົ່ານັ້ນທີ່ຂຶ້ນທະບຽນໄວ້ຕາມເຊື້ອສາຍ ຜູ້ຊາຍຕັ້ງແຕ່ສາມປີຂຶ້ນໄປ ທຸກຄົນທີ່ເຂົ້າໄປໃນພຣະວິຫານຂອງພຣະຜູ້ເປັນເຈົ້າເປັນເວນຕາມຫນ້າທີ່ປະຈຳວັນທີ່ຕ້ອງທຳ ເພື່ອທຳການບົວລະບັດຕາມຫນ້າທີ່ໂດຍກອງຂອງເຂົ
າ

17 ການຂຶ້ນທະບຽນປະໂຣຫິດກໍກະທຳຕາມຕະກູນຂອງເຂົາ ສ່ວນຄົນເລວີຕັ້ງແຕ່ອາຍຸຊາວປີຂຶ້ນໄປກໍຂຶ້ນຕາມຫນ້າທີ່ຂອງເຂົາ ຕາມກອງເວນຂອງເຂົາທັງຫລາຍ

18 ແລະຂຶ້ນທະບຽນທັງລູກນ້ອຍໆຂອງເຂົາ ເມັຽຂອງເຂົາ ລູກຊາຍລູກຍິງຂອງເຂົາ ມວນຊົນທັງສິ້ນ ເພາະເຂົາທັງຫລາຍຊື່ສັດໃນການຮັກສາຕົວຂອງເຂົາໃຫ້ບໍຣິສຸດ

19 ສຳລັບລູກຫລານຂອງອາໂຣນຄືພວກປະໂຣຫິດ ຜູ້ຢູ່ໃນທົ່ງນາຮອມຮອບຫົວເມືອງຂອງເຂົານັ້ນ ມີຜູ້ຊາຍໃນຫົວເມືອງຕ່າງໆຜູ້ຖືກບົ່ງຊື່ໃຫ້ແຈກຈ່າຍສ່ວນແບ່ງແກ່ເພດຊາຍທຸກຄົນໃນພວກຂອງປະໂຣຫິດ ແລະທຸກຄົນໃນພວກຂອງຄົນເລວີຜູ້ຊຶ່ງໄດ້ຂຶ້ນທະບຽນໄວ້

20 ເຮເຊກີຢາຊົງກະທຳດັ່ງນີ້ທົ່ວທັງຢູດາ ແລະພຣະອົງຊົງກະທຳສິ່ງທີ່ດີແລະຊອບ ແລະຊື່ສັດຕໍ່ພຣະພັກພຣະຜູ້ເປັນເຈົ້າພຣະເຈົ້າຂອງພຣະອົງ

21 ແລະງານທຸກຢ່າງຊຶ່ງພຣະອົງຊົງເລີ້ມກະທຳໃນການບົວລະບັດແຫ່ງພຣະວິຫານຂອງພຣະເຈົ້າແລະຕາມພຣະທັມແລະພຣະບັນຍັດ ເພື່ອສແວງຫາພຣະເຈົ້າຂອງພຣະອົງ ພຣະອົງຊົງກະທຳດ້ວຍເຕັມພຣະທັຍ ແລະຊົງຈຳເຣີນຂຶ້ນ

## 32 ເຊນນາເຄຣິບບຸກຢູດາ

Sennacharib’s Invasion

(2 ກສດ 18:13-19:34; ອຊຢ 36:2-22)

1 ພາຍຫລັງເຫດການເຫລົ່ານີ້ແລະກິຈການອັນຊື່ສັດເຫລົ່ານີ້ ເຊນນາເຄຣິບກະສັດອັສຊີເຣັຽຍົກມາຕໍ່ສູ້ຢູດາ ແລະຕັ້ງ
ຄ້າຍລ້ອມຫົວເມືອງທີ່ມີປ້ອມໄວ້ ຊົງດໍາຣິທີ່ຈະຍຶດໄວ້
2 ເມື່ອເຮເຊກີຢາຊົງເຫັນວ່າເຊນນາເຄຣິບຍົກມາດ້ວຍເຈຕນາຈະຕໍ່ສູ້ກັບເຢຣູຊາເລັມ
3 ພຣະອົງຊົງວາງແຜນການກັບເຈົ້ານາຍຂອງພຣະອົງ ແລະທະຫານເອກຂອງພຣະອົງທີ່ຈະອັດນໍ້າຕາມນໍ້າພຸທີ່ຢູ່ນອກ
ເມືອງເສັຽ ແລະເຂົາທັງຫລາຍກໍຊົງຊ່ອຍພຣະອົງ
4 ມີປະຊາຊົນເປັນຈໍານວນຫລວງຫລາຍຮວບຮວມກັນເຂົ້າມາ ແລະເຂົາທັງຫລາຍອັດນໍ້າພຸແລະປິດລໍາຫ້ວຍຊຶ່ງໄຫລ
ຜ່ານແຜ່ນດິນເສັຽ ເວົ້າວ່າ, “ເປັນຫຍັງຈະໃຫ້ບັນດາກະສັດອັສຊີເຣັຽຍົກມາພົບນໍ້າເປັນອັນມາກ”
5 ພຣະອົງຊົງປະກອບກິຈຢ່າງບຶກບືນ ສ້າງກໍາແພງທີ່ສລັກຫັກພັງນັ້ນທົ່ວໄປໃຫມ່ ແລະສ້າງຫໍຄອຍຂຶ້ນ ແລະຊົງສ້າງກໍາ
ແພງຂ້າງນອກອີກຊັ້ນນຶ່ງ ແລະພຣະອົງຊົງເສີມກໍາແພງປ້ອມມິນໂລທີ່ນະຄອນດາວິດ ຊົງສ້າງອາວຸດແລະໂລ່ເປັນຈໍາ
ນວນຫລາຍ
6 ພຣະອົງຊົງຕັ້ງຜູ້ບັງຄັບການຕໍ່ຕ້ານໄວ້ເຫນືອປະຊາຊົນ ແລະຊົງຮວບຮວມເຂົ້າໄວ້ດ້ວຍກັນໃນເດີ່ນປະຕູນະຄອນ
ແລະກ່າວຢ່າງຫນູນໃຈເຂົາທັງຫລາຍວ່າ,
7 “ຈົ່ງເຂັ້ມແຂງແລະກ້າຫານເຖີດ ຢ່າຢ້ານຫລືທໍ້ຖອຍຕໍ່ກະສັດອັສຊີເຣັຽ ແລະຕໍ່ກອງທັບທັງສິ້ນທີ່ຢູ່ກັບເຂົານັ້ນ ເພາະມີ
ຜູ້ນຶ່ງຝ່າຍ  ເຮົາທີ່ໃຫຍ່ກວ່າຝ່າຍເຂົາ
8 ຝ່າຍເຂົາມີແຕ່ກໍາລັງເນື້ອຫນັງ ແຕ່ຝ່າຍເຮົາມີພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາຊົງສະຖິດກັບເຮົາທີ່ຊົງຊ່ອຍເຮົາແລະ
ສູ້ຮົບຝ່າຍເຮົາ” ປະຊາຊົນກໍວາງໃຈໃນພຣະດໍາຣັດຂອງເຮເຊກີຢາພຣະຣາຊາແຫ່ງຢູດາ
9 ພາຍຫລັງເຊນນາເຄຣິບພຣະຣາຊາແຫ່ງອັສຊີເຣັຽ ຜູ້ຊຶ່ງກໍາລັງລ້ອມເມືອງລາຄິສຢູ່ດ້ວຍກໍາລັງຮົບທັງສິ້ນຂອງພຣະອົງ
ໄດ້ຮັບສັ່ງໃຫ້ຂ້າຣາຊການຂອງພຣະອົງໄປຍັງກຸງເຢຣູຊາເລັມເຖິງເຮເຊກີຢາພຣະຣາຊາຂອງຢູດາ ແລະເຖິງປະຊາ
ຊົນທັງປວງຂອງຢູດາທີ່ຢູ່ໃນເຢຣູຊາເລັມວ່າ,
10 “ເຊນນາເຄຣິບພຣະຣາຊາແຫ່ງອັສຊີເຣັຽກ່າວດັ່ງນີ້ວ່າ “ເຈົ້າທັງຫລາຍເພິ່ງຫຍັງ ເຈົ້າຈຶ່ງຫມັ້ນໃຈຍັງຢູ່ໃນກຸງເຢຣູຊາ
ເລັມທີ່ຖືກປິດລ້ອມນີ້
11 ເຮເຊກີຢາບໍ່ໄດ້ພາເຈົ້າໃຫ້ຫລົງ ເພື່ອຈະມອບໃຫ້ເຈົ້າຕາຍດ້ວຍການອຶດອາຫານແລະຄວາມຫິວຫລື ໃນເມື່ອເຂົາ
ບອກເຈົ້າວ່າ     “ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາຈະຊົງຊ່ອຍກູ້ເຮົາຈາກມືຂອງພຣະຣາຊາອັສຊີເຣັຽ”
12 ເຮເຊກີຢາຄົນນີ້ແຫລະບໍ່ແມ່ນຫລືທີ່ໄດ້ກໍາຈັດສະຖານນະມັສການທີ່ສູງ ແລະແທ່ນບູຊາຂອງພຣະອົງແລະບັນຊາແກ່
ຢູດາກັບເຢຣູຊາເລັມວ່າ “ເຈົ້າຈົ່ງນະມັສການຢູ່ຫນ້າແທ່ນບູຊາແທ່ນດຽວ ແລະເຈົ້າຈົ່ງເຜົາເຄື່ອງບູຊາເທິງແທ່ນນັ້ນ”
13 ເຈົ້າບໍ່ຮູ້ຫລືວ່າເຮົາແລະບັນພະບຸຣຸດຂອງເຮົາໄດ້ກະທໍາສິ່ງໃດແກ່ຊົນຊາດທັງຫລາຍ ພຣະຂອງບັນດາປະຊາຊາດ
ແຫ່ງປະເທດເຫລົ່ານັ້ນສາມາດທີ່ຈະຊ່ອຍກູ້ປະເທດຂອງເຂົາໃຫ້ພົ້ນຈາກມືຂອງເຮົາຫລື
14 ໃນພວກພຣະທັງປວງແຫ່ງປະຊາຊາດເຫລົ່ານັ້ນທີ່ບັນພະບຸຣຸດຂອງເຮົາໄດ້ທໍາລາຍເສັຽຢ່າງສິ້ນເຊີງ ຍັງມີພຣະອົງໃດ
ແດ່ທີ່ສາມາດຊ່ອຍກູ້ປະຊາກອນຂອງຕົນຈາກມືຂອງເຮົາ ແລ້ວພຣະເຈົ້າຂອງເຈົ້າຫລືຈະສາມາດຊ່ອຍກູ້ເຈົ້າຈາກມື
ຂອງເຮົາ
15 ເຫດສັນນັ້ນຢ່າໃຫ້ເຮເຊກີຢາລໍ້ລວງເຈົ້າ ຫລືພາເຈົ້າໃຫ້ຫລົງໃນທໍານອງນີ້ ຢ່າເຊື່ອເຂົາ ເພາະບໍ່ມີພຣະແຫ່ງປະຊາ
ຊາດຫລືຣາຊ  ອານາຈັກໃດທີ່ສາມາດຊ່ອຍກູ້ປະຊາກອນຂອງຕົນຈາກມືຂອງເຮົາຫລືຈາກມືບັນພະບຸຣຸດຂອງເຮົາ ພ
ຣະເຈົ້າຂອງເຈົ້າຈະກູ້ເຈົ້າຈາກມືຂອງເຮົາໄດ້ນ້ອຍຍິ່ງກວ່ານັ້ນຈັກເທົ່າໃດ”

16 ແລະຂ້າຣາຊການຂອງພຣະອົງກໍກ່າວທັບຖົມພຣະເຈົ້າແລະເຮເຊກີຢາຜູ້ຮັບໃຊ້ຂອງພຣະອົງຫລາຍຍິ່ງກວ່ານັ້ນ
17 ພຣະອົງຊົງພຣະອັກສອນຫມິ່ນປມາດພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນ ແລະກ່າວທັບຖົມພຣະອົງວ່າ "ພຣະຂອງບັນດາປະຊາຊາດແຫ່ງປະເທດທັງຫລາຍບໍ່ໄດ້ຊ່ອຍກູ້ປະຊາກອນຂອງຕົນຈາກມືຂອງເຮົາສັນໃດ ພຣະເຈົ້າຂອງເຮເຊກີຢາກໍຈະບໍ່ຊ່ອຍກູ້ປະຊາກອນຂອງຕົນຈາກມືຂອງເຮົາສັນນັ້ນ"
18 ເຂົາທັງຫລາຍກໍຮ້ອງຄວາມນີ້ດ້ວຍສຽງອັນດັງເປັນພາສາຢູດາໃຫ້ຊາວເຢຣູຊາເລັມຜູ້ຢູ່ເທິງກຳແພງຟັງ ເພື່ອໃຫ້ເຂົາຕົກໃຈແລະຢ້ານກົວ ຈະໄດ້ຍຶດເອົາເມືອງນັ້ນ
19 ເຂົາໄດ້ເວົ້າເຖິງພຣະເຈົ້າແຫ່ງເຢຣູຊາເລັມຢ່າງກັບທີ່ເຂົາເວົ້າເຖິງພຣະແຫ່ງຊົນຊາດທັງຫລາຍຂອງແຜ່ນດິນໂລກ ຊຶ່ງເປັນຜົນງານຂອງມືມະນຸດ

**ພຣະເຈົ້າຊົງຊ່ອຍກູ້ເຮເຊກີຢາ**

Sennacherib's Defeat and Death

(2 ກສດ 19:1-37; ອຊຢ 37:1-38)

20 ແລ້ວເຮເຊກີຢາພຣະຣາຊາແລະເອຊາຢາຜູ້ປະກາດພຣະທັມ ບຸດອາໂມສ ໄດ້ອ້ອນວອນເພາະເຣື່ອງນີ້ແລະຮ້ອງທູນຕໍ່ຟ້າສວັນ
21 ແລະພຣະຜູ້ເປັນເຈົ້າຊົງໃຊ້ທູດສວັນອົງນຶ່ງ ຊຶ່ງໄດ້ຕັດທະຫານເອກທັງປວງແລະຜູ້ບັງຄັບກອງແລະນາຍທະຫານໃນຄ້າຍຂອງ  ພຣະຣາຊາອັສຊີເຣັຽ ເຫດສັນນັ້ນພຣະອົງຈຶ່ງສະເດັດກັບໄປຍັງແຜ່ນດິນຂອງພຣະອົງດ້ວຍຄວາມອັບອາຍຂາຍຫນ້າ ແລະເມື່ອ  ພຣະອົງສະເດັດເຂົ້າໃນພຣະວິຫານແຫ່ງພຣະຂອງພຣະອົງໂອຣົດບາງອົງຂອງພຣະອົງເອງໄດ້ຟັນພຣະອົງລົງດ້ວຍດາບ
22 ດັ່ງນັ້ນພຣະຜູ້ເປັນເຈົ້າຈຶ່ງຊົງຊ່ອຍເຮເຊກີຢາ ແລະຊາວເຢຣູຊາເລັມຈາກມືຂອງເຊນນາເຄຣິບພຣະຣາຊາແຫ່ງອັສຊີເຣັຽແລະຈາກມືຂອງສັດຕຣູທັງສິ້ນຂອງພຣະອົງ ແລະພຣະອົງຊົງນຳເຂົາທັງຫລາຍຢູ່ທຸກດ້ານ
23 ແລະຄົນເປັນຈຳນວນຫລວງຫລາຍນຳຂອງກຳນັນຖວາຍພຣະຜູ້ເປັນເຈົ້າມາຍັງເຢຣູຊາເລັມແລະສິ່ງປະເສີດຕ່າງໆມາຖວາຍເຮເຊກີຢາພຣະຣາຊາແຫ່ງຢູດາ ພຣະອົງຈຶ່ງຊົງເປັນທີ່ຍົກຍ້ອງໃນສາຍຕາຂອງປະຊາຊາດທັງປວງ ຕັ້ງແຕ່ເວລານັ້ນເປັນຕົ້ນມາ

**ເຮເຊກີຢາປະຊວນ**

Hezekiah's Sickness

(2 ກສດ 20:1-11; ອຊຢ 38:1-8)

24 ຄັ້ງນັ້ນເຮເຊກີຢາຊົງປະຊວນໃກ້ຈະສິ້ນພຣະຊົນ ແລະພຣະອົງທູນອ້ອນວອນຕໍ່ພຣະເຈົ້າ ແລະພຣະເຈົ້າຊົງຕອບແລະປະທານຫມາຍສຳຄັນຢ່າງນຶ່ງໃຫ້ແກ່ເຮເຊກີຢາ
25 ແຕ່ເຮເຊກີຢາບໍ່ໄດ້ສນອງພຣະຄຸນນັ້ນ ເພາະພຣະທັຍຂອງພຣະອົງຜຍອງຂຶ້ນ ເຫດສັນນັ້ນພຣະພິໂຣດຈຶ່ງມາເຫນືອກະສັດຢູດາແລະເຢຣູຊາເລັມ
26 ແຕ່ເຮເຊກີຢາຊົງອ່ອນນ້ອມຖ່ອມພຣະທັຍທີ່ກຳເຣີບນັ້ນລົງທັງພຣະອົງແລະຊາວເຢຣູຊາເລັມ ພຣະພິໂຣດຂອງພຣະຜູ້ເປັນເຈົ້າຈຶ່ງບໍ່ໄດ້ມາເຫນືອເຂົາທັງຫລາຍໃນຣັຊການເຮເຊກີຢາ

**ເຮເຊກີຢາຊົງຮັບຄນະທູດຈາກກຸງບາບີໂລນ** Hezekiah's Prosperity and Achievements

(2 ກສດ 20:12-21; ອຊຢ 39:1-8)

27 ເຮເຊກີຢາຊົງມີຣາຊຊັບແລະກຽດໃຫຍ່ຍິ່ງ ແລະພຣະອົງຊົງສ້າງຄັງໄວ້ສຳລັບພຣະອົງ ເພື່ອເກັບເງິນ ທອງຄຳ ແລະເພັດນິນຈິນດາ ເຄື່ອງເທດ ໂລ່ ແລະສຳລັບເຄື່ອງໃຊ້ດີໆທຸກຊະນິດ
28 ທັງສາງສຳລັບເຂົ້າ ເຫລົ້າອະງຸ່ນ ແລະນ້ຳມັນ ທີ່ຜລິດມາ ແລະໂຮງເກັບສັດລ້ຽງທຸກຊະນິດ ແລະຄອກແກະ
29 ພຣະອົງຊົງຈັດຫົວເມືອງເພື່ອພຣະອົງດ້ວຍ ທັງຝູງແບ້ແກະ ແລະຝູງງົວເປັນອັນມາກ ເພາະພຣະຜູ້ເປັນເຈົ້າຊົງປະທານຊັບສົມບັດໃຫ້ພຣະອົງມາກຍິ່ງ

30 ເຮເຊກີຢາອົງນີ້ເອງຊົງປິດນໍ້າອອກຕອນເທິງຂອງນໍ້າພຸກີໂຮນເສັຽ ແລ້ວນຳໄປໃຫ້ໄຫລລົງໄປທາງທິດຕາເວັນຕົກຂອງ
ນະຄອນດາວິດ ແລະເຮເຊກີຢາຊົງຈຳເຣີນໃນພຣະຣາຊກິດທັງສິ້ນຂອງພຣະອົງ
31 ສະນັ້ນໃນເຣື່ອງທູດທີ່ເຈົ້ານາຍເມືອງບາບີໂລນໃຊ້ໃຫ້ມາຖາມເຖິງຫມາຍສຳຄັນຊຶ່ງໄດ້ເກີດຂຶ້ນໃນແຜ່ນດິນ ພຣະຜູ້
ເປັນເຈົ້າກໍຊົງປ່ອຍພຣະອົງຕາມອຳເພີໃຈ ເພື່ອຈະທົດລອງພຣະອົງ ແລະເພື່ອຈະຊາບພຣະດຳຣິທັງສິ້ນໃນພຣະທັຍ
ຂອງພຣະອົງ
32 ຝ່າຍພຣະຣາຊກິດນອກນັ້ນຂອງເຮເຊກີຢາ ແລະກິຈການອັນດີຂອງພຣະອົງ ເບິ່ງແມ, ມີບັນທຶກໄວ້ໃນນິມິດຂອງເອ
ຊາຢາຜູ້ປະກາດພຣະທັມບຸດອາໂມສໃນຫນັງສືພົງສາວະດານຂອງຢູດາແລະອິສຣາເອນ
33 ແລະເຮເຊກີຢາລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຂົາຝັງພຣະສົບໄວ້ທີ່ທາງຂຶ້ນອຸບໂມງຂອງໂອຣົດ
ຂອງດາວິດ ແລະບັນດາຄົນຢູດາແລະຊາວເຢຣູຊາເລັມທັງປວງໄດ້ຖວາຍກຽດເມື່ອພຣະອົງສິ້ນພຣະຊົນ ແລະມານັສ
ເຊໂອຣົດຂອງພຣະອົງໄດ້ຂຶ້ນປົກຄອງແທນພຣະອົງ

## 33 ຣັຊການມານັສເຊ

Reign of Manasseh

(2 ກສດ 21:1-9)

1 ເມື່ອມານັສເຊເລີ້ມປົກຄອງມີອາຍຸສິບສອງປີ ແລະພຣະອົງຊົງປົກຄອງໃນເຢຣູຊາເລັມຫ້າສິບຫ້າປີ
2 ພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າ ຕາມການກະທຳທີ່ຫນ້າກຽດຊັງແຫ່ງປະຊາຊາດ
ຊຶ່ງພຣະຜູ້ ເປັນເຈົ້າຊົງຂັບໄລ່ໄປເສັຽຈາກຂ້າງຫນ້າປະຊາຊົນອິສຣາເອນ
3 ເພາະພຣະອົງຊົງສ້າງສະຖານນະມັສການທີ່ສູງຂຶ້ນໃຫມ່ ຊຶ່ງເຮເຊກີຢາພຣະຣາຊບິດາຂອງພຣະອົງໄດ້ຊົງພັງລົງນັ້ນ
ແລະຊົງສ້າງແທ່ນບູຊາແດ່ພຣະບາອານ ແລະຊົງທຳບັນດາອາເຊຣາ ແລະນະມັສການບໍຣິວານທັງສິ້ນຂອງຟ້າສວັນ
ແລະບົວລະບັດພຣະ ເຫລົ່ານັ້ນ
4 ພຣະອົງຊົງສ້າງແທ່ນບູຊາໃນພຣະວິຫານຂອງພຣະຜູ້ເປັນເຈົ້າຊຶ່ງພຣະເຈົ້າກ່າວວ່າ, “ນາມຂອງເຮົາຈະຢູ່ໃນເຢຣູຊາ
ເລັມເປັນນິດ”
5 ແລະພຣະອົງໄດ້ຊົງສ້າງແທ່ນບູຊາສຳລັບບໍຣິວານຟ້າສວັນ ໃນເດີ່ນທັງສອງແຫ່ງພຣະວິຫານຂອງພຣະຜູ້ເປັນເຈົ້າ
6 ແລະພຣະອົງໄດ້ຊົງຖວາຍໂອຣົດຂອງພຣະອົງ ໃຫ້ລຸຍໄຟເປັນເຄື່ອງບູຊາໃນຮ່ອມພູບຸດຮິນໂນມ ຖືເລີກຍາມ ເວດມົນ
ຄາຖາ ແລະຕິດຕໍ່ກັບຄົນຊົງແລະພໍ່ມົດແມ່ມົດ ພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍຫລາຍທີ່ສຸດໃນສາຍພຣະເນດພຣະຜູ້
ເປັນເຈົ້າກະທຳໃຫ້ພຣະອົງຊົງພຣະພິໂຣດ
7 ແລະຮູບໂຄຣົບສລັກຊຶ່ງພຣະອົງຊົງສ້າງນັ້ນ ພຣະອົງຊົງຕັ້ງໄວ້ໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ຊຶ່ງພຣະຜູ້ເປັນເຈົ້າ
ກ່າວວ່າ, “ໃນວິຫານນີ້ແລະໃນເຢຣູຊາເລັມຊຶ່ງເຮົາໄດ້ເລືອກອອກຈາກເຜົ່າທັງສິ້ນຂອງອິສຣາເອນ ເຮົາຈະບັນຈຸນາມ
ຂອງເຮົາໄວ້ເປັນນິດ
8 ແລະເຮົາຈະບໍ່ໃຫ້ຕີນຂອງອິສຣາເອນພະເນຈອນອອກໄປຈາກແຜ່ນດິນຊຶ່ງເຮົາໄດ້ກຳນົດໃຫ້ບັນພະບຸຣຸດຂອງເຈົ້າອີກ
ເລີຍ ຖ້າເຂົາພຽງແຕ່ຈະລະມັດລະວັງກະທຳທຸກຢ່າງຊຶ່ງເຮົາໄດ້ສັ່ງເຂົາໄວ້ ຄືພຣະທັມ ກົດເກນແລະກົດຫມາຍທັງສິ້ນ
ຊຶ່ງໄດ້ໃຫ້ໄວ້ກັບໂມເຊ”
9 ມານັສເຊຊົງຊັກຈູງຢູດາແລະຊາວເຢຣູຊາເລັມໃຫ້ຫລົງ ເຂົາຈຶ່ງໄດ້ກະທຳຊົ່ວຮ້າຍຍິ່ງກວ່າບັນດາປະຊາຊາດຊຶ່ງພຣະ
ຜູ້ເປັນເຈົ້າໄດ້ຊົງທຳລາຍໃຫ້ພົ້ນຫນ້າປະຊາຊົນອິສຣາເອນນັ້ນ

Manasseh Restored after repentance

10 ພຣະຜູ້ເປັນເຈົ້າກ່າວກັບມານັສເຊແລະປະຊາຊົນຂອງພຣະອົງ ແຕ່ເຂົາທັງຫລາຍບໍ່ຟັງ

11 ເຫດສັນນັ້ນພຣະຜູ້ເປັນເຈົ້າຊົງໃຫ້ຜູ້ບັງຄັບກອງທະຫານຂອງພຣະຣາຊາແຫ່ງອັສຊີເຣັຽມາຕໍ່ສູ້ເຂົາທັງຫລາຍ ເອົາເບັດ
ເກາະມາ ນັສເຊແລະຈຳຈອງດ້ວຍທອກທອງສຳຣິດແລະນຳພຣະອົງມາຍັງບາບີໂລນ
12 ເມື່ອພຣະອົງຊົງທຸກຍາກ ພຣະອົງຊົງວິງວອນຂໍພຣະກະຣຸນາຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງພຣະອົງ ແລະຖ່ອມພຣະ
ທັຍລົງຢ່າງຫລາຍຕໍ່ພຣະຜູ້ເປັນເຈົ້າຂອງບັນພະບຸຣຸດຂອງພຣະອົງ
13 ພຣະອົງຊົງອ້ອນວອນຕໍ່ພຣະຜູ້ເປັນເຈົ້າແລະພຣະຜູ້ເປັນເຈົ້າຊົງຮັບຄຳວິງວອນຂອງທ່ານແລະຊົງຟັງຄຳອ້ອນວອນ
ຂອງທ່ານ ແລະນຳທ່ານກັບມາຍັງກຸງເຢຣູຊາເລັມໃນຣາຊອານາຈັກຂອງທ່ານອີກ ແລ້ວມານັສເຊຊົງຊາບວ່າພຣະຜູ້
ເປັນເຈົ້າຊົງເປັນພຣະເຈົ້າ
14 ພາຍຫລັງພຣະອົງຊົງສ້າງກຳແພງຊັ້ນນອກໃຫ້ນະຄອນດາວິດທາງຕາເວັນຕົກຂອງກີໂຮນໃນຮ່ອມພູໄປຈົນເຖິງທາງ
ເຂົ້າປະຕູປາ ແລ້ວວົງຮອບເມືອງໂອເຟນ ແລະກໍ່ຂຶ້ນໃຫ້ສູງຫລາຍ ແລະພຣະອົງຊົງຕັ້ງຜູ້ບັງຄັບບັນຊາກອງທັບໃຫ້ຢູ່
ໃນທົ່ວເມືອງມີປ້ອມໃນຢູດາທັງສິ້ນ
15 ພຣະອົງຊົງເອົາພຣະຕ່າງດ້າວແລະຮູບໂຄຣົບໄປເສັຽຈາກພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະແທ່ນບູຊາທັງສິ້ນຊຶ່ງ
ພຣະອົງໄດ້ຊົງສ້າງໄວ້ເທິງພູແຫ່ງພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະໃນເຢຣູຊາເລັມ ແລະພຣະອົງຊົງຖິ້ມອອກໄປ
ນອກເມືອງ
16 ພຣະອົງຊົງສ້ອມແທ່ນບູຊາຂອງພຣະຜູ້ເປັນເຈົ້າ ແລະຊົງຖວາຍເຄື່ອງສັຕບູຊາ ເປັນເຄື່ອງສານຕິບູຊາແລະເຄື່ອງໂມ
ທະນາພຣະຄຸນເທິງແທ່ນນັ້ນ ແລະພຣະອົງຊົງບັນຊາໃຫ້ຢູດາບົວລະບັດພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາເທົ່ານັ້ນ
17 ສ່ວນພຣະຣາຊກິຈນອກນັ້ນຂອງມານັສເຊ ແລະຄຳອ້ອນວອນຂອງພຣະອົງຕໍ່ພຣະຜູ້ເປັນເຈົ້າ ແລະຖ້ອຍຄຳຂອງຜູ້
ທຳນວາຍ ຜູ້ທູນພຣະອົງໃນພຣະນາມຂອງພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນ ເບິ່ງແມ, ມີບັນທຶກໄວ້ໃນຫນັງສື
ຣາຊກິຈຂອງກະສັດແຫ່ງອິສຣາເອນ

**ມໍຣະນະກັມຂອງມານັສເຊ**

Death of Manasseh

(2 ກສດ 21:17-18)

18 ແລະຄຳອ້ອນວອນຂອງພຣະອົງ ແລະເຣື່ອງທີ່ພຣະຜູ້ເປັນເຈົ້າຊົງຮັບຄຳວິງວອນຂອງພຣະອົງ ບາບທັງສິ້ນຂອງພຣະ
ອົງ ແລະຄວາມບໍ່ຊື່ຂອງພຣະອົງທັງສິ້ນ ແລະສະຖານທີ່ຊຶ່ງພຣະອົງຊົງສ້າງສະຖານນະມັສການທີ່ສູງ ແລະຕັ້ງບັນດາ
ອາເຊຣາແລະຮູບໂຄຣົບ ກ່ອນທີ່ພຣະອົງຊົງຖ່ອມພຣະອົງລົງນັ້ນ ເບິ່ງແມ, ເຂົາບັນທຶກໄວ້ໃນຫນັງສືປະຫວັດທີ່ຜູ້ທຳນ
ວາຍແຕ່ງ
19 ມານັສເຊຈຶ່ງຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຂົາຝັງພຣະສົບໄວ້ໃນພຣະຣາຊວັງຂອງພຣະອົງ
ແລະອາໂມນໂອຣົດຂອງພຣະອົງໄດ້ຂຶ້ນປົກຄອງແທນພຣະອົງ

**ຣັຊການຂອງອາໂມນ**

Amon’s Reign and Death

(2 ກສດ 21:19-26)

20 ເມື່ອອາໂມນເລີ້ມປົກຄອງມີອາຍຸສິບສອງປີ ແລະພຣະອົງຊົງປົກຄອງເຢຣູຊາເລັມສອງປີ
21 ພຣະອົງຊົງກະທຳຄວາມຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າ ຢ່າງມານັສເຊຣາຊບິດາຂອງພຣະອົງຊົງກະທຳ
ນັ້ນ ອາໂມນຖວາຍສັຕບູຊາແກ່ຮູບໂຄຣົບທັງສິ້ນ ຊຶ່ງມານັສເຊຣາຊບິດາຂອງພຣະອົງໄດ້ຊົງສ້າງຂຶ້ນ ແລະຊົງບົວລະ
ບັດຮູບໂຄຣົບນັ້ນ
22 ພຣະອົງບໍ່ໄດ້ຖ່ອມພຣະອົງລົງຕໍ່ພຣະຜູ້ເປັນເຈົ້າ ຢ່າງມານັສເຊຣາຊບິດາຂອງພຣະອົງໄດ້ຖ່ອມພຣະອົງລົງນັ້ນ ແຕ່ອາ
ໂມນອົງນີ້ໄດ້ກໍ່ກັມຊົ່ວຍິ່ງໆຂຶ້ນ
23 ແລ້ວຂ້າຣາຊການຂອງພຣະອົງກໍຮ່ວມກັນຄິດກະບົດຕໍ່ພຣະອົງ ແລະໄດ້ຂ້າພຣະອົງເສັຽໃນພຣະຣາຊວັງຂອງພຣະອົງ

24 ແຕ່ຣາສດອນໄດ້ປະຫານບັນດາຄົນເຫລົ່ານັ້ນທີ່ຄິດກະບົດຕໍ່ກະສັດອາໂມນ ແລະຣາສດອນໄດ້ແຕ່ງຕັ້ງໃຫ້ເຢຊີຢາໂອ
ຣົດຂອງພຣະອົງຂຶ້ນປົກຄອງແທນພຣະອົງ

## 34 ຣັຊການໂຢຊີຢາ

Reign of Josiah

(2 ກສດ 22:1-2)

1 ເມື່ອໂຢຊີຢາເລີ້ມປົກຄອງມີອາຍຸແປດປີ ແລະພຣະອົງຊົງປົກຄອງໃນເຢຣູຊາເລັມສາມສິບເອັດປີ
2 ພຣະອົງຊົງກະທໍາສິ່ງທີ່ຊອບໃນສາຍພຣະເນດພຣະຜູ້ເປັນເຈົ້າ ແລະດໍາເນີນໃນທາງຂອງດາວິດບັນພະບຸຣຸດຂອງພ
ຣະອົງ ແລະ  ພຣະອົງບໍ່ໄດ້ຊົງຫັນໄປທາງຂວາຫລືທາງຊ້າຍ

**ໂຢຊີຢາຊົງປະຕິຮູບງານດ້ານສາສນາ**

3 ເພາະໃນປີທີແປດແຫ່ງຣັຊການຂອງພຣະອົງ ເມື່ອພຣະອົງຍັງຊົງພຣະເຍົາຢູ່ ພຣະອົງຊົງເລີ້ມສແວງຫາພຣະຜູ້ເປັນເຈົ້
າຂອງດາວິດບັນພະບຸຣຸດຂອງພຣະອົງ ແລະໃນປີທີສິບສອງພຣະອົງຊົງເລີ້ມກວາດລ້າງຢູດາແລະເຢຣູຊາເລັມດ້ວຍ
ການກໍາຈັດສະຖານນະມັສການທີສູງ ທັງບັນດາອາເຊຣາແລະຮູບໂຄຣົບຫລໍ່
4 ເຂົາພັງແທ່ນບູຊາພຣະບາອານລົງຕໍ່ພຣະພັກຂອງພຣະອົງ ແລະພຣະອົງຊົງຮື້ແທ່ນເຄື່ອງຫອມຊຶ່ງຕັ້ງຢູ່ເທິງນັ້ນລົງ
ແລະພຣະອົງຊົງທໍາລາຍບັນດາອາເຊຣາແລະຮູບໂຄຣົບຫລໍ່ເສັຽ ແລະຊົງກະທໍາໃຫ້ເປັນຜົງໂຮຍເທິງຫລຸມຝັງສົບຂອງ
ບັນດາຄົນທີ່ຖວາຍສັດບູຊາແກ່ພຣະເຫລົ່ານັ້ນ
5 ພຣະອົງຊົງເຜົາກະດູກຂອງປະໂຣຫິດເທິງແທ່ນພຣະເຫລົ່ານັ້ນ ແລະຊົງກວາດຢູດາແລະເຢຣູຊາເລັມ
6 ແລະໃນຫົວເມືອງຂອງເຜົ່າມານັສເຊ ເອຟຣາອິມ ແລະຊີເມໂອນ ແລະໄປເຖິງເນັບທາລີ ໃນທີ່ສລັກຫັກພັງຊຶ່ງຢູ່ໂດຍ
ຮອບ
7 ພຣະອົງຊົງທໍາລາຍແທ່ນບູຊາ ແລະຊົງທຸບບັນດາເອຊາຣາແລະຮູບໂຄຣົບໃຫ້ເປັນຜົງ ແລະຊົງຮື້ແທ່ນເຄື່ອງຫອມທັງ
ສິ້ນລົງທົ່ວແຜ່ນດິນອິສຣາເອນ ແລ້ວພຣະອົງສະເດັດກັບເຢຣູຊາເລັມ

Discovery of the Book of the Law

(2 ກສດ 22:3-20)

8 ໃນປີທີສິບແປດແຫ່ງຣັຊການຂອງພຣະອົງ ເມື່ອພຣະອົງຊົງກວາດລ້າງແຜ່ນດິນແລະພຣະວິຫານ ພຣະອົງຊົງໃຊ້ຊາ
ຟານ ບຸດອາຊາລີຢາ ແລະມາອາຊັຍຢາຜູ້ວ່າຣາຊການ ແລະໂຢອາ ບຸດໂຢອາຮັສ ເຈົ້າກົມສາຣະບັນໃຫ້ສ້ອມແຊມພ
ຣະວິຫານຂອງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພຣະອົງ
9 ເຂົາທັງຫລາຍມາຫາຮີນຄີຢາມະຫາປະໂຣຫິດ ແລະໄດ້ມອບເງິນຊຶ່ງຄົນທັງຫລາຍນໍາມາຍັງພຣະວິຫານຂອງພຣະ
ເຈົ້າ ຊຶ່ງຄົນເລວີຜູ້ເຝົ້າປະຕູໄດ້ເກັບຈາກມານັສເຊແລະເອຟຣາອິມ ແລະຈາກຄົນທີ່ເຫລືອຂອງອິສຣາເອນ ແລະຈາກ
ຢູດາກັບເບັນຢາມິນທັງສິ້ນ ແລະຈາກຊາວເຢຣູຊາເລັມ
10 ເຂົາທັງຫລາຍມອບແກ່ຄົນທໍາງານຜູ້ດູແລພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະຄົນທໍາງານຜູ້ທໍາງານຢູ່ໃນພຣະວິ
ຫານຂອງພຣະຜູ້ເປັນເຈົ້າມອບໃຫ້ ເພື່ອການສ້ອມແຊມພຣະວິຫານໃຫ້ໝັ້ນຄົງ
11 ເຂົາທັງຫລາຍມອບໃຫ້ແກ່ຊ່າງໄມ້ແລະຊ່າງກໍ່ສ້າງເພື່ອຈະຊື້ຫີນສລັກແລະໄມ້ກະດານ ເພື່ອໃຊ້ສໍາລັບສ້ອມແປງອາ
ຄານ ຊຶ່ງພຣະຣາຊາແຫ່ງຢູດາໄດ້ປ່ອຍໃຫ້ຊຸດໂຊມພັງທະລາຍໄປ
12 ຄົນທັງຫລາຍກໍທໍາງານຢ່າງຊື່ສັດສຸຈຣິດ ຜູ້ຄຸມງານມີ ຢາຮາດແລະໂອບາດີຢາຄົນເລວີລູກຫລານຂອງເມຣາຣີ ແລະ
ເຊຄາຣີຢາກັບເມຊູນລາມລູກຫລານຂອງຄົນໂກຮາດເປັນຜູ້ດູແລ ຄົນເລວີທຸກຄົນທີ່ຊໍານານເຄື່ອງດົນຕຣີ
13 ເປັນຜູ້ດູແລຄົນຫາບຫາມ ແລະບັນດາຄົນທີ່ທໍາງານບົວລະບັດທຸກຢ່າງ ຄົນເລວີບາງຄົນເປັນຜູ້ຮັກສາເອກະສານເປັນ
ເຈົ້າໜ້າທີ່ແລະເປັນນາຍປະຕູ

14 ຂນະທີ່ເຂົາທັງຫລາຍນຳເງິນທີ່ໄດ້ຖວາຍໃນພຣະວິຫານຂອງພຣະຜູ້ເປັນເຈົ້າອອກມາຮິນກີຢາປະໂຣຫິດໄດ້ພົບຫນັງ
ສືທັມບັນຍັດຂອງພຣະຜູ້ເປັນເຈົ້າຊຶ່ງຊົງປະທານທາງໂມເຊ
15 ແລະຮິນກີຢາເວົ້າກັບຊາຟານຣາຊເລຂາວ່າ, “ຂ້າພະເຈົ້າໄດ້ພົບຫນັງສືທັມບັນຍັດໃນພຣະວິຫານຂອງພຣະຜູ້ເປັນ
ເຈົ້າ” ແລະຮິນກີຢາກໍມອບຫນັງສືນັ້ນໃຫ້ຊາຟານ
16 ຊາຟານໄດ້ນຳຫນັງສືໄປຖວາຍພຣະຣາຊາ ແລະຕໍ່ໄປກໍທູນຣາຍງານພຣະຣາຊາວ່າ, “ສິ່ງທັງປວງທີ່ພຣະອົງຊົງມອບ
ຫມາຍແກ່ຜູ້ຮັບໃຊ້ຂອງພຣະອົງໃຫ້ກະທຳນັ້ນເຂົາກຳລັງກະທຳຢູ່ແລ້ວ”
17 ເຂົາຖອກເງິນຊຶ່ງພົບໃນພຣະວິຫານຂອງພຣະຜູ້ເປັນເຈົ້າອອກ ແລະໄດ້ມອບໄວ້ໃນມືຂອງຜູ້ດູແລແລະຄົນງານ
18 ແລ້ວຊາຟານຣາຊເລຂາທູນພຣະຣາຊາວ່າ, “ຮິນກີຢາປະໂຣຫິດໄດ້ມອບຫນັງສືແກ່ຂ້ານ້ອຍເຫລັ້ມນຶ່ງ” ແລ້ວຊາຟານ
ກໍອ່ານຖວາຍພຣະຣາຊາ
19 ແລະຕໍ່ມາເມື່ອພຣະຣາຊາຊົງສະດັບຖ້ອຍຄຳຂອງທັມບັນຍັດນັ້ນ ພຣະອົງຊົງຈີກສລອງພຣະອົງ
20 ພຣະຣາຊາຊົງສັ່ງແກ່ຮິນກີຢາ ອາຮີກາມບຸດຊາຟານ ອັບໂດນບຸດມີກາ ຊາຟານຣາຊເລຂາ ແລະອາຊາຢາຜູ້ຮັບໃຊ້
ຂອງພຣະຣາຊາກ່າວວ່າ,
21 “ຈົ່ງໄປທູນຖາມພຣະຜູ້ເປັນເຈົ້າໃຫ້ແກ່ເຮົາ ແລະໃຫ້ແກ່ບັນດາຜູ້ທີ່ເຫລືອຢູ່ໃນອິສຣາເອນແລະໃນຢູດາກ່ຽວກັບຖ້ອຍ
ຄຳໃນຫນັງສືຊຶ່ງໄດ້ພົບນັ້ນ ເພາະວ່າພຣະພິໂຣດຂອງພຣະຜູ້ເປັນເຈົ້າຊຶ່ງຖອກເຫລົງເຫນືອເຮົານັ້ນໃຫຍ່ຍິ່ງນັກ ເພາະ
ວ່າບັນພະບຸຣຸດຂອງເຮົາບໍ່ໄດ້ຮັກສາພຣະວັຈນະຂອງພຣະຜູ້ເປັນເຈົ້າຕາມຊຶ່ງຂຽນໄວ້ໃນຫນັງສືນີ້ທຸກປະການ”

The Prophet Huldah Consulted

22 ຮິນກີຢາແລະຄົນເຫລົ່ານັ້ນຊຶ່ງພຣະຣາຊາຊົງໃຊ້ໄປຈຶ່ງໄປຍັງຮຸນດາຍິງຜູ້ປະກາດພຣະທັມ ເມັຽຂອງຊັນລູມບຸດໂທກ
ຮາດ ບຸດ ຮັສຣາ ເປັນຄົນຮັບຜິດຊອບເຄື່ອງນຸ່ງໃນພຣະວິຫານ(ນາງຢູ່ໃນເຢຣູຊາເລັມເຂດທີສອງ) ແລະເວົ້າກັບ
ນາງເຖິງເຣື່ອງນັ້ນ
23 ແລະນາງເວົ້າກັບເຂົາວ່າ, “ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ “ຈົ່ງບອກຊາຍຜູ້ຊຶ່ງໃຊ້ພວກເຈົ້າ
ໃຫ້ມາຫາເຮົາວ່າ
24 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ່, ເຮົາຈະນຳເຫດຊົ່ວຮ້າຍມາເຫນືອສະຖານທີ່ນີ້ແລະເຫນືອຊາວເມືອງນີ້ ຄືຄຳ
ສາບທັງສິ້ນທີ່ບັນທຶກໄວ້ໃນຫນັງສືຊຶ່ງໄດ້ອ່ານຖວາຍພຣະຣາຊາແຫ່ງຢູດານັ້ນ
25 ເພາະວ່າເຂົາທັງຫລາຍໄດ້ປະຖິ້ມເຮົາແລະໄດ້ເຜົາເຄື່ອງຫອມຖວາຍພຣະອື່ນ ເພື່ອເຂົາຈະກະທຳໃຫ້ເຮົາໂກດດ້ວຍ
ການງານທັງສິ້ນແຫ່ງມືຂອງເຂົາ ເຫດສັນນັ້ນຄວາມພິໂຣດຂອງເຮົາຈະເຫລົງເຫນືອສະຖານທີ່ນີ້ແລະຈະດັບບໍ່ໄດ້
26 ແຕ່ພຣະຣາຊາຂອງຢູດາຜູ້ໃຊ້ເຈົ້າໃຫ້ມາທູນພຣະຜູ້ເປັນເຈົ້ານັ້ນ ເຈົ້າຈົ່ງທູນທ່ານດັ່ງນີ້ວ່າ ພຣະຜູ້ເປັນເຈົ້າພຣະເຈົ້າ
ແຫ່ງອິສຣາເອນກ່າວດັ່ງນີ້ວ່າ ເຣື່ອງຖ້ອຍຄຳຊຶ່ງເຈົ້າໄດ້ຍິນນັ້ນ
27 ເພາະເຈົ້າກັບໃຈແລ້ວແລະໄດ້ຖ່ອມຕົວລົງຕໍ່ພຣະພັກພຣະຜູ້ເປັນເຈົ້າ ເມື່ອເຈົ້າໄດ້ຍິນຖ້ອຍຄຳທີ່ປັກປຳສະຖານທີ່ນີ້
ແລະຊາວເມືອງນີ້ ເຈົ້າໄດ້ຖ່ອມຕົວລົງຕໍ່ເຮົາ ແລະເຈົ້າໄດ້ຈີກເຄື່ອງນຸ່ງຂອງເຈົ້າແລະຮ້ອງໄຫ້ຕໍ່ຫນ້າເຮົາ ພຣະຜູ້ເປັນ
ເຈົ້າກ່າວວ່າ ເຮົາໄດ້ຟັງເຈົ້າດ້ວຍ
28 ເບິ່ງແມ, ເຮົາຈະຮວບເຈົ້າໄປຢູ່ກັບບັນພະບຸຣຸດຂອງເຈົ້າ ແລະເຂົາຈະຮວບເຈົ້າໄປສູ່ທີ່ຝັງສົບຢ່າງສັນຕິ ແລະຕາຂອງ
ເຈົ້າຈະບໍ່ເຫັນເຫດຊົ່ວຮ້າຍຊຶ່ງເຮົາຈະນຳມາເຫນືອສະຖານທີ່ນີ້ ແລະຊາວເມືອງນີ້” ແລະເຂົາທັງຫລາຍນຳພຣະວັຈ
ນະກັບມາຍັງພຣະຣາຊາ

The Covenant renewed

**(2 ກສດ 23:1-20)**

29 ແລ້ວພຣະຣາຊາຮັບສັ່ງໃຫ້ຮວບຮວມບັນດາຜູ້ໃຫຍ່ຂອງຢູດາແລະເຢຣູຊາເລັມ

30 ພຣະຣາຊາສະເດັດຂຶ້ນໄປຍັງພຣະວິຫານຂອງພຣະຜູ້ເປັນເຈົ້າ ພ້ອມກັບຄົນທັງປວງຂອງຢູດາ ແລະຊາວເຢຣູຊາເລັມ
ກັບປະໂຣຫິດແລະຄົນເລວີ ຄົນທັງປວງທັງນ້ອຍແລະໃຫຍ່ແລະພຣະອົງຊົງອ່ານຖ້ອຍຄຳທັງສິ້ນໃນຫນັງສືຄຳຫມັ້ນ
ສັນຍາຊຶ່ງໄດ້ພົບໃນພຣະວິຫານຂອງພຣະຜູ້ເປັນເຈົ້າໃຫ້ເຂົາຟັງ
31 ພຣະຣາຊາປະທັບຢືນຢູ່ໃນພຣະທີ່ນັ່ງຂອງພຣະອົງ ແລະກະທຳຄຳສັນຍາຕໍ່ພຣະພັກພຣະຜູ້ເປັນເຈົ້າ ທີ່ຈະຊົງດຳເນີນ
ຕາມພຣະຜູ້ເປັນເຈົ້າແລະຮັກສາພຣະບັນຍັດພຣະໂອວາດແລະກົດເກນຂອງພຣະອົງດ້ວຍສຸດພຣະຈິດສຸດພຣະທັຍທີ່
ຈະຊົງປະກອບກິຈການຕາມຖ້ອຍຄຳຂອງຄຳສັນຍາຊຶ່ງບັນທຶກໄວ້ໃນຫນັງສືເຫລັ້ມນີ້
32 ແລ້ວພຣະອົງຊົງຮັບສັ່ງບັນດາຜູ້ທີ່ຢູ່ໃນເຢຣູຊາເລັມແລະໃນເບັນຢາມິນໃຫ້ເຂົ້າສ່ວນໃນຄຳສັນຍານັ້ນ ແລະຊາວເຢຣູ
ຊາເລັມກໍກະທຳຕາມຄຳສັນຍາຂອງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າຂອງບັນພະບຸຣຸດຂອງເຂົາທັງຫລາຍ
33 ແລະໂຢຊີຢາໄດ້ເອົາສິ່ງທີ່ຫນ້າກຽດຊັງທັງປວງໄປເສັຽຈາກເຂດແດນທັງສິ້ນ ຊຶ່ງເປັນຂອງປະຊາຊົນອິສຣາເອນ ແລະ
ຊົງກະທຳໃຫ້ບັນດາຜູ້ທີ່ຢູ່ໃນອິສຣາເອນບົວລະບັດພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາທັງຫລາຍຕລອດຣັຊການຂອງພ
ຣະອົງ ເຂົາທັງຫລາຍບໍ່ໄດ້ຫັນໄປຈາກການຕິດຕາມພຣະຜູ້ເປັນເຈົ້າພຣະເຈົ້າຂອງບັນພະບຸຣຸດຂອງເຂົາທັງຫລາຍ

## 35 ໂຢຊີຢາຊົງຖືເທສການປັສຄາ

Celebration of the Passover

(2 ກສດ 23:21-23)

1 ໂຢຊີຢາຊົງຖືເທສການປັສຄາຖວາຍແດ່ພຣະຜູ້ເປັນເຈົ້າໃນກຸງເຢຣູຊາເລັມ ຄັ້ງນຶ່ງເຂົາຂ້າແກະປັສຄາໃນວັນທີສິບສີ່
ຂອງເດືອນຕົ້ນ
2 ພຣະອົງຊົງແຕ່ງຕັ້ງປະໂຣຫິດໃຫ້ປະຈຳຫນ້າທີ່ ແລະຊົງສນັບສນຸນເຂົາໃນການບົວລະບັດພຣະວິຫານແຫ່ງພຣະຜູ້
ເປັນເຈົ້າ
3 ພຣະອົງກ່າວກັບຄົນເລວີ ຜູ້ບໍຣິສຸດຕໍ່ພຣະຜູ້ເປັນເຈົ້າ ຜູ້ສອນອິສຣາເອນທັງປວງວ່າ, "ຈົ່ງວາງຫີບບໍຣິສຸດໄວ້ໃນພຣະວິ
ຫານ ຊຶ່ງໂຊໂລໂມນໂອຣົດຂອງດາວິດພຣະຣາຊາຂອງອິສຣາເອນຊົງສ້າງໄວ້ ເຈົ້າທັງຫລາຍບໍ່ຕ້ອງໃສ່ບ່າຫາມໄປ
ອີກ ບັດນີ້ຈົ່ງບົວລະບັດ  ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ ແລະອິສຣາເອນໄພ່ພົນຂອງພຣະອົງ
4 ຈົ່ງຕຽມຕົວຂອງເຈົ້າຕາມຕະກູນຂອງເຈົ້າເປັນກອງໆຕາມບັນທຶກພຣະຣາຊດຳຣັດຊີ້ແຈງຂອງດາວິດພຣະຣາຊາແຫ່ງ
ອິສຣາເອນ ແລະຕາມບັນທຶກພຣະຣາຊດຳຣັດຊີ້ແຈງຂອງໂຊໂລໂມນໂອຣົດຂອງພຣະອົງ
5 ແລະຢືນປະຈຳຢູ່ໃນສະຖານບໍຣິສຸດ ຕາມພວກຕ່າງໆທີ່ເປັນພີ່ນ້ອງຂອງທ່ານ ຜູ້ເປັນຣາສດອນທີ່ແບ່ງເປັນຕະກູນໆ
ແລະໃຫ້ສ່ວນຂອງຕະກູນຄົນເລວີບົວລະບັດແຕ່ລະພວກ
6 ແລະຂ້າແກະປັສຄາແລະຊຳຣະຕົນໃຫ້ບໍຣິສຸດ ແລະຕຽມໄວ້ໃຫ້ພີ່ນ້ອງຂອງເຈົ້າ ເພື່ອຈະກະທຳຕາມພຣະວັຈນະຂອງ
ພຣະຜູ້ເປັນເຈົ້າທາງໂມເຊນັ້ນ
7 ແລ້ວໂຢຊີຢາໄດ້ຊົງບໍຣິຈາກແກ່ຣາສດອນເປັນເຄື່ອງປັສຄາບູຊາສຳລັບຄົນທັງປວງທີ່ຢູ່ທີ່ນັ້ນ ເປັນລູກແກະແລະລູກ
ແບ້ຈາກຝູງແບ້ແກະຈຳນວນສາມຫມື່ນໂຕ ແລະງົວເຖິກສາມພັນໂຕ ສັດເຫລົ່ານີ້ໄດ້ມາຈາກຊັບສິນຂອງເຈົ້າຊີວິດ
8 ແລະເຈົ້ານາຍຂອງພຣະອົງບໍຣິຈາກດ້ວຍຄວາມເຕັມໃຈແກ່ປະຊາຊົນ ແກ່ປະໂຣຫິດ ແລະແກ່ຄົນເລວີ ຮິນກີຢາ ເຊ
ຄາຣິຢາ ແລະເຢຮີເອນ ເຈົ້າຫນ້າທີ່ຊັ້ນຫົວຫນ້າຂອງພຣະວິຫານແຫ່ງພຣະເຈົ້າ ໄດ້ມອບລູກແກະແລະລູກແບ້ສອງ
ພັນຫົກຮ້ອຍໂຕກັບງົວເຖິກສາມຮ້ອຍໂຕແກ່ປະໂຣຫິດເປັນເຄື່ອງປັສຄາບູຊາ
9 ກັບໂກນານີຢາ ແລະເຊມັຍຢາ ກັບເນທານເອນ ນ້ອງຊາຍຂອງເຂົາ ແລະຮາຊາບີຢາ ແລະເຢອີເອນ ແລະໂຢຊາບາດ
ຫົວຫນ້າຂອງຄົນເລວີໄດ້ໃຫ້ລູກແກະແລະລູກແບ້ຫ້າພັນໂຕກັບງົວເຖິກຫ້າຮ້ອຍໂຕແກ່ຄົນເລວີເປັນເຄື່ອງປັສຄາບູຊາ
10 ເມື່ອຕຽມການຮຽບຮ້ອຍແລ້ວ ບັນດາປະໂຣຫິດກໍຢືນປະຈຳທີ່ຂອງຕົນ ແລະຄົນເລວີກໍຢູ່ຕາມກອງຂອງຕົນຕາມຄຳສັ່ງ
ຂອງພຣະຣາຊາ

11 ແລ້ວເຂົາກໍຂ້າແກະປັສຄາ ແລ້ວປະໂຣຫິດກໍເອົາເລືອດຊຶ່ງຮັບມາຈາກເຂົາຊິດໃສ່ ສ່ວນຄົນເລວີດຶງໜັງສັດນັ້ນ
12 ແລ້ວເຂົາກໍແຍກສ່ວນທີ່ເປັນເຄື່ອງເຜົາບູຊາໄວ້ຕ່າງຫາກເພື່ອແຈກຈ່າຍໄດ້ຕາມພວກຕ່າງໆຜູ້ເປັນຣາສດອນທີ່ແບ່ງ
ເປັນຕະກູນໆ ໃຫ້ຖວາຍແດ່ພຣະຜູ້ເປັນເຈົ້າ ດັ່ງທີ່ບັນທຶກໄວ້ໃນໜັງສືຂອງໂມເຊ ແລະເຂົາກະທຳກັບງົວເຖິກທຳນອງ
ດຽວກັນ
13 ເຂົາກໍປີ້ງແກະປັສຄາດ້ວຍໄຟຕາມກົດໝາຍ ແລະເຂົາທັງຫລາຍຕົ້ມເຄື່ອງບູຊາບໍຣິສຸດໃນໝໍ້ ໃນໝໍ້ຂາງ ແລະນຳ
ໄປໃຫ້ຣາສດອນທັງປວງໂດຍໄວ
14 ພາຍຫລັງເຂົາທັງຫລາຍຈຶ່ງຕຽມສຳລັບຕົນເອງແລະສຳລັບປະໂຣຫິດ ເພາະວ່າປະໂຣຫິດບຸດຫລານຂອງອາໂຣນຕິດ
ທຸຣະໃນການຖວາຍເຄື່ອງເຜົາບູຊາແລະສ່ວນໄຂມັນຈົນກາງຄືນ ຄົນເລວີຈຶ່ງຕຽມເພື່ອຕົນເອງແລະເພື່ອປະໂຣຫິດບຸດ
ຫລານຂອງອາໂຣນ
15 ບັນດານັກຮ້ອງຊຶ່ງເປັນບຸດຫລານຂອງອາສາບ ຢູ່ປະຈຳທີ່ຂອງຕົນຕາມບັນຊາຂອງດາວິດ ອາສາບ ແລະເຮມານ ກັບ
ເຢດູທູນຜູ້ທຳນວາຍຂອງ  ພຣະຣາຊາ ແລະຄົນເຝົ້າປະຕູກໍຢູ່ປະຈຳທຸກປະຕູ ເຂົາບໍ່ຈຳເປັນປະງານໜ້າທີ່ຂອງເຂົາ
ເພາະຄົນເລວີພີ່ນ້ອງຂອງເຂົາໄດ້ຕຽມໄວ້ໃຫ້ເຂົາ
16 ເຂົາຈຶ່ງຕຽມການບົວລະບັດພຣະຜູ້ເປັນເຈົ້າໃນວັນດຽວນັ້ນເອງ ເພື່ອຈະຖືເທສການປັສຄາ ແລະຖວາຍເຄື່ອງເຜົາບູຊາ
ເທິງແທ່ນບູຊາຂອງພຣະຜູ້ເປັນເຈົ້າ ຕາມພຣະບັນຊາຂອງກະສັດໂຢຊີຢາ
17 ປະຊາຊົນອິສຣາເອນຜູ້ຢູ່ທີ່ນັ້ນ ໄດ້ທຳເທສການປັສຄາເວລານັ້ນແລະເທດສການກິນເຂົ້າຈີ່ບໍ່ເຊື້ອແປ້ງເຈັດວັນ
18 ຕັ້ງແຕ່ສມັຍຂອງຊາມູເອນຜູ້ປະກາດພຣະທັມ ບໍ່ມີພຣະຣາຊາແຫ່ງອິສຣາເອນຈັກອົງນຶ່ງທີ່ຖືເທສການປັສຄາຢ່າງໂຢ
ຊີຢາໄດ້ຊົງຖືນີ້ ແລະບັນດາປະໂຣຫິດກັບຄົນເລວີ ແລະຢູດາກັບອິສຣາເອນທັງປວງຊຶ່ງຢູ່ພ້ອມກັນ ທັງຊາວເຢຣູຊາ
ເລັມ
19 ເຂົາຖືເທສການປັສຄານີ້ໃນປີທີສິບແປດແຫ່ງຣັຊການໂຢຊີຢາ

**ມໍຣະນະກັມຂອງໂຢຊີຢາ**

Defeat by Pharaoh Neco and Death of Josiah

(2 ກສດ 23:28-30)

20 ຫລັງຈາກນີ້ເມື່ອໂຢຊີຢາໄດ້ຕຽມພຣະວິຫານໄວ້ ເນໂກພຣະຣາຊາແຫ່ງເອຢິບໄດ້ສະເດັດຂຶ້ນໄປສູ້ຮົບທີ່ກາຣ໌ເຄມິສທີ່
ແມ່ນ້ຳເອີ     ຟຣາດ ແລະໂຢຊີຢາສະເດັດອອກໄປສູ້ຮົບກັບພຣະອົງ
21 ແຕ່ພຣະອົງຮັບສັ່ງໃຫ້ທູດໄປທູນໂຢຊີຢາວ່າ, "ພຣະຣາຊາແຫ່ງຢູດາເອີຍ ເຮົາກັບທ່ານກ່ຽວຂ້ອງກັນຢ່າງໃດ ວັນນີ້ເຮົາ
ບໍ່ໄດ້ມາຕໍ່ສູ້ທ່ານ ແຕ່ຕໍ່ສູ້ກັບເຊື້ອສາຍຂອງຜູ້ຊຶ່ງເຮົາທຳສົງຄາມດ້ວຍ ແລະພຣະຜູ້ເປັນເຈົ້າຊົງບັນຊາເຮົາໃຫ້ຮີບເລັ່ງ
ຂໍຢັບຢັ້ງການຂັດຂວາງພຣະຜູ້ເປັນເຈົ້າຜູ້ຊົງສະຖິດກັບເຮົາ ຢ້ານວ່າພຣະອົງຈະຊົງທຳລາຍທ່ານເສັຽ"
22 ແຕ່ປານນັ້ນກໍດີ ໂຢຊີຢາບໍ່ໄດ້ຫັນໄປຈາກພຣະອົງ ແຕ່ຊົງປອມພຣະອົງເພື່ອຈະສູ້ຮົບກັບເນໂກ ບໍ່ໄດ້ຟັງພຣະດຳຣັດ
ຂອງເນໂກທີ່ອອກຈາກພຣະໂອດຂອງພຣະຜູ້ເປັນເຈົ້າ ແຕ່ເຂົ້າຮົບໃນທີ່ຣາບເມກິດໂດ
23 ແລະນັກທະນູໄດ້ຍິງກະສັດໂຢຊີຢາ ແລະພຣະຣາຊາກ່າວກັບຂ້າຣາຊການຂອງພຣະອົງວ່າ "ຈົ່ງພາເຮົາໄປເສັຽເຖີດ
ເພາະເຮົາຖືກບາດເຈັບສາຫັດແລ້ວ"
24 ຂ້າຣາຊການຂອງພຣະອົງຈຶ່ງນຳພຣະອົງອອກຈາກຣົດຮົບ ແລະໃຫ້ພຣະອົງປະທັບໃນຣົດຮົບຄັນທີສອງຂອງພຣະອົງ
ແລະນຳ   ພຣະອົງມາເຢຣູຊາເລັມແລະພຣະອົງກໍສິ້ນພຣະຊົນ ແລະເຂົາຝັງໄວ້ໃນອຸບໂມງແຫ່ງບັນພະບຸຣຸດຂອງພ
ຣະອົງ ຢູດາແລະເຢຣູຊາເລັມທັງປວງໄດ້ໄວ້ທຸກໃຫ້ໂຢຊີຢາ
25 ເຢເຣມີກ່າວຄຳຄ່ຳຄວນຖວາຍໂຢຊີຢາດ້ວຍ ແລະບັນດານັກຮ້ອງຊາຍແລະນັກຮ້ອງຍິງທັງປວງກ່າວເຖິງໂຢຊີຢາໃນ
ຄຳຄ່ຳຄວນຂອງເຂົາຈົນທຸກວັນນີ້ ເຂົາທັງຫລາຍກະທຳເຣື່ອງນີ້ໃຫ້ເປັນກົດໝາຍໃນອິສຣາເອນ ເບິ່ງແມ, ມີບັນທຶກ
ໄວ້ໃນໜັງສືຄ່ຳຄວນ

26 ສ່ວນພຣະຣາຊກິຈນອກນັ້ນຂອງໂຢຊີຢາ ແລະການອຸທິດຕົນຂອງພຣະອົງ ຕາມທີ່ບັນທຶກໄວ້ໃນພຣະທັມບັນຍັດຂອງ
ພຣະຜູ້ເປັນ ເຈົ້າ
27 ແລະພຣະຣາຊກິຈຂອງພຣະອົງ ຕັ້ງແຕ່ຕົ້ນຈົນສຸດປາຍ ເບິ່ງແມ, ມີບັນທຶກໄວ້ໃນຫນັງສືພົງກະສັດອິສຣາເອນແລະຢູ
ດາ

## 36 ຣັຊການເຢໂຮອາຮັສແລະການຖືກປົດ

Reign of Jehoahaz

(2 ກສດ 23:31-33)

1 ຣາສດອນໄດ້ຕັ້ງເຢໂຮອາຮັສບຸດໂຢຊີຢາ ແລະໃຫ້ພຣະອົງເປັນພຣະຣາຊາແທນຣາຊບິດາຂອງພຣະອົງໃນເຢຣູຊາ
ເລັມ
2 ເມື່ອເຢໂຮອາຮັສເລີ້ມປົກຄອງມີອາຍຸຊາວສາມປີ ແລະພຣະອົງຊົງປົກຄອງໃນເຢຣູຊາເລັມສາມເດືອນ
3 ແລ້ວພຣະຣາຊາແຫ່ງເອຢິບຊົງຖອດພຣະອົງໃນເຢຣູຊາເລັມ ແລະກຳນົດໃຫ້ແຜ່ນດິນນັ້ນຖວາຍບັນນາການເປັນເງິນ
ນຶ່ງຮ້ອຍຕະລັນ ແລະທອງຄຳນຶ່ງຕະລັນ
4 ພຣະຣາຊາແຫ່ງເອຢິບຕັ້ງໃຫ້ເອລີອາກິມພຣະອະນຸຊາຂອງພຣະອົງເປັນພຣະຣາຊາເຫນືອຢູດາແລະເຢຣູຊາເລັມ
ແລະຊົງປ່ຽນ ພຣະນາມຂອງພຣະອົງໃຫມ່ວ່າ ເຢຮົວອາກິມ ແຕ່ເນໂກຊົງຈັບເຢໂຮອາຮັສໄປຍັງເອຢິບ

**ຣັຊການເຢຮົວອາກິມ**

Reign and Captivity of Jehoiakim

(2 ກສດ 23:36-24:7)

5 ເຢຮົວອາກິມເລີ້ມປົກຄອງເມື່ອອາຍຸໄດ້ສິບຫ້າປີ ແລະພຣະອົງຊົງປົກຄອງໃນເຢຣູຊາເລັມສິບເອັດປີ ພຣະອົງຊົງກະ
ທຳຄວາມຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າພຣະເຈົ້າຂອງພຣະອົງ
6 ເນບູກາດເນສຊາພຣະຣາຊາແຫ່ງບາບີໂລນສະເດັດມາຕໍ່ສູ້ກັບພຣະອົງ ແລະຈຳຈອງພຣະອົງດ້ວຍໂສ້ເພື່ອພາພຣະ
ອົງໄປຍັງບາບີໂລນ
7 ເນບູກາດເນສຊາຊົງເອົາເຄື່ອງໃຊ້ສ່ວນນຶ່ງຂອງ ພຣະວິຫານຂອງພຣະເຈົ້າໄປຍັງບາບີໂລນ ແລະຊົງເກັບໄວ້ໃນພຣະ
ວິຫານຂອງພຣະອົງໃນບາບີໂລນ
8 ສ່ວນພຣະຣາຊກິຈນອກນັ້ນຂອງເຢຮົວອາກິມ ແລະການຫນ້າກຽດຊັງ ຊຶ່ງພຣະອົງຊົງກະທຳ ແລະເຫດການອື່ນໆທີ່ບໍ່
ດີຊຶ່ງກ່ຽວກັບພຣະອົງ ເບິ່ງແມ, ມີບັນທຶກໄວ້ໃນຫນັງສືພົງກະສັດຂອງອິສຣາເອນ ແລະຢູດາ ແລະເຢຮົວອາຄິນໂອຣົດ
ຂອງພຣະອົງໄດ້ປົກຄອງແທນພຣະອົງ

**ເຢຮົວອາຄິນຖືກຈັບໄປເປັນຊະເລີຍກຸງບາບີໂລນ** Reign and Captivity of Jehoiachin

(2 ກສດ 24:8-17)

9 ເມື່ອເຢຮົວອາຄິນເລີ້ມປົກຄອງມີອາຍຸສິບແປດປີ ແລະພຣະອົງຊົງປົກຄອງໃນເຢຣູຊາເລັມສາມເດືອນກັບສິບວັນ ພ
ຣະອົງຊົງກະທຳຄວາມຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າ
10 ເມື່ອເຖິງຣະດູແລ້ງກະສັດເນບູກາດເນສຊາຊົງໃຊ້ໃຫ້ນຳພຣະອົງມາຍັງບາບີໂລນພ້ອມກັບເຄື່ອງໃຊ້ປະເສີດແຫ່ງພຣະ
ວິຫານຂອງພຣະຜູ້ເປັນເຈົ້າ ແລະຕັ້ງໃຫ້ເຊເດກີຢາລຸງຂອງພຣະອົງເປັນພຣະຣາຊາເຫນືອຢູດາແລະເຢຣູຊາເລັມ

**ຣັຊການເຊເດກີຢາ**

Reign of Zedekiah

(2 ກສດ 24:18-20; ຢຣມ 52:1-3)

11 ເຊເດກີຢາເລີ້ມປົກຄອງມີອາຍຸສິບເອັດປີ ແລະພຣະອົງຊົງປົກຄອງໃນເຢຣູຊາເລັມສິບເອັດປີ

12 ພຣະອົງຊົງກະທຳຄວາມຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າພຣະເຈົ້າຂອງພຣະອົງ ພຣະອົງບໍ່ໄດ້ຖ່ອມພຣະ
ອົງລົງຕໍ່ເຢເຣມີຜູ້ປະກາດພຣະທັມ ຜູ້ກ່າວຈາກພຣະໂອດຂອງພຣະຜູ້ເປັນເຈົ້າ
13 ພຣະອົງຊົງກະບົດຕໍ່ກະສັດເນບູກາດເນສຊາ ຜູ້ຊຶ່ງຊົງໃຫ້ພຣະອົງສາບານໃນພຣະນາມຂອງພຣະຜູ້ເປັນເຈົ້າ ພຣະອົງ
ຊົງດື້ດຶງບໍ່ຍອມກັບໃຈທຳພຣະທັຍໃຫ້ແຂງກະດ້າງບໍ່ຫັນໄປຫາພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນ
14 ບັນດາປະໂຣຫິດຜູ້ສຳຄັນແລະປະຊາຊົນກໍເຊັ່ນດຽວກັນບໍ່ສັດຊື່ ເຂົາຕິດຕາມສິ່ງທີ່ໜ້າກຽດຊັງຂອງບັນດາປະຊາ
ຊາດ ແລະເຂົາທັງຫລາຍກະທຳໃຫ້ພຣະວິຫານຂອງພຣະຜູ້ເປັນເຈົ້າໃນເຢຣູຊາເລັມ ຊຶ່ງພຣະອົງຊົງຊຳຣະໃຫ້ບໍຣິສຸດ
ນັ້ນເປັນມົນທິນໄປ

The Fall of Jerusalem]

(2 ກສດ 25:1-21; ຢຣມ 52:3-30)

15 ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງເຂົາຊົງໃຊ້ໃຫ້ທູດຂອງພຣະອົງມາຢ່າງບໍ່ຢຸດຢັ້ງ ເພາະພຣະອົງຊົງມີພ
ຣະທັຍກະຣຸນາຕໍ່ປະຊາຊົນຂອງພຣະອົງ ແລະຕໍ່ທີ່ປະທັບຂອງພຣະອົງ
16 ແຕ່ເຂົາທັງຫລາຍເຍາະເຍີ້ຍທູດຂອງພຣະເຈົ້າຢູ່ສເມີ ແລະດູຫມິ່ນພຣະວັຈນະຂອງພຣະອົງ ຈົນພຣະພິໂຣດຂອງພ
ຣະຜູ້ເປັນເຈົ້າພຸ່ງຂຶ້ນຕໍ່ປະຊາຊົນຂອງພຣະອົງຈົນແກ້ບໍ່ໄຫວ

**ຢູດາເປັນຊະເລີຍ**

(2 ກສດ 25:8-21; ຢຣມ 39:8-10; 52:12-30)

17 ພຣະອົງຈຶ່ງຊົງນຳພຣະຣາຊາແຫ່ງຄົນຄັນເດອານມາຕໍ່ສູ້ເຂົາທັງຫລາຍ ຜູ້ຊຶ່ງຂ້າຜູ້ຊາຍໜຸ່ມຂອງເຂົາດ້ວຍດາບໃນພ
ຣະວິຫານອັນເປັນສະຖານນະມັສການຂອງເຂົາ ແລະບໍ່ມີຄວາມກະຣຸນາແກ່ຊາຍໜຸ່ມຫລືຍິງພົມມະຈາຣີ ຄົນແກ່
ຫລືຄົນຊະຣາພຣະອົງຊົງມອບທັງຫມົດໄວ້ໃນມືຂອງເຂົາ
18 ແລະເຄື່ອງໃຊ້ທັງສິ້ນຂອງພຣະວິຫານຂອງພຣະເຈົ້າທັງໃຫຍ່ແລະນ້ອຍແລະຊັບສົມບັດແຫ່ງພຣະຣາຊາແລະແຫ່ງ
ເຈົ້ານາຍຂອງ ພຣະອົງ ສິ່ງທັງຫມົດນີ້ພຣະອົງຊົງນຳມາຍັງບາບີໂລນ
19 ເຂົາເຜົາພຣະວິຫານຂອງພຣະເຈົ້າ ແລະພັງກຳແພງເຢຣູຊາເລັມລົງແລະເອົາໄຟເຜົາວັງຂອງເມືອງນັ້ນເສັຽສິ້ນ ແລະ
ທຳລາຍເຄື່ອງໃຊ້ປະເສີດທັງປວງໃນນັ້ນ
20 ບັນດາຜູ້ທີ່ລອດຈາກດາບນັ້ນພຣະອົງຊົງກວາດໄປເປັນຊະເລີຍຍັງບາບີໂລນ ແລະເຂົາທັງຫລາຍເປັນຜູ້ຮັບໃຊ້ຂອງພ
ຣະອົງແລະແກ່ຣາຊວົງຂອງພຣະອົງຈົນເຖິງການສະຖາປະນາຣາຊອານາຈັກເປີເຊັຽ
21 ເພື່ອໃຫ້ສຳເຣັດຕາມພຣະວັຈນະຂອງພຣະຜູ້ເປັນເຈົ້າຊົງເປີດເຜີຍທາງປາກຂອງເຢເຣມີຈົນແຜ່ນດິນໄດ້ປີສະບາໂຕ
ຄົບຕາມທີ່ຄວນຕລອດວັນແລະເວລາທີ່ຖືກປະຮ້າງຢູ່ນັ້ນມັນໄດ້ຢຸດພັກສງົບ ເພື່ອໃຫ້ສຳເຣັດກຳນົດເຈັດສິບປີ

**ຣາຊປະກາສິດຂອງໄຊຣັສ**

Cyrus Proclaims Liberty for the Exiles

(ອຊຣ 1:1-4)

22 ໃນປີແຣກແຫ່ງຣັຊການໄຊຣັສພຣະຣາຊາຂອງເປີເຊັຽ ເພື່ອພຣະຄຳຂອງພຣະເຈົ້າທາງປາກເຢເຣມີຈະສຳເຣັດ ພຣະ
ຜູ້ເປັນເຈົ້າຊົງເລົ້າຈິດໃຈຂອງໄຊຣັສພຣະຣາຊາຂອງເປີເຊັຽ ພຣະຣາຊາຈຶ່ງຊົງມີປະກາດຕລອດຣາຊອານາຈັກຂອງພ
ຣະອົງແລະບັນທຶກເປັນລາຍລັກອັກສອນລົງວ່າ,
23 “ໄຊຣັສພຣະຣາຊາແຫ່ງເປີເຊັຽກ່າວດັ່ງນີ້ວ່າ ພຣະຜູ້ເປັນເຈົ້າພຣະເຈົ້າຂອງຟ້າສວັນ ໄດ້ພຣະຣາຊທານບັນດາຣາຊອາ
ນາຈັກແຫ່ງແຜ່ນດິນໂລກແກ່ເຮົາ ແລະພຣະອົງຊົງກຳຊັບໃຫ້ເຮົາສ້າງພຣະວິຫານໃຫ້ພຣະອົງທີ່ເຢຣູຊາເລັມ ຊຶ່ງຢູ່ໃນ
ຢູດາ ມີຜູ້ໃດໃນຖ້າມກາງທ່ານທັງຫລາຍທີ່ເປັນໄພ່ພົນຂອງພຣະອົງ ຂໍພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາສະຖິດກັບ
ເຂົາ ຂໍໃຫ້ເຂົາຂຶ້ນໄປເຖີດ”